# ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

# A Development of Implementation Modules to Enhance Chemical Students' Perceptions and Understandings Towards Classroom Research

**ປທ ອຸດຕະມະ ແສງອາລຸນ**

**ວິທະຍາໄລຄູສາລະວັນ**

**ສົກປີ 2023**

# ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

# A Development of Implementation Modules to Enhance Chemical Students' Perceptions and Understandings Towards Classroom Research

ປທ ອຸດຕະມະ ແສງອາລຸນ

ວິທະຍາໄລຄູສາລະວັນ

ສົກປີ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜ໙໙໙໙

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ.166....ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໄຈ ຫົວຂໍ້:ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ວິທະຍາໄລຄູສາລະວັນ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
| --- | --- |
| ທ່ານ ປທ ສຸກສະຫວັນ ອຸປະສິດ | .................................... |

**ທີ່ສາລະວັນ, ວັນທີ .........................**

**ປະທານສະພາວິທະຍາສາດ**

ອຈ. ນ ລິນປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໝໝໝໝໝໝໝໝ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ຫົວໜ້າພາກວິຊາເຄມີ

# ໃບຮັບຮອງການກວດແກ້ການຄົ້ນຄວ້າວິໄຈ

## ຫົວຂໍ້: ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງ ນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ວິທະຍາໄລຄູສາລະວັນ

**ພາກວິຊາ:** ເຄມີ

**ຜູ້ຄົ້ນຄວ້າວິໄຈ:**

ທ່ານ ປທ ອຸດຕະມະ ແສງອາລຸນ

| **ຄະນະກຳມະການກວດແກ້ບົດ** | **ລາຍເຊັນ** |
|---|---|
| ທ່ານ ອຈ ນາງ ສົມປອງ ແສນທະວິສຸກ | .................................... |
| ທ່ານ ຊອ ປອ ໂພທອງ ພົງສົງຄາມ | .................................... |
| ທ່ານ ຊອ ປທ ສົມບູນ ຊາມຸນຕີ | .................................... |

ວິທະຍາໄລຄູສາລະວັນ

**ທີ່ສາລະວັນ, ວັນທີ .....................**

**ຫົວໜ້າພາກວິຊາເຄມີ**

ສຸກສະຫວັນ ອຸປະຊິດ

# ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງ ນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

**A Development of Implementation Modules to Enhance Chemical Students' Perceptions and Understandings Towards Classroom Research**

## ບົດຄັດຫຍໍ້


ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ 1) ພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ; 2) ສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ; 3) ປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ. ປະຊາກອນທີ່ໃຊ້ໃນການວິໄຈໄດ້ແກ່ ນັກສຶກສາສາຍເຄມີ ປີ 3 ຈຳນວນ 9 ຄົນ, ຍິງ 6 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ ໄດ້ແກ່ 1) ແບບທົດສອບ, 2) ແບບສັງເກດພຶດຕິກຳ, 3) ແບບປະເມີນໂມດູນ, 4) ແຜນການສອນ ແລະ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ເປີເຊັນ ຄ່າລະເລ່ຍ ແລະ ຄ່າປະສິດທິຜົນ ($E_1/E_2$)

ຜົນການວິໄຈ ເຫັນວ່າ

1. ໂມດູນການຝຶກທີ່ສົ່ງເສີມການຮຽນຮູ້ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນທັງໝົດ 5 ໂມດູນຄື: **ໂມດູນທີ 1** : ການສຳຫຼວດບັນຫາການສອນ, **ໂມດູນທີ 2** : ການທົບທວນວັນນະກຳ ແລະ ງານວິໄຈທີ່ກ່ຽວຂ້ອງ, **ໂມດູນທີ 3** : ວິທີແກ້ບັນຫາ ແລະ ນະວັດຕະກຳທາງການສຶກສາ, **ໂມດູນທີ 4** : ການດຳເນີນການວິໄຈໃນຫ້ອງຮຽນ, **ໂມດູນທີ 5** : ການລາຍງານຜົນການວິໄຈ

2. ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13.5 ຄະແນນ ມີຈຳນວນ 1 ຄົນ, 13 ຄະແນນ ມີຈຳນວນ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບປານກາງ 12.5 ມີຈຳນວນ 1 ຄົນ, 10.5 ມີຈຳນວນ 2 ຄົນ, 9.5 ຄະແນນ ມີຈຳນວນ 1 ຄົນ, 9 ຄະແນນ ມີຈຳນວນ 1 ຄົນ ແລະ 8.5 ຄະແນນ ມີຈຳນວນ 2 ຄົນ ຈຶ່ງສະຫຼຸບໄດ້ວ່າ ນັກສຶກສາມີຄວາມສົນໃຈໃນການເຮັດກິດຈະກຳ, ສະແດງຄຳຄິດຄຳເຫັນ, ຕອບຄຳຖາມ, ຮັບຟັງຄຳຄິດເຫັນຜູ້ອື່ນ ແລະ ເຮັດວຽກຕາມການມອບໝາຍຢູ່ໃນລະດັບປານກາງຫາດີຂຶ້ນໄປ.

3. ຄະແນນສະເລ່ຍລວມຂອງການທົດສອບຍ່ອຍທັງ 4 ຄັ້ງເທົ່າກັບ 16.44 ຈາກຄະແນນເຕັມ 20 ຄະແນນ ໝາຍເຖິງ ຄ່າປະສິດທິພາບລະຫວ່າງ ຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ກັບນັກສຶກສາສາຍເຄມີເທົ່າ 82.22 ເປີເຊັນ, ແຕ່ເມື່ອພິຈາລະນາຄະແນນສະເລ່ຍລວມຂອງການທົດສອບຍ່ອຍໃນແຕ່ລະຄັ້ງເຫັນວ່າ ຄະແນນຕໍ່າສຸດ 4.00 ຂຶ້ນໄປ ຈາກຄະແນນເຕັມ 5 ຄະແນນ ນີ້ສະແດງໃຫ້ຮູ້ວ່າ ພາຍຫຼັງການນຳໃຊ້ວິທີສອນແບບຮ່ວມມືໃນແຕ່ລະຄັ້ງ ນັກຮຽນມີຄວາມຮັບຮູ້, ເຂົ້າໃຈ ແລະ ເກັບກຳເນື້ອໃນບົດຮຽນໄດ້ດີ. ສ່ວນການທົດສອບຫຼັງການຮຽນຄະແນນສະເລ່ຍເທົ່າກັບ 17.11 ເຊິ່ງຄ່າປະສິດທິພາບເທົ່າກັບ 85.56 ເປີເຊັນ ໝາຍຄວາມວ່າ ພັດທະນາການທາງການຮຽນຂອງນັກສຶກສາເພີ່ມຂຶ້ນ.

ຄ່າດັດສະນີປະສິດທິຜົນມີຄ່າເທົ່າກັບ 0.1875 ເຊິ່ງໝາຍຄວາມວ່າ ນັກສຶກສາມີຄະແນນເພີ່ມຂຶ້ນເທົ່າກັບ 0.1875 ຫຼື ຄິດເປັນ 18.75 ເປີເຊັນ ແປຄວາມໝາຍໄດ້ວ່າ ໂມດູນການຝຶກມີປະສິດທິຜົນ

ນັກສຶກສາທີ່ໄດ້ຄະແນນຕ່ຳສຸດແມ່ນ ນ. ຄ (ນາມສົມມຸດ) ໄດ້ຄະແນນລວມ 134 ຄະແນນ (ຈາກ 200 ຄະແນນເຕັມ) ຄິດເປັນ 67 ເປີເຊັນຂອງຄະເຕັມ ຊຶ່ງຖືວ່າເປັນຄະແນນທີ່ເກີນເຄິ່ງໜຶ່ງຂອງຄະແນນເຕັມ ສ່ວນນັກສຶກສາທີ່ໄດ້ຄະແນນສູງສຸດແມ່ນ ນ. ຈ (ນາມສົມມຸດ) ໄດ້ຄະແນນລວມ 170 ຄະແນນ (ຈາກຄະແນນເຕັມ 200 ຄະແນນ) ຄິດເປັນ 85 ເປີເຊັນ ໂດຍສະຫຼຸບ ເມື່ອພິຈາລະນາຄະແນນຈາກເປີເຊັນແລ້ວເຫັນວ່າ ນັກສຶກສາໄດ້ຄະແນນເກີນ 50 ເປີເຊັນທຸກຄົນ ຊຶ່ງແປຄວາມໝາຍໄດ້ວ່ານັກສຶກສາສາຍເຄມີໄດ້ຄະແນນຢູ່ໃນລະດັບປານກາງຫາດີ.


Abstract

The purpose of this research were to study 1) develop a module that promotes learning and participation in teaching management in the classroom research subject; 2) study the learning behavior and participation of chemistry students in the organization of teaching and classroom research activities ; 3) Evaluate the effectiveness of training modules that promote students' perceptions and understanding of classroom research subject. The population used in the research were 3 year chemistry students, 9 people, 6 women. The tools used to collect data were 1) test, 2) behavior observation, 3) evaluation, 4) teaching plan and statistics used in data analysis were percentage, mean score and effectiveness value (E1/E2)

The finding revealed as follows:

1. Training modules that promote learning and participation in teaching management in research subjects in the classroom. All 5 modules are: Module 1: Survey of teaching problems, Module 2: Literature review and related research, Module 3: Problem solving and educational innovation, Module 4: Conducting the classroom research, Module 5: Reporting research results.

2. Students are interested in doing activities, making comments, answering questions, listening to others' comments and working on assignments at an intermediate to better level.

3. When considering the total average score of each sub-test, the minimum score is 4.00 and above from a full score of 5 points. This shows that after using the modules each time, the students are aware, understand and collect the lesson content well. The average score of the post-test is 17.11, which is an efficiency value of 85.56 percent. This means that the student's academic development has increased.

# ໃບກຽດຕິຄຸນ

ບົດວິໄຈໃນຫ້ອງຮຽນນີ້ສຳເລັດລົງໄດ້ດ້ວຍຄວາມເອົາໃຈໃສ່ ຊອ ປອ ໂພທອງ ພົງສິງຄາມ, ຊອ ປທ ສົມບູນ ຊາມຸນຕີ ແລະ ອາຈານ ນາງ ສົມປອງ ແສນທະວິສຸກ, ພວກທ່ານໄດ້ໃຫ້ການຊຸກຍູ້ ສົ່ງເສີມ ແລະ ແນະນຳ ຕະຫຼອດຮອດການກວດແກ້ເຄື່ອງມືວິໄຈ ແລະ ເນື້ອໃນການວິໄຈທັງ 5 ບົດ ຈິ່ງຂໍສະແດງຄຳຂອບໃຈໄວ້ນະໂອກາດນີ້ດ້ວຍ

ຂໍຂອບໃຈ ຄະນະກຳມະການສະພາທຸກທ່ານ ທີ່ໄດ້ສະຫຼະເວລາອັນຊີງຄຸນຄ່າກວດກາເນື້ອໃນບົດວິໄຈ ພ້ອມທັງໃຫ້ຄຳແນະນຳໃນການປັບປຸງບົດຈົບເຮັດໃຫ້ບົດວິໄຈນີ້ບັນລຸຜົນສຳເລັດ ຈິ່ງຂໍສະແດງຄຳຂອບໃຈພວກທ່ານເປັນຢ່າງສູງ

ຂໍຂອບໃຈ ຄະນະຊີ້ນຳລວມທຸກທ່ານ ທີ່ໄດ້ໃກ້ຊິດ ແລະ ເອົາໃຈໃສ່ຊຸກຍູ້ໃຫ້ຜູ້ວິໄຈໄດ້ສ້າງສັນຜົນງານການວິໄຈນີ້ຈົນບັນລຸຜົນສຳເລັດ ພວກທ່ານຍັງໄດ້ເສຍສະລະເວລາອັນມີຄ່າກວດແກ້ເຄື່ອງມື ແລະ ເນື້ອຫາຂອງບົດວິໄຈໃນຫ້ອງຮຽນ ຈິ່ງຂໍສະແດງຄຳຂອບໃຈໄວ້ນະໂອກາດນີ້ດ້ວຍ

ຂອບໃຈຄອບຄົວທີ່ໃຫ້ການສະໜັບສະໜູນການປະຕິບັດໜ້າທີ່ວຽກງານພວກຂອງຕົນຢ່າງດີຕະຫຼອດມາ ເຊິ່ງຖືວ່າເປັນສະຖາບັນຫຼັກທີ່ໃຫ້ກຳລັງໃຈຢ່າງສະໝ່ຳສະເໝີ ເຮັດໃຫ້ຜູ້ວິໄຈໄດ້ສ້າງສັນຜົນງານທາງວິຊາການນີ້ອອກສູ່ສາຍຕາຂອງສັງຄົມ ຈິ່ງຂໍຖືໂອກາດນີ້ສະແດງຄຳຂອບໃຈໄວ້ເປັນຢ່າງສູງ

ຄຸນຄ່າ ປະໂຫຍດ ບຸນ ແລະ ກຸສົນຂອງບົດວິໄຈພາກປະຕິບັດນີ້ ຄະນະວິໄຈຂໍມອບບຸນ ແລະ ກຸສົນນີ້ແດ່ຜູ້ທີ່ເຄີຍເບິ່ງແຍງລ້ຽງດູ ຄູ-ອາຈານ ແລະ ຜູ້ມີພະຄຸນທຸກທ່ານທັງໃນອາດີດ ແລະ ປະຈຸບັນ ທີ່ເຮັດໃຫ້ຂ້າພະເຈົ້າໄດ້ພັດທະນາຕົນເອງໃນເສັ້ນທາງຂອງນັກວິໄຈ.

# ສາລະບານ


| ເລື່ອງ | ໜ້າ |
|---|---|
| ບົດຄັດຫຍໍ້ | I |
| ໃບກຽດຕິຄຸນ | II |
| ສາລະບານ | III |
| ສາລະບານຕາຕະລາງ | V |
| ສາລະບານແຜນວາດ | |
| ບົດທີ 1: ບົດນຳ | 1 |
| 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ | 1 |
| 2. ຄຳຖາມຂອງການຄົ້ນຄວ້າ | 3 |
| 3. ຈຸດປະສົງຂອງການຄົ້ນຄວ້າ | 3 |
| 4. ຂອບເຂດຂອງການຄົ້ນຄວ້າ | 3 |
| 5. ກອບແນວຄິດໃນການວິໄຈ | 4 |
| 6. ນິຍາມສັບສະເພາະ | 4 |
| 7. ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ | 4 |
| ບົດທີ 2 : ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ | 5 |
| 1. ແນວຄິດທິດສະດີກ່ຽວກັບການຮຽນຮູ້ | 5 |
| 2. ແນວຄິດທິດສະດີກ່ຽວກັບຄວາມຮູ້ຄວາມເຂົ້າໃຈ | 10 |
| 3. ທິດສະດີກ່ຽວກັບການວິໄຈໃນຫ້ອງຮຽນ | 15 |
| 4. ແນວຄິດກ່ຽວກັບການຝຶກ | 61 |
| 5. ຄວາມຮູ້ກ່ຽວກັບສື່ປະສົມ | 68 |
| 6. ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ | 69 |
| ບົດທີ 3 : ວິທີດຳເນີນການວິໄຈ | 77 |
| 1. ປະຊາກອນ | 77 |
| 2. ກຸ່ມຕົວຢ່າງ | 77 |
| 3. ຕົວປ່ຽນທີ່ໃຊ້ໃນການວິໄຈ | 77 |
| 4. ເຄື່ອງມືທີ່ໃຊ້ໃນການວິໄຈ | 78 |
| 5. ການສ້າງ ແລະ ຫາຄຸນນະພາບເຄື່ອງມື | 78 |
| 6. ຮູບແບບການວິໄຈ | 79 |
| 7. ການເກັບລວບລວມຂໍ້ມູນ | 79 |
| 8. ການວິເຄາະຂໍ້ມູນ | 81 |
| 9. ສະຖິຕິທີ່ໃຊ້ໃນການວິໄຈ | 82 |
| ບົດທີ 4 : ຜົນການວິເຄາະຂໍ້ມູນ | 83 |
| 1. ຜົນການພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ | 83 |

2. ຜົນການການສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງ 84
ນັກສຶກສາ ເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ
3. ຜົນການປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ 87
ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.
ບົດທີ 5 : ສະຫຼຸບ ແລະ ອະພິປາຍຜົນ 90
5.1 ສະຫຼຸບຜົນ 90
5.2 ອະພິປາຍຜົນ 92
5.3 ຂໍ້ສະເໜີແນະ 94
ບັນນານຸກົມ 95
ເອກະສານຊ້ອນທ້າຍ 99
ເຄື່ອງມືວິໄຈ 100
ແບບທົດສອບ 101
ໂມດູນການຝຶກ 106
ແບບປະເມີນໂມດູນ 138

# ສາລະບານຕາຕະລາງ

**ເລື່ອງ** **ໜ້າ**


ຕາຕະລາງທີ 1 ລັກສະນະຂອງການວິໄຈພາກປະຕິບັດໃນຫ້ອງຮຽນ 25

ຕາຕະລາງທີ 2 ລັກສະຄວາມແຕກຕາງຂອງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາ 26

ຕາຕະລາງທີ 3 ການປຽບທຽບຄວາມແຕກຕ່າງຂອງການເຮັດວິໄຈພາກປະຕິບັດກັບການວິໄຈທາງວິຊາການ 32

ຕາຕະລາງທີ 4 ຄວາມແຕກຈ່າງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາຕາມແນວຄິດຂອງ ອຸທຸມພອນ ຈາມອນມາ 34

ຕາຕະລາງທີ 5 ຮູບແບບຂອງການວິໄຈພາກປະຕິບັດ 47

ຕາຕະລາງທີ 6 ກິດຈະກຳທີ່ປະຕິບັດໃນແຕ່ລະຂັ້ນຕອນ 50

ຕາຕະລາງທີ 7 ຜົນການສັງເກດ ແລະ ປະເມີນຄັ້ງທີ 1 84

ຕາຕະລາງທີ 8 ຜົນການສັງເກດ ແລະ ປະເມີນຄັ້ງທີ 2 85

ຕາຕະລາງທີ 9 ຜົນການສັງເກດ ແລະ ປະເມີນຄັ້ງທີ 3 86

ຕາຕະລາງທີ 10 ຜົນການສັງເກດ ແລະ ປະເມີນຄັ້ງທີ 4 86

ຕາຕະລາງທີ 11 ສະແດງຜົນການປະເມີນພຶດຕິກຳການມີສ່ວນຮ່ວມຂອງນັກສຶກສາໃນການຈັດການຮຽນການສອນວິຊາວິໄຈໃນຫ້ອງຮຽນ ສະເລ່ຍລວມທັງ 4 ຄັ້ງ 87

ຕາຕະລາງທີ 12 ສະແດງຄະແນນລະຫວ່າງ ແລະ ຫຼັງຮຽນ 88

ຕາຕະລາງທີ 13 ປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາຕໍ່ວິຊາວິໄຈໃນຫ້ອງຮຽນ 88

ຕາຕະລາງທີ 14 ສະແດງຄະແນນປະເມີນນັກສຶກສາແຕ່ລະຄົນໃນການປະຕິບັດກິດຈະກຳຂອງແຕ່ລະໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ 89

# ສາລະບານແຜນອາດ

**ເລື່ອງ** **ໜ້າ**


| ເລື່ອງ | ໜ້າ |
|---|---|
| ແຜນວາດທີ 1 ກອບແນວຄິດໃນການວິໄຈ | 4 |
| ແຜນວາດທີ 2 ຂະບວນການຂອງການຮັບຮູ້ | 7 |
| ແຜນວາດທີ 3 ຂະບວນການດຳເນີນການວິໄຈໃນຫ້ອງຮຽນ | 19 |
| ແຜນວາດທີ 4 ລັກສະນະຂອງການວິໄຈໃນຫ້ອງຮຽນ | 25 |
| ແຜນວາດທີ 5 ຮອບວຽນການວິໄຈພາກປະຕິບັດໃນຫ້ອງຮຽນ (Kemmis, 1938) | 27 |
| ແຜນວາດທີ 6 ກິດຈະກຳໃນການເຮັດວິໄຈພາກປະຕິບັດໃນຫ້ອງຮຽນ | 27 |
| ແຜນວາດທີ 7 ຮອບວຽນການວິໄຈພາກປະຕິບັດໃນຫ້ອງຮຽນ | 28 |
| ແຜນວາດທີ 8 ຜົນກະທົບຂອງຄວາມຮູ້ຈາກການປະຕິບັດແລະຈາກການວິໄຈທີ່ມີຕໍ່ກົນລະຍຸດໃນການສອນ | 30 |
| ແຜນວາດທີ 9 ປະໂຫຍດຂອງການວິໄຈໃນຫ້ອງຮຽນ | 42 |
| ແຜນວາດທີ 10 ຮອບວຽນການວິໄຈພາກປະຕິບັດຂອງ Freeman | 48 |
| ແຜນວາດທີ 11 ຂັ້ນຕອນການດຳເນີນການວິໄຈ | 49 |
| ແຜນວາດທີ 12 ສະແດງຄວາມແຕກຕ່າງລະຫວ່າງສະພາບທີ່ຄາດຫວັງແລະສະພາບທີ່ເປັນຈິງ | 52 |

# ບົດທີ 1

# ບົດນຳ

## 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ໃນປີ 2010 ໂດຍປະຕິບັດຕາມຫຼັກສູດສ້າງຄູ, ວິທະຍາໄລຄູສາລະວັນກໍໄດ້ເລີ່ມທົດລອງໃຫ້ນັກຮຽນຄູປີສຸດທ້າຍໄດ້ຂຽນບົດລາຍງານວິໄຈພາກປະຕິບັດໃນໄລຍະຂອງການລົງເຝິກຫັດຕາມຫຼັກສູດການຈັດກິດຈະກຳການຮຽນ-ການສອນໃນລາຍວິຊາວິໄຈພາກປະຕິບັດ ເຊິ່ງໜ່ວຍງານຮັບຜິດຊອບແມ່ນໜ່ວຍງານພັດທະນາການວິໄຈພາກປະຕິບັດ ເມື່ອພິຈາລະນາຫຼັກສູດການຜະລິດຄູຈະເຫັນວ່າໂຄງສ້າງຫຼັກສູດສ່ວນໃຫຍ່ປະກອບດ້ວຍລາຍວິຊາທີ່ກ່ຽວຂ້ອງກັບວິຊາຊີບຄູ ເຊິ່ງເນັ້ນໃຫ້ນັກຮຽນຄູໄດ້ມີຄວາມຮູ້ກ່ຽວກັບການຮຽນ-ການສອນ ເຖິງວ່ານັກຮຽນຈະໄດ້ຮຽນວິຊາທົ່ວໄປເຊັ່ນວິຊາວິໄຈພາກປະຕິບັດ ແຕ່ວິຊາວິໄຈທີ່ນັກຮຽນໄດ້ຮຽນຮູ້ກໍ່ຍັງບໍ່ພຽງພໍຈະເຮັດໃຫ້ນັກຮຽນສາມາດດຳເນີນການວິໄຈໃນສະພາບຂອງການປະຕິບັດວຽກຕົວຈິງໄດ້ (ໂພທອງ, 2015)

ຄວາມສຳຄັນຂອງການພັດທະນາການຮຽນຮູ້ດ້ວຍການວິໄຈນັ້ນ ຈະເນັ້ນໄປທີ່ການວິໄຈພາກປະຕິບັດ (action research) ທີ່ມີເປົ້າໝາຍສຳຄັນຄື ການນຳຜົນການວິໄຈໄປພັດທະນາການຮຽນຮູ້ໃຫ້ເກີດປະສິດທິພາບຫຼາຍທີ່ສຸດ ແລະ ບັນລຸເປົ້າໝາຍຂອງຫຼັກສູດ  ໂດຍປົກກະຕິແລ້ວ ຜູ້ສອນໄດ້ເຮັດວິໄຈຢູ່ຕະຫຼອດເວລາ ດ້ວຍການຫາສາເຫດແລະສັງເກດພຶດຕິກຳຂອງຜູ້ຮຽນ ສິ່ງຕ່າງໆ ບັນຫາຕ່າງໆ ທີ່ເກີດຂຶ້ນໃນຫ້ອງຮຽນ ຕະຫຼອດເຖິງສິ່ງແວດລ້ອມໃນສະຖານສຶກສາ ການປະຕິບັດຂອງຜູ້ສອນດັ່ງກ່າວນີ້ ເປັນການວິໄຈເພື່ອພັດທະນາຫຼັກສູດແລະການຮຽນການສອນ ແຕ່ບໍ່ໄດ້ໃຊ້ວິທີການຕາມຂະບວນການວິໄຈເຂົ້າຊ່ວຍ ເຊິ່ງຂະບວນການວິໄຈຈະຊ່ວຍໃຫ້ການສຶກສາ ການສັງເກດ ການຫາສາເຫດເປັນໄປຢ່າງມີລະບົບດ້ານການຈົດບັນທຶກ ເພື່ອນຳວິເຄາະ ແປຜົນ ເຊິ່ງສາມາດປະຕິບັດໄດ້ດ້ວຍຕົນເອງ ເປັນການວິໄຈທີ່ເນັ້ນແກ້ບັນຫາໃນທາງປະຕິບັດຫຼາຍກວ່າການແກ້ບັນຫາໃນເລື່ອງທິດສະດີ (ກົມວິຊາການ, 2000)  ໂມດູນ (module) ເປັນສື່ການສຶກສາປະເພດໜຶ່ງທີ່ສ້າງຂຶ້ນມາເພື່ອໃຫ້ເປັນຊຸດປະສົບການສຳລັບການຝຶກອົມ ຊຸດຝຶກອົບຮົມອາດຈະປະກອບດ້ວຍສື່ດຽວ ຫຼື ສື່ປະສົມທີ່ໄດ້ຮັບການພັດທະນາຂຶ້ນມາ ເພື່ອຊ່ວຍໃຫ້ຜູ້ດຳເນີນການຝຶກອົບຮົມໃຊ້ປະກອບກິດຈະກຳໃນການຝຶກອົບຮົມ ຫຼື ຊ່ວຍຜູ້ຮັບການຝຶກອົບຮົມສາມາດທີ່ຈະສຶກສາຫາຄວາມຮູ້ໄດ້ດ້ວຍຕົນເອງ ສຳລັບລັກສະນະສຳຄັນໆ ຂອງ ຊຸດຝຶກອົບຮົມນັ້ນຈະກ່ຽວຂ້ອງກັບຈຸດມຸ່ງໝາຍ ສື່ທີ່ໃຊ້  ໄລຍະເວລາ ສະຖານທີ່ ແລະ ປະໂຍດທີ່ຈະໄດ້ຮັບ (ສິຣິພັນ ສາຍທົງ ແລະ ສົມປະສົງ ວິທະຍະກຽດ, 1991) ການຄຸ້ມຄອງຫ້ອງຮຽນແມ່ນແນວຄວາມຄິດທີ່ສະໜອງຍຸດທະສາດທີ່ມີປະສິດທິພາບໃນການສ້າງສະພາບແວດລ້ອມການສອນ ແລະ ການຮຽນຮູ້ໃນທາງບວກ ເຊິ່ງປະກອບມີຍຸດທະສາດຕ່າງໆເປັນຕົ້ນແມ່ນ: ກົດລະບຽບ, ຜົນສະທ້ອນ, ຄຳແນະນຳ, ຂັ້ນຕອນ, ການຄຸ້ມຄອງການເຮັດວຽກຂອງນັກຮຽນ ແລະ ການຕິດຕາມພຶດຕິກຳຂອງນັກຮຽນ (Bear, 2015; Emmer & Evertson, 2013).

ການມີສ່ວນຮ່ວມຂອງນັກສຶກສາເຄມີສາດໃນການຮຽນ-ການສອນ ໝາຍເຖິງການມີສ່ວນຮ່ວມຢ່າງຫ້າວຫັນ ແລະ ມີສ່ວນຮ່ວມໃນຂະບວນການຫາຄວາມຮູ້ ແລະ ທັກສະໃນສາຂາວິຊາເຄມີ. ມັນກວມເອົາຄວາມ

ເຕັມໃຈຂອງເຂົາເຈົ້າທີ່ຈະເຂົ້າຮ່ວມກິດຈະກຳໃນຫ້ອງຮຽນ, ຖາມຄຳຖາມ, ປະກອບສ່ວນໃນການສົນທະນາ, ແລະ ຮັບຜິດຊອບສຳລັບການຮຽນຮູ້ຂອງຕົນເອງ. ການສອນວິຊາເຄມີ ຮຽກຮ້ອງໃຫ້ຄູນຳໃຊ້ວິທີການສິດສອນທີ່ມີປະສິດທິຜົນ, ແລະ ມີແຫຼ່ງການຮຽນ-ການສອນຢ່າງພຽງພໍ ເພື່ອຊ່ວຍໃຫ້ຜູ້ຮຽນພັດທະນາຄວາມສາມາດໃນວິຊານີ້ຢ່າງພຽງພໍ. ຢ່າງໃດກໍ່ຕາມ, ວິທີການສອນທີ່ບໍ່ມີປະສິດຕິພາບແລະຊັບພະຍາກອນການສອນທີ່ບໍ່ພຽງພໍແມ່ນບັນຫາທີ່ສຸດສຳລັບການສອນແລະການຮຽນຮູ້ເຄມີທີ່ມີປະສິດຕິຜົນແລະປະສົບຜົນສຳເລັດແລະເຮັດໃຫ້ຜູ້ຮຽນບາງຄົນມີຄວາມຫຍຸ້ງຍາກ (Ali, 2012; Ejidike & Oyelana, 2015). ການມີສ່ວນຮ່ວມຢ່າງມີປະສິດທິພາບແມ່ນສຳຄັນສຳລັບນັກຮຽນເພື່ອພັດທະນາຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບແນວຄວາມຄິດທາງເຄມີ, ນຳໃຊ້ເຂົ້າໃນສະຖານະການປະຕິບັດ, ແລະພັດທະນາການຄິດວິຈານແລະທັກສະການແກ້ໄຂບັນຫາ. ມັນຍັງມີບົດບາດສຳຄັນໃນຄວາມສຳເລັດທາງວິຊາການໂດຍລວມຂອງພວກເຂົາແລະຄວາມສົດໃສດ້ານການເຮັດວຽກໃນອະນາຄົດໃນຂົງເຂດເຄມີສາດ. ຢ່າງໃດກໍ່ຕາມ, ມັນສາມາດມີປັດໃຈຕ່າງໆທີ່ມີອິດທິພົນຕໍ່ການມີສ່ວນຮ່ວມຂອງນັກຮຽນໃນການຮຽນຮູ້ແລະການຄຸ້ມຄອງການສອນໃນເຄມີສາດ. ປັດໄຈເຫຼົ່ານີ້ສາມາດໄດ້ຮັບການຈັດປະເພດເປັນບຸກຄົນ, ການສອນ, ແລະປັດໄຈສິ່ງແວດລ້ອມ.

ປັດໃຈສ່ວນບຸກຄົນປະກອບມີແຮງຈູງໃຈຂອງນັກຮຽນ, ຄວາມສົນໃຈ, ຄວາມຮູ້ກ່ອນ, ຮູບແບບການຮຽນຮູ້, ແລະຄວາມເຊື່ອໃນການປະຕິບັດຕົນເອງ. ນັກຮຽນທີ່ມີແຮງຈູງໃຈ ແລະ ມີຄວາມສົນໃຈຢ່າງແທ້ຈິງໃນວິຊາເຄມີມີແນວໂນ້ມທີ່ຈະເຂົ້າຮ່ວມກິດຈະກຳການຮຽນຮູ້ຢ່າງຈິງຈັງ. ເຊັ່ນດຽວກັນ, ນັກສຶກສາທີ່ມີພື້ນຖານທີ່ເຂັ້ມແຂງຂອງຄວາມຮູ້ກ່ອນຫນ້າແລະຜູ້ທີ່ມີຄວາມເຂົ້າໃຈໃນທາງບວກກ່ຽວກັບຄວາມສາມາດຂອງຕົນເອງແມ່ນມັກຈະມີສ່ວນຮ່ວມໃນຂະບວນການຮຽນຮູ້. ປັດໄຈການສິດສອນຫມາຍເຖິງວິທີການສອນ, ຍຸດທະສາດ, ແລະຊັບພະຍາກອນທີ່ໃຊ້ໂດຍຜູ້ສອນ. ວິທີການສອນແບບມີສ່ວນຮ່ວມ ແລະແບບໂຕ້ຕອບ, ເຊັ່ນ: ການທົດລອງດ້ວຍມື, ການສາທິດ, ແລະການນຳໃຊ້ຕົວຈິງ, ສາມາດເພີ່ມການມີສ່ວນຮ່ວມຂອງນັກຮຽນ. ການນຳໃຊ້ເຕັກໂນໂລຢີ, ຊັບພະຍາກອນມັນຕິມີເດຍຢ່າງມີປະສິດທິພາບ, ແລະໂອກາດການຮຽນຮູ້ແບບຮ່ວມມືກໍ່ສາມາດປະກອບສ່ວນເພີ່ມການມີສ່ວນຮ່ວມ.

ປັດໄຈສິ່ງແວດລ້ອມລວມເຖິງສະພາບແວດລ້ອມໃນຫ້ອງຮຽນ, ການພົວພັນມິດສະຫາຍ, ແລະການມີຊັບພະຍາກອນ. ສະພາບແວດລ້ອມໃນຫ້ອງຮຽນທີ່ສະຫນັບສະຫນູນແລະລວມທີ່ຊຸກຍູ້ໃຫ້ມີສ່ວນຮ່ວມຢ່າງຫ້າວຫັນ, ເຄົາລົບທັດສະນະທີ່ຫຼາກຫຼາຍ, ແລະໂອກາດສຳລັບການຮ່ວມມືສາມາດສົ່ງເສີມການມີສ່ວນຮ່ວມຂອງນັກຮຽນ. ການເຂົ້າເຖິງຫ້ອງທົດລອງທີ່ມີອຸປະກອນດີ, ປຶ້ມແບບຮຽນ, ຊັບພະຍາກອນອອນໄລນ໌, ແລະອຸປະກອນການຮຽນຮູ້ອື່ນໆແມ່ນມີຄວາມຈຳເປັນສຳລັບນັກຮຽນທີ່ຈະມີສ່ວນຮ່ວມຢ່າງຈິງຈັງໃນການຮຽນຮູ້ເຄມີ. ການແກ້ໄຂປັດໄຈເຫຼົ່ານີ້ ແລະ ການສົ່ງເສີມການມີສ່ວນຮ່ວມຢ່າງຫ້າວຫັນໃນການຄຸ້ມຄອງການຮຽນ-ການສອນ ຮຽກຮ້ອງໃຫ້ມີຄວາມພະຍາຍາມຮ່ວມມືລະຫວ່າງນັກສຶກສາ, ຜູ້ສອນ ແລະ ສະຖາບັນການສຶກສາ. ໂດຍການສ້າງສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍ, ການໃຊ້ກົນລະຍຸດການສອນທີ່ມີປະສິດທິພາບ, ແລະການສະຫນອງ

ຊັບພະຍາກອນທີ່ຈຳເປັນ, ການມີສ່ວນຮ່ວມຂອງນັກຮຽນເຄມີສາມາດໄດ້ຮັບການປັບປຸງ, ນຳໄປສູ່ການປັບປຸງຜົນໄດ້ຮັບແລະຄວາມເຂົ້າໃຈຂອງວິຊາທີ່ເລິກເຊິ່ງ.

ສະນັ້ນ, ວຽກງານວິໄຈພາກປະຕິບັດ ຫຼື ການວິໄຈໃນຫ້ອງຮຽນ ແລະການພັດທະນານະວັດຕະກຳ ໂດຍສະເພາະໂມດູນການພັດທະນາທັກສະ ຈຶ່ງເປັນວຽກງານໜຶ່ງທີ່ຄວນສົ່ງເສີມ ແລະ ໃຫ້ຄວາມສຳຄັນ ເພື່ອພັດທະນາການຮຽນ-ການສອນຂອງຄູໃຫ້ໄດ້ທັງປະລິມານ ແລະຄຸນະພາບ ແລະ ສ້າງຄູນັກສຶກສາຄູໃນສະຖາບັນໃຫ້ກາຍເປັນທັງຄົນດີ ແລະຄົນເກັ່ງ ຕອບສະໜອງແນວທາງນະໂຍບາຍຂອງພັກ-ລັດ, ຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ປະເທດຊາດໄດ້ເປັນຢ່າງດີ.

## 2. ຄຳຖາມຂອງການວິໄຈ

1. ໂມດູນທີ່ມີປະສິດທິຜົນໃນການສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈພາກປະຕິບັດຄວນມີລັກສະນະແບບໃດ?;

2. ພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນສະແດງອອກຄືແນວໃດແດ່?;

3. ຜົນການປະເມີນປະສິດທິຜົນໂມດູນທີ່ການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນເປັນຢ່າງໃດ?.

## 3. ຈຸດປະສົງຂອງການວິໄຈ

3.1. ເພື່ອພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ;

3.2. ເພື່ອສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ;

3.3. ເພື່ອປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.

## 4. ຂອບເຂດຂອງການວິໄຈ

ການວິໄຈເລື່ອງນີ້ເປັນການສຶກສາຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ການວິໄຈໃນຫ້ອງຮຽນ ໂດຍນຳໃຊ້ຝຶກທັກສະ, ຜູ້ວິໄຈໄດ້ກຳນົດຂອບເຂດໃນການສຶກສາ ດັ່ງຕໍ່ໄປນີ້ ຄື:

### 4.1 ປະຊາກອນທີ່ຈະສຶກສາ

ປະຊາກອນທີ່ຈະສຶກສາໃນການວິໄຈຄັ້ງນີ້ມີ ດັ່ງນີ້

1) ນັກສຶກສາຄູສາຍເຄມີ ຈຳນວນ 9 ຄົນ, ຍິງ 6 ຄົນ

**4.2 ກຸ່ມຕົວຢ່າງທີ່ຈະສຶກສາ**

1) ນັກສຶກສາຄູສາຍເຄມີ ຈຳນວນ 9 ຄົນ, ຍິງ 6 ຄົນ ຊຶ່ງໄດ້ມາໂດຍວິທີເລືອກແບບເຈາະຈົງ

4.3 **ຕົວປ່ຽນທີ່ຈະສຶກສາ (variables)**

ຕົວປ່ຽນທີ່ຈະສຶກສາໃນການວິໄຈຄັ້ງນີ້ມີດັ່ງນີ້:

1) ຕົວປ່ຽນຕົ້ນ (Independent Variable) ຄື ແນວຄິດທິດສະດີທີ່ກ່ຽວຂ້ອງ

2) ຕົວປ່ຽນຕາມ(Dependent Variable) ຄື ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີ

4.4 ໄລຍະເວລາໃນການດຳເນີນການວິໄຈ

ການດຳເນີນການວິໄຈໃນຄັ້ງນີ້ ໃຊ້ເວລາດຳເນີນ 1 ພາກຮຽນ

## 5. ກອບແນວຄິດໃນການວິໄຈ




ແຜນວາດທີ 1: ກອບແນວຄິດໃນການວິໄຈ

## 6. ຄຳສັບສຳຄັນທີ່ໃຊ້ໃນການວິໄຈ

**6.1 ໂມດູນການຝຶກ** ໝາຍເຖິງ ກິດຈະກຳໃນການຝຶກປະຕິບັດ ແລະ ດຳເນີນການວິໄຈໃນຫ້ອງຮຽນ ເຊິ່ງເລີ່ມຕົ້ນແຕ່ການກຳນົດບັນຫາ ແລະ ດຳເນີນການວິໄຈຕົວຈິງໃນຫ້ອງຮຽນ

**6.2 ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຂອງນັກສຶກສາສາຍຄູເຄມີຕໍ່ການວິໄຈໃນຫ້ອງຮຽນ** ໝາຍເຖິງ ລະດັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາຕໍ່ຂະບວນການດຳເນີນການວິໄຈໃນຫ້ອງຮຽນ ເຊິ່ງເລີ່ມຕົ້ນແຕ່ການກຳນົດບັນຫາການວິໄຈຕະຫຼອດເຖິງການດຳເນີນການວິໄຈ

## 7. ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ

7.1 ໄດ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບອຸປະສັກກິດຂວາງຕໍ່ການດຳເນີນການວິໄຈໃນຫ້ອງຮຽນຂອງນັກສຶກສາຄູສາຍເຄມີ

7.2 ບອກໄດ້ລະດັບຄວາມຮູ້-ຄວາມເຂົ້າໃຈຂອງນັກສຶກສາຄູທີ່ເປັນກຸ່ມຕົວຢ່າງ ໃນການດຳເນີນການດຳເນີນການວິໄຈໃນຫ້ອງຮຽນ

7.3 ໄດ້ນະວະຕະກຳທີ່ເປັນຄູ່ມື ເຊິ່ງສາມາດໃຊ້ເປັນເຄື່ອງມືໃນການສົ່ງເສີມຊຸກຍູ້ໃຫ້ນັກສຶກສາຄູມີສ່ວນຮ່ວມໃນການຮຽນຮູ້ວິຊາວິໄຈໃນຫ້ອງຮຽນ

# ບົດທີ 2

# ແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ

ການວິໄຈເລື່ອງ ການສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ໂດຍນຳໃຊ້ໂມດູນການພັດທະນາທັກສະ ຊຶ່ງຜູ້ວິໄຈໄດ້ດຳເນີນການສຶກສາເອກະສານໃນຫົວຂໍ້ຕ່າງໆ ດັ່ງລຸ່ມນີ້:

1. ທິດສະດີກ່ຽວກັບການຮັບຮູ້
2. ທິດສະດີກ່ຽວກັບຄວາມເຂົ້າໃຈ
3. ທິດສະດີກ່ຽວກັບການວິໄຈໃນຫ້ອງຮຽນ
4. ແບບຝຶກອົບຮົມ
5. ຄວາມຮູ້ກ່ຽວກັບສື່ປະສົມ
6. ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

## 1. ແນວຄິດທິດສະດີກ່ຽວກັບການຮຽນຮູ້

### 1.1 ຄວາມໝາຍຂອງການຮັບຮູ້

ການຮັບຮູ້ ເປັນຂະບວນການທີ່ອິນຊີ ຫຼື ສິ່ງທີ່ມີຊີວິດພະຍາຍາມທຳຄວາມເຂົ້າໃຈກັບສິ່ງແວດລ້ອມ ໂດຍຜ່ານທາງປະສາດສຳຜັດ ຂະບວນການນີ້ເລີ່ມຕົ້ນຈາກການທີ່ໃຊ້ອະໄວຍະວະສຳຜັດຈາກສິ່ງກະທົບ ແລະ ຈັດລະບົບສິ່ງກະທົບໃໝ່ພາຍໃນລະບົບການຄິດໃນສະໝອງ ເຮັດໃຫ້ເຮົາຮູ້ວ່າ ສິ່ງກະທົບ ຫຼື ສິ່ງແວດລ້ອມທີ່ສຳຜັດນັ້ນແມ່ນຫຍັງ ມີຄວາມໝາຍວ່າແນວໃດ ມີລັກສະນະແບບໃດ (1518)

ສຸພັດທາ ເຮັງວານິດ (2541) ໃຫ້ຄວາມໝາຍຂອງການຮັບຮູ້ວ່າ ໝາຍເຖິງການສຳຜັດທີ່ສາມາດສື່ຄວາມໝາຍ ເປັນການແປງ ຫຼື ຕີຄວາມແຫ່ງການສຳຜັດທີ່ໄດ້ຮັບອອກມາເປັນສິ່ງໜຶ່ງສິ່ງໃດທີ່ມີຄວາມໝາຍອັນເປັນສິ່ງຮູ້ຈັກ ແລະ ເຂົ້າໃຈກັນ ໃນການແປ ຫຼື ຕີຄວາມໝາຍຂອງການສຳຜັດນັ້ນຈຳເປັນທີ່ຈະໃຊ້ປະສົບການເດີມ ຫຼື ຄວາມຈະແຈ້ງໃນເຫດການທີ່ຜ່ານມາ ແຕ່ຖ້າຄົນເຮົາບໍ່ມີຄວາມຮູ້ເດີມ ຫຼື ລືມເລື່ອງນັ້ນໆ ໄປກໍຈະບໍ່ມີການຮັບຮູ້ສິ່ງນັ້ນໆ ຈະມີກໍພຽງແຕ່ທີ່ສຳຜັດກັບສິ່ງກະຕຸ້ນເທົ່ານັ້ນ ຂະບວນການຂອງການຮັບຮູ້ຈຶ່ງໝາຍເຖິງ ຂະບວນການທີ່ ກ່ຽວຂ້ອງກັນລະຫວ່າງຄວາມຮູ້ສຶກ ຄວາມເຂົ້າໃຈ ການຄິດ ການຮຽນຮູ້ ການຕັດສິນໃຈ ແລະ ເປັນການສະແດງພຶດຕິກຳ

ກູຣັນນິກ (Guralnik, 1986) ໄດ້ກ່າວເຖິງການຮັບຮູ້ວ່າໝາຍເຖິງ ການສະແດງອອກເຖິງການຮັບຮູ້ ຫຼື ຄວາມສາມາດທີ່ຈະຮັບຮູ້ເປັນຄວາມເຂົ້າໃຈກ່ຽວກັບວັດຖຸ ສິ່ງຂອງ ຫຼື ຄຸນລັກສະນະ ໂດຍວິທີການສະແດງອອກທາງຄວາມຮູ້ (sense) ຄວາມຕະໜັກ (awareness) ແລະ ຄວາມເຂົ້າໃຈ (comphrehension)

ສ້ອຍຕະກຸນ (2541) ກ່າວວ່າ ການຮັບຮູ້ເປັນຄວາມສາມາດໂດຍທຳມະຊາດທີ່ຈະຮູ້ສຶກໃນຮູບ ລົດຊາດ ກິ່ນ ສຽງ ແລະ ການສຳຜັດ ຫຼື ທີ່ເອີ້ນວ່າການສຳຜັດທັງ 5 ຄື ສຳຜັດທັງ 5 ຂອງມະນຸດຈະເກີດຂຶ້ນໄດ້ກໍ່ຕ້ອງມີສິ່ງກະຕຸ້ນຈາກພາຍນອກ (Outside Stimuli) ເຊັ່ນ ຄື້ນແສງ ຄື້ນສຽງ ພະລັງງານທາງເຄມີຂອງສິ່ງຕ່າງໆ ທີ່ເຮັດໃຫ້ບຸກຄົນໄດ້ຮັບກິ່ນໄດ້ ເປັນຕົ້ນ ນອກຈາກນີ້ຍັງມີສິ່ງກະຕຸ້ນຈາກພາຍໃນ (Inside Stimuli) ເຊັ່ນ ພະລັງທີ່ມາຈາກ

ກ້າມຊີ້ນ ຫຼື ອາຫານທີ່ຜ່ານລະບົບຍ່ອຍ ຈາກນັ້ນຮ່າງກາຍກໍ່ດູດຊຶມໄວ້ໃຊ້ພະລັງງານຕໍ່ໄປ ຫຼື ຕ່ອມທີ່ຜະລິດຮໍໂມນ ຊຶ່ງມີຜົນຕໍ່ພຶດຕິກຳ ດັ່ງນັ້ນ ຈະເຫັນໄດ້ວ່າ ເປັນການຮັບຮູ້ກ່ຽວກັບເລື່ອງຂອງກາຍຍະພາບເປັນພື້ນຖານ ຈາກການທີ່ບຸກຄົນຮູ້ສຶກໃນສິ່ງກະຕຸ້ນຕ່າງໆ ອ້ອມຂ້າງ ນັ້ນກໍ່ເທົ່າກັບວ່າຄວາມຮູ້ສຶກນັ້ນໄດ້ສິ່ງຂໍ້ມູນດິບ ເຂົ້າມາສູ່ປະສາດທັງ 5 ຈາກນັ້ນກໍ່ຈະເປັນການຕີຄວາມໝາຍໃນຂໍ້ມູນດິບເຫຼົ່ານັ້ນ ແລ້ວຈຶ່ງເກີດການຮັບຮູ້ ຫຼື ຈິດຕະພາບຂຶ້ນ ດັ່ງນັ້ນ ຂະບວນການຮັບຮູ້ຈຶ່ງກ່ຽວຂ້ອງກັບປະຕິສຳພັນທີ່ສະຫຼັບສັບຊ້ອນຂອງການຄັດເລືອກ ການຈັດລະບຽບ ແລະ ການຕີຄວາມໝາຍ ຂໍ້ມູນດິບຕ່າງໆ ຫຼື ຄວາມຮູ້ສຶກຕ່າງໆ ຂອງບຸກຄົນໜຶ່ງໆ

ມານະ ອ່ອນທ້ວມ (2542) ໄດ້ໃຫ້ຄວາມໝາຍວ່າ ການຮັບຮູ້ຄືການສຳຜັດທີ່ມີຄວາມໝາຍ ການຮັບຮູ້ເປັນການແປ ຫຼື ຕີຄວາມໝາຍ ແບ່ງການສຳຜັດທີ່ໄດ້ຮັບອອກເປັນສິ່ງໜຶ່ງສິ່ງໃດທີ່ມີຄວາມໝາຍ ຫຼື ຮູ້ຈັກເຂົ້າໃຈ ຊຶ່ງໃນການແປ ຫຼື ຕີຄວາມໝາຍນີ້ຈຳເປັນທີ່ອິນຊີຈະຕ້ອງໃຊ້ປະສົບການເດີມ ຫຼື ຄວາມຮູ້ເດີມ ຫຼື ຄວາມຊັດເຈນທີ່ເຄີຍມີແຕ່ຄາວຫຼັງ ຂະບວນການຂອງການຮັບຮູ້ຈະເກີດຂຶ້ນຕ້ອງປະກອບດ້ວຍ 1) ການສຳຜັດ ຫຼື ອາການສຳຜັດ 2) ຊະນິດ ແລະ ທຳມະຊາດຂອງສິ່ງກະຕຸ້ນທີ່ມາກະທົບ 3) ການແປຄວາມໝາຍຈາກອາການສຳຜັດ 4) ການໃຊ້ຄວາມຮູ້ເດີມ ຫຼື ປະສົບການເດີມເພື່ອແປຄວາມໝາຍ

ສິຣິອອນ ວິດຊາວຸດ (2549) ກ່າວວ່າ ການຮັບຮູ້ປະກອບດ້ວຍ ຂະບວນການ 2 ຂະບວນການຄື 1) ການຮູ້ສຶກ ເປັນຂະບວນການທາງຮ່າງກາາຍຂອງມະນຸດ ເປັນຂະບວນການທຳອິດທີ່ກ່ຽວຂ້ອງກັບສິ່ງກະຕຸ້ນພາຍນອກຮ່າງກາຍຂອງມະນຸດ ຂະບວນການຮູ້ສຶກເປັນຂະບວນການເກັບຂໍ້ມູນກ່ຽວກັບສິ່ງກະຕຸ້ນທີ່ຜ່ານເຂົາມາທາງປະສາດສຳຜັດທັງ 5 ແລະ ສົ່ງໄປຍັງສະໝອງເພື່ອໃຫ້ຕີຄວາມ 2) ການຮັບຮູ້ ຄື ການຕີຄວາມວ່າ ສິ່ງທີ່ຮູ້ສຶກນັ້ນແມ່ນຫຍັງ ເປັນຂະບວນການທາງຄວາມຄິດ ທີ່ສະຫຼັບສັບຊ້ອນຊຶ່ງສາມາດເຮັດໃຫ້ບຸກຄົນເຫັນພາບທີ່ປະກົດຕໍ່ຕົນນັ້ນ ບາງເທື່ອກົງຄວາມເປັນຈິງ ແລະ ບາງເທື່ອອາດຈະແຕກຕ່າງໄປຈາກຄວາມເປັນຈິງ

Mowen & Minor (1998) ໄດ້ໃຫ້ຄວາມໝາຍໄວ້ວ່າ ການຮັບຮູ້ ໝາຍເຖິງຂະບວນການທີ່ບຸກຄົນເປີດຮັບຂໍ້ມູນຂ່າວສານ ຕັ້ງໃຈຮັບຂໍ້ມູນນັ້ນ ແລະ ທຳຄວາມເຂົ້າໃຈຄວາມໝາຍ

Assael (1998) ໄດ້ໃຫ້ຄວາມໝາຍໄວ້ວ່າ ການຮັບຮູ້ ໝາຍເຖິງ ຂະບວນການທີ່ຜູ້ບໍລິໂພກເລືອກຮັບ ຈັດອົງປະກອບ ແລະ ແປຄວາມໝາຍສິ່ງກະຕຸ້ນຕ່າງໆ ອອກມາເພື່ອໃຫ້ມີຄວາມໝາຍເຂົາໃຈໄດ້

ກັນຍາ ສຸວັນແສງ (2540) ກ່າວວ່າ ຂະບວນການຮັບຮູ້ຈະເກີດຂຶ້ນໄດ້ຕ້ອງມີຄົບທັງ 3 ອົງປະກອບຄື ສິ່ງກະຕຸ້ນ ປະສາດສຳຜັດ ແລະ ປະສົບການເດີມ ຫຼື ຄວາມຮູ້ກ່ຽວກັບສິ່ງທທີ່ໄດ້ສຳຜັດ ຂະບວນການຂອງການຮັບຮູ້ເປັນຂະບວນການທີ່ຂ້ອງກ່ຽວກັນລະຫວ່າງຄວາມເຂົ້າໃຈ ຄວາມຄິດ ຄວາມຈຳ ຄວາມຮູ້ສຶກ ການຮຽນຮູ້ ການຕັດສິນໃຈ ການສະແດງພຶດຕິກຳ ການຮັບຮູ້ແຊກຢູ່ລະຫວ່າງສິ່ງກະຕຸ້ນກັບການຕອບສະໜອງສິ່ງກະຕຸ້ນ

ກັນຍາ ສຸວັນແສງ (2540) ກ່າວວ່າ ປັດໄຈທີ່ມີອິດທິພົນຕໍ່ການຮັບຮູ້ຂອງມະນຸດສາມາດ ແບ່ງອອກເປັນ 2 ລັກສະນະໃຫຍ່ໆ ຄື: 1) ລັກສະນະຂອງຜູ້ຮັບຮູ້ ໄດ້ແກ່ ດ້ານກາຍະພາບ ໝາຍເຖິງ ອະໄວຍະວະສຳຜັດຕ່າງໆ ເຊັ່ນ ຫູ ຕາ ດັງ ແລະ ດ້ານຈິດຕະວິທະຍາ ເຊັ່ນ ຄວາມຈຳ ອາລົມ ຄວາມພ້ອມ ສະຕິປັນຍາ ການສັງເກດພິຈາລະນາ ຄວາມສົນໃຈ ຕັ້ງໃຈ ຄ່ານິຍົມ ຄວາມຄິດ ວັດທະນະທຳ ປະສົບການເດີມຕ່າງໆ ທີ່ເກີດຈາກການຮຽນຮູ້ ແລະ ປະສົບການໃນໄລຍະຜ່ານມາ 2) ລັກສະນະຂອງສິ່ງກະຕຸ້ນ ການທີ່ບຸກຄົນຮັບຮູ້ເລື່ອງໃດໆ ແຕກຕ່າງກັນຂຶ້ນຢູ່ກັບສິ່ງກະຕຸ້ນນັ້ນດຶງດູດຄວາມສົນໃຈຫຼາຍປານໃດ

ຈາກຄວາມໝາຍດັ່ງກ່າວຂ້າງຕົ້ນ ຜູ້ວິໄຈສາມາດ**ສະຫຼຸບ**ຜົນຄວາມໝາຍຂອງການຮັບຮູ້ ໝາຍເຖິງການແປຄວາມໝາຍຂອງການສຳຜັດຊຶ່ງໄດ້ຮັບຈາກການໄດ້ເຫັນ ໄດ້ຍິນ ໄດ້ສຳຜັດ ແລ້ວສະແດງອອກມາເປັນຄວາມຮູ້ສຶກນຶກຄິດ ຄວາມເຊື່ອ ແລະ ຄວາມເຂົ້າໃຈໃນເລື່ອງຕ່າງໆ ທີ່ໄດ້ສຳຜັດເປັນລັກສະນະສະເພາະຂອງແຕ່ລະບຸກຄົນເກີດຂຶ້ນພາຍໃນຕົວຂອງບຸກຄົນ ແລະ ມີອິດທິພົນຕໍ່ພຶດຕິກຳ ທີ່ບຸກຄົນນັ້ນສະແດງອອກມາ

**1.2 ຄວາມສຳຄັນຂອງການຮັບຮູ້**

ກັນຍາ ສຸວັນນະແສງ (2552) ໄດ້ກ່າວວ່າ ຄວາມສຳຄັນຂອງການຮັບຮູ້ ວ່າເປັນການຮັບຮູ້ທີ່ມີຄວາມສຳຄັນຕໍ່ການຮຽນຮູ້ ການຮັບຮູ້ເຮັດໃຫ້ເກີດການຮຽນຮູ້ ແລະ ການຮຽນຮູ້ມີຜົນຕໍ່ການຮັບຮູ້ຄັ້ງໃໝ່ ເນື່ອງຈາກຄວາມຮູ້ເກົ່າຈະຊ່ວຍແປຄວາມໝາຍໃຫ້ຮູ້ວ່າແມ່ນຫຍັງ

ການຮັບຮູ້ມີຄວາມສຳຄັນຕໍ່ຄວາມຄິດ ອາລົມ ແລະ ທ່າອ່ຽງຂອງພຶດຕິກຳ ເມື່ອຮັບຮູ້ແລ້ວຍ່ອມເກີດຄວາມຮູ້ສຶກ ແລະ ມີອາລົມ ພັດທະນາມາເປັນຄວາມຄິດ ແລ້ວພຶດຕິກຳຈະຕາມມາໃນທີ່ສຸດ ດັ່ງນັ້ນມະນຸດເມື່ອເກີດການຮັບຮູ້ໃນສິ່ງໃດສິ່ງໜຶ່ງແລ້ວຈະຕີຄວາມໝາຍ ແລະ ສິ່ງຜົນກະທົບຕໍ່ໄປຍັງອາລົມ ຄວາມຮູ້ສຶກກໍ່ໃຫ້ເກີດພຶດຕິກຳຂຶ້ນໃນແຕ່ລະບຸກຄົນທີ່ແຕກຕ່າງກັນໄປ ຊຶ່ງການຮັບຮູ້ດັ່ງກ່າວຈະກໍ່ໃຫ້ເກີດການຮຽນຮູ້ໃນສິ່ງໃໝ່ໆ ແລະ ການຮຽນຮູ້ທີ່ເກີດຂຶ້ນໃນແຕ່ລະຄັ້ງກໍ່ມີຜົນຕໍ່ການຮັບຮູ້ຄັ້ງຕໍ່ໄປສະເໝີ

**1.3 ຂະບວນການຂອງການຮັບຮູ້**

ຂະບວນການຂອງການຮັບຮູ້ ໝາຍເຖິງ ຂະບວນການທີ່ຕິດພັນກັນລະຫວ່າງຄວາມຮູ້ສຶກ ຄວາມເຂົ້າໃຈ ການຄິດ ການຮຽນຮູ້ ການຕັດສິນໃຈ ແລະ ເປັນການສະແດງພຶດຕິກຳ (ສົມພົບ ສຸກກັດ, 2543)

| ສິ່ງກະທົບ | ຕີຄວາມ ການຄິດ ຄວາມເຂົ້າໃຈ<br>ການຈຳ ການຮຽນຮູ້ ມະໂນພາບ | ພຶດຕິກຳ |
|---|---|---|
| ຂະບວນການພາຍນອກ → | ຂະບວນການພາຍໃນ → | ຂະບວນການສະແດງອອກ |
| (stimulus) | (perception) | (response) |

ແຜນວາດທີ 2 ຂະບວນການຂອງການຮັບຮູ້

ສິດທິໂຊກ ວະຣານຸສັນຕິກຸນ (2548) ໄດ້ກ່າວເຖິງຂະບວນການຮັບຮູ້ວ່າປະກອບດ້ວຍຂັ້ນຕອນທີ່ສຳຄັນ 3 ຂັ້ນຕອນ ດັ່ງນີ້

1. ການເລືອກ (selection) ເປັນຂະບວນການເລືອກເພື່ອທີ່ຈະຮັບຮູ້ສິ່ງກະທົບບາງຢ່າງຈາກບັນດາສິ່ງກະຕຸ້ນທັງຫຼາຍ

2. ການຈັດລະບົບ (organization) ໂດຍທົ່ວໄປບຸກຄົນຈັດລະບົບສິ່ງກະຕຸ້ນອອກເປັນ 2 ວິທີຄື :

2.1 ບຸກຄົນເລືອກທີ່ຈະຮັບສິ່ງກະຕຸ້ນ ແລະ ແຍກສິ່ງກະຕຸ້ນທີ່ເລືອກອອກມາເປັນສ່ວນທີ່ສົນໃຈແລ້ວມຸ່ງຄວາມສົນໃຈໄປຍັງສ່ວນນັ້ນເປັນພິເສດ

2.2 ການຈັດສິ່ງກະຕຸ້ນນັ້ນໆ ໃຫ້ຢູ່ໃນຮູບທີ່ງ່າຍຂຶ້ນ ຕັດສິ່ງທີ່ລະອຽດສັບຊ້ອນ ຫຼື ສັບສົນຖິ້ມ ໄປ ຊຶ່ງມັກເປັນທ່າອ່ຽງຂອງຄົນໄທທົ່ວໆ ໄປ

3. ການແປຄວາມໝາຍ (interpretation) ເປັນຂັ້ນຕອນສຸດທ້າຍໃນຂະບວນການຮັບຮູ້ ໂດຍບຸກຄົນຈະອາໃສຄຸນສົມບັດທີ່ມີຢູ່ໃນຕົວ ເຊັ່ນ ແນວຄິດ ປະສົບການ ຄວາມຕ້ອງການ ຄ່ານິຍົມ ເພື່ອຊ່ວຍໃນການພິຈາລະນາສິ່ງກະຕຸ້ນພາຍນອກປະສົມປະສານສິ່ງກະຕຸ້ນດຽວກັນທີ່ສະເໜີຕໍ່ບຸກຄົນຕ່າງໆ ບຸກຄົນເຫຼົ່ານັ້ນຈະແປຄວາມໝາຍຕ່າງກັນ

ເຊີເມີຮອນ ແລະ ຄະນະ (Schermerhorn et.al, 2005) ໄດ້ກ່າວເຖິງການຮັບຮູ້ວ່າມີລໍາດັບຂັ້ນຂອງຂະບວນການທີ່ນໍາໄປສູ່ການຮັບຮູ້ ໂດຍແບ່ງອອກໄດ້ເປັນ 4 ຂັ້ນຕອນ ດັ່ງນີ້:

1. ຂັ້ນຕອນການພິຈາລະນາ ແລະ ຄັດເລືອກຂໍ້ມູນ (attention and selection)

ເນື່ອງຈາກໃນສະພາບແວດລ້ອມອ້ອມຕົວມີຂໍ້ມູນ ຫຼື ສິ່ງກະຕຸ້ນທີ່ບຸກຄົນໄດ້ຮັບຮູ້ຜ່ານປະສາດສໍາຜັດຈໍານວນຫຼາຍ ດັ່ງນັ້ນບຸກຄົນຈໍາເປັນຕ້ອງເລືອກທີ່ຈະຮັບຮູ້ (selective screening) ໂດຍການເລືອກທີ່ຈະຮັບຂໍ້ມູນ ຫຼື ເມີນເສີຍຕໍ່ຂໍ້ມູນໃດໆ ເປັນຜົນມາຈາກຈິດໃຕ້ສໍານຶກຂອງບຸກຄົນນັ້ນ

2. ຂັ້ນຕອນການຈັດລະບົບຂໍ້ມູນ (organization)

ຫຼັງຈາກທີ່ບຸກຄົນພິຈາລະນາເລືອກຂໍ້ມູນແລ້ວ ບຸກຄົນກໍ່ຈະທໍາການຈັດລະບົບຂໍ້ມູນນັ້ນ ໂດຍມີແບບແຜນການຈັດລະບົບຂໍ້ມູນ ຊຶ່ງຈະມີສ່ວນຊ່ວຍໃນການທໍາຄວາມເຂົ້າໃຈ ແລະ ຕີຄວາມຕໍ່ຂໍ້ມູນທີ່ຮັບຮູ້ນັ້ນ

3. ຂັ້ນຕອນການຕີຄວາມຂໍ້ມູນ (interpretation)

ເປັນການໃຫ້ເຫດຜົນຕໍ່ຂໍ້ມູນທີ່ຜ່ານການຄັດເລືອກ ແລະ ຈັດລະບຽບແລ້ວ ການທີ່ບຸກຄົນທີ່ເລືອກຮັບຮູ້ສິ່ງດຽວກັນມີລະບົບການຈັດຂໍ້ມູນແບບດຽວກັນ ບຸກຄົນແຕ່ລະຄົນກໍອາດຈະຕີຄວາມແຕກຕ່າງກັນອອກໄປ

4. ຂັ້ນຕອນການນໍາຂໍ້ມູນທີ່ຮັບຮູ້ມາໃຊ້

ເປັນຂັ້ນຕອນທີ່ເກີດຈາກການທີ່ບຸກຄົນເລືອກນໍາເອົາຂໍ້ມູນທີ່ເຄີຍຮັບຮູ້ ຊຶ່ງຢູ່ໃນຄວາມຊົງຈໍາຂອງບຸກຄົນອອກມາໃຊ້ ຫຼື ສະແດງເປັນພຶດຕິກໍາຂອງບຸກຄົນໃນສະຖານະການຕ່າງໆ

**1.4 ປັດໄຈທີ່ມີຜົນຕໍ່ການຮັບຮູ້**

ໃຈຊະນົກ ພາກອັດ (2555) ສະເໜີວ່າປັດໄຈທີ່ມີຜົນຕໍ່ການຮັບຮູ້ຂອງບຸກຄົນ ໄດ້ແກ່ ປະສົບການເດີມສະຖານະການ ຄວາມຕ້ອງການ ແລະ ໜ້າທີ່ຮັບຜິດຊອບຂອງບຸກຄົນ ໂດຍແບ່ງປັດໄຈທີ່ມີອິດທິພົນຕໍ່ການຮັບຮູ້ຂອງບຸກຄົນເປັນປັດໄຈພາຍໃນ ໄດ້ແກ່ ຄຸນສົມບັດທີ່ຢູ່ພາຍໃນຕົວຂອງຜູ້ຮັບ ເຊັ່ນ ເພດ ອາຊີບ ອາຍຸ ລະດັບການສຶກສາ ຄວາມຕ້ອງການ ຄຸນຄ່າ ຄວາມສົນໃຈ ປະສົບການເດີມ ປັດໄຈພາຍນອກ ໄດ້ແກ່ ຄໍາແນະນໍາ ຄໍາສັ່ງສອນ

ປັດໄຈທີ່ມີຄວາມສໍາພັນກັບກາຮັບຮູ້ (ກະມົນວັດ ຍະລາວັນ, 2547) ແບ່ງອອກໄດ້ ດັ່ງນີ້:

1. ປັດໄຈທາງກາຍະພາບຂອງຜູ້ຮັບຮູ້ ໄດ້ແກ່ ລະບົບປະສາດສໍາຜັດ ເຊັ່ນ ຫູ ຕາ ດັງ ລີ້ນ ຜິວໜັງ ເປັນຕົ້ນ

2. ປັດໄຈທາງດ້ານບຸກຄະລິກກະພາບຂອງຜູ້ຮັບຮູ້ ໄດ້ແກ່ ທັດສະນະຄະຕິ ອາລົມ ຄ່ານິຍົມ ຄວາມຕ້ອງການ ຄວາມສົນໃຈ ຄວາມພໍໃຈ ຄວາມຮູ້ ແລະ ປະສົບການເປັນຕົ້ນ

3. ປັດໄຈທາງດ້ານສິ່ງກະຕຸ້ນພາຍນອກ ໄດ້ແກ່ ລັກສະນະຂອງສິ່ງກະຕຸ້ນ ຄວາມແຕກຕ່າງຂອງສິ່ງກະຕຸ້ນ ເຊັ່ນ ສິ່ງກະຕຸ້ນທີ່ມີຄວາມຊັດເຈນ ຈະແຈ້ງ ສິ່ງກະຕຸ້ນທີ່ມີການກະທໍາຊໍ້າເລື້ອຍໆ

ປັດໄຈທີ່ມີຜົນຕໍ່ການຮັບຮູ້ ແບ່ງເປັນ 2 ລັກສະນະ ດັ່ງນີ້

1. ປັດໄຈທີ່ກ່ຽວກັບຕົວຜູ້ຮັບຮູ້ ແບ່ງໄດ້ 2 ດ້ານຄື

1.1 ດ້ານກາຍະພາບ ໝາຍເຖິງ ອະໄວຍະວະສຳຜັດ ຖ້າອະໄວຍະວະສຳຜັດສົມບູນກໍຈະຮັບຮູ້ໄດ້ດີ ຖ້າເສື່ອມສະມັດຖະພາບ ເຊັ່ນ ຫູຕຶງ ຕາສັ້ນ ກໍ່ຈະຮັບຮູ້ບໍ່ໄດ້ດີ

1.2 ດ້ານສະຕິປັນຍາ ຄື ປັດໄຈທີ່ມີອິດທິພົນຕໍ່ການຮັບຮູ້ ມີຫຼາຍດ້ານ ເຊັ່ນ ຄວາມຈຳ ອາລົມ ສະຕິປັນຍາ ຄວາມພ້ອມ ການສັງເກດພິຈາລະນາ ເປັນຕົ້ນ

2. ປັດໄຈດ້ານຈິດຕະວິທະຍາ ໄດ້ແກ່

2.1 ຄວາມຮູ້ເດີມ ໝາຍເຖິງ ຂະບວນການຮັບຮູ້ເມື່ອສຳຜັດແລ້ວ ຕ້ອງແປເປັນສັນຍາລັກໂດຍອາໃສຄວາມຮູ້ເດີມທີ່ກ່ຽວຂ້ອງກັບສິ່ງທີ່ເຮົາຈະຮັບຮູ້ ສະນັ້ນຖ້າບໍ່ມີຄວາມຮູ້ເດີມມາກ່ອນກໍຈະເຮັດໃຫ້ການຮັບຮູ້ຜິດໄປຈາກຄວາມເປັນຈິງ

2.2 ລັກສະນະຂອງສິ່ງກະຕຸ້ນ ໝາຍເຖິງ ຄຸນສົມບັດຊຶ່ງເປັນປັດໄຈພາຍນອກທີ່ໃຫ້ຄົນສົນໃຈທີ່ຈະຮັບຮູ້ ຫຼື ເຮັດໃຫ້ການຮັບຮູ້ເກີດການຄາດເຄື່ອນ ເຊັ່ນ ຄວາມຄ້າຍຄືກັນ ຄວາມຕໍ່ເນື່ອງຂອງສິ່ງກະຕຸ້ນ ແລະ ສະພາບພື້ນຖານຂອງການຮັບຮູ້

ດັ່ງນັ້ນ ສາມາດກ່າວໄດ້ວ່າ ການຮັບຮູ້ຖືເປັນຂະບວນການແປຄວາມໝາຍຈາກການສຳຜັດ ການຮັບຮູ້ຂອງແຕ່ລະບຸກຄົນນັ້ນແຕກຕ່າງກັນຕ້ອງອາໃສປັດໄຈຫຼາຍຢ່າງ ແລະ ປັດໄຈທີ່ສຳຄັນ ຄື ຄວາມສົນໃຈຕໍ່ສິ່ງກະຕຸ້ນ ຊຶ່ງມີຜົນຕໍ່ການເລືອກຮັບຮູ້ ນອກຈານີ້ການຈະຮັບຮູ້ໄດ້ດີຫຼາຍ ຫຼື ໜ້ອຍພຽງໃດຂຶ້ນຢູ່ກັບສິ່ງທີ່ມມີອິດທິພົນຕໍ່ການຮັບຮູ້ຂອງບຸກຄົນ ເຊັ່ນ ອະໄວຍະວະຮັບສຳຜັດ ແລະ ປະສົບການທີ່ຜ່ານມາ

### 1.5 ກົນໄກຂອງການຮັບຮູ້

ກົນໄກການຮັບຮູ້ເກີດຂຶ້ນຈາກທັງສິ່ງກະຕຸ້ນພາຍນອກ ແລະ ພາຍໃນອິນຊີມີອິດທິພົນຕໍ່ພຶດຕິກຳອະໄວຍະວະຮັບສຳຜັດ (sensory organ) ເປັນເຄື່ອງຮັບສິ່ງກະຕຸ້ນຂອງມະນຸດ ສ່ວນທີ່ຮັບຄວາມຮູ້ສຶກຂອງວະໄວຍະວະຮັບສຳຜັດອາດຢູ່ເລິກເຂົ້າໄປຂ້າງໃນ ຊຶ່ງເບິ່ງຈາກພາຍນອກບໍ່ເຫັນ ອະໄວຍະວະຮັບສຳຜັດແຕ່ລະຢ່າງມີປະສາດຮັບສຳຜັດ (sensory nerve) ຊ່ວຍເຊື່ອມອະໄວຍະວະຮັບສຳຜັດກັບເຂດແດນການຮັບສຳຜັດຕ່າງໆ ທີ່ສະໝອງ ແລະ ສົ່ງຜ່ານປະສາດມໍເຕີ (motor nerve) ໄປສູ່ອະໄວຍະວະມໍເຕີ (motor organ) ຊຶ່ງປະກອບໄປດ້ວຍກ້າມຊີ້ນ ແລະ ຕ່ອມຕ່າງໆ ເຮັດໃຫ້ເກີດປະຕິກິລິຍາຕອບສະໜອງອະໄວຍະວະມໍເຕີ ແລະ ຈະອອກມາໃນຮູບໃດຂຶ້ນຢູ່ກັບ ການບັງຄັບບັນຊາຂອງລະບົບປະສາດ ສ່ວນສາເຫດທີ່ມະນຸດເຮົາສາມາດໄວຕໍ່ຄວາມຮູ້ສຶກກໍ່ເພາະເຊວປະສາດຂອງປະສາດຮັບສຳຜັດແບ່ງແຍກອອກເປັນກິ່ງກ້ານແຜ່ໄປຕິດຕໍ່ກັບອະໄວຍະວະຮັບສຳຜັດ ແລະ ທີ່ອະໄວຍະວະຮັບສຳຜັດມີເຊວຮັບສຳຜັດທີ່ມີຄຸນສົມບັດສະເພາະຕົວຈຶ່ງສາມາດເຮັດໃຫ້ມະນຸດຮັບສຳຜັດໄດ້

ຈິດໃຈຕິດຕໍ່ກັບໂລກພາຍນອກໄດ້ໂດຍການສຳຜັດ ຄົນຕາບອກແມ່ນອະທິບາຍໃຫ້ຟັງວ່າສີແດງ ສີຂຽວເປັນແບບໃດ ເຂົາກໍຈະເຂົ້າໃຈໃຫ້ຖືກຕ້ອງບໍ່ໄດ້ເລີຍ ເພາະເລື່ອງສີຈະຕ້ອງຮູ້ດ້ວຍຕາ ເຄື່ອງມືສຳຜັດຢ່າງໜຶ່ງກໍ່ເຮັດໜ້າທີ່ຢ່າງໜຶ່ງ ຄົນຫູໜວກຍ່ອມບໍ່ຮູ້ສຶກລີລາຄວາມໄພເລາະຂອງສຽງເພງ ດັ່ງນັ້ນ ການສອນຈຶ່ງເນັ້ນວ່າ ໃຫ້ສອນໂດຍທາງສຳຜັດ ການຮັບຮູ້ນັບວ່າເປັນພື້ນຖານສຳຄັນຂອງການຮຽນຮູ້ ການຮັບຮູ້ທີ່ຖືກຕ້ອງຈຶ່ງຈະສົ່ງຜົນໃຫ້ໄດ້ຮັບຄວາມຮູ້ທີ່ຖືກຕ້ອງ ນັກຮຽນຕ້ອງໄດ້ການຮັບຮູ້ທີ່ຖືກຕ້ອງ ບໍ່ດັ່ງນັ້ນແລ້ວຄວາມຮູ້ທີ່ຮັບໄປກໍ່ຜິດໝົດ

ມະນຸດຍ່ອມມີພຶດຕິກຳສະໜອງຕອບສິ່ງແວດລ້ອມຂະບວນການຂອງການຮັບຮູ້ເປັນສິ່ງທຳອິດທີ່ມະນຸດຕອບສະໜອງຕໍ່ສິ່ງແວດລ້ອມ ແລະ ລະບົບປະສາດ ອະໄວຍະວະສຳຜັດເປັນປັດໄຈສຳຄັນຂອງຂະບວນການຮັບຮູ້ຕ້ອງມີຄວາມສົມບູນຈຶ່ງຈະສາມາດຮັບຮູ້ສິ່ງກະຕຸ້ນໄດ້ດີ ເພາະອະໄວຍະວະສຳຜັດຮັບສິ່ງກະຕຸ້ນທີ່ມາກະທົບປະສາດຮັບສຳຜັດສົ່ງກະແສປະສາດໄປຍັງສະໝອງເພື່ອໃຫ້ສະໝອງແປຄວາມໝາຍອອກມາເກີດເປັນການຮັບຮູ້ ແລະ ອະໄວຍະວະສຳຜັດຂອງມະນຸດມີຂີດຄວາມສາມາດຈຳກັດ ກິ່ນອ່ອນເກີນໄປ ສຽງເບົາເກີນໄປ ແສງໜ້ອຍເກີນໄປຍ່ອມຈະຮັບສຳຜັດບໍ່ໄດ້ ດັ່ງນັ້ນປະເພດ ຂະໜາດ ຄຸນນະພາບຂອງສິ່ງກະຕຸ້ນຈຶ່ງມີຜົນຕໍ່ການຮັບຮູ້ ແລະ ການຕອບສະໜອງ ສິ່ງກະຕຸ້ນບາງປະເພດບໍ່ສາມາດກະຕຸ້ນອະໄວຍະວະສຳຜັດຂອງເຮົາໄດ້ ເຊັ່ນ ຄື້ນວິທະຍຸ

**1.6 ອົງປະກອບການຮັບຮູ້**

ການຮັບຮູ້ຈະເກີດຂຶ້ນໄດ້ນັ້ນຈະຕ້ອງມີອົງປະກອບຕ່າງໆ ດັ່ງຕໍ່ໄປນີ້ຄື:

1. ສິ່ງກະຕຸ້ນ ໄດ້ແກ່ ວັດຖຸ ແສງ ສຽງ ກິ່ນ ລົດຊາດຕ່າງໆ

2. ອະໄວຍະວະຮັບສຳຜັດ ໄດ້ແກ່ ຫູ ຕາ ດັງ ລີ້ນ ຜິວໜັງ ຖ້າບໍ່ສົມບູນຈະເຮັດໃຫ້ສູນເສຍການຮັບຮູ້ໄດ້

3. ປະສາດໃນການຮັບຮູ້ສຳຜັດເປັນຕົວກາງສົ່ງກະແສປະສາດຈາກອະໄວຍະວະຮັບສຳຜັດໄປຍັງສະໝອງສ່ວນກາງ ເພື່ອການແປຄວາມຕໍ່ໄປ

4. ປະສົບການເດີມ ການຮູ້ຈັກ ການຈຳໄດ້ ເຮັດໃຫ້ການຮັບຮູ້ໄດ້ດີຂຶ້ນ

5. ຄ່ານິຍົມ ຄວາມຄິດ

6. ຄວາມໃສ່ໃຈ ຄວາມຕັ້ງໃຈ

7. ສະພາບຈິດໃຈ ອາລົມ ເຊັ່ນ ການຄາດຫວັງ ຄວາມດີໃຈ ແລະ ເສຍໃຈ

8. ຄວາມສາມາດທາງສະຕິປັນຍາ ເຮັດໃຫ້ຮັບຮູ້ໄດ້ໄວ

**1.7 ການຈັດລະບົບການຮັບຮູ້**

ມະນຸດເມື່ອພົບສິ່ງກະຕຸ້ນບໍ່ໄດ້ຮັບຮູ້ຕາມທີ່ສິ່ງກະຕຸ້ນປະກົດ ແຕ່ຈະນຳມາຈັດລະບົບຕາມຫຼັກການ ດັ່ງນີ້:

1. ຫຼັກແຫ່ງຄວາມຄ້າຍຄື (principle of similarity) ສິ່ງກະຕຸ້ນໃດທີ່ມີຄວາມຄ້າຍກັນຈະຮັບຮູ້ວ່າເປັນພວກດຽວກັນ

2. ຫຼັກແຫ່ງຄວາມໃກ້ຊິດ (principle of proximity) ສິ່ງກະຕຸ້ນທີ່ມີຄວາມໃກ້ຄຽງກັນຈະຖືກຮັບຮູ້ວ່າເປັນພວກດຽວກັນ

3. ຫຼັກແຫ່ງຄວາມສົມບູນ (principle of closure) ເປັນການຮັບຮູ້ສິ່ງທີ່ບໍ່ສົມບູນໃຫ້ສົມບູນຂຶ້ນ

1.8 ຄວາມຄົງຕົວຂອງການຮັບຮູ້ (perceptual constancy)

ຄວາມຄົງຕົວຂອງການຮັບຮູ້ມີ 3 ຢ່າງ ຄື

1. ການຄົງຕົວຂອງຂະໜາດ

2. ການຄົງຕົວຂອງຮູບແບບ ຮູບຮ່າງ

3. ການຄົງຕົວຂອງສີ ແລະ ແສງສະຫວ່າງ

ການຮັບຮູ້ທີ່ຜິດພາດແມ່ນວ່າມະນຸດມີອະໄວຍະວະສໍາຜັດເຖິງ 5 ປະເພດແຕ່ມະນຸດກໍຍັງຮັບຮູ້ຜິດພາດໄດ້ ເຊັ່ນ ພາບລວງຕາ ການຮັບຟັງຄວາມບອກເລົ່າ ເຮັດໃຫ້ບິດເບືອນໄປ ການມີປະສົບການ ແລະ ຄ່ານິຍົມທີ່ແຕກຕ່າງກັນ ດັ່ງນັ້ນ ການຮັບຮູ້ຖ້າຈະໃຫ້ຖືກຕ້ອງຮັບຮູ້ ໂດຍຜ່ານປະສາດສໍາຜັດຫຼາຍທາງ ແລະ ຜ່ານຂະບວນການຄິດຕຶກຕອງໃຫ້ຫຼາຍຂຶ້ນ.

## 2. ແນວຄິດ ທິດສະດີກ່ຽວກັບຄວາມຮູ້ຄວາມເຂົ້າໃຈ

### 2.1 ຄວາມໝາຍຂອງຄວາມເຂົ້າໃຈ

ຄວາມເຂົ້າໃຈຄື ຂະບວນການທາງຈິດວິທະຍາທີ່ກ່ຽວຂ້ອງກັບສິ່ງໃດສິ່ງໜຶ່ງຊຶ່ງເຮັດໃຫ້ບຸກຄົນສາມາດຄຸ້ນຄິດເຖິງສິ່ງນັ້ນ ແລະ ສາມາດໃຊ້ຄວາມຄິດ (concept) ເພື່ອຈັດການກັບສິ່ງນັ້ນໄດ້ຢ່າງພຽງພໍ ສິ່ງທີ່ກ່າວເຖິງນີ້ອາດຈະມີລັກສະນະເປັນນາມພະທໍາ ຫຼື ເປັນເລື່ອງທາງກາຍະພາບກໍໄດ້ ເຊັ່ນ ບຸກຄົນ ສະຖານະການ ແລະ ຂໍ້ມູນ (http://th.wikipedia.org) ຄວາມເຂົ້າໃຈໝາຍເຖິງເລື່ອງທີ່ກ່ຽວກັບການລະລຶກເຖິງສິ່ງສະເພາະ ວິທີການ ແລະ ຂະບວນການຕ່າງໆ ຕາມຈຸດປະສົງໃນດ້ານຄວາມຮູ້ ໂດຍເນັ້ນໃນເລື່ອງຂອງຂະບວນການທາງຈິດຕະວິທະຍາຂອງຄວາມຈໍາ (Benjamin S. Bloom)

### 2.2 ລະດັບຂອງຄວາມເຂົ້າໃຈ

ລະດັບຂອງຄວາມເຂົ້າໃຈມີຫຼາຍລະດັບໂດຍຄວາມເຂົ້າໃຈນັ້ນຄື ການຮູ້ໃນສິ່ງທີ່ຖືກຮູ້ ຊຶ່ງປະກອບດ້ວຍ

1. ລະດັບສູງສຸດຄື ຮູ້ແຈ້ງເຫັນຈິງ ຫຼື ເຂົ້າໃຈຢ່າງແຈ່ມແຈ້ງ ອາການທີ່ເຂົ້າໃຈຢ່າງແຈ່ມແຈ້ງ ຄວາມເຂົ້າໃຈຕ່າງໆ ເກີດຈາກການພິຈາລະນາດ້ວຍຕົນເອງ ກໍ່ໃຫ້ເກີດການປ່ຽນແປງ

2. ລະດັບຕໍ່າສຸດລົງມາກໍ່ຄື ຮູ້ຮອບ ກໍ່ຄືຮູ້ຈໍາແນກອົງປະກອບພາຍນອກ ພາຍໃນຂອງສິ່ງທີ່ຖືກຮູ້ ຫຼື ການວິເຄາະສັງເຄາະ ຄວາມເຂົ້າໃຈໃນລະດັບນີ້ເກີດຈາກຄວາມຕຶກຕອງດ້ວຍຕົນເອງເຊັ່ນກັນ ແຕ່ບໍ່ມີຜົນທາງດ້ານການປ່ຽນແປງພຶດຕິກໍາ

3. ລະດັບຕໍ່າລົງມາຄື ຮູ້ແນ່ ບໍ່ຮູ້ແນ່ ຄື ເຂົ້າໃຈບໍ່ແຈ້ງຈອດ ຮູ້ເປັນບາງສ່ວນເໝືອນຕາບອດຄໍາຊ້າງ ຫຼື ບໍ່ຮູ້ແທ້ ຮູ້ບໍ່ຊັດເຈນ ອາດຮັບຮູ້ຂໍ້ມູນແຕ່ບໍ່ສາມາດຕຶກຕອງດ້ວຍຕົນເອງ

4. ລະດັບຕໍ່າທີ່ສຸດຄື ຮູ້ແຕ່ບໍ່ເຂົ້າໃຈໃນສິ່ງທີ່ຖືກຮູ້ ຫຼື ເຂົ້າໃຈຜິດກ່ຽວກັບສິ່ງທີ່ຖືກຮູ້ ອັນເນື່ອງມາຈາກຄວາມຜິດພາດດ້ານປະສາດສໍາຜັດ ແລະ ບໍ່ປ່ຽນແປງພຶດຕິກໍາ ເຂົ້າໃຈວ່າຄວາມເຂົ້າໃຈເປັນສ່ວນໜຶ່ງຂອງການຮຽນຮູ້ໂດຍເຈດຕະນາ ແລະ ຕັ້ງໃຈ

ຂະບວນການທັງໝົດຄວາມເຂົ້າໃຈເລີ່ມຈາກຜູ້ຮູ້ ຮູ້ສິ່ງທີ່ຖືກຮູ້ ແລະ ປັດໄຈທີ່ກ່ຽວຂ້ອງກັບຄວາມເຂົ້າໃຈໜ້າຈະໄດ້ແກ່ ຄວາມສາມາດ ປະສາດສໍາຜັດ ການຕີຄວາມໝາຍ ຄວາມສໍາພັນ ເວລາ ເຫດການ ເຂົ້າໃຈວ່າ ຕາບໃດທີ່ເຮົາຍັງບໍ່ຮູ້ແຈ້ງ ຫຼື ຮູ້ແຈ້ງ ເຮົາກໍຄົງຮູ້ໄດ້ສູງສຸດຄື ຮູ້ຮອບ

ເບນຈະມິນ ເອສ ບລູມ (Benjamin S. Bloom) ໄດ້ສະເໜີແນວຄິດກ່ຽວກັບການຮັບຮູ້ 6 ລະດັບ ຊຶ່ງອາດພິຈາລະນາລະດັບຄວາມຮູ້ໃນຂັ້ນຕໍ່າໄປສູ່ລະດັບສູງຂຶ້ນໄປ ໂດຍບລູມ ແລະ ຄະນະໄດ້ຊີ້ແຈ້ງລາຍລະອຽດຂອງແຕ່ລະດັບໄວ້ ດັ່ງນີ້:

1. ຄວາມຮູ້ (knowledge) ໝາຍເຖິງ ການຮຽນຮູ້ທີ່ເນັ້ນເຖິງການຈື່ຈຳ ແລະ ການລະນຶກໄດ້ເຖິງຄວາມຄິດ ຈຸດປະສົງ ແລະ ປະກົດການຕ່າງໆ ຊຶ່ງເປັນຄວາມຈຳທີ່ເລີ່ມຈາກສິ່ງງ່າຍໆ ທີ່ເປັນອິດສະຫຼະແກ່ກັນ ໄປຈົນເຖິງຄວາມຈຳໃນສິ່ງທີ່ຫຍຸ້ງຍາກສັບຊ້ອນ ແລະ ມີຄວາມສຳພັນລະຫວ່າງກັນ

2. ຄວາມເຂົ້າໃຈ (comprehension) ເປັນຄວາມສາມາດທາງສະຕິປັນຍາໃນການຂະຫຍາຍຄວາມຮູ້ ຄວາມຈຳ ໃຫ້ກວ້າງອອກໄປຈາກເດີມຢ່າງສົມເຫດສົມຜົນ ການສະແດງພຶດຕິກຳເມື່ອປະເຊີນກັບສືຄວາມໝາຍ ແລະ ຄວາມສາມາດໃນການແປຄວາມໝາຍ ການສະຫຼຸບ ຫຼື ກາານຂະຫຍາຍຄວາມສິ່ງໃດສິ່ງໜຶ່ງ

3. ການນຳໄປປັບໃຊ້ (application) ເປັນຄວາມສາມາດໃນການນຳຄວາມຮູ້ ຄວາມເຂົ້າໃຈໃນເລື່ອງຕ່າງໆ ທີ່ມີຢູ່ແລ້ວ ໄປແກ້ໄຂບັນຫາທີ່ແປກໃໝ່ຂອງເລື່ອງນັ້ນ ໂດຍການໃຊ້ຄວາມຮູ້ຕ່າງໆ ໂດຍສະເພາະຢ່າງຍິ່ງວິທີການກັບຄວາມເຂົ້າໃຈປະສົມປະສານກັບຄວາມສາມາດໃນການແປຄວາມໝາຍ ການສະຫຼຸບ ຫຼື ການຂະຫຍາຍຄວາມສິ່ງນັ້ນ

4. ການວິເຄາະ ເປັນຄວາມສາມາດ ແລະ ທັກສະ ທີ່ສູງກວ່າຄວາມເຂົ້າໃຈ ແລະ ການນຳໄປປັບໃຊ້ ໂດຍມີລັກສະນະເປັນການຈຳແນກ ສິ່ງທີ່ຈະພິຈາລະນາອອກເປັນສ່ວນຍ່ອຍ ທີ່ມີຄວາມສຳພັນກັນ ລວມເຖິງການສືບຄົ້ນຄວາມສຳພັນຂອງສ່ວນຕ່າງໆ ເພື່ອເບິ່ງວ່າສ່ວນປະກອບປີກຍ່ອຍນັ້ນສາມາດເຂົ້າກັນໄດ້ ຫຼື ບໍ່ ຊຶ່ງຈະຊ່ວຍໃຫ້ເກີດຄວາມເຂົ້າໃຈຕໍ່ສິ່ງໜຶ່ງສິ່ງໃດຢ່າງແທ້ຈິງ

5. ການສັງເຄາະ ເປັນຄວາມສາມາດໃນການລວບລວມສ່ວນປະກອບຍ່ອຍໆ ຫຼື ສ່ວນໃຫຍ່ໆ ເຂົ້າດ້ວຍກັນເພື່ອໃຫ້ເປັນເລື່ອງລາວອັນໜຶ່ງອັນດຽວກັນ ການສັງເຄາະຈະມີລັກສະນະຂອງການເປັນຂະບວນການລວບລວມເນື້ອໃນຂອງເລື່ອງຕ່າງໆ ເຂົ້າໄວ້ດ້ວຍກັນ ເພື່ອສ້າງຮູບແບບ ຫຼື ໂຄງສ້າງທີ່ຍັງບໍ່ຈະແຈ້ງຂຶ້ນມາກ່ອນ ຊຶ່ງເປັນຂະບວນການທີ່ຕ້ອງອາໃສຄວາມຄິດສ້າງສັນພາຍໃນຂອບເຂດຂອງສິ່ງທີ່ກຳນົດໃຫ້

6. ການປະເມີນຜົນ ເປັນຄວາມສາມາດໃນການຕັດສິນກ່ຽວກັບຄວາມຄິດ ຄ່ານິຍົມ ຜົນງານ ຄຳຕອບ ວິທີການ ແລະ ເນື້ອໃນເພື່ອຈຸດປະສົງບາງຢ່າງ ໂດຍມີການກຳນົດເກນເປັນຖານໃນການພິຈາລະນາຕັດສິນ ການປະເມີນຜົນຈັດໄດ້ວ່າເປັນຂັ້ນຕອນທີ່ສູງສຸດຂອງປັນຍາ ທີ່ຕ້ອງໃຊ້ຄວາມຮູ້ຄວາມເຂົ້າໃຈ ການນຳໄປປັບໃຊ້ ການວິເຄາະ ແລະ ການສັງເຄາະເຂົ້າມາພິຈາລະນາປະກອບກັນ ເພື່ອທຳການປະເມີນຜົນສິ່ງໜຶ່ງສິ່ງໃດ

ຈັກກິດ ໃຈດີ (2542) ໄດ້ແຍກຄວາມເຂົ້າໃຈອອກເປັນ 3 ລັກສະນະ ດັ່ງນີ້:

1) ການແປຄວາມ ຄື ຄວາມສາມາດໃນການຈັບໃຈຄວາມໃຫ້ຖືກຕ້ອງກັບສິ່ງທີ່ສື່ຄວາມໝາຍ ຫຼື ຄວາມສາມາດໃນການຖ່າຍເທຄວາມໝາຍ ຈາກພາສາໜຶ່ງໄປສູ່ອີກພາສາໜຶ່ງ ຫຼື ຈາກການສື່ສານຮູບແບບໜຶ່ງໄປສູ່ອີກຮູບແບບໜຶ່ງ

2) ການຕີຄວາມ ຄື ຄວາມສາມາດໃນການອະທິບາຍ ຫຼື ແປຄວາມໝາຍຫຼາຍໆ ຢ່າງມາຮຽບຮຽງ ໂດຍການຈັດລະບຽບ ສະຫຼຸບເປັນເນື້ອຄວາມໃໝ່ ໂດຍຍຶດເນື້ອໃນເດີມເປັນຫຼັກ ບໍ່ຕ້ອງອາໃສເກນອື່ນໃດມາໃຊ້

3) ການຂະຫຍາຍຄວາມ ຄື ຄວາມສາມາດທີ່ຂະຫຍາຍເນື້ອໃນຂໍ້ມູນທີ່ຮັບຮູ້ມາໃຫ້ຫຼາຍຂຶ້ນ ຫຼື ເປັນຄວາມສາມາດໃນການທຳນາຍ ຫຼື ຄາດຄະເນເຫດການລ່ວງໜ້າໄດ້ເປັນຢ່າງດີ ໂດຍອາໃສຂໍ້ມູນອ້າງອີງ ຫຼື ທ່າອ່ຽງທີ່ເກີນເລີຍຈາກຂໍ້ມູນ

ການຈັດລຳດັບຂັ້ນຄວາມຮູ້ຄວາມເຂົ້າໃຈນັ້ນ ອຸທຸມພອນ ທອງອຸໄທ (1980) ຈຳແນກ ແລະ ຈັດລຳດັບພຶດຕິກຳການຮຽນຮູ້ຂອງມະນຸດໃນດ້ານຄວາມຮູ້ ຄວາມຄິດ ແລະ ການນຳຄວາມຮູ້ໄປປະຍຸກພາຍໃຕ້ຂອບເຂດຂອງຫຼັກການດ້ານປັນຍາ ແບ່ງອອກເປັນ 2 ສ່ວນຄື ສ່ວນທີໜຶ່ງ ໄດ້ແກ່ ຄວາມຮູ້ (knowledge) ສ່ວນທີສອງ ໄດ້ແກ່ ທັກສະຄວາມສາມາດທາງປັນຍາ ໂດຍມີລາຍລະອຽດ ດັ່ງນີ້:

1) ຄວາມຮູ້ (knowledge) ແບ່ງໄດ້ເປັນ 3 ປະເພດ ໄດ້ແກ່ ຄວາມຮູ້ສະເພາະດ້ານ ຄວາມຮູ້ເລື່ອງວິຖີການຈັດກະທຳກັບສິ່ງສະເພາະ ແລະ ຄວາມຮູ້ເລື່ອງສາກົນ  ແລະ ເລື່ອງນາມພະທຳໃນສາຂາຕ່າງໆ ດັ່ງນີ້ (1) ຄວາມຮູ້ສະເພາະດ້ານ (knowledge of specifics) ເປັນຄວາມຮູ້ທີ່ກ່ຽວຂ້ອງກັບການລະລຶກເຖິງເລື່ອງທີ່ເປັນແກ່ນຂອງຄວາມຈິງ ຫຼື ຂອງເນື້ອໃນສາຂາມຸ້ງເນັ້ນສັນຍາລັກທີ່ມີຄວາມໝາຍດ້ານຮູບພະທຳ ຊຶ່ງຢູ່ທີ່ລະດັບຕ່ຳທີ່ສຸດຂອງຄວາມເປັນນາມພະທຳ ຄວາມຮູ້ໃນລະດັບນີ້ເປັນພື້ນຖານໃຫ້ຜູ້ຮຽນສາມາດຮັບຄວາມຮູ້ທີ່ສັບຊ້ອນຕໍ່ໄປ ຄວາມຮູ້ສະເພາະດ້າຍຍັງແບ່ງອອກໄດ້ອີກ 2 ປະເພດຍ່ອຍທ ໄດ້ແກ່ ຄວາມຮູ້ຄຳສັບສະເພາະ (knowledge of terminology) ເປັນຄວາມຮູ້ກ່ຽວກັບສິ່ງອ້າງອີງທີ່ເປັນສັນຍາລັກທັງພາສາ ແລະ ບໍ່ແມ່ນພາສາທັງໃນດ້ານຄວາມຮູ້ເລື່ອງສັນຍາລັກແບບຕ່າງໆ ທີ່ໃຊ້ອ້າງອີງແຕ່ພຽງຢ່າງດຽວ ຫຼື ຄວາມຮູ້ໃນສິ່ງອ້າງອີງທີ່ເໝາະສົມທີ່ສຸດໃນສັນຍາລັກທີ່ກຳນົດໃຫ້ ເຊັ່ນຄຳສັບໃນສາຂາວິຊາຕ່າງໆ ສັນຍາລັກທາງຄະນິດສາດ ເປັນຕົ້ນ ແລະ ຄວາມຮູ້ຂໍ້ເທັດຈິງສະເພາະດ້ານ ເປັນຄວາມຮູ້ໃນເລື່ອງວັນ ເວລາ ສະຖານທີ່ ເຫດການ ບຸກຄົນ ແຫ່ງຄວາມຮູ້ ຂໍ້ຄົ້ນພົບຕ່າງໆ ທີ່ເປັນຂໍ້ມູນຄວາມຈິງ ເຊັ່ນ ວັນທີແນ່ນອນໃນເຫດການໃດເຫດການໜຶ່ງ ລຳດັບຄວາມຫຼາຍໜ້ອຍຂອງປະກົດການ (2) ຄວາມຮູ້ເລື່ອງວິຖີ ແລະ ວິທີການຈັດກະທຳກັບສິ່ງສະເພາະ ເປັນຄວາມຮູ້ກ່ຽວກັບວິຖີທາງໃນການຈັດລະບຽບການສຶກສາການຕັດສິນໃຈ ແລະ ການວິພາກວິຈານຄວາມຄິດ ແລະ ປະກົດການ ລວມເຖິງວິທີການຄົ້ນຫາຄວາມຮູ້ ການລຳດັບຜົນທີ່ໄດ້ຕາມເວລາໃນປະຕິທິນ ແລະ ມາດຕະຖານຂອງການຕັດສິນໃຈແຕ່ລະສາຂາ ແລະ ຮູບແບບຂອງການຈັດລະບຽບຕາມທີ່ສາຂາກຳນົດສາມາດແບ່ງອອກເປັນ 5 ປະເພດ ດັ່ງນີ້: ກ) ຄວາມຮູ້ແບບແຜນນິຍົມ (knowledge of conventions) ເປັນຄວາມຮູ້ກ່ຽວກັບລັກສະນະຂອງວິຖີທາງໃນການຈັດກະທຳ ແລະ ການນຳສະເໜີຄວາມຄິດ ແລະ ປະກົດການຢ່າງມີຮູບແບບ ເພື່ອໃຫ້ການສື່ຄວາມໝາຍມີຄວາມສອດຄ່ອງກັບແບບແຜນ ຫຼື ປະເພນີນິຍົມ ເຊັ່ນ ກົດເກນຂອງພຶດຕິກຳສັງຄົມ ຂ) ຄວາມຮູ້ທ່າອ່ຽງ ແລະ ລຳດັບເຫດການ (knowledge of trends and sequence) ເປັນຄວາມຮູ້ກ່ຽວກັບຂະບວນການ ທິດທາງ ແລະ ການເຄື່ອນໄຫວຂອງປະກົດການທີ່ກ່ຽວຂ້ອງກັບເວລາ ລວມເຖິງທ່າອ່ຽງໃນລັກສະນະທີ່ເປັນຄວາມພະຍາຍາມທີ່ຈະຊີ້ຄວາມສຳພັນ ລະຫວ່າງເຫດການສະເພາະຢ່າງຫຼາຍ ເຫດການທີ່ເກີດຂຶ້ນໃນເວລາຕ່າງກັນ ຫຼື ສາເຫດຂອງຄວາມສຳພັນຂອງຊຸດເຫດການສະເພາະຢ່າງຈາກເຫດການຈຳນວນຫຼາຍ 3) ຄວາມຮູ້ເລື່ອງການຈັດຈຳພວກ ແລະ ປະເພດ (knowledge of classification and categories) ເປັນຄວາມຮູ້ກ່ຽວກັບຊັ້ນ ຊຸດ ພະແນກ ແລະ ການຮຽບຮຽງ ຊຶ່ງເປັນພື້ນຖານ ຫຼື ເປັນປະໂຫຍດສຳລັບການຈັດຈຳພວກ ແລະ ປະເພດຂອງເນື້ອໃນ ຈຸດມຸ່ງໝາຍ ຂໍ້ໂຕ້ແຍ້ງ ຫຼື ບັນຫາ ໃຫ້ມີໂຄງສ້າງຂອງລະບົບ ງ) ຄວາມຮູ້ເລື່ອງເກນ (knowledge of criteria) ເປັນຄວາມຮູ້ເລື່ອງເກນຊຶ່ງເປັນຄວາມຈິງ ຫຼັກການ ຄວາມຄິດເຫັນ ແລະ ຂະບວນການກະທຳທີ່ໃຊ້ສຳລັບການທົດສອບ ຫຼື ຕັດສິນ ຈ) ຄວາມຮູ້ເລື່ອງລະບຽບວິທີ (knowledge of methodology) ເປັນຄວາມຮູ້ເລື່ອງວິທີການຫາຄວາມຮູ້ ເຕັກນິກ ແລະ ຂະບວນ

ການທີ່ໃຊ້ໃນສາຂາບາງຢ່າງ ແລະ ທີ່ໃຊ້ໃນການສືບສວນບັນຫາ ແລະ ປະກົດການບາງຢ່າງ ແລະ ມຸ່ງເນັ້ນຄວາມຮູ້ຂອງແຕ່ລະບຸກຄົນໃນເລື່ອງວິທີການຫຼາຍກວ່າຄວາມສາມາດໃນການໃຊ້ວິທີການ

(3) ຄວາມຮູ້ເລື່ອງສາກົນ ແລະ ເລື່ອງນາມມະທໍາໃນສາຂາຕ່າງໆ (knowledge of the universisals and abstractions) ເປັນຄວາມຮູ້ໃນເລື່ອງຫຼັກການ ແລະ ຂໍ້ສະຫຼຸບທົ່ວໄປ ລວມເຖິງຄວາມສໍາພັນຂອງຫຼັກການ ແລະ ຂໍ້ສະຫຼຸບທົ່ວໄປ ຊຶ່ງສະແດງໃຫ້ເຫັນພາບພົດຂອງປະກົດການ ບັນຫາ ຫຼື ສາຂາທີ່ສັບຊ້ອນໄດ້ຢ່າງຈະແຈ້ງ

2) ທັກສະຄວາມສາມາດທາງປັນຍາ ໝາຍເຖິງ ລະດັບສະຕິປັນຍາຂອງຜູ້ຮຽນໃນການລວບລວມຂໍ້ມູນ ແລະ ປັດໄຈຕ່າງໆ ເພື່ອທີ່ຈະຈໍາມາແກ້ບັນຫາ ຫຼື ກະທໍາການໃດໆ ໃຫ້ບັນລຸຕາມວັດຖຸປະສົງ ຂໍ້ມູນ ຫຼື ປັດໄຈເຫຼົ່ານີ້ອາດມີຄວາມຮູ້ທີ່ມີຢູ່ແລ້ວ ຫຼື ທີ່ມີຄົນຈັດຫາມາເພີ່ມເຕີມ ສິ່ງທີ່ເນັ້ນຢູ່ທີ່ສະຕິປັນຍາແບ່ງອອກເປັນ 5 ລະດັບ ຈາກງ່າຍໄປຫາຍາກ ຄື ຄວາມເຂົ້າໃຈ ການປະຍຸກ ການວິເຄາະ ການສັງເຄາະ ແລະ ການປະເມີນ ໂດຍມີລາຍລະອຽດ ດັ່ງນີ້:

(1) ຄວາມເຂົ້າໃຈ (comprehension) ເປັນຄວາມສາມາດທາງສະໝອງ ແລະ ທັກສະໃນການເຂົ້າໃຈຂອງເນື້ອໃນທີ່ໄດ້ຮຽນມາ ໂດຍສາມາດອະທິບາຍດ້ວຍຄໍາພູດ ຂໍ້ຂຽນ ຫຼື ສັນຍາລັກໃນຜູ້ອື່ນເຂົ້າໃຈ ດັ່ງນີ້ ກ) ການແປ (translation) ເປັນຄວາມສາມາດໃນການໃຫ້ຄວາມໝາຍສິ່ງຕ່າງໆ ທີ່ໄດ້ຮູ້ມາກ່ອນ ເຊັ່ນ ເນື້ອໃນ ຄໍາສັບ ແລະ ສັນຍາລັກ ຂ) ການຕີຄວາມໝາຍ (interpretation) ເປັນຄວາມສາມາດໃນການຕີຄວາມໃນສ່ວນທີ່ສໍາຄັນທີ່ບໍ່ແມ່ນສະເພາະຄໍາສັບ ຫຼື ອະລິເທົ່ານັ້ນ ເພື່ອໃຫ້ໄດ້ຄວາມສໍາພັນຂອງສ່ວນຕ່າງໆ ຢ່າງກົມກືນ ຄ) ການສະຫຼຸບອ້າງອີງ (extrapolation) ເປັນຄວາມສາມາດໃນການດຶງຂໍ້ສະຫຼຸບອອກຈາກຂໍ້ຄວາມ ຫຼື ເນື້ອໃນທີ່ຢູ່ໃນຮູບທົ່ວໄປ ການສະຫຼຸບອ້າງອີງທີ່ຖືກຕ້ອງນັ້ນຕ້ອງການໃຫ້ຜູ້ອ່ານສາມາດແປຄວາມ ແລະ ຕີຄວາມເອກະສານໄດ້ຢ່າງຖືກຕ້ອງ

(2) ການປະຍຸກໃຊ້ ພື້ນຖານຂອງການປະຍຸກ ຄື ຄວາມເຂົ້າໃຈໃນວິທີການທິດສະດີ ຫຼັກການ ຫຼື ນາມພະທໍາ ເປັນຄວາມສາມາດໃນການນໍາຄວາມຮູ້ຄວາມເຂົ້າໃຈທີ່ມີຢູ່ມາປັບໃຊ້ກັບສະຖານະການໃນຊີວິດປະຈໍາວັນ

(3) ການວິເຄາະ ການແຍກແຍະທາງຄວາມຄິດ ຫຼື ທາງວັດຖຸຂອງສິ່ງໃດສິ່ງໜຶ່ງ ຫຼື ເລື່ອງໃດເລື່ອງໜຶ່ງ ເພື່ອໃຫ້ເຫັນອົງປະກອບ ເພື່ອສຶກສາແຕ່ລະອົງປະກອບ ຫຼື ວ່າແຍກແຍະເພື່ອໃຫ້ເຫັນເພື່ອໃຫ້ເຫັນຄວາມສໍາພັນຂອງອົງປະກອບຕ່າງໆ ທີ່ເຮັດໃຫ້ເກີດສິ່ງນັ້ນ ຫຼື ເລື່ອງນັ້ນ

(4) ການສັງເຄາະ ເປັນຄວາມສາມາດໃນການລວບລວມສ່ວນປະກອບຍ່ອຍໆ ຫຼື ສ່ວນໃຫຍ່ ເຂົ້າດ້ວຍກັນ ເພື່ອໃຫ້ເປັນເລື່ອງລາວອັນໜຶ່ງອັນດຽວກັນ ການສັງເຄາະຈະມີລັກສະນະຂອງການເປັນຂະບວນການລວບລວມເນື້ອໃນຂອງເລື່ອງຕ່າງໆ ເຂົ້າໄວ້ດ້ວຍກັນ ເພື່ອສ້າງຮູບແບບ ຫຼື ໂຄງສ້າງທີ່ຍັງບໍ່ຊັດເຈນຂຶ້ນມາກ່ອນ ອັນເປັນຂະບວນການທີ່ຕ້ອງອາໃສຄວາມຄິດສ້າງສັນພາຍໃນຂອບເຂດຂອງສິ່ງທີ່ກໍານົດໃຫ້

(5) ການປະເມີນ ເປັນຄວາມສາມາດໃນການຕັດສິນກ່ຽວກັບຄວາມຄິດ ຄ່ານິຍົມ ຜົນງານ ຄໍາຕອບ ວິທີການ  ແລະ ເນື້ອໃນເພື່ອຈຸດປະສົງບາງຢ່າງ ໂດຍມີການກໍານົດເກນ ເປັນຖານໃນການພິຈາລະນາຕັດສິນ ການປະເມີນຜົນ ຈັດໄດ້ວ່າເປັນຂັ້ນຕອນທີ່ສູງສຸດຂອງລັກສະນະການຮູ້ແຈ້ງເຫັນຈິງ ທີ່ຕ້ອງໃຊ້ຄວາມຮູ້ຄວາມເຂົ້າໃຈ ການນໍາໄປໃຊ້ ການວິເຄາະ ແລະ ການສັງເຄາະເຂົ້າມາພິຈາລະນາປະກອບກັນ ເພື່ອທໍາການປະເມີນຜົນສິ່ງໜຶ່ງສິ່ງໃດ

ຈາກແນວຄິດທິດສະດີທີ່ກ່ຽວຂ້ອງກັບລໍາດັບຂັ້ນຄວາມຮູ້ຄວາມເຂົ້າໃຈ ສາມາດສະຫຼູບລໍາດັບຂັ້ນຂອງຄວາມຮູ້ຄວາມເຂົ້າໃຈໄດ້ວ່າ ຄວາມຮູ້ເປັນພຶດຕິກໍາພື້ນຖານທີ່ມີຄວາມສໍາຄັນ ແລະ ຈໍາເປັນສໍາລັບພຶດຕິກໍາມະນຸດ ແລະ ນໍາໄປສູ່ທັກສະຄວາມສາມາດທາງປັນຍາຂອງມະນຸດຕໍ່ໄປ

ການວັດຄວາມຮູ້ຄວາມເຂົ້າໃຈເປັນການວັດພຶດຕິກໍາທາງຈິດຕະວິທະຍາ 2 ຢ່າງຄື ຄວາມສາມາດຈົດຈໍາເລື່ອງນັ້ນໄດ້ ແລະ ສາມາດລະລຶກເລື່ອງນັ້ນໄດ້ ກ່າວຄື ຄວາມສາມາດຈົດຈໍາຈະເປັນຝ່າຍເກັບເລື່ອງລາວຕ່າງໆ ໄວ້ໃນຕົວ ສ່ວນຄວາມສາມາດລະລຶກໄດ້ຈະເປັນຝ່າຍເລື່ອງລາວຕ່າງໆ ເຮົາຕ້ອງອາໃສພຶດຕິກໍາທີ່ບຸກຄົນນັ້ນສະແດງມາເປັນເຄື່ອງຊີ້ວັດວ່າ ບຸກຄົນນັ້ນມີຄວາມຮູ້ຄວາມເຂົ້າໃຈໃນເລື່ອງນັ້ນແທ້ ຫຼື ບໍ່ ດັ່ງນັ້ນ ການວັດຄວາມຮູ້ຄວາມເຂົ້າໃຈຈຶ່ງເປັນຄວາມສາມາດໃນການລະລຶກໄດ້ເຖິງເລື່ອງລາວ ຂໍ້ມູນຄວາມເປັນຈິງ ຫຼື ປະສົບການຕ່າງໆ ຫຼື ເປັນການວັດຄວາມສາມາດລະລຶກໄດ້ເຖິງປະສົບການໃນອະດີດທີ່ບຸກຄົນໄດ້ຮັບການສອນ ການບອກກ່າວ ການຝຶກຝົນອົບຮົມຂອງຜູ້ສອນລວມເຖິງຈາກຕໍາລາ ຈາກສິ່ງແວດລ້ອມຕ່າງໆ ດ້ວຍ ຊຶ່ງໄພສານ ຫວັງພານິດ (2543) ສະເໜີແນະວ່າ ການຕັ້ງຄໍາຖາມເພື່ອວັດຄວາມຮູ້ຄວາມເຂົ້າໃຈຂອງບຸກຄົນຄວນປະກອບດ້ວຍຄໍາຖາມໃນດ້ານຕ່າງໆ ດັ່ງນີ້:

1) ຄໍາຖາມຄວາມຮູ້ໃນເນື້ອເລື່ອງ ເປັນການຖາມລາຍລະອຽດຂອງເນື້ອໃນຂໍ້ມູນຄວາມຈິງຕ່າງໆ ເຊັ່ນ ຄໍາສັບ ນິຍາມ ກົດລະບຽບ ແລະ ຄວາມຈິງໃນເນື້ອໃນຕ່າງໆ

2) ຄໍາຖາມຄວາມຮູ້ໃນວິທີການດໍາເນີນການ ເປັນການຖາມວິທີປະຕິບັດແບບແຜນຂັ້ນຕອນການປະຕິບັດຕ່າງໆ ເຊັ່ນ ຖາມກ່ຽວກັບລະບຽບແບບແຜນ ທ່າອ່ຽງແລະລໍາດັບຂັ້ນຕອນ ການຈັດ ແລະ ແບ່ງປະເພດຫຼັກເກນ ແລະ ວິທີການຕ່າງໆ

ຈາກແນວຄິດທິດສະດີທີ່ກ່າວມາ **ສະຫຼຸບໄດ້ວ່າ** ການວັດຄວາມຮູ້ຄວາມເຂົ້າໃຈຂອງບຸກຄົນເປັນຂະບວນການທີ່ສໍາຄັນໃນທາງຈິດຕະວິທະຍາ ແລະ ເປັນຂັ້ນຕອນທີ່ນໍາໄປສູ່ພຶດຕິກໍາທີ່ກໍ່ໃຫ້ເກີດຄວາມເຂົ້າໃຈ ການນໍາຄວາມຮູ້ໄປໃຊ້ໃນການວິເຄາະ ການສັງເຄາະ ການປະເມີນຜົນ ຊຶ່ງເປັນຂັ້ນຕອນທີ່ໄດ້ໃຊ້ຄວາມຄິດ ແລະ ຄວາມສາມາດທາງສະໝອງຫຼາຍຂຶ້ນເປັນລໍາດັບ

# 3. ທິດສະດີກ່ຽວກັບການວິໄຈໃນຫ້ອງຮຽນ

## 3.1 ຄວາມເປັນມາຂອງການວິໄຈພາກປະຕິບັດ

ໃນລະຫວ່າງປີ 1908-1929 John Dewey ໄດ້ຂຽນບົດຄວາມສະເໜີແນວຄິດກ່ຽວກັບການວິໄຈພາກປະຕິບັດ ໂດຍເຫັນວ່າບຸກຄະລາກອນທາງການສຶກສາຕ້ອງເຮັດການວິໄຈ ໂດຍມີການກວດກາວິເຄາະບັນຫາດ້ານວິທີສອນໂດຍຂະບວນການສະແຫວງຫາຄວາມຮູ້ຜົນງານວິໄຈຂອງຄູຈະສົ່ງຜົນຕໍ່ຄວາມສໍາເລັດຫຼືຄວາມຜິດພາດຂອງໂຮງຮຽນ (Kincheloe, 1991 ອ້າງເຖິງໃນນົງລັກວິຣັດໄຊ, 2000) ແຕ່ບຸກຄົນທໍາອິດທີ່ໃຊ້ຄໍາວ່າການວິໄຈພາກປະຕິບັດ (action research) ຄື Kurt Lewin ໃນປີ 1944 ແນວຄິດຂອງ Lewin ການກັບການວິໄຈພາກປະຕິບັດຈາກການຕີຄວາມຂອງ Kemmis (1988) ມີການດໍາເນີນການຢູ່ 3 ຂັ້ນຕອນຄືການວາງແຜນ (planning) ການສຶກສາຫາບັນຫາທີ່ແທ້ຈິງ (fact finding) ແລະການດໍາເນີນຕາມແຜນຕ່າງໆ (execution) ໃນທຸກຂັ້ນຕອນຂອງການດໍາເນີນ

ການຈະຕ້ອງອາໃສການມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງດ້ວຍເຫດນີ້ການວິໄຈພາກປະຕິບັດຈິ່ງປະກອບມີຢູ່ 3 ລັກສະນະ ຄືການມີສ່ວນຮ່ວມການເສີມສ້າງຄວາມເປັນປະຊາທິປະໄຕ ແລະການນຳໄປສູ່ການປ່ຽນແປງທາງສັງຄົມສາດ ແລະ ສັງຄົມພ້ອມໆ ກັນສຳລັບຜູ້ທີ່ນຳການວິໄຈພາກປະຕິບັດມາໃຊ້ໃນທາງການສຶກສາເປັນຄົນທຳອິດຄື Stepphen Core (Kemmis,S.,1988; Kincheloe, 1991 ອ້າງເຖິງໃນນົງລັກ ວິຣັດໄຊ, 2000)

Kurt Lewin ນັກຈິດຕະວິທະຍາສັງຄົມຊາວອາເມຣິກາໄດ້ຂຽນບົດຄວາມຊື່ "Action Research and Minority Problems" ໃນວາລະສານ "Journal of Social lssues" ຕີພິມໃນປີ 1946 ເຮັດໃຫ້ເກີດແນວຄິດການດຳການວິໄຈ ໄປພ້ອມໆ ກັບການປະຕິບັດໜ້າທີ່ (Action) ໂດຍຜູ້ປະຕິບັດໜ້າທີ່ເປັນນັກວິໄຈເອງທີ່ເອີ້ນວ່າ "Action Research" ໄດ້ເຜີຍແຜ່ໄປຢ່າງກວ້າງຂວາງໃນປະເທດສະຫາຣັດອາເມຣິກາ ອັງກິດ ອອດສະເຕຣເລີຍ ການາດາ ລວມທັງປະເທດຕ່າງໆ ທີ່ຢູ່ໃນທະວີບເອີໂຣບໄດ້ນຳວິທີການວິໄຈພາກປະຕິບັດໄປໃຊ້ໃນການປັບປຸງພັດທະນາວຽກງານຕ່າງໆ ທັງວຽກງານພັດທະນາຊຸມຊົນ ອົງກອນທຸລະກິດ ອຸດສະຫາກຳ ລວມເຖິງວຽກງານສາທາລະນະສຸກ

Corey (1953) ໄດ້ກ່າວວ່າ ການວິໄຈພາກປະຕິບັດ ເກີດຈາກການສະເໜີແນວຄິດຂອງ Collier ຕໍ່ຄະນະກຳມະການຂອງ Indian Affairs ໃນລະຫວ່າງປີ 1933 –1945 ເຂົາໄດ້ນຳເອົາແນວຄິດການວິໄຈພາກປະຕິບັດມາໃຊ້ກັບການຈັດການສຶກສາໃນປະເທດສະຫາຣັດອາເມຣິກາ ໂດຍນຳມາໃຊ້ໃນການປັບປຸງຫຼັກສູດແລະການຮຽນການສອນໃນໂຮງຮຽນ ເຊິ່ງຕໍ່ມາໄດ້ແຜ່ຂະຫຍາຍເຂົ້າໄປໃນຂະແໜງການສຶກສາຂອງປະເທດອັງກິດແລະອອດສະເຕຣເລຍໃນໄລຍະທົດສະວັດ 1970 ໂດຍອັງກິດໄດ້ພະຍາຍາມໃຫ້ຄູດຳເນີນການວິໄຈໃນຫ້ອງຮຽນ (Classroom Action Research) ເພື່ອໃຫ້ຄູປັບປຸງການຮຽນການສອນແລະປ່ຽນແປງບົດບາດທີ່ເອີ້ນວ່າ ຄູນັກວິໄຈ ໂດຍສອນຄູ່ໄປກັບການດຳເນີນການວິໄຈໃນຫ້ອງຮຽນ (Elliott,1987) ດ້ວຍເຫດນີ້ ການວິໄຈພາກປະຕິບັດ (Action Research) ຈິ່ງມີຊື່ເອີ້ນອີກຢ່າງໜຶ່ງວ່າ ການວິໄຈໃນຫ້ອງຮຽນ (Classroom Research)

ໃນໄລຍະປີ 1940-1950 ມີຜູ້ເຮັດການວິໄຈພາກປະຕິບັດເປັນຈຳນວນຫຼາຍກ່ອນທີ່ຈະເລີ່ມລຶດລົງໃນໄລຍະປີ 1950 ທັງນີ້ເພາະນັກວິໄຈນັກທິດສະດີຕ່າງໆ ເລີ່ມໃຫ້ຄວາມສົນໃຈກັບການເຮັດວິໄຈ (research) ທີ່ແຍກອອກການປະຕິບັດ (action) ຫຼືກ່າວອີກຢ່າງໜຶ່ງເປັນການແຍກທິດສະດີອອກຈາກການປະຕິບັດ ໂດຍສະເພາະຢ່າງຍິ່ງເມື່ອມີການສະເໜີແນວຄິດຂອງການວິໄຈແບບ research-development-diffusion (R, D and D) ຍິ່ງເຫັນວ່າ ທິດສະດີ ແລະການປະຕິບັດເລີ່ມແຍກອອກຈາກກັນຫຼາຍຂຶ້ນປະມານກາງປີ 1960 ການວິໄຈແບບ R,D, and D ຖືເປັນໂມເດວ (model) ທີ່ສຳຄັນໃນການນຳໄປສູ່ການປ່ຽນແປງ ແລະ ໃນໄລຍະນີ້ເອງນັກສຶກສາມີຄວາມສົນໃຈການວິໄຈແບບ R,D, and D ຫຼາຍຂຶ້ນ (ສຸວິມົນ ວ່ອງວານິດ, 2011)

ໃນປີ 1973-1976 John Elliott ແລະClem Adelman ໄດ້ເຮັດໂຄງການວິໄຈທາງການສຶກສາຊື່ວ່າFord Teaching Projectໂດຍໃຫ້ຄູມີສ່ວນຮ່ວມໃນການເຮັດການວິໄຈ. ໂຄງການນີ້ກໍ່ໃຫ້ເກີດການພັດທະນາທິດສະດີ ແລະການປະຕິບັດກ່ຽວກັບການວິໄຈພາກປະຕິບັດຫຼາຍຂຶ້ນມີການຕັ້ງເຄືອຂ່າຍການວິໄຈພາກປະຕິບັດໃນຫ້ອງຮຽນ (Classroom Action Research Network = CARN) ມີການອອກວາລະສານເຜີຍແຜ່ແນວຄວາມຄິດດ້ານນີ້ການວິໄຈພາກປະຕິບັດຈິ່ງກັບມາໄດ້ຮັບຄວາມນິຍົມອີກເທື່ອໜຶ່ງຫຼັງຈາກທີ່ມິດງຽບໄປເປັນເວລາເກືອບ 20 ປີການວິໄຈພາກປະຕິບັດຫຼືການວິໄຈໃນຫ້ອງຮຽນໄດ້ຮັບຄວາມສົນໃຈກັບມາໃໝ່ Kemmis (1988 ອ້າງເຖິງໃນສຸວິມົນ ວ່ອງວານິດ,

2554) ເຫັນວ່າ ໜ້າຈະມາຈາກເຫດຜົນຫຼາຍປະການ ເຊັ່ນມີການຮຽກຮ້ອງຈາກຄູທີ່ປະຕິບັດກິດຈະກໍາການຮຽນ-ການສອນໃນຫ້ອງຮຽນກ່ຽວກັບບົດບາດການວິໄຈຂອງຕົນເອງມີການໃຫ້ຄວາມສົນໃຈກັບການເນັ້ນພາກປະຕິບັດໃນຫຼັກສູດ ມີແນວຄິດໃໝ່ໆກ່ຽວກັບການວິໄຈ ເຊິ່ງຖືເປັນ 'ຄື້ນລູກໃໝ່" (new waves) ເກີດຂຶ້ນຫຼາຍຂຶ້ນຫຼັກການຂອງການວິໄຈເລົ່ານີ້ເນັ້ນຄວາມພະຍາຍາມໃນການອະທິບາຍຕີຄວາມຫຼື ແປຄວາມໝາຍສິ່ງທີ່ຄົ້ນພົບຈາກການວິໄຈໃຫ້ເປັນທີ່ເຂົ້າໃຈຫຼາຍຂຶ້ນ(interpretive approaches)

ວິທີການວິໄຈຕາມແນວຄິດນີ້ເປີດໂອກາດໃຫ້ຄູໄດ້ຄົ້ນຫາສະຄືນຜົນການປະຕິບັດ ແລະການຕີຄວາມໝາຍຜົນການວິໄຈໄດ້ດ້ວຍຕົນເອງນອກຈາກນີ້ກະແສຂອງຂອງການທີ່ສະຖານສຶກສາຕ້ອງພ້ອມຈະຖືກກວດສອບຜົນການປະຕິບັດຂອງຕົນເອງຈາກຊຸມຊົນ-ສັງຄົມທີ່ກ່ຽວຂ້ອງ (account-ability) ກໍ່ຍິ່ງເປັນການສົ່ງເສີມໃຫ້ຄູ-ອາຈານຫາທາງພັດທະນາວິຊາຊີບຂອງຕົນເອງໃຫ້ຫຼາຍຂຶ້ນ ເຫດຜົນອີກຢ່າງໜຶ່ງກໍໜ້າຈະມາຈາກການເຂົ້າເຖິງຄວາມສໍາຄັນຂອງການວິໄຈພາກປະຕິບັດເອງທີ່ເຮັດໃຫ້ການວິໄຈພາກປະຕິບັດໄດ້ຮັບຄວາມນິຍົມຫຼາຍຂຶ້ນ (Kemmis, 1988 ອ້າງເຖິງໃນ ສຸວິມົນ ວ່ອງວານິດ, 2554)

## 3.2 ຄວາມໝາຍຂອງການວິໄຈພາກປະຕິບັດ

Kurt Lewin (1947 ອ້າງເຖິງໃນMiller, 2000) ກ່າວເຖິງການວິໄຈພາກປະຕິບັດວ່າ ເປັນຂະບວນການທີ່ເປັນຮອບວຽນມີ 3 ຂັ້ນຕອນຄື (1) ການວາງແຜນໂດຍມີການສໍາຫຼວດກວດກາ (2) ການລົງມືປະຕິບັດ ແລະ (3) ການຄົ້ນຫາຄວາມຈິງກ່ຽວກັບຜົນຂອງການປະຕິບັດແຕ່ຈາກຕີຄວາມໝາຍຂອງ Kemmis (1980 ອ້າງເຖິງໃນ Elliot, 1991) ສະແດງໃຫ້ເຫັນວ່າໂມເດວ(model)ການວິໄຈພາກປະຕິບັດຂອງLewinມີຂັ້ນຕອນດັ່ງນີ້ຄື (1) ການລະບຸຄວາມຄິດເລີ່ມຕົ້ນ(identifying general idea) (2) ການຄົ້ນຫາ ແລະວິເຄາະສະພາບຄວາມເປັນຈິງທີ່ເກີດຂຶ້ນ (reconnaissance) ແລະ (3) ການລົງມືປະຕິບັດ ໂດຍມີຂັ້ນຕອນຍ່ອຍໆຄືການວາງແຜນທົ່ວໄປ ແລະ ການກໍານົດຂັ້ນຕອນການປະຕິບັດຮອບວຽນທໍາອິດ (general planning, developing the first action step)ການລົງມືປະຕິບັດຕາມແຜນຄັ້ງທໍາອິດ(implementation of the first action step)ການປະເມີນຜົນ(evaluation)ການປັບປຸງແຜນ (revising the general plan) ຈາກນັ້ນເລີ່ມຮອບວຽນການເຮັດວຽກຮອບທີສອງ ໂດຍມີການປັບປ່ຽນແນວຄິດ(fix general idea) ຫຼື ເຮັດການວິເຄາະສະພາບຂໍ້ແທ້ຈິງໃໝ່ ແຕ່ຈະເລີ່ມປັບປຸ່ນແຜນປະຕິບັດຮອບສອງ ເພື່ອນໍາໄປປະຕິບັດໃໝ່ໃນຮອບຕໍ່ໄປ ເຖິງແມ່ນວ່າການຕີຄວາມໝາຍຂອງMiller ແລະKemmis ຈະແຕກຕ່າງກັນບາງຢ່າງໃນຂັ້ນຕອນການດໍາເນີນງານ ແຕ່ປະເດັນຫຼັກຂອງການດໍາເນີນວິໄຈບໍ່ໄດ້ແຕກຕ່າງກັນ

Stephen Corey (1953 ອ້າງເຖິງໃນMiller, 2000) ໃຫ້ຄວາມໝາຍວ່າການວິໄຈພາກປະຕິບັດເປັນຂະບວນການທີ່ຜູ້ມີສ່ວນຮ່ວມພະຍາຍາມສຶກສາບັນຫາຂອງນັກຮຽນດ້ວຍວິທີການທາງວິທະຍາສາດເພື່ອສະເໜີແນະ ແກ້ໄຂ ແລະປະເມີນການຕັດສິນໃຈການເຮັດວຽກຂອງຕົນເອງ.

Cameron-Jones, M. (1983 ອ້າງໃນສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດເປັນການວິໄຈທີ່ເຮັດໂດຍຜູ້ຕິບັດໜ້າທີ່ການສອນ (practitioner= ຄູ) ໂດຍມີເປົ້າໝາຍເພື່ອພັດທະນາ ແລະທໍາຄວາມເຂົ້າໃຈໃນວິຊາຊີບຂອງຕົນເອງຖືວ່າເປັນວິທີການສໍາຄັນທີ່ນໍາໄປສູ່ການພັດທະນາວິຊາຊີບຄູ ໂດຍສະເພາະໃນວິຊາ ແລະຫຼັກສູດສໍາລັບຄູປະຈໍາການ

Bassey, M. (1986) ກ່າວວ່າການວິໄຈພາກປະຕິບັດຫຼືການວິໄຈໃນຫ້ອງຮຽນເປັນການວິໄຈທີ່ມີການດໍາເນີນການຢ່າງໄວວາ ໂດຍມີລັກສະນະ 3 ປະການຄື (1) ເພື່ອຫາຫົນທາງປັບປຸງ (2) ມີຄວາມເປັນປະຊາທິປະໄຕໃນການເຮັດວຽກຮ່ວມກັນຂອງຜູ້ມີສ່ວນຮ່ວມ ແລະ (3) ມີການສະທ້ອນຜົນວິໄຈລາວອະທິບາຍວ່າການວິໄຈພາກປະຕິບັດໃນຫ້ອງຮຽນເກີດຈາກຄູເປັນຜູ້ວິເຄາະ ແລະສະທ້ອນຄືນຜົນການເຮັດວຽກເຊິ່ງເປົ້າໝາຍເພື່ອພັດທະນາການຮຽນ-ການສອນ ແລະລະບຸຫຼື ແກ້ໄຂບັນຫາທີ່ເກີດຂຶ້ນໃນຫ້ອງຮຽນທັນທີ ໂດຍໃນຄວາມໝາຍນີ້ການວິໄຈພາກປະຕິບັດໃນຫ້ອງຮຽນຈຶ່ງເປັນການເພີ່ມພະລັງອໍານາດຄູໃຫ້ເຮັດການວິໄຈໂດຍເພິ່ງພາຄວາມຊ່ວຍເຫຼືອຈາກຜູ້ອື່ນໜ້ອຍທີ່ສຸດດັ່ງນັ້ນຈຶ່ງກ່າວໄດ້ວ່າຄູຜູ້ທີ່ເຮັດການວິໄຈໄດ້ພັດທະນາວິຊາຊີບດ້ວຍຕັດສິນຂອງຕົນເອງ ແລະກໍາລັງສະແດງບົດບາດຂອງການເພິ່ງພາຕົນເອງ ແລະ ເປັນຕົວຂອງຕົວເອງ

Kemmis (1988 ອ້າງເຖິງໃນ Keeves, J.P)  ກ່າວວ່າການວິໄຈພາກປະຕິບັດເປັນການວິໄຈທີ່ຜູ້ວິໄຈຄືຜູ້ປະຕິບັດໃນໜ່ວຍງານນັ້ນ ແລະສິ່ງທີ່ຕ້ອງເຮັດວິໄຈ (object) ຄືແນວທາງການປະຕິບັດທາງການສຶກສາ(educational practice) ການວິໄຈພາກປະຕິບັດເປັນຮູບແບບໜຶ່ງທີ່ບໍ່ໄດ້ແຕກຕ່າງໄປຈາກການວິໄຈອື່ນໃນດ້ານເຕັກນິກ ແຕກຕ່າງໃນດ້ານວິທີການວິທີການຂອງການວິໄຈພາກປະຕິບັດຄືການດໍາເນີນການທີ່ເປັນການສະທ້ອນຜົນຂອງການປະຕິບັດຂອງຕົນເອງທີ່ຮອບວຽນ (spiral of self-reflection) ໂດຍເລີ່ມຕົ້ນທີ່ຂັ້ນຕອນການວາງແຜນ (planning) ການປະຕິບັດ (acting) ການສັງເກດ (observing) ແລະການສະທ້ອນຄືນ (reflecting) ເປັນການວິໄຈທີ່ຈໍາເປັນຕ້ອງອາໃສຜູ້ທີ່ມີສ່ວນຮ່ວມໃນການສະທ້ອນຄືນກ່ຽວກັບການປະຕິບັດເພື່ອໃຫ້ເກີດການພັດທະນາ ແລະປັບປຸງການເຮັດວຽກໃຫ້ດີຂຶ້ນເຕັກນິກທີ່ໃຊ້ໃນການວິໄຈບໍ່ວ່າຈະເປັນການເກັບກໍາລວບລວມຂໍ້ມູນຫຼືການວິເຄາະຂໍ້ມູນຈຶ່ງບໍ່ໄດ້ແຕກຕ່າງກັນໄປຈາກການວິໄຈອື່ນ ແຕ່ວິທີການທີ່ຕ່າງອອກໄປຄືຄວາມພະຍາຍາມເຂົ້າໃຈຄວາມໝາຍ ແລະການຕີຄວາມໝາຍສິ່ງທີ່ເກີດຂຶ້ນ ແລະຄົ້ນພົບ.

Elliot, J. (1991 ອ້າງເຖິງໃນສຸວິມົນ  ວ່ອງວານິດ, 2011) ໄດ້ປັບປຸງໂມເດວການວິໄຈພາກປະຕິບັດຂອງ Lewin ໂດຍມີການເຮັດວຽກທີ່ສໍາຄັນຄື (1) ການລະບຸຄວາມຄິດເລີ່ມຕົ້ນ (2) ການຄົ້ນຫາ ແລະວິເຄາະສະພາບບັນຫາທີ່ແທ້ຈິງ (3) ການກໍານົດແຜນທົ່ວໄປ (4) ການພັດທນາຂັ້ນຕອນການປະຕິບັດ (5) ການນໍາແຜນໃນຮອບທໍາອິດໄປປະຕິບັດ (6) ການກໍາກໍາຕິດຕາມ ແລະສຶກສາຜົນທີ່ເກີດຂຶ້ນ (7) ການຄົ້ນຫາ ແລະການວິເຄາະສະພາບທີ່ແທ້ຈິງ ເພື່ອອະທິບາຍຂໍ້ບົກຜ່ອງຫຼືຜົນທີ່ເກີດຂຶ້ນ (8) ການປັບປຸງຄວາມຄິດໃໝ່ (9) ການປັບແຜນທົ່ວໄປ  (10) ການກໍານົດການປະຕິບັດຮອບທີສອງ ແລະການນໍາແຜນໄປປະຕິບັດເປັນຮອບວຽນຕໍ່ໄປຂັ້ນຕອນທີ່Elliotເດັ່ແກ້ຈາກLewinຄືການເພີ່ມການປັບປ່ຽນຄວາມຄິດໃໝ່ການຄົ້ນຫາ ແລະການວິເຄາະສະພາບບັນຫາທີ່ແທ້ຈິງທີ່ເກີດຂຶ້ນໃໝ່ນອກຈາກນີ້ໃນການນໍາແຜນໄປປະຕິບັດຍັງໃຫ້ຄວາມສໍາຄັນກັບການກໍາກັບຕິດຕາມການດໍາເນີນການວິໄຈ.

Glickman, C. (1992 ອ້າງເຖິງໃນ Miller, 2000a) ນິຍາມວ່າ ການວິໄຈພາກປະຕິບັດທາງການສຶກສາເປັນການສຶກສາທີ່ເຮັດໂດຍຄູ-ອາຈານໃນໂຮງຮຽນ ເພື່ອຂຽນຜົນຂອງການຈັດກິດຈະກໍາທີ່ຈະໃຊ້ໃນການປັບປຸງການສອນ.

Johnson, B (1993 ອ້າງເຖິງໃນສຸວິມົນ  ວ່ອງວານິດ, 2011) ກ່າວເຖິງລັກສະນະຂອງການວິໄຈພາກປະຕິບັດວ່າ ເປັນການສຶກສາທີ່ເນັ້ນການແກ້ບັນຫາທີ່ຕັ້ງໃຈເຮັດຢ່າງຮອບຄອບ ເປັນການວິໄຈແບບຮ່ວມມື ເປັນເຄື່ອງມືປະເມີນຊ່ວຍໃນການປະເມີນຕົນເອງ ໂດຍຜູ້ວິໄຈອາດເປັນບຸກຄົນທີ່ກໍາລັງປະຕິບັດວຽກງານຫຼືສະຖາບັນເປັນຜູ້ດໍາເນີນການວິໄຈກໍ່ໄດ້.

Calhoun, E. (1994 ອ້າງເຖິງໃນ Miller, 2000a) ກ່າວວ່າການວິໄຈພາກປະຕິບັດເປັນວິທີການທີ່ສຶກສາສິ່ງທີ່ເກີດຂຶ້ນໃນໂຮງຮຽນ ແລະມີຄວາມສົນໃຈທີ່ຈະເຮັດໃຫ້ໂຮງຮຽນດີຂຶ້ນກວ່າເກົ່າ.

Sebatane, E.M (1994 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ໄດ້ສັງເຄາະນິຍາມຂອງການວິໄຈພາກປະຕິບັດໃນຫ້ອງຮຽນຈາກນິຍາມທີ່ມີຜູ້ອື່ນກຳນົດໄວ້ກ່ອນໜ້າວ່າການວິໄຈພາກປະຕິບັດໝາຍເຖິງການວິໄຈທີ່ເຮັດໂດຍຄູເພື່ອພັດທະນາການສອນຫຼື ເພື່ອທົດລອງທິດສະດີທາງການສຶກສາທີ່ນຳມາສູ່ການປະຕິບັດ

Johnson, C.S. ແລະKromann-Kelly (1995 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດໝາຍເຖິງການລວບລວມຂໍ້ມູນການວິເຄາະ ແລະຕີຄວາມໝາຍໂດຍມີແຜນງານກຳນົດ ແລະ ແລກປ່ຽນຜົນທີ່ເກີດຂຶ້ນກັບເພື່ອນຮ່ວມວິຊາຊີບຂະບວນການວິໄຈພາກປະຕິບັດຕ້ອງຕອບຄຳຖາມ 5 ຂໍ້ຕໍ່ໄປນີ້ (1) ຄຳຖາມທີ່ຕ້ອງການສຶກສາແມ່ນຫຍັງ? (2) ຂໍ້ມູນທີ່ກ່ຽວຂ້ອງມີຫຍັງແນ່? (3) ຂໍ້ມູນທີ່ຢາກໄດ້ແມ່ນຫຍັງ? (4) ຈະວິເຄາະຂໍ້ມູນແບບໃດ ແລະ (5) ຈະແປຄວາມໝາຍນັ້ນໆ ວ່າແນວໃດ? ການຕອບຄຳຖາມເຫຼົ່ານີ້ຕ້ອງໃຊ້ເວລາວາງແຜນ ແລະ ໃນທຸກຂັ້ນຕອນຕ້ອງອະພິປາຍກັບເພື່ອຮ່ວມງານ

Zuber-Skerritt, O. (1996 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດເປັນຂະບວນການທີ່ມີຂັ້ນຕອນການເຮັດວຽກເປັນຮອບວຽນຕໍ່ເນື່ອງ 4 ຂັ້ນຕອນ ໄດ້ແກ່ (1) ການວາງແຜນກົນລະຍຸດ (2) ການນຳແຜນໄປປະຕິບັດ (3) ການສັງເກດ (ໂດຍມີການປະເມີນຕົນເອງ) ແລະ (4) ການສະທ້ອນຄືນ ເຊິ່ງວິພາກຈາກຕົນເອງ ແລະ ເພື່ອຮ່ວມງານໃນຜົນທີ່ໄດ້ຈາກຂັ້ນຕອນທີ 1-3 ຈາກນັ້ນມີການເຮັດວຽກໃນຮອບວຽນທີ 2 ໂດຍມີການປັບແຜນການດຳເນີນການ ແລ້ວນຳໄປປະຕິບັດສັງເກດຜົນທີ່ເກີດຂຶ້ນ ແລະສະທ້ອນຄືນເພື່ອປັບປຸງຕໍ່ໄປ

Mclean, J.E (1997 ອ້າງເຖິງໃນ ສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດເປັນຂະບວນການວິໄຈທີ່ຄູເຮັດການທົດລອງວິທີການຕ່າງໆ ໃນຫ້ອງຮຽນມີການກວດກາຜົນການໃຊ້ວິທີການເລົ່ານັ້ນ ແລະປັບປຸງວິທີການທີ່ໃຊ້ເພື່ອໃຫ້ເກີດປະສິດທິຜົນກັບຜູ້ຮຽນໃຫ້ຫຼາຍທີ່ສຸດນອກຈາກນີ້ການວິໄຈພາກປະຕິບັດໃນຫ້ອງຮຽນຍັງເປັນຂະບວນການເສີມສ້າງພະລັງອຳນາດຄູໃນການກຳນົດສິ່ງທີ່ດີທີ່ສຸດສຳລັບຄູພາຍໃຕ້ລະບົບ ແລະກົນໄກຕ່າງໆ ທີ່ມີຢູ່ເປັນການພັດທະນາການສຶກສາໄລຍະຍາວ ເປັນການພັດທະນາບຸກຄະລາກອນຄູໃນໂຮງຮຽນຢ່າງຕໍ່ເນື່ອງໂດຍການຮຽນຮູ້ດ້ວຍຕົນເອງຂອງຄູ ແລະຜູ້ອື່ນຮ່ວມກັນ ແລະ ເປັນຂະບວນການທີ່ສາມາດສ້າງຄວາມມີສ່ວນຮ່ວມຂອງຄູໃນໂຮງຮຽນກັບນັກວິໄຈຫຼືນັກວິຊາການທີ່ເຮັດວຽກຢູ່ໃນມະຫາວິທະຍາໄລ

Foshey, A.W. (1998 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດໝາຍເຖິງການວິໄຈທີ່ເຮັດໂດຍຄູ ໂດຍໃຊ້ປະໂຫຍດຈາກວິທີການວິໄຈສຳຫຼວດຕີຄວາມ ແລະອະທິບາຍຄວາມຈິງທີ່ເກີດຂຶ້ນໃນຫ້ອງຮຽນ.

Freeman, D. (1998 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ໄດ້ອະທິບາຍຄວາມໝາຍຂອງການວິໄຈພາກປະຕິບັດໂດຍສະເໜີຮອບວຽນຂອງການວິໄຈຂອງຄູ ເຊິ່ງແບ່ງອອກເປັນ 6 ຂັ້ນຕອນ ໄດ້ແກ່ (1) ການຕັ້ງຂໍ້ສົງໃສກ່ຽວກັບການສອນໃນຫ້ອງຮຽນຄູຕ້ອງຄິດວ່າ ມີຫຍັງເກີດຂຶ້ນ ແລະສິ່ງນັ້ນເກີດຂຶ້ນດ້ວຍວິທີການແນວໃດ ເປັນຫຍັງຈຶ່ງເປັນແບບນັ້ນຄຳຖາມເລົ່ານີ້ຈະນຳໄປສູ່ການວາງແຜນການວິໄຈ ແລະການອອກແບບການວິໄຈ (2) ກາຕັ້ງຄຳຖາມ ເປັນການກຳນົດບັນຫາວິໄຈທີ່ຄິດວ່າສາມາດວິໄຈໄດ້ໃຫ້ສະເພາະເຈາະຈົງ (3) ການລວບລວມຂໍ້ມູນ (4) ການວິເຄາະຂໍ້ມູນ (5) ການທຳຄວາມເຂົ້າໃຈນຂໍ້ມູນຕ່າງໆທີ່ໄດ້ຄົ້ນພົບ (6) ການເຜີຍແຜ່ຜົນທີ່ໄດ້ຮັບ

Denscombe, M. (1999 ອ້າງເຖິງໃນສຸວິມົນວ່ອງວານິດ, 2011) ອະທິບາຍວ່າການວິໄຈພາກປະຕິບັດເປັນການວິໄຈທີ່ມີລັກສະນະສຳຄັນ 4 ປະການ ໄດ້ແກ່ (1) ປະເດັນບັນຫາວິໄຈເກີດຂຶ້ນຈາກການປະຕິບັດໜ້າທີ່ການສອນ ເປັນບັນຫາທີ່ເຫັນໃນລະຫວ່າງການເຮັດວຽກ ເຊິ່ງເກີດຂຶ້ນໃນຊີວິດຂອງການເຮັດວຽກເປັນປົກກະຕິຖືວ່າເປັນບັນຫາທີ່ເກີດຂຶ້ນຈາກຊີວິດຈິງ (2) ຜົນຂອງການວິໄຈນຳໄປສູ່ການປ່ຽນແປງທີ່ດີຂຶ້ນ ເປັນຂະບວນການທີ່ໃຊ້ໃນການພັດທະນາວິຊາຊີບຄູຢ່າງເປັນລະບົບທັງນີ້ການປ່ຽນແປງທີ່ເກີດຂຶ້ນຈະເປັນສ່ວນໜຶ່ງຂອງຂະບວນການວິໄຈການວິໄຈພາກປະຕິບັດບໍ່ແມ່ນເປັນພຽງແຕ່ຂະບວນການທີ່ເຮັດໃຫ້ເຂົ້າໃຈສະພາບບັນຫາທີ່ເກີດຂຶ້ນໃນການປະຕິບັດວຽກ ແລະສະຫຼຸບຜົນການວິໄຈໃຫ້ຮູ້ທົ່ວເຖິງເທົ່ານັ້ນ ແຕ່ຕ້ອງນຳໄປສູ່ງການປັບປຸງ-ປ່ຽນແປງສິ່ງຕ່າງໆໃຫ້ເກີດການພັດທະນາໃນການເຮັດວຽກທາງດ້ານການສອນ (3) ຂະບວນການວິໄຈມີຂັ້ນຕອນເຮັດວຽກຕໍ່ເນື່ອງເປັນຮອບວຽນ ໂດຍນຳຜົນທີ່ໄດ້ຈາກການວິໄຈຫຼືຂໍ້ຄົ້ນພົບຕ່າງໆ ໄປໃຊ້ໃນການປັບປຸງແຜນການເຮັດວຽກ ແລະມີການກວດກາ ປະເມີນຜົນສິ່ງທີ່ຄົ້ນພົບ ໂດຍການປັບປຸງໃໝ່ໃຫ້ດີຍິ່ງຂຶ້ນ ແລ້ວມີການວາງແຜນນຳໄປປະຕິບັດຄືນໃໝ່ຈາກນັ້ນເຮັດການກວດກາຊ້ຳອີກ ເປັນການເຮັດວຽກໃນຮອບວຽນຂອງການວິໄຈຮອບຕໍ່ໄປ ແລະ (4) ຂະບວນການວິໄຈຈຳເປັນຕ້ອງໃຊ້ການປະຕິບັດວຽກແບບມີສ່ວນຮ່ວມຂອງບຸກຄະລາກອນທີ່ຢູ່ໃນໜ່ວຍງານໂດຍສະມາຊິກທຸກຄົນມີສ່ວນຮ່ວມໃນຂັ້ນຕອນຕ່າງໆຂອງການວິໄຈ ການວິໄຈພາກປະຕິບັດຈຶ່ງເປັນການວິໄຈຂອງຜູ້ປະຕິບັດວຽກ ເຊິ່ງເປັນການວິໄຈທີ່ມີຈຸດເນັ້ນເພື່ອພັດທະນາຕົນເອງດ້ານວິຊາຊີບຖ້ານຳມາໃຊ້ໃນການພັດທະນາວິຊາຊີບຄູ ໂດຍຄູເປັນຜູ້ເຮັດການວິໄຈກໍ່ເອີ້ນວ່າງານວິໄຈຂອງຄູ(teacher research) ແລະ ເອີ້ນຄູທີ່ເຮັດການວິໄຈວ່າຄູນັກວິໄຈ(teacher as researcher ຫຼື teacher researcher)

Newman, J. M. ( 2000 ອ້າງເຖິງໃນສຸວິມົນວ່ອງວານິດ, 2011) ອະທິບາຍການວິໄຈຂອງຄູວ່າ ເປັນການວິໄຈປະຕິບັດທີ່ເນັ້ນການຕີຄວາມ ແລະບັນຍາຍຊີວິດການເຮັດວຽກປົກກະຕິ ໂດຍການປະຕິບັດວຽກເປັນຂະບວນການທີ່ເໝືອນການສຶກສາຫາວິທີແກ້ບັນຫາໄປໃນຕົວໃນໄລຍະຂອງການປະຕິບັດ

Dick, B. ( 2000 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2011) ກ່າວວ່າ ການວິໄຈພາກປະຕິບັດປະກອບດ້ວຍວິທີ-ວິທະຍາການທີ່ເຮັດໃຫ້ເກີດຜົນຂອງການປະຕິບັດ(action outcome) ແລະຜົນຂອງການວິໄຈ( research outcome) ໃນເວລາດຽວກັນ ໂດຍມີຂັ້ນຕອນການວິໄຈທີ່ເປັນຮອບວຽນຕໍ່ເນື່ອງປະກອບດ້ວຍຜູ້ມີສ່ວນຮ່ວມໃນຂະບວນການ ໃຊ້ຂໍ້ມູນດ້ານຄຸນະພາບ ເຊິ່ງສ່ວນໃຫຍ່ມີລັກສະນະເປັນຂໍ້ຄວາມທີ່ເປັນພາສາຫຼາຍກວ່າຕົວເລກນອກຈາກນີ້ຍັງມີການສະທ້ອນຜົນ ເຊິ່ງຄວບຄຸມທັງສ່ວນທີ່ເປັນຂະບວນການ ແລະຜົນໄດ້ຮັບຂອງການວິໄຈພາກປະຕິບັດຈຶ່ງເປັນຂະບວນການຍືດຫຍຸ່ນຕອບສະໜອງຕໍ່ຄວາມຕ້ອງການຈຳເປັນທີ່ເກີດຂຶ້ນໃນສະຖານະການຕ່າງໆທັງນີ້ Dick ມີຄວາມເຫັນວ່າການວິໄຈພາກປະຕິບັດເປັນການວິໄຈທີ່ມີການສ້າງສົມມຸດຕິຖານການວິໄຈຈາກຂໍ້ມູນທີ່ລວບລວມໄດ້ລະຫວ່າງການເຮັດວິໄຈ ແລະສາມາດໃຊ້ຂະບວນການດັ່ງກ່າວເປັນເຄື່ອງມືສຳລັບການວິໄຈທົດລອງການນຳໄປໃຊ້ເປັນເຄື່ອງມືຕັດສິນຈຸດບົກຜ່ອງຕ່າງໆຫຼື ໃຊ້ເພື່ອການປະເມີນຜົນຢ່າງໃດກໍ່ຕາມDick ເຫັນວ່າການມີສ່ວນຮ່ວມບໍ່ຈຳເປັນຕ້ອງມີຕະຫຼອດການວິໄຈອາດເຮັດໃຫ້ຜູ້ອື່ນມີສ່ວນຮ່ວມພຽງແຕ່ການໃຫ້ຂໍ້ມູນລັກສະນະສຳຄັນຂອງການວິໄຈພາກປະຕິບັດຕາມຄວາມຄິດຂອງDick ຕ້ອງມີຫຼັກຖານອ້າງອີງທີ່ເຫັນໄດ້ດ້ວຍຕາຕອບສະໜອງຕໍ່ບັນຫາທີ່ເກີດຂຶ້ນ ແລະ ໃຊ້ຂໍ້ມູນຈາກຫຼາຍທີ່ຫຼາຍບ່ອນຂອງງານວິໄຈໃນຫ້ອງຮຽນ

ການວິໄຈໃນຊັ້ນຮຽນ ເປັນຮູບແບບໜຶ່ງຂອງການວິໄຈທາງການສຶກສາ ເຊິ່ງມີຄຳທີ່ໃຊ້ເອີ້ນກັນຫຼາຍຄຳ ເຊັ່ນ ການວິໄຈພາກປະຕິບັດ (action research) ການວິໄຈໃນຊັ້ນຮຽນ (classroom research) ການວິໄຈຂອງຄູ(teacher

research) ການວິໄຈພາກປະຕິບັດໃນຫ້ອງຮຽນ (classroom action research ຫຼືCAR) ແລະການວິໄຈເພື່ອພັດທະນາການຮຽນ-ການສອນ (ອາໂຣ, 2003) ເປັນຕົ້ນ ເຊິ່ງການວິໄຈດັ່ງກ່າວນີ້ເປັນການວິໄຈທີ່ເຮັດໂດຍຄູ ເປັນຮູບແບບການວິໄຈທີ່ຄູກຳລັງໃຫ້ຄວາມສົນໃຈເປັນຢ່າງຍິ່ງ ເພາະສາມາດນຳໄປໃຊ້ເພື່ອການສຶກສາສາມາດໃຊ້ໄດ້ໃນສະຖານະການທີ່ເກີດຂຶ້ນຈິງໃນຫ້ອງຮຽນຫຼື ຊັ້ນຮຽນ

ສຸພັກ ສີບູນຍ໌ (2001:31) ກ່າວວ່າ ການວິໄຈພາກປະຕິບັດໝາຍເຖິງການສຶກສາຄົ້ນຄວ້າຢ່າງເປັນລະບົບດ້ວຍວິທີການທີ່ເຊື່ອຖືໄດ້ຫຼືວິທີການທາງວິທະຍາສາດເປັນກິດຈະກຳທີ່ສະແຫວງຫາຄຳຕອບຫາຄວາມຮູ້ໃໝ່ໆຫຼືຂະຫຍາຍຄວາມຮູ້ໃນສາດສະຂາຕ່າງໆ

ສະພາພອນ ໝັ່ນເກດວິດ (2001:8) ໄດ້ໃຫ້ຄວາມໝາຍຂອງການວິໄຈໃນຫ້ອງຮຽນໄວ້ວ່າ ການວິໄຈທີ່ດຳເນີນໂດຍຄູຜູ້ສອນເພື່ອແກ້ບັນຫາທີ່ເກີດຂຶ້ນຈາກຂະບວນການຮຽນ-ການສອນມີຈຸດປະສົງເພື່ອພັດທະນາຄວາມຮູ້-ຄວາມສາມາດຂອງຜູ້ຮຽນໂດຍໃຊ້ນະວະຕະກຳທີ່ເໝາະສົມກັບຜູ້ຮຽນ ແລະມີຄວາມສຳພັນຢ່າງເປັນຈິງກັບບັນຫາ

ພິໄຊ ຍານສິຣິ (2545:31) ໄດ້ໃຫ້ຄວາມໝາຍຂອງການວິໄຈໃນຫ້ອງຮຽນວ່າ ການວິໄຈພາກປະຕິບັດໃນຫ້ອງຮຽນຄືການເຮັດວຽກເປັນລະບົບເພື່ອແກ້ບັນຫາຫຼືພັດທະນາໃນສິ່ງທີ່ກ່ຽວຂອງກັບການຮຽນ-ການສອນເພື່ອໃຫ້ໝົດໄປຫຼື ເຮັດສິ່ງທີ່ດີຢູ່ແລ້ວໃຫ້ດີຍິ່ງໆຂຶ້ນ ແລະການວິໄຈນີ້ຄູທຸກຄົນເຮັດໄດ້ດ້ວຍວິທີງ່າຍໆ ບໍ່ສັບຊ້ອນ.

ວັນວິໄລ ພັນສິດາ (2002:6) ໄດ້ໃຫ້ຄວາມໝາຍຂອງການວິໄຈໃນຫ້ອງຮຽນວ່າຄືຂະບວນການທີ່ຄູສຶກສາຄົ້ນຄວ້າເພື່ອແກ້ບັນຫາ ແລະພັດທະນາການຮຽນ-ການສອນທີ່ຕົນຮັບຜິດຊອບ

ນິບພະດົນ ເຈນອັກສອນ (2001: 193) ກ່າວເຖິງການວິໄຈໃນຫ້ອງຮຽນວ່າຄືການວິໄຈປະເພດໜຶ່ງທີ່ຄູຜູ້ສອນເປັນຜູ້ດຳເນີນການຄວບຄູ່ໄປກັບການຮຽນ-ການສອນປົກກະຕິໃນຊັ້ນຮຽນທັງນີ້ເພື່ອສຶກສາສະພາບບັນຫາທີ່ເກີດຂຶ້ນແລ້ວນຳຜົນທີ່ໄດ້ໄປພັດທະນາການຮຽນ-ການສອນຫຼື ໃຊ້ໃນການແກ້ບັນຫາການສອນຂອງຕົນລວມທັງເຜີຍແຜ່ໃຫ້ເກີດປະໂຫຍດແກ່ຜູ້ອື່ນຕໍ່ໄປ

ຣັດຕະນາ ສິເຫຣັນ (2001:4) ກ່າວວ່າ ການວິໄຈໃນຫ້ອງຮຽນເປັນຮູບແບບໜຶ່ງຂອງການວິໄຈພາກປະຕິບັດທີ່ເນັ້ນແກ້ບັນຫາທີ່ເກີດຂຶ້ນສະເພາະໜ້າເປັນຄັ້ງໆ ໄປຫຼື ເປັນເລື່ອງໃດເລື່ອງໜຶ່ງໃນໄລຍະເວລາໜຶ່ງຜົນການວິໄຈທີ່ໄດ້ສຶກສານີ້ບໍ່ສາມາດນຳໄປອ້າງອີງກັບກຸ່ມອື່ນໆ ໄດ້ເພາະເປັນບັນຫາທີ່ເກີດຂຶ້ນໃນວົງຈຳກັດຫຼື ເປັນບັນຫາສະເພາະສະຖານທີ່ ເຊັ່ນ ບັນຫາທີ່ເກີດຂຶ້ນໃນຫ້ອງຮຽນບາງຢ່າງທີ່ຄູຕ້ອງການຄຳຕອບມາອະທິບາຍສະເພາະທີ່ເກີດຂຶ້ນໃນຫ້ອງທີ່ຕົນຮັບຜິດຊອບຢູ່ເທົ່ານັ້ນບໍ່ກ່ຽວຂ້ອງກັບບັນຫາຂອງຫ້ອງຮຽນອື່ນໆການສຶກສາບັນຫາລັກສະນະນີ້ ເຮົາເອີ້ນວ່າການວິໄຈໃນຫ້ອງຮຽນການວິໄຈພາກປະຕິບັດໃນຫ້ອງຮຽນ (classroom action research) ເຊິ່ງເປັນຮູບແບບຂອງການວິໄຈທີ່ຄູກຳລັງໃຫ້ຄວາມສົນໃຈເປັນຢ່າງຍິ່ງ ເພາະສາມາດນຳໄປໃຊ້ເພື່ອການສຶກສາ ແລະການວິໄຈໃນສະຖານະການທີ່ເກີດຂຶ້ນຈິງໃນຫ້ອງຮຽນຈຶ່ງອາດກ່າວໄດ້ວ່າການວິໄຈໃນຫ້ອງຮຽນເປັນວິທີການວິໄຈທີ່ອອກແບບ ແລະພັດທະນາຂຶ້ນມາເພື່ອຊ່ວຍໃຫ້ຄູສາມາດຄົ້ນພົບວ່າມີຫຍັງເກີດຂຶ້ນໃນຫ້ອງຮຽນແນ່ ແລະຍັງຊ່ວຍໃຫ້ຄູຮູ້ຂໍ້ມູນທີ່ຈະນຳໄປໃຊ້ເພື່ອພັດທະນາການຮຽນ-ການສອນທີ່ຈະມີຂຶ້ນຕໍ່ໄປໃນອະນາຄົດ ໂດຍເລືອກໃຊ້ວິທີການວິໄຈແບບຄຸນະພາບການວິໄຈແບບປະລິມານການວິໄຈແບບບັນຍາຍຫຼືການວິໄຈແບບທົດລອງຢ່າງໃດຢ່າງໜຶ່ງເປັນວິທີການສຶກສາ

ວິຣັດວັນ ນະຣັດ (1994 ອ້າງເຖິງໃນສັກສິດວັດຣາຣັດ, 2009) ກ່າວເຖິງການວິໄຈໃນຫ້ອງຮຽນວ່າ ການວິໄຈໃນຊັ້ນຮຽນເປັນການສຶກສາຄົ້ນຄວ້າທີ່ກ່ຽວຂ້ອງກັບການຮຽນ-ການສອນໃນຫ້ອງຮຽນ ເພື່ອພັດທະນາປັບປຸງຄຸນ

ະພາບການຮຽນ-ການສອນທັງໃນສ່ວນຫຼັກສູດວິທີການສອນການຈັດກິດຈະກໍາສື່ ແບບເຝິກຫັດລວມທັງການວັດ-ປະເມີນຜົນ.

ອຸທຸມພອນ ຈາມອນມານ (1994 : 37) ເອີ້ນການວິໄຈໃນຫ້ອງຮຽນວ່າ ການວິໄຈຂອງຄູເຊິ່ງໝາຍເຖິງການວິໄຈໂດຍຄູເພື່ອນັກຮຽນຂອງຕົນເປັນການວິໄຈບັນຫາທີ່ເກີດຂຶ້ນກັບນັກຮຽນວ່າມີບັນຫາຫຍັງເກີດຂຶ້ນແນ່ເປັນຫຍັງຈຶ່ງເກີດຂຶ້ນແລະມີວິທີການແກ້ໄຂແນວໃດແດ່

ສຸວັດທະນາ ສຸວັນເຂດນິຄົມ (1995 : 6) ໃຫ້ຄວາມໝາຍຂອງການວິໄຈໃນຫ້ອງຮຽນວ່າ ເປັນຂະບວນການສະແຫວງຫາຄວາມຮູ້ອັນເປັນຈິງທີ່ເຊື່ອຖືໄດ້ໃນເນື້ອຫາກ່ຽວກັບການພັດທະນາການຈັດການຮຽນ-ການສອນເພື່ອພັດທະນາການຮຽນຮູ້ຂອງນັກຮຽນໃນຫ້ອງຮຽນຂອງຕົນ

ໄພຈິດ ສະດວກການ ແລະສິຣິການ ໂກສຸມ (2005 ) ກ່າວເຖິງຄວາມໝາຍຂອງການວິໄຈໃນຫ້ອງຮຽນວ່າການວິໄຈໃນຊັ້ນຮຽນເປັນຂະບວນການໃນການແກ້ບັນຫາຫຼືພັດທະນາຂະບວນການຈັດການຮຽນ-ການສອນໃນຊັ້ນຮຽນທີ່ຄູຮັບຜິດຊອບຢ່າງເປັນລະບົບເພື່ອສຶກສາໃຫ້ໄດ້ສາເຫດຂອງບັນຫາ ແລ້ວຫາວິທີແກ້ໄຂຫຼືພັດທະນາທີ່ເຊື່ອຖືໄດ້ເພື່ອສົ່ງເສີມຜູ້ຮຽນໃຫ້ໄດ້ຮັບການພັດທະນາຕາມທໍາມະຊາດ ແລະ ເຕັມສັກກະຍະພາບຢ່າງຕໍ່ເນື່ອງ

ສຸວິມົນ ວ່ອງວານິດ (2010) ກ່າວວ່າ ຄໍາທີ່ໃຊ້ໃນການວິໄຈພາກປະຕິບັດໃນຊັ້ນຮຽນໂດຍມີຄູເປັນຜູ້ວິໄຈມີຫຼາຍຄໍາ ໄດ້ແກ່ (1) ການວິໄຈພາກປະຕິບັດ ເຊິ່ງຂຽນເປັນຄໍາກວ້າງໆ ໃນບາງຄັ້ງຖ້າຜູ້ຂຽນຕ້ອງການລະບຸໃຫ້ເຈາະຈົງລົງໄປວ່າເປັນການວິໄຈພາກປະຕິບັດທີ່ຢູ່ໃນຂອບເຂດຂອງການສຶກສາກໍໃຊ້ຄໍາວ່າaction research in education ຫຼື educational action researchຫຼືaction research in class-room (action research) (2) ການວິໄຈໃນຫ້ອງຮຽນ (class-room research) ເປັນການໃຊ້ຄໍາທີ່ບົ່ງບອກເຖິງສະຖານທີ່ທີ່ເຮັດການວິໄຈວ່າເກີດຂຶ້ນໃນຫ້ອງຮຽນ ແລະ ເປັນການວິໄຈທີ່ກ່ຽວຂ້ອງກັບການຮຽນ-ການສອນໃນຫ້ອງຮຽນ (3) ການວິໄຈຂອງຄູຫຼືການວິໄຈໂດຍຄູ (teacher research ຫຼື teacher-research) ເປັນຄໍາທີ່ບົ່ງບອກວ່າຄູເປັນຜູ້ເຮັດວິໄຈ ໂດຍເອີ້ນຄູທີ່ເຮັດວິໄຈວ່າຄູນັກວິໄຈ (4) selfreflectiveenquiry ເປັນຄໍາທີ່ບົ່ງບອກເຖິງການສະແຫວງຫາຄວາມຮູ້ໂດຍຕົວຄູເອງເປັນຜູ້ສະທ້ອນຄືນ ເຊິ່ງຖືເປັນຂັ້ນຕອນສໍາຄັນຂອງການວິໄຈພາກປະຕິບັດ ແລະ ເຮັດໃຫ້ການວິໄຈພາກປະຕິບັດຕ່າງໄປຈາກການວິໄຈທາງດ້ານວິຊາການອື່ນ ແລະ (5) ການວິໄຈພາກປະຕິບັດໃນຫ້ອງຮຽນ(class-room action research = CAR) ເປັນຄໍາທີ່ເນັ້ນໃຫ້ເຫັນເຖິງການນໍາການວິໄຈພາກປະຕິບັດມາໃນຫ້ອງຮຽນໃຫ້ສະເພາະເຈາະຈົງຍິ່ງຂຶ້ນສຸວິມົນວ່ອງວານິດ (2010) ຍັງໄດ້ກ່າວສະຫຼຸບໃນເລື່ອງນີ້ວ່າຄໍາສຸດທ້າຍມີຄວາມສົມບູນ ແລະມີຄວາມໝາຍທີ່ຄອບຄຸມທີ່ສຸດສໍາລັບການວິໄຈຂອງຄູ ເພາະປະກອບດ້ວຍຄໍາສໍາຄັນ 3 ຄໍາຄື (1) research ເຊິ່ງໝາຍເຖິງຂະບວນການວິໄຈ (2) action ເຊິ່ງໝາຍເຖິງການປະຕິບັດ (ໂດຍຄູ) ແລະ (3) classroom ເຊິ່ງໝາຍເຖິງສະຖານທີ່ຫຼືຂອບເຂດທີ່ເຮັດວິໄຈຄືຊັ້ນຮຽນຢ່າງໃດກໍ່ຕາມຈາກການຄົ້ນຄວ້າບົດຄວາມຫຼືຕໍາລາງທາງການສຶກສາມັກຈະເຫັນວ່າຄໍາທີ່ນິຍົມໃຊ້ກັນຄືການວິໄຈໃນຫ້ອງຮຽນ ເຊິ່ງສອດຄ່ອງກັບຄໍາໃນພາສາອັງກິດວ່າ classroomaction researchຫຼື ເອີ້ນຫຍໍ້ໆວ່າ CAR

ຄໍາວ່າ: **ການວິໄຈໃນຫ້ອງຮຽນ’**(Classroom Research) ມີຄວາມໝາຍໃກ້ຄຽງກັບຄໍາສັບອື່ນອີກຫຼາຍຄໍາສັບຄື:

- ການວິໄຈໃນຫ້ອງຮຽນ (Classroom Research)
- ການວິໄຈພາກປະຕິບັດໃນຫ້ອງຮຽນ (Classroom Action Research)

- ການວິໄຈຂອງຄູ (Teacher Research)
- ການສະແຫວງຫາຄວາມຮູ້ເຊິ່ງສະທ້ອນດ້ວຍຕົນເອງ (Self-Reflective Inquiry)
- ການວິໄຈເພື່ອພັດທະນາການຮຽນຮູ້ (Developing Research for Learning)




ແຜນວາດທີ 3 ຂະບວນການດຳເນີນການວິໄຈໃນຫ້ອງຮຽນ

ໃນຄວາມໝາຍຂອງຄຳສັບເຫຼົ່ານີ້ ໄດ້ມີຜູ້ໃຫ້ຄວາມໝາຍໄວ້ຢ່າງຫຼາກຫຼາຍ ເຊັ່ນ:

ການວິໄຈໃນຊັ້ນຮຽນ ເປັນຮູບແບບໜຶ່ງຂອງການວິໄຈທາງການສຶກສາ ເຊິ່ງມີຄຳທີ່ໃຊ້ເອີ້ນກັນຫຼາຍຄຳ ເຊັ່ນ ການວິໄຈພາກປະຕິບັດ (action research) ການວິໄຈໃນຊັ້ນຮຽນ (classroom research) ການວິໄຈຂອງຄູ (teacher research) ການວິໄຈພາກປະຕິບັດໃນຫ້ອງຮຽນ (classroom action research ຫຼື CAR) ແລະ ການວິໄຈເພື່ອພັດທະນາການຮຽນ-ການສອນ (ວາໂຣ, 2546) ເປັນຕົ້ນ ເຊິ່ງການວິໄຈດັ່ງກ່າວນີ້ເປັນການວິໄຈທີ່ເຮັດໂດຍຄູ ເປັນຮູບແບບການວິໄຈທີ່ຄູກຳລັງໃຫ້ຄວາມສົນໃຈເປັນຢ່າງຍິ່ງ ເພາະສາມາດນຳໄປໃຊ້ເພື່ອການສຶກສາ ສາມາດໃຊ້ໄດ້ໃນສະຖານະການທີ່ເກີດຂຶ້ນຈິງໃນຫ້ອງຮຽນ ຫຼື ຊັ້ນຮຽນ

ການວິໄຈໃນຫ້ອງຮຽນມີຈຸດປະສົງທີ່ສຳຄັນຄື: ເພື່ອການແກ້ບັນຫາການຮຽນ-ການສອນເພື່ອການພັດທະນາ, ປັບປຸງ, ປ່ຽນແປງ ຫຼື ເພື່ອການເພີ່ມພູນຄຸນນະພາບການຮຽນ-ການສອນຢ່າງມີປະສິດທິພາບ ລວມທັງເພື່ອການພັດທະນາການປະຕິບັດງານຂອງຄູ ແລະ ການປະຕິບັດວິຊາຊີບໃນໜ້າທີ່ຂອງຄູໃຫ້ເປັນຄູມືອາຊີບຕໍ່ໄປ.

**ປຣະວິດ ເອຣາວັນ** (2542) ໄດ້ສະຫຼຸບວ່າການວິໄຈໃນຫ້ອງຮຽນມີເປົ້າໝາຍສຳຄັນເພື່ອການສະແຫວງຫາຄຳຕອບຈາກບັນຫາ ຫຼື ຂໍ້ສົງໃສຂອງຄູ ແລະ ເພື່ອຄິດຄົ້ນພັດທະນານະວັດຕະກຳ ເພື່ອໃຊ້ໃນການແກ້ບັນຫາຈັດການຮຽນ-ການສອນ.

**ອຸທຸມພອນ ຈາມອນມານ** (2544) ກ່າວວ່າການວິໄຈໃນຫ້ອງຮຽນຂອງຄູມີຈຸດປະສົງຫຼັກຄື: ການແກ້ບັນຫານັກຮຽນບາງຄົນ, ບາງເລື່ອງ ແລະ ມີຈຸດປະສົງຮອງຄື: ການຂໍຕຳແໜ່ງ, ຂໍຜົນງານ.

**ສຸວິມຣ ວ່ອງວານິດ** (2544) ອະທິບາຍວ່າການວິໄຈໃນຫ້ອງຮຽນມີຈຸດປະສົງຄື: ການພັດທະນາການຮຽນ-ການສອນ, ການຄົ້ນຫາແນວທາງການແກ້ໄຂບັນຫາທີ່ເກີດຂຶ້ນ ແລະ ການພັດທະນາວິຊາຊີບ.

**ກົມວິຊາການ** (2542) ໄດ້ອະທິບາຍເປົ້າໝາຍທີ່ສຳຄັນຂອງການວິໄຈໃນຫ້ອງຮຽນຄື: ການພັດທະນາຄຸນນະພາບການຮຽນ-ການສອນໃຫ້ເກີດຜົນດີທີ່ສຸດ.

**ສະຫຼຸບ** ການວິໄຈພາກປະຕິບັດໝາຍເຖິງການວິໄຈສຶກສາຄົ້ນຄວ້າໃນຫ້ອງຮຽນ ໂດຍຄູຜູ້ສອນແລະເພື່ອນຄູເປັນຜູ້ດຳເນີນການວິໄຈໄປພ້ອມໆ ກັບການສອນເພື່ອແກ້ໄຂບັນຫານັກຮຽນບາງຄົນບາງກຸ່ມທີ່ມີບັນຫາ ເຊັ່ນຮຽນບໍ່ເກັ່ງ ແລະຮຽນບໍ່ທັນຄົນອື່ນ ຫຼື ພັດທະນານັກຮຽນບາງຄົນບາງກຸ່ມໃຫ້ມີຄວາມຮູ້-ຄວາມສາມາດ ແລະ ທັກສະໃນດ້ານຕ່າງໆ ດີຍິ່ງຂຶ້ນເຊັ່ນ ທັກສະການຟັງ, ເວົ້າ, ອ່ານ ແລະ ຂຽນ ໃນຂະນະດຽວກັນຄູກໍ່ໄດ້ປັບປຸງ ແລະພັດທະນາກິດຈະກຳການຮຽນ-ການສອນຂອງຕົນໃຫ້ດີຂຶ້ນເປັນລຳດັບ

## 3.3 ລັກສະນະສຳຄັນຂອງການວິໄຈໃນຫ້ອງຮຽນ

ການວິໄຈໃນຫ້ອງຮຽນມີຈຸດເນັ້ນທີ່ແຕກຕ່າງຈາກການວິໄຈທາງການສຶກສາຄື: ການວິໄຈໃນຫ້ອງຮຽນມຸ້ງສຶກສາໃນປະເດັນທີ່ກ່ຽວຂ້ອງກັບຂະບວນການຮຽນ-ການສອນລະຫວ່າງຄູ ແລະ ນັກຮຽນ ແລະ ເນັ້ນສະເພາະຈາກການປະຕິບັດງານຂອງຄູໃນຫ້ອງຮຽນ ຫຼື ໃນໂຮງຮຽນເທົ່ານັ້ນ ບໍ່ເນັ້ນລະບຽບວິທີວິໄຈຫຼາຍເກີນໄປ, ບໍ່ຈຳເປັນຕ້ອງສຸ່ມຕົວຢ່າງ, ບໍ່ເນັ້ນສະຖິຕິວິເຄາະທີ່ສູງເກີນໄປ ແລະ ຜົນວິໄຈກໍ່ບໍ່ເນັ້ນການສະຫຼຸບອ້າງອີງ ເພາະເປັນການສຶກສາເພື່ອແກ້ບັນຫາສະເພາະໃນຫ້ອງຮຽນ

ທັດສະນາ ສະແຫວງ (2543 ອ້າງເຖິງໃນສັກສິດ ວັດຣາຣັດ, 2552) ໄດ້ກ່າວເຖິງລັກສະນະການວິໄຈໃນຫ້ອງຮຽນດັ່ງນີ້ ວິໄຈໃນຫ້ອງຮຽນເປັນການສຶກສາເລື່ອງທີ່ກ່ຽວຂ້ອງກັບການຮຽນ-ການສອນຄູ ແລະນັກຮຽນເປັນສ່ວນໃຫຍ່ ວິໄຈການປະຕິບັດວຽກຂອງຄູ ເນັ້ນສຶກສາສະເພາະໃນຫ້ອງຮຽນ ຫຼື ໃນໂຮງຮຽນເທົ່ານັ້ນ ບໍ່ເນັ້ນວິທີວິໄຈຫຼາຍປານໃດ ບໍ່ຈຳເປັນຕ້ອງມີການຄັດເລືອກກຸ່ມຕົວຢ່າງ ບໍ່ເນັ້ນສະຖິຕິ ຜົນການວິໄຈບໍ່ເນັ້ນສະຫຼຸບອ້າງອີງ

Elliot (1993 ອ້າງເຖິງໃນທັດສະນາ, 2000) ໄດ້ອະທິບາຍລັກສະນະພິເສດຂອງການວິໄຈໃນຊັ້ນຮຽນທີ່ສຳຄັນມີ 2 ປະການຄື ເປັນການສຶກສາການກະທຳຂອງມະນຸດ ແລະສະຖານະການທາງສັງຄົມ ໂດຍຄູຜູ້ສອນທີ່ກ່ຽວຂ້ອງກັບບັນຫາ ແລະຄວາມກ້າວໜ້າຕ່າງໆທີ່ຕ້ອງການປ່ຽນແປງ ແລະມີເປົ້າໝາຍເພື່ອແກ້ບັນຫາຢ່າງເປັນລະບົບ ເຊິ່ງອາດຈະປັບປ່ຽນໄປຕາມສະຖານະການທີ່ຄົ້ນພົບໃນໄລຍະເຮັດການວິໄຈ

Kemmis and Mc Taggart (1982) ເປັນການທົດລອງໃຊ້ແນວຄວາມຄິດໄປປະຕິບັດວຽກ ເຊິ່ງເປັນວິທີການໜຶ່ງທີ່ຈະເຮັດໃຫ້ໄດ້ຄວາມຮູ້ເພີ່ມຂຶ້ນເພື່ອປັບປຸງຫຼັກສູດການສອນ ແລະການຮຽນ

ຈາກການວິເຄາະຜົນງານວິໄຈໃນຫ້ອງຮຽນຫຼາຍເຫຼັ້ມ ສາມາດຈຳແນກປະເພດຂອງການວິໄຈໃນຫ້ອງຮຽນໄດ້ 2 ປະເພດຄື: ການວິໄຈເພື່ອຄວາມເຂົ້າໃຈບັນຫາໃນຫ້ອງຮຽນ ແລະ ການວິໄຈເພື່ອການແກ້ບັນຫາ/ພັດທະນາ

ໃນຫ້ອງຮຽນ ແລະ ໃນແຕ່ລະປະເພດໃຊ້ຮູບແບບການວິໄຈທີ່ແຕກຕ່າງກັນ ດັ່ງສະແດງຕາມແຜນວາດໃນໜ້າຖັດໄປ:




ແຜນວາດທີ 4 ລັກສະນະຂອງການວິໄຈໃນຫ້ອງຮຽນ

ຜ່ອງພັນ ໄຈມິງຄົນກຸນ (2000) ໄດ້ສະຫຼຸບລັກສະນະຂອງການວິໄຈພາກປະຕິບັດໄວ້ດັ່ງນີ້ຄື:

1. ເປັນການວິໄຈທີ່ເອີ້ນວ່າ "self-reflective inquiry" ຄືການສະທ້ອນຄືນສະຖານະການຫຼືບັນຫາທີ່ຕົນຄົ້ນພົບ ເຊັ່ນບັນຫາທີ່ຄູເຫັນໃນການສອນ ເຊິ່ງເປັນບັນຫາໃກ້ຕົວບໍ່ແມ່ນບັນຫາທີ່ເລີ່ມຈາກພາຍນອກ
2. ເປັນການວິໄຈທີ່ດຳເນີນການໂດຍຜູ້ມີສ່ວນຮ່ວມໂດຍກົງໃນໜ່ວຍງານ/ອົງການ ຄູທີ່ເຮັດໜ້າທີ່ການວິໄຈຄວນຮ່ວມກັບຄະນະບຸກຄົນທີ່ມີສ່ວນກ່ຽວຂ້ອງ
3. ເປັນການວິໄຈເພື່ອຫວັງຜົນໃນການປັບປຸງ-ພັດທະນາວິທີການປະຕິບັດໃນໜ່ວຍງານ ຫຼືອົງກອນນັ້ນໆ ໂດຍກົງ
4. ເປັນການວິໄຈທີ່ມີການທົດລອງວິທີການປະຕິບັດຈິງໆ ໃນສະຖານທີ່ຈິງໂດຍທັນທີ ແລະ ເຮັດການວິເຄາະຜົນຂອງການປະຕິບັດນັ້ນໆ ໂດຍຜູ້ວິໄຈເອງ

ຕາຕະລາງທີ 1 ລັກສະນະຂອງການວິໄຈພາກປະຕິບັດໃນຫ້ອງຮຽນ

| **ການວິໄຈພາກປະຕິບັດໃນຫ້ອງຮຽນຄືການວິໄຈທີ່ມີລັກສະນະດັ່ງນີ້** | |
|---|---|
| ໃຜ | ຄູສອນໃນຫ້ອງຮຽນ |
| ເຮັດຫຍັງ | ເຮັດການສະແຫວງຫາວິທີແກ້ໄຂບັນຫາ |
| ຢູ່ໃສ | ທີ່ເກີດຂຶ້ນໃນຫ້ອງຮຽນ |
| ເວລາໃດ | ໃນຂະນະທີ່ການຮຽນການສອນກຳລັງເກີດຂຶ້ນ |
| ແບບໃດ | ດ້ວຍວິທີການວິໄຈທີ່ເປັນຮອບວຽນໃນການເຮັດວຽກຕໍ່ເນື່ອງ ແລະ |

| | |
|---|---|
| | ສະທ້ອນຄືນຜົນການເຮັດວຽກຂອງຕົນເອງ (self-refection) ໂດຍຂັ້ນຕອນຫຼັກຄືການການເຮັດວຽກຕາມຮອບວຽນPAOR (plan,act, observe, |

ຕາຕະລາງທີ 1 ລັກສະນະຂອງການວິໄຈພາກປະຕິບັດໃນຫ້ອງຮຽນ (ຕໍ່)

| ການວິໄຈພາກປະຕິບັດໃນຫ້ອງຮຽນຄືການວິໄຈທີ່ມີລັກສະນະດັ່ງນີ້ | |
|---|---|
| | reflect & revise) |
| ເພື່ອເປົ້າໝາຍໃດ | ມີເປົ້າໝາຍເພື່ອພັດທະນາການຮຽນ-ການສອນໃຫ້ເກີດປະໂຫຍດສູງສຸດຕໍ່ຜູ້ຮຽນ |
| ລັກສະນະເດັ່ນການວິໄຈ | ເປັນຂະບວນການວິໄຈທີ່ເຮັດໃນໄລຍະສັ້ນ ໂດຍຄູສອນນຳວິທີການແກ້ບັນຫາທີ່ຕົນເອງຄິດຂຶ້ນໄປທົດລອງໃຊ້ກັບຜູ້ຮຽນທັນທີ ແລະສັງເກດຜົນການແກ້ໄຂບັນຫານັ້ນມີການສະທ້ອນຄືນ ແລະ ແລກປ່ຽນປະສົບການກັບເພື່ອນຄູໃນໂຮງຮຽນ ເປັນການວິໄຈແບບຮ່ວມມື(collaborative research) |

ຂໍ້ມູນຈາກ: ສຸວິມົນ ວ່ອງວານິດ (2000).

ສ່ວນອຸທຸມພອນ ຈາມອນມານ (2544:2) ໄດ້ອະທິບາຍຄວາມແຕກຕ່າງໄວ້ດັ່ງນີ້:

ຕາຕະລາງທີ 2 ລັກສະຄວາມແຕກຕາງຂອງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາ

| | ການວິໄຈ | |
|---|---|---|
| | **ໃນຫ້ອງຮຽນ** | **ທາງການສຶກສາ** |
| 1. ຜູ້ເຮັດ | ຄູ, ສຶກສານິເທດ, ຜູ້ບໍລິຫານໂຮງຮຽນ | ນັກການສຶກສາ/ນັກວິໄຈທາງການສຶກສາ |
| 2. ເຮັດຫຍັງ | ແກ້ບັນຫາ/ເສີມນັກຮຽນບາງຄົນ/ຄູບາງ ຄົນ/ຜູ້ບໍລິຫານໂຮງ ຮຽນບາງຄົນ/ສຶກສານິເທດບາງຄົນໃນເລື່ອງນ້ອຍໆແຕ່ສຳຄັນ | ຫາຂໍ້ມູນເພື່ອພັດທະນານັກຮຽນ, ຄູ, ຜູ້ບໍລິຫານ ແລະ ນິເທດສຶກສາກຸ່ມໃຫຍ່ ໃນເລື່ອງທີ່ສຳຄັນ ແລະ ໃຫຍ່ເພື່ອໃຫ້ໄດ້ຄວາມຮູ້ທີ່ສຳຄັນ |
| 3. ເຮັດຕອນໃດ | ເມື່ອພົບບັນຫາ | ເມື່ອມີງົບປະມານ, ແຮງງານແລະ ເວລາ |
| 4. ເລີ່ມຢ່າງໃດ | ມີບັນຫາແທ້ ແລະ ຫາສາເຫດໄດ້ | ປະເດັນທີ່ຕ້ອງເຮັດເພື່ອກຳນົດນະໂຍບາຍ ຫຼື ແກ້ໄຂບັນຫາໃຫຍ່ໆ |

| | | |
|---|---|---|
| 5. ເຮັດຢ່າງໃດ | ພົບບັນຫາແທ້, ຫາສາເຫດເລືອກວິທີແກ້ທີ່ ເໝາະສົມທີ່ສຸດ ລົງມືແກ້, ຈົດບັນທຶກ, ເຮັດລາຍງານ 2-3 ໜ້າ | ມີບັນຫາທີ່ຕ້ອງວິໃຈ ສຶກສາງານວິໄຈທີ່ກ່ຽວຂ້ອງ , ອອກແບບການວິໄຈ, ກຳນົດປະຊາກອນ, ກຸ່ມຕົວຢ່າງສ້າງເຄື່ອງມືລວບລວມຂໍ້ມູນວິເຄາະດ້ວຍສະຖິຕິໂດຍອາໄສຄອມພິວເຕີ(ຖ້າຕ້ອງການ) ສະຫຼຸບຂຽນລາຍງານ ເນັ້ນທີ່ການອະພິປາຍຜົນ. |

ຂໍ້ມູນຈາກ: ອຸທຸມພອນ ຈາມອນມານ (2544)

ສຸວິມົນວ່ອງວານິດ (2011) ໄດ້ກ່າວສະຫຼຸບແນວຄວາມຄິດຂ້າງເທິງວ່າລັກສະນະສຳຄັນຂອງການວິໄຈພາກປະຕິບັດໃນຫ້ອງຮຽນຕ້ອງມີການດຳເນີນວຽກທີ່ເປັນຮອບວຽນຕໍ່ເນື່ອງມີຂະບວນການເຮັດວຽກແບບມີສ່ວນຮ່ວມ ແລະ ເປັນຂະບວນການທີ່ເປັນສ່ວນໜຶ່ງຂອງການເຮັດວຽກປົກກະຕິ ເພື່ອໃຫ້ໄດ້ຂໍ້ຄົ້ນພົບກ່ຽວກັບການແກ້ໄຂບັນຫາທີ່ສາມາດປະຕິບັດໄດ້ຈິງຄືຂະນະທີ່ກິດຈະກຳການຮຽນ-ການສອນກຳລັງດຳເນີນຢູ່ກໍຕ້ອງມີການວິໄຈເພື່ອສະແຫວງຫາວິທີການແກ້ບັນຫາທີ່ເກີດຂຶ້ນລະຫວ່າງຮຽນ ແລະ ເຮັດການປັບປຸງ-ແກ້ໄຂພັດທະນາຜູ້ຮຽນຄວບຄູ່ກັນໄປກິດຈະກຳການຮຽນ-ການສອນການວິໄຈ ແລະການພັດທະນາຈຶ່ງເກີດຂຶ້ນໃນການປະຕິບັດວຽກພ້ອມກັນໃນການເຮັດວຽກປົກກະຕິສຳລັບໃນຂັ້ນຕອນຂອງການວິໄຈມີຂະບວນການເຮັດວຽກທີ່ເປັນວົງຈອນການວິໄຈແບບຮອບວຽນຕາມແນວຄິດແບບເກົ່າທີ່ສະເໜີໂດຍ Kemmis (1938) ດັ່ງທີ່

ສະແດງໃນແຜນວາດທີ 5




**ແຜນວາດທີ** 5 ຮອບວຽນການວິໄຈພາກປະຕິບັດໃນຫ້ອງຮຽນ (Kemmis, 1938)

ຈາກ: ສຸວິມົນ ວ່ອງວານິດ (2011)

ຊຶ່ງສະແດງໃຫ້ເຫັນວ່າການວິໄຈພາກປະຕິບັດໃນຫ້ອງຮຽນມີ 4 ຂັ້ນຕອນຄື (1) ການວາງແຜນຫຼັງຈາກທີ່ວິເຄາະ ແລະ ກຳນົດປະເດັນບັນຫາທີ່ຕ້ອງການແກ້ໄຂ (plan) (2) ການປະຕິບັດຕາມແຜນທີ່ກຳນົດ (act) (3) ການສັງເກດຜົນທີ່ເກີດຂຶ້ນຈາກການປະຕິບັດວຽກ (observe) ແລະ (4) ການສະທ້ອນຄືນ ຫຼັງຈາກການປະຕິບັດວຽກໃຫ້ຜູ້ທີ່ມີສ່ວນຮ່ວມໄດ້ວິພາກວິຈານ ເຊິ່ງນຳໄປສູ່ການປັບປຸງແກ້ໄຂການປະຕິບັດວຽກຕໍ່ໄປ (reflect) ຮອບວຽນການວິໄຈພາກປະຕິບັດນີ້ເອີ້ນຫຍໍ້ໆວ່າຮອບວຽນ PAOR

ສຸວິມົນວ່ອງວານິດ (2011) ຍັງໄດ້ກ່າວເນັ້ນຕື່ມອີກວ່າຈຸດເລີ່ມຕົ້ນຂອງການວິໄຈພາກປະພາກປະຕິບັດໃນຫ້ອງຮຽນ ຄືການວິເຄາະສະພາບບັນຫາທີ່ເກີດຂຶ້ນໃນຊັ້ນຮຽນ. ຈາກນັ້ນຈຶ່ງກຳນົດເປັນຄຳຖາມວິໄຈທີ່ຕ້ອງການຄົ້ນຫາຄຳຕອບ ໂດຍການຄົ້ນຄວ້າພິຈາລະນາບັນຫາທີ່ເກີດຂຶ້ນແລ້ວຫາແນວທາງແກ້ໄຂຫຼັງຈາກໄດ້ຂໍ້ຄົ້ນພົບກໍນຳຜົນດັ່ງກ່າວແລກປ່ຽນໃຫ້ເພື່ອນຮ່ວມວຽກທີ່ກ່ຽວຂ້ອງວິພາກວິຈານດັ່ງແຜນວາດລຸ່ມນີ້:




**ແຜນວາດທີ 6** ກິດຈະກຳໃນການເຮັດວິໄຈພາກປະຕິບັດໃນຫ້ອງຮຽນ

ຂໍ້ມູນຈາກ: ສຸວິມົນ ວ່ອງວານິດ (2011)

ເພື່ອໃຫ້ເຫັນໄດ້ຂະບວນການວິໄຈພາກປະຕິບັດໃນຫ້ອງຮຽນຈະແຈ້ງຂຶ້ນ ໃນແຜນວາດທີ 5 (Dan MacIsaac, 1995) ສະແດງເຖິງຂະບວນການດຳເນີນການວິໄຈ 2 ຮອບວຽນ ຄືໃນຮອບວຽນທີໜຶ່ງ ໄດ້ແກ່ (1) ວາງແຜນ (plan) (2) ປະຕິບັດ (action) (3) ສັງເກດ (observe) ແລະ (4) ສະທ້ອນຄືນ (reflect) ແລະ ໃນຮອບວຽນທີ່ 2 ໄດ້ແກ່ປັບປຸງແຜນທີ່ປະຕິບັດ (re-plan) (2) ປະຕິບັດຕາມແຜນ (action) (3) ສັງເກດການດຳເນີນຕາມແຜນ (observe) ແລະ (4) ສະທ້ອນຄືນຜົນການປະຕິບັດແຜນແລະການການສັງເກດ (reflect)




**ແຜນວາດທີ 7** ຮອບວຽນການວິໄຈພາກປະຕິບັດໃນຫ້ອງຮຽນ

ຂໍ້ມູນຈາກ: Dan MacIsaac, 1995

**ສະຫຼຸບ** ການວິໄຈພາກປະຕິບັດໃນຫ້ອງຮຽນມີລັກສະນະເປັນຮອບວຽນເພາະວ່າມັນມີຂັ້ນຕອນທີ່ດຳເນີນຄ້າຍຄືກັນຢ່າງຕໍ່ເນື່ອງການວິໄຈພາກປະຕິບັດໃນຫ້ອງຮຽນເລີ່ມຕົ້ນຈາກການວາງແຜນຫຼັງຈາກວິເຄາະ ແລະກຳນົດ

ບັນຫາທີ່ຕ້ອງການແກ້ໄຂ, ຕິດຕາມດ້ວຍການປະຕິບັດ, ຈາກນັ້ນແມ່ນສັງເກດ, ຕໍ່ຈາກນັ້ນແມ່ນສະທ້ອນຄືນ ແລະ ໃນຮອບວຽນຕໍ່ໄປ ມີການປັບປຸງແຜນ, ນຳເອົາແຜນທີ່ປັບປຸງໄປປະຕິບັດ, ສັງເກດ ແລະສະທ້ອນຄືນ.

## 3.4 ຄວາມສຳຄັນຂອງການວິໄຈພາກປະຕິບັດໃນຫ້ອງຮຽນ

**ຄວາມສຳຂອງການວິໄຈໃນຫ້ອງຮຽນມີດັ່ງລຸ່ມນີ້:**

1. ໃຫ້ໂອກາດຄູໃນການສ້າງອົງຄວາມຮູ້ທັກສະການເຮັດວິໄຈການປະຍຸກໃຊ້ຄວາມຮູ້ ແລະການກຳນົດທາງເລືອກໃນການປ່ຽນແປງໂຮງຮຽນໃຫ້ດີຂຶ້ນ

2. ເປັນການສ້າງຊຸມຊົນແຫ່ງການຮຽນຮູ້

3. ເປັນປະໂຫຍດຕໍ່ຜູ້ປະຕິບັດໂດຍກົງ ເນື່ອງຈາກຊ່ວຍພັດທະນາຕົນເອງດ້ານວິຊາຊີບ

4. ຊ່ວຍໃຫ້ເກີດການພັດທະນາທີ່ຕໍ່ເນື່ອງ ແລະ ເກີດການປ່ຽນແປງຜ່ານຂະບວນການວິໄຈໃນທີ່ເຮັດວຽກ ເຊິ່ງເປັນປະໂຫຍດຕໍ່ອົງກອນ ເນື່ອງຈາກນຳໄປສູ່ການປັບປຸງປ່ຽນແປງການປະຕິບັດ ແລະການແກ້ບັນຫາ

5. ເປັນການວິໄຈທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຜູ້ປະຕິບັດໃນການວິໄຈເຮັດໃຫ້ຂະບວນການວິໄຈມີຄວາມເປັນປະຊາທິປະໄຕ ເຮັດໃຫ້ເກີດການຍອມຮັບໃນຄວາມຮູ້ຂອງຜູ້ປະຕິບັດ

6. ຊ່ວຍກວດກາວິທີການເຮັດວຽກຂອງຄູທີ່ມີປະສິດທິຜົນ

7. ເຮັດໃຫ້ຄູເປັນຜູ້ນຳການປ່ຽນແປງ ( change agent )

ສະຖານສຶກສາ ແລະ ໜ່ວຍງານທີ່ກ່ຽວຂ້ອງສົ່ງເສີມສະໜັບສະໜູນໃຫ້ຜູ້ສອນສາມາດຈັດບັນຍາກາດສະພາບແວດລ້ອມ ສື່ການຮຽນ ແລະ ອຳນວຍຄວາມສະດວກເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ ມີຄວາມຮອບຮູ້ ລວມທັງສາມາດໃຊ້ການວິໄຈເປັນສ່ວນໜຶ່ງຂອງຂະບວນການຮຽນຮູ້ ສະຖານສຶກສາ ການພັດທະນາຂະບວນການຮຽນ-ການສອນທີ່ມີປະສິດທິພາບ  ລວມທັງການສົ່ງເສີມໃຫ້ຜູ້ສອນສາມາດວິໄຈເພື່ອພັດທະນາການຮຽນຮູ້ທີ່ເໝາະສົມກັບຜູ້ຮຽນໃນແຕ່ລະດັບການສຶກສາ

ພັດທະນາການສຶກສາ ຕ້ອງໃຫ້ມີລັກສະນະຊາດ, ວິທະຍາສາດ, ມະຫາຊົນ ແລະ ທັນສະໄໝ ເພື່ອໃຫ້ຫຍັບມໍ່ເຂົ້າກັບຂົງເຂດພາກພື້ນສາກົນ ແລະ ເທື່ອລະກ້າວ ພ້ອມທັງສອດຄ່ອງກັບຄວາມເປັນຈິງຂອງປະເທດ (ກະຊວງສຶກສາທິການ, 2008) ຄູ່ມືການເຮັດວຽກຂອງວິທະຍາໄລຄູຂອງລາວ ຂໍ້ 4.7 ກຳນົດໄວ້ວ່າ ວິທະຍາໄລຄູມີໜ້າທີ່ຄົ້ນຄວ້າ, ຂຽນ, ຮຽບຮຽງ ປຶ້ມແບບຮຽນ, ວາລະສານ, ນະວັດຕະກຳເຕັກໂນໂລຊີທີ່ທັນສະໄໝ, ເອກະສານອື່ນໆ ແລະ ດຳເນີນການວິໄຈໃນຫົວຂໍ້ຕ່າງໆ ເພື່ອພັດທະນາການຮຽນ-ການສອນໃຫ້ດີຂຶ້ນ, ມີຄຸນະພາບ ແລະ ສາມາດຮັບໃຊ້ສັງຄົມ ແລະ ໃນຫ້ອງການພັດທະນາຄູຍັງມີໜ່ວຍງານພັດທະນາການວິໄຈພາກປະຕິບັດທີ່ມີໜ້າທີ່ຈັດໂຄງການອົບຮົມ ສົ່ງເສີມ ຊຸກຍູ້ ແລະ ຕິດຕາມການເຮັດວິໄຈຂອງຄູ-ອາຈານໃນສະຖາບັນ (ກະຊວງສຶກສາທິການ, 2010) ນອກນັ້ນຍັງມີໜ່ວຍງານປະເມີນຄຸນະພາບພາຍນອກ (quality assurance = QA) ທີ່ເຮັດໜ້າທີ່ກວດກາການເຮັດວຽກງານຂອງໜ່ວຍງານວິໄຈໃນແຕ່ລະປີ

ດັ່ງນັ້ນ ບົດບາດຂອງຄູຍຸກໃໝ່ ເພື່ອການພັດທະນາໄປສູ່ຄູມືອາຊີບ (professional) ຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງຮຽນຮູ້ ສ້າງຄວາມເຂົ້າໃຈ ແລະ ຮັບຮູ້ໃນຄວາມສຳຄັນຂອງການຈັດການຮຽນຮູ້ໂດຍໃຊ້ຂະບວນການວິໄຈ ແລະ ສ້າງຄວາມເຂົ້າໃຈໃຫ້ເກີດຂຶ້ນໃນຈິດວິນຍານຂອງຄວາມເປັນຄູ ລວມທັງສາມາດປະຕິບັດການວິໄຈ

ໃນຫ້ອງຮຽນຂອງຕົນເອງຢູ່ຕະຫຼອດເວລາ ເພື່ອກໍ່ໃຫ້ເກີດການຈັດການຮຽນ-ການສອນເປັນໄປໄດ້ດ້ວຍດີ ແລະ ມີປະສິດທິພາບຢ່າງດີຍິ່ງຕໍ່ໄປ.

## 3.5 ເປົ້າໝາຍຂອງການວິໄຈພາກປະຕິບັດໃນຫ້ອງຮຽນ

ເປົ້າໝາຍທີ່ສຳຄັນຂອງການວິໄຈປະຕິບັດການໃນຫ້ອງຮຽນ ກໍຄື ການພັດທະນາກົນລະຍຸດໃນການສອນ (Teaching strategies)ການທີ່ຄູໃຊ້ກົນລະຍຸດໃນການສອນທີ່ດີ ເໝາະສົມກັບຜູ້ຮຽນແລະສະພາບແວດລ້ອມ ຍ່ອມຈະສົ່ງຜົນເຖິງຜົນສຳເລັດທາງການຮຽນຂອງຜູ້ຮຽນ ແລະບັນລຸເປົ້າໝາຍໃນການພັດທະນາຜູ້ຮຽນໃນທີ່ສຸດ

ການສອນຂອງຄູເປັນຜົນມາຈາກຄວາມຮູ້ 2 ປະການ ຄື

1. ເປັນຄວາມຮູ້ຈາກການປະຕິບັດ ເປັນຄວາມຮູ້ທີ່ອາໄສປະສົບການທັງໃນດ້ານການຮຽນ ແລະ ການເຮັດວຽກງານຕົວຈິງ

2. ເປັນຄວາມຮູ້ຈາກການວິໄຈ ເຊິ່ງຄວາມຮູ້ຈາກການວິໄຈນີ້ ອາດເປັນຄວາມຮູ້ທີ່ໄດ້ຈາກການວິໄຈຂອງຄົນອື່ນ ຫຼື ຄວາມຮູ້ຈາກການວິໄຈຂອງຕົນເອງ ໂດຍສະເພາະຢ່າງຍິ່ງຄວາມຮູ້ຈາກການວິໄຈພາກປະຕິບັດໃນຫ້ອງຮຽນ ຄວາມຮູ້ທັງສອງປະການນີ້ ມີອິດທິພົນຕໍ່ການຕັດສິນໃຈກ່ຽວກັບການຮຽນຮູ້ (Instructional Decisions) ຂອງຄູ ໂດຍທີ່ການຮຽນຮູ້ (Instruction) ອາດຖືກພິຈາລະນາວ່າເປັນສ່ວນຍ່ອຍຂອງການສອນ (Teaching) ຫຼື ອາດຈະຖືວ່າການສອນ ເປັນສ່ວນໜຶ່ງຂອງການຮຽນຮູ້ກໍໄດ້ ການຖືຕາມແນວຄິດຫຼັງນີ້ເພາະຄວາມເຊື່ອທີ່ວ່າ ພຶດຕິກຳຂອງຄູ ພຶດຕິກຳຂອງຜູ້ຮຽນ ແລະປະຕິສຳພັນລະຫວ່າງຄູກັບຜູ້ຮຽນເກີດຂຶ້ນໃນບໍລິບົດຂອງການຮຽນຮູ້ ການຕັດສິນໃຈກ່ຽວກັບການຮຽນຮູ້ຈະສົ່ງຜົນຕໍ່ກົນລະຍຸດໃນການສອນທີ່ຄູໃຊ້ໃນການສອນ ເຊິ່ງຜົນຂອງກົນລະຍຸດໃນການສອນຈະມີຜົນກະທົບໂດຍກົງຕໍ່ຜົນສຳເລັດທາງການຮຽນຂອງຜູ້ຮຽນ ດັ່ງແຜນວາດໃນໜ້າຖັດໄປ:




ແຜນວາດທີ 8: ຜົນກະທົບຂອງຄວາມຮູ້ຈາກການປະຕິບັດແລະຈາກການວິໄຈທີ່ມີຕໍ່ກົນລະຍຸດໃນການສອນ

## 3.6 ລັກສະນະຂອງການວິໄຈໃນຫ້ອງຮຽນກັບການວິໄຈວິຊາການ

Bassey, M. (1986,1999 ອ້າງເຖິງໃນສຸວິ ມົນວ່ອງວານິດ, 2554) ກ່າວວ່າ ການວິໄຈທາງວິຊາການ (academic research) ທີ່ປະຕິບັດກັນມີຂໍ້ຈຳກັດທີ່ສົ່ງຜົນຕໍ່ການນຳໄປໃຊ້ປະໂຫຍດ 2 ຢ່າງ ຄື (1) ວຽກວິໄຈປະເພດນີ້ມັກໃຊ້ຄຳອະທິບາຍທີ່ຫຼາຍເກີນຄວາມຈຳເປັນໃນການລາຍງານຜົນການວິໄຈທີ່ໄດ້ຈາກການສຶກສາ ແລະ (2) ວຽກວິໄຈປະເພດນີ້ເປັນການສຶກສາສະພາບບັນຫາທົ່ວໄປໃນໂຮງຮຽນຫຼາຍເກີນໄປ ສະນັ້ນຖ້າໃຫ້ຄູປະຈຳການໃນໂຮງຮຽນມາເຮັດວິໄຈທາງວິຊາການແບບນີ້ກໍ່ຈະເປັນການໃຊ້ເວລາຂອງຄູຫຼາຍເກີນໄປ ແລະຂໍ້ຄົ້ນພົບທີ່ໄດ້ຈາກການສຶກສາວິໄຈກໍ່ບໍ່ແນ່ໃຈວ່າຈະສາມາດນຳໄປໃຊ້ໃນການແກ້ໄຂບັນຫາໃນຫ້ອງຮຽນໄດ້ຢ່າງແທ້ຈິງຫຼື ໃຊ້ໄດ້ກົງກັບສະພາບບັນຫາທີ່ເກີດຂຶ້ນຈິງໃນຫ້ອງຮຽນ

ນັກວິໄຈທີ່ເປັນນັກວິຊາການ (academic researcher) ຈຶ່ງມີບົດບາດ ແລະ ເປົ້າໝາຍຂອງການເຮັດວິໄຈທີ່ຕ່າງຈາກຄູນັກວິໄຈທີ່ເຮັດວິໄຈໃນຫ້ອງຮຽນ (teacher as researcher) ເນື່ອງຈາກນັກວິໄຈທີ່ເປັນນັກວິຊາການມີບົດບາດເປັນຜູ້ສັງເກດເບິ່ງ (watcher) ໂດຍການສັງເກດເບິ່ງພຶດຕິກຳຕ່າງໆທີ່ເກີດຂຶ້ນໃນຂະບວນການຮຽນ-ການສອນ ໃນຫ້ອງຮຽນສ່ວນຄູນັກວິໄຈກຸ່ມຫຼັງເປັນຜູ້ສະແດງ (actor) ບົດບາດຕ່າງໆ ໃນຫ້ອງຮຽນ ໂດຍເປັນຜູ້ປະຕິບັດການດ້ານການສອນໃນຫ້ອງຮຽນ ແລະ ເປັນຜູ້ປະຕິບັດການວິໄຈ ແລະສະແຫວງຫາວິທີການແກ້ໄຂບັນຫາໃນຫ້ອງຮຽນດ້ວຍຕົນເອງລະຫວ່າງການດຳເນີນການວິໄຈກໍ່ຈະມີການແລກປ່ຽນຫຼືອະພິປາຍກ່ຽວກັບຂໍ້ມູນຂ່າວສານວິທີການທີ່ໃຊ້ ແລະຂໍ້ຄົ້ນພົບທີ່ໄດ້ຈາກຫ້ອງຮຽນກັບກຸ່ມເພື່ອນຄູທີ່ຢູ່ໃນໂຮງຮຽນຢູ່ຕະຫຼອດເວລາເພື່ອພັດທະນາການຮຽນ-ການສອນໃຫ້ເກີດປະໂຫຍດກັບຜູ້ຮຽນໃຫ້ຫຼາຍທີ່ສຸດ

ຈະເຫັນວ່ານັກວິໄຈທັງສອງກຸ່ມຕ່າງກຳລັງດຳເນີນການສະແຫວງຫາຄວາມຮູ້ໃນການພັດທະນາການຮຽນ-ການສອນມີການເກັບຂໍ້ມູນ ແລະ ເຂົ້າເຖິງຂໍ້ມູນຊະນິດດຽວກັນ ແຕ່ນັກວິໄຈກຸ່ມທຳອິດຈະຫຼິ້ນບົດບາດຜູ້ສັງເກດສ່ວນອີກກຸ່ມຫຼິ້ນບົດບາດຜູ້ສະແດງ ແລະບົດບາດຂອງນັກວິໄຈທັງສອງກຸ່ມກໍ່ຕ່າງກັນກຸ່ມໜຶ່ງກຳລັງຫຼິ້ນບົດບາດນັກວິຊາການທີ່ເນັ້ນສ້າງຄວາມຮູ້ດ້ານທິດສະດີ ແລະນຳຜົນໄປໃຊ້ ສະຫຼຸບອ້າງອີງມີການຕີພິມເຜີຍແຜ່ໃນບົດຄວາມວາລະສານທາງວິຊາການຊອກຫາວິທີການພັດທະນາຜູ້ຮຽນ ໂດຍບໍ່ໄດ້ຕັ້ງເປົ້າໝາຍໄວ້ວ່າຈະເຮັດວິໄຈເພື່ອສ້າງຄວາມຮູ້ທີ່ມີຄວາມເປັນທົ່ວໄປໃຫ້ສາມາດສະຫຼຸບອ້າງອີງໄປໃຊ້ກັບນັກຮຽນກຸ່ມອື່ນໄດ້ຫຼື ເຜີຍແຜ່ເປັນບົດຄວາມທາງວິຊາການເໝືອນນັກວິໄຈກຸ່ມທຳອິດຢ່າງໃດກໍ່ຕາມຂໍ້ຄົ້ນພົບຂອງຄູນັກວິໄຈກໍ່ສາມາດເຜີຍແຜ່ໃຫ້ຜູ້ອື່ນຮູ້ໄດ້ຖ້າໄດ້ມີການວິເຄາະກວດກາຈົນແນ່ໃຈໃນຜົນທີ່ໄດ້ ແລະທ້າຍທີ່ສຸດກໍ່ມີຄວາມເປັນໄປໄດ້ທີ່ຄູນັກວິໄຈຈະສາມາດສ້າງຄວາມຮູ້ດ້ານທິດສະດີໄດ້ຈາກຜົນການວິໄຈທີ່ມາຈາກການປະຕິບັດຂອງຄູໂດຍກົງ ເປັນທິດສະດີທີ່ພັດທະນາມາຈາກຖານຮາກຂອງການປະຕິບັດ

ໂດຍສະຫຼຸບການວິໄຈພາກປະຕິບັດໃນຫ້ອງຮຽນເປັນຂະບວນການທີ່ມີເປົ້າໝາຍເພື່ອຫາວິທີການທີ່ໃຊ້ໄດ້ຜົນກັບຜູ້ຮຽນ ແລະຊ່ວຍຄົ້ນຫາວິທີການແກ້ໄຂບັນຫາ ໂດຍການປັບປຸງປ່ຽນແປງສິ່ງຕ່າງໆ ທີ່ເກີດຂຶ້ນໃນຫ້ງອຮຽນເພື່ອພັດທະນາຜູ້ຮຽນໃຫ້ບັນລຸເປົ້າໝາຍຕາມຫຼັກສູດການວິໄຈພາກປະຕິບັດໃນຫ້ອງຮຽນ ບໍ່ໄດ້ເນັ້ນສ້າງຜົນງານວິໄຈເພື່ອຕີພິມເຜີຍແຜ່ໃນວາລະສານວິຊາການຜູ້ຮຽນເອງກໍ່ສາມາດເປັນຜູ້ວິໄຈໄດ້ ເພື່ອຫາຍຸດທະວິທີຕ່າງໆ ທີ່ມີປະສິດທິຜົນທີ່ສຸດສຳລັບຕົວເອງ ແລະທົດສອບວ່າວິທີໃດຈະຊ່ວຍໃຫ້ເຂົາຮຽນໄດ້ດີທີ່ສຸດ ເພາະສະນັ້ນຕົວຜູ້ຮຽນເອງເປັນຜູ້ຄວບຄຸມຕົນເອງ ແລະ ເລີ່ມຮຽນຮູ້ທີ່ຈະຮຽນດ້ວຍຕົນເອງເປັນຕົວຜູ້ສອນເອງກໍ່ເຮັດວິໄຈໃນຫ້ອງຮຽນ ໃນລະຫວ່າງການເຮັດວິໄຈທັງຄູ ແລະຜູ້ຮຽນຄວນສົນທະນາ ແລະປຶກສາຫາລືກັນກ່ຽວກັບຍຸດທະວິທີຕ່າງໆ ໃຊ້ ແລະ ເມື່ອໄດ້ຜົນການວິໄຈກໍ່ແລກປ່ຽນກັບເພື່ອນຄູ ເຊິ່ງເຮັດໃຫ້ອົງກອນຄູເປັນໜ່ວຍງານທີ່ມີພະລັງໃນການປ່ຽນແປງສິ່ງຕ່າງໆ ໃຫ້ດີຂຶ້ນນອກຈາກນີ້

ການວິໄຈພາກປະຕິບັດໃນຫ້ອງຮຽນສາມາດເຮັດໄດ້ແບບເປັນທາງການຫຼືບໍ່ເປັນທາງການຄູອາດເຮັດວິໄຈຄົນດຽວຫຼືຈັບມືຮ່ວມກັນກັບນັກວິຊາການໃນວິທະຍາໄລ ຫຼືມະຫາວິທະຍາໄລໃນທ້ອງຖິ່ນຂອງຕົນກໍ່ໄດ້

Bassey, M. (1986 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2554) ໄດ້ພະຍາຍາມອະທິບາຍໃຫ້ເຫັນຄວາມແຕກຕ່າງຂອງການວິໄຈທາງວິຊາການກັບການວິໄຈພາກປະຕິບັດໃນຫ້ອງຮຽນວຽກວິໄຈປະເພດທຳອິດເປັນຄວາມພະຍາຍາມສ້າງຂໍ້ຄວາມຮູ້ທົ່ວໄປກ່ຽວກັບການຮຽນ-ການສອນລັກສະນະວຽກວິໄຈແບບນີ້ມັກຈະສະຫຼຸບຜົນການວິໄຈຈາກການສຶກສາໃນກຸ່ມຄູ ແລະນັກຮຽນໃນປະລິມານຂອງກຸ່ມຕົວຢ່າງຈຳນວນຫຼາຍໆ ມີຈຸດໝາຍເພື່ອຄົ້ນຄວ້າຫາສະພາບທົ່ວໄປ ແລະວຽກວິໄຈປະເພດນີ້ກໍ່ມີກຸ່ມຜູ້ສົນໃຈຫຼາຍ ແຕ່ປະໂຫຍດທີ່ຄູ-ອາຈານຈະນຳໄປໃຊ້ໃນຊີວິດປະຈຳວັນໃນຫ້ອງຮຽນອາດຈະໜ້ອຍ ວຽກວິໄຈຂອງນັກວິຊາການສ່ວນໃຫຍ່ເປັນແບບນີ້

ວຽກວິໄຈປະເພດທີ່ສອງເປັນການວິໄຈທີ່ມີຈຸດໝາຍເພື່ອຊອກຫາຄວາມຈິງຫຼືການອະທິບາຍເຖິງສິ່ງທີ່ເກີດຂຶ້ນໃນຫ້ອງຮຽນ ເຊິ່ງອາດຈະເປັນພຽງຫ້ອງດຽວອາດເປັນການເລົ່າເຖິງວິທີການສອນທີ່ຄູໃຊ້ໃນຫ້ອງຮຽນການອະທິບາຍເຖິງເຫດຜົນເບື້ອງຫຼັງທີ່ໃຊ້ວິທີການດັ່ງກ່າວການທົດລອງວິທີການຕ່າງໆກັບນັກຮຽນ ເຊິ່ງຄູບໍ່ເຄີຍເຮັດມາກ່ອນ ການວິໄຈແບບນີ້ຕົວຄູຜູ້ສອນຈະເປັນຜູ້ຕັດສິນໃຈ ແລະ ເປັນຜູ້ສະແຫວງຫາການຕັດສິນໃຈທີ່ຖືກຕ້ອງດ້ວຍຕົນເອງຕາມການພິຈາລະນາຂອງຄູ ໃນການເຮັດວິໄຈໃນຫ້ອງຮຽນນີ້ຄູໃນຖານະຜູ້ວິໄຈຈະບໍ່ໄດ້ຕັ້ງໃຈເປົ້າໝາຍວ່າຈະຕ້ອງໃຫ້ໄດ້ຂໍ້ສະຫຼຸບທີ່ໃຊ້ໄດ້ທົ່ວໄປ ແຕ່ກໍ່ມີຄວາມເປັນໄປໄດ້ທີ່ຜົນຈາກການເຮັດວິໄຈນັ້ນອາດໄປກະຕຸ້ນໃຫ້ຄູຄົນອື່ນເກີດຄວາມຢາກທົດລອງວິທີການນັ້ນໃນຫ້ອງຮຽນຂອງຕົນກໍ່ໄດ້ການວິໄຈພາກປະຕິບັດໃນຫ້ອງຮຽນຖືວ່າເປັນການວິໄຈປະເພດນີ້

Bassey, M. (1986 ອ້າງເຖິງໃນສຸວິມົນ ວ່ອງວານິດ, 2554) ມີຄວາມຄິດວ່າລັກສະນະຂອງການວິໄຈພາກປະຕິບັດໃນຫ້ອງຮຽນຄືວຽກວິໄຈທີ່ມີຜູ້ເຂົ້າໄປເຮັດວິໄຈໃນຫ້ອງຮຽນ ແລະ ເຮັດຢ່າງວ່ອງໄວອາດມີການເຮັດວິໄຈພາກປະຕິບັດພຽງ 2-3 ຊົ່ວໂມງກໍ່ເສັດຮຽບຮ້ອຍບໍ່ເໝືອນວຽກວິໄຈທາງວິຊາການທີ່ອາດຈະຕ້ອງໃຊ້ເວລາໃນການຄິດການກຳນົດຂອບເຂດການວິໄຈ ແລະ ໃຊ້ເວລາໃນການວິໄຈດົນດັ່ງນັ້ນວິທີການວິໄຈພາກປະຕິບັດໃນຫ້ອງຮຽນຈຶ່ງບໍ່ມີຄວາມສັບຊ້ອນເໝືອນວິທີການວິໄຈທາງວິຊາການ

Rowland (ອ້າງເຖິງໃນHuster, D.; Cassidy, T. ແລະCuff., T., 1986) ມີຄຳຄິດຄຳເຫັນແບບດຽວກັນກັບ Bassey ໃນປະເດັນທີ່ວ່າການວິໄຈທາງວິຊາການຕ່າງຈາກການວິໄຈຂອງຄູບ່ອນວ່າການວິໄຈທາງວິຊາການເນັ້ນການສະຫຼຸບອ້າງອີງຜົນການວິໄຈສ່ວນການວິໄຈຂອງຄູບໍ່ເນັ້ນການສະຫຼຸບອ້າງອີງຜົນການວິໄຈ ແລະການວິໄຈຂອງຄູມັກວິໄຈມັກໃຊ້ວິທີແບບອັດຕະວິໄສໃນການສະແຫວງຫາຄວາມຮູ້ ໂດຍໃຫ້ຄວາມສຳຄັນກັບການຕີຄວາມສິ່ງຕ່າງໆທີ່ເກີດຂຶ້ນໃນຫ້ອງຮຽນດ້ວຍຕົນເອງ ເຊິ່ງສອດຄ່ອງກັບ Rutkowski, J. (1996) ໃຊ້ຄຳວ່າ "casual" ຫຼື "common sense" ຢ່າງໃດກໍ່ດີວິທີການແບບປະລະໄນຈະມີການໃຊ້ໃນການເຮັດວິໄຈຂອງຄູໃນຫ້ອງຮຽນເໝືອນກັນ ແຕ່ເປັນການໃຊ້ເພື່ອກວດກາສິ່ງທີ່ໄດ້ປະຕິບັດໃນຫ້ອງຮຽນ ໂດຍການແລກປ່ຽນຄວາມຄິດເຫັນ ແລະການອະພິປາຍກ່ຽວກັບການແປຄວາມໝາຍຜົນການວິໄຈຮ່ວມກັນລະຫວ່າງເພື່ອນຄູໃນໂຮງຮຽນຫຼືຜູ້ກ່ຽວຂ້ອງ

Foshay, A.W. (1998) ເຫັນວ່າ ການວິໄຈພາກປະຕິບັດບໍ່ເໝືອນລາຍງານການວິໄຈທີ່ຍຶດແຜນແບບການວິໄຈ ເພາະໃຊ້ວິທີການເກັບບັນທຶກຂໍ້ມູນທີ່ບໍ່ເປັນທາງການ ບໍ່ຄ່ອຍໃຊ້ວິທີການວິໄຈແບບທົດລອງ ບໍ່ມີລະບົບການເກັບຂໍ້ມູນກ່ອນ-ຫຼັງການທົດລອງ ແລະ ຜົນການວິໄຈກໍ່ບໍ່ເນັ້ນການສະຫຼຸບອ້າງອີງ ເພາະປະຊາກອນທີ່ໃຊ້ໃນການວິໄຈບໍ່ໄດ້

ເໝືອນກັບປະຊາກອນອື່ນ ເຮັດໃຫ້ນັກວິໄຈທີ່ຍຶດແຜນແບບການວິໄຈຢ່າງເຄັ່ງຄັດ ຈະບໍ່ເຊື່ອຖືການວິໄຈພາກປະຕິບັດແບບນີ້

ຖ້າວິເຄາະປຽບທຽບລັກສະນະຂອງການວິໄຈພາກປະຕິບັດໃນຫ້ອງຮຽນກັບການວິໄຈທາງວິຊາການແລ້ວຈະເຫັນວ່າສິ່ງທີ່ເໝືອນກັນຄືວັດຖຸປະສົງຂອງການວິໄຈເຊິ່ງເນັ້ນການຊອກຫາວິທີການພັດທະນາການຮຽນ-ການສອນ ແຕ່ຈະມີຄວາມຕ່າງໃນການອອກແບບວິໄຈວິທີດຳເນີນການວິໄຈ ແລະການໃຊ້ຜົນການວິໄຈລາຍລະອຽດຂອງການວິເຄາະປຽບທຽບຄວາມຕ່າງຂອງການວິໄຈທັງສອງແບບສະແດງໃນຕາຕະລາງລຸ່ມນີ້

ຕາຕະລາງທີ 3 ການປຽບທຽບຄວາມແຕກຕ່າງຂອງການເຮັດວິໄຈພາກປະຕິບັດກັບການວິໄຈທາງວິຊາການ

| **ລາຍການ** | **ການວິໄຈພາກປະຕິບັດໃນຫ້ອງຮຽນ (classroom research)** | **ການວິໄຈທາງວິຊາການ (academic research)** |
|---|---|---|
| 1. ເປົ້າໝາຍ | ເນັ້ນສ້າງຄວາມຮູ້ສະເພາະເພື່ອໃຊ້ໃນຫ້ອງຮຽນຂອງຄູຜູ້ວິໄຈ | ເນັ້ນສ້າງຄວາມຮູ້ທົ່ວໄປ ເຊິ່ງສາມາດສະຫຼຸບອ້າງອີງໄດ້ |
| 2. ຜູ້ວິໄຈ | ດຳເນີນການໂດຍຄູຜູ້ສອນໃນຫ້ອງຮຽນມີລັກສະນະການວິໄຈແບບຮ່ວມມື (collaborative research) ໃຊ້ຮອບວຽນການເຮັດວິໄຈແບບ PAOR | ດຳເນີນການໂດຍນັກວິຊາການຫຼືນັກການສຶກສາໃນມະຫາວິທະຍາໄລທີ່ບໍ່ໄດ້ປະຕິບັດວຽກໃນຫ້ອງຮຽນ |
| 3. ຮອບວຽນຂອງການວິໄຈ | Plan, act, observe, reflect ໂດຍຂັ້ນຕອນສະທ້ອນຄືນ (reflect) ເປັນຂັ້ນຕອນທີ່ເປັນຂັ້ນຕອນສຳຄັນທີ່ການວິໄຈພາກປະຕິບັດໃນຫ້ອງຮຽນເຮັດໃຫ້ການວິໄຈຊະນິດນີ້ຕ່າງຈາກການວິໄຈອື່ນ | ໃຊ້ຮອບວຽນການວິໄຈແບບກຳນົດບັນຫາສຶກສາເອກະສານທີ່ກ່ຽວຂ້ອງອອກແບບການວິໄຈ (ກຳນົດປະຊາກອນກຸ່ມຕົວຢ່າງສ້າງເຄື່ອງມື ເກັບຂໍ້ມູນວິເຄາະຂໍ້ມູນ) ສະຫຼຸບ ແລະອະພິປາຍຜົນການວິໄຈ |
| 4. ວິທີການວິໄຈ | ບໍ່ເນັ້ນການກຳນົດກອບແນວຄິດທິດສະດີ ແຕ່ໃຊ້ປະສົບການຂອງຜູ້ສອນບໍ່ເນັ້ນແບບແຜນການວິໄຈຫຼາຍ ໃຊ້ການວິໄຈແບບຄຸນະພາບຫຼາຍກວ່າແບບປະລິມານ | ຍຶດແບບແຜນການວິໄຈການອອກແບບການວິໄຈທີ່ກະທັດຮັດມີການກຳນົດກອບແນວຄິດທິດສະດີແລະພັດທະນາທິດສະດີ ໃຊ້ການວິໄຈແບບປະລິມານຫຼາຍກວ່າ |
| 5. ການກຳນົດວິທີການແກ້ໄຂບັນຫາໃນຫ້ອງຮຽນ (solution) | ໃຊ້ວິທີການແບບອັດຕະວິໄສ(subjective) ໂດຍອາໄສປະສົບການຂອງຄູນັກວິໄຈ ແຕ່ຈະໃຊ້ວິທີການທາງປະລະໄນ (objective) ໃນການກວດກາຜົນ | ອີງໃສ່ທິດສະດີຫຼືມີຜົນການວິໄຈຮອງຮັບ |

| | | |
|---|---|---|
| | ການວິໄຈ | |
| 6. ກຸ່ມເປົ້າໝາຍທີ່ຖືກວິໄຈ | ນັກຮຽນໃນຫ້ອງຮຽນອາດເປັນລາຍບຸກຄົນຫຼືໝົດຫ້ອງ | ກຸ່ມນັກຮຽນທີ່ເປັນຕົວແທນປະຊາກອນ |
| 7. ຂໍ້ມູນວິໄຈ | ຄູເປັນຜູ້ເກັບຂໍ້ມູນ ໃຊ້ວິທີສັງເກດຫຼືກຖາມການສະແດງອອກທາງພຶດຕິກຳຂອງນັກຮຽນຂໍ້ມູນສ່ວນໃຫຍ່ເປັນຂໍ້ມູນແບບຄຸນະພາບ | ອາດໃຊ້ວິທີການເກັບຂໍ້ມູນແບບດຽວກັບການວິໄຈພາກປະຕິບັດໃນຫ້ອງຮຽນແຕ່ໂອກາດໃກ້ຊິດຕິດແທດກັບແຫຼ່ງຂໍ້ມູນ (ນັກຮຽນ)ຈະມີໜ້ອຍ |
| 8. ການວິເຄາະຂໍ້ມູນ | ໃຊ້ການວິເຄາະເນື້ອຫາບໍ່ເນັ້ນການວິເຄາະດ້ວຍສະຖິຕິຂັ້ນສູງ | ສ່ວນໃຫຍ່ໃຊ້ວິທີການວິເຄາະທາງສະຖິຕິ ເນັ້ນການສະຫຼຸບອ້າງອີງ |
| 9. ການອະພິປາຍ ແປຄວາມໝາຍຂໍ້ສຶກສາຈາກການວິໄຈ | ຄູນັກວິໄຈ ແລະ ເພື່ອນຄູຈະມີການແລກປ່ຽນປະສົບການການວິໄຈຮ່ວມກັນມີການອະພິປາຍເຖິງວິທີການແກ້ບັນຫາທີ່ໃຊ້ ແລະ ຜົນທີ່ເກີດຂຶ້ນ | ນັກວິໄຈອະພິປາຍພາຍໃຕ້ກອບທິດສະດີທີ່ໃຊ້ |
| 10. ໄລຍະເວລາໃນການເຮັດວິໄຈ | ເຮັດເປັນສ່ວນໜຶ່ງຂອງການຮຽນ-ການສອນ ແລະ ເຮັດຢ່າງວ່ອງໄວ ເພື່ອໃຫ້ສາມາດທົດລອງໃຊ້ຜົນຕາມແນວທາງທີ່ | ເປັນນັກວິໄຈທີ່ເຝົ້າສັງເກດຫຼື ເກັບຂໍ້ມູນຢູ່ຫ່າງໆ ເຖິງຈະມີໂອກາດເຂົ້າໄປເຮັດໃນຫ້ອງຮຽນແຕ່ກໍ່ຈະເປັນ |

ຕາຕະລາງທີ 3 ການປຽບທຽບຄວາມແຕກຕ່າງຂອງການເຮັດວິໄຈພາກປະຕິບັດກັບການວິໄຈທາງວິຊາການ (ຕໍ່)

| ລາຍການ | ການວິໄຈພາກປະຕິບັດໃນຫ້ອງຮຽນ<br>(classroom research) | ການວິໄຈທາງວິຊາການ<br>(academic research) |
|---|---|---|
| 10. ໄລຍະເວລາໃນການເຮັດວິໄຈ | ຄູນັກວິໄຈຕັດສິນໃຈຈະໃຊ້ | ໄລຍະສັ້ນ ເມື່ອເຮັດສຳເລັດກໍ່ຖອຍຫ່າງອອກມາການວາງແຜນການວິໄຈອາດຕ້ອງໃຊ້ເວລາດົນກວ່າການວິໄຈພາກປະຕິບັດໃນຫ້ອງຮຽນ |
| 11. ການໃຊ້ຜົນການວິໄຈ | ນຳຜົນໄປໃຊ້ແກ້ບັນຫາໃນຫ້ອງຮຽນທັນທີ ແລະກອດກາຜົນທີ່ເກີດຂຶ້ນບໍ່ເນັ້ນການຕີພິມເຜີຍແຜ່ເປັນບົດຄວາມວິຊາການ | ຜົນການວິໄຈອາດບໍ່ໄດ້ນຳໄປໃຊ້ໃນທາງປະຕິບັດຈິງ ແຕ່ອາດມີການຕີພິມເຜີຍແຜ່ເປັນບົດຄວາມວິໄຈຫຼືບົດຄວາມທາງວິຊາການ |

ອຸທຸມພອນ ຈາມອນມານ (2544 : 2) ໄດ້ອະທິບາຍຄວາມແຕກຕ່າງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາໄວ້ດັ່ງສະແດງໃນຕາຕະລາງ

ຕາຕະລາງທີ 4 ຄວາມແຕກຈ່າງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາຕາມແນວຄິດຂອງ

ອຸທຸມພອນ ຈາມອນມາ

| ລາຍການ | ການວິໄຈພາກປະຕິບັດໃນຫ້ອງຮຽນ (classroom research) | ການວິໄຈທາງການສຶກສາ (research) |
|---|---|---|
| 1. ຜູ້ດຳເນີນການວິໄຈ | ຄູສຶກສານິເທດຜູ້ບໍລິຫານໂຮງຮຽນ | ນັກສຶກສາ/ນັກວິໄຈທາງການສຶກສາ |
| 2. ເຮັດຫຍັງ | ແກ້ໄຂບັນຫາ/ສົ່ງເສີມນັກຮຽນບາງຄົນ/ ຄູບາງຄົນ/ສຶກສານິເທດບາງຄົນ | ຫາຂໍ້ມູນເພື່ອພັດທະນານັກຮຽນກຸ່ມໃຫຍ່/ ຄູກຸ່ມໃຫຍ່/ຜູ້ບໍລິຫານໂຮງຮຽນກຸ່ມໃຫຍ່/ ສຶກສານິເທດກຸ່ມໃຫຍ່ໃນເລື່ອງທີ່ສຳຄັນແລະໃຫຍ່ເພື່ອໃຫ້ໄດ້ອົງຄວາມຮູ້ທີ່ສຳຄັນ |
| 3. ເຮັດຕອນໃດ | ເມື່ອເຫັນບັນຫາ | ເມື່ອມີງົບປະມານແຮງງານເວລາ |
| 4. ເລີ່ມເຮັດແນວໃດ | ມີບັນຫາແທ້ແລະຊອກຫາສາເຫດໄດ້ | ປະເດັນທີ່ຕ້ອງເຮັດເພື່ອກຳນົດນະໂຍບາຍຫຼືແກ້ໄຂບັນຫາໃຫຍ່ໆ |
| 5. ເຮັດແບບໃດ | ເຫັນບັນຫາແທ້ຊອກຫາສາເຫດເລືອກວິທີແກ້ໄຂທີ່ເໝາະສົມທີ່ສຸດລົງມືແກ້ໄຂບັນທຶກເຮັດລາຍ | ມີບັນຫາທີ່ຕ້ອງວິໄຈສຶກສາງານວິໄຈທີ່ກ່ຽວຂ້ອງອອກແບບການວິໄຈກຳນົດປະຊາກອນກຸ່ມຕົວຢ່າງສ້າງ |

ຕາຕະລາງທີ 4 ຄວາມແຕກຈ່າງການວິໄຈໃນຫ້ອງຮຽນກັບການວິໄຈທາງການສຶກສາຕາມແນວຄິດຂອງ ອຸທຸມພອນ ຈາມອນມາ (ຕໍ່)

| ລາຍການ | ການວິໄຈພາກປະຕິບັດໃນຫ້ອງຮຽນ (classroom research) | ການວິໄຈທາງການສຶກສາ (research) |
|---|---|---|
| | ງານ 2-3 ໜ້າ | ເຄື່ອງມືລວບລວມຂໍ້ມູນວິເຄາະດ້ວຍສະຖິຕິໂດຍອາໄສຄອມພິວເຕີສະຫຼຸບຂຽນລາຍງານເນັ້ນທີ່ການອະພິປາຍຜົນ |

## 3.7 ການວິໄຈພາກປະຕິບັດການແບບມີສ່ວນຮ່ວມ (PAR)

ໃນປະຈຸບັນນີ້ ການວິໄຈແບບປະຕິບັດການເປັນທີ່ຮູ້ຈັກແລະໄດ້ຮັບການກ່າວເຖິງກັນຢ່າງກວ້າງຂວາງ ແລະຍິ່ງໄປກວ່ານັ້ນຍັງໄດ້ຖືກນຳໄປໃຊ້ໃນການພັດທະນາຊຸມຊົນສະຖານສຶກສາ ສະຖາບັນ ຫຼືອົງກອນຕ່າງໆ ຂອງປະເທດຫລາຍຍິ່ງຂຶ້ນເປັນລຳດັບ ຊຶ່ງພັນທິບ ຣາມະສູດ ກ່າວວ່າ ການວິໄຈປະເພດນີ້ເລີ່ມເກີດຂຶ້ນເມື່ອປະມານກາງປີ ຄ.ສ. 1970 ຈຶ່ງມີແນວຄິດໃກ້ຄຽງກັບ Action research ຊຶ່ງເລີ່ມມາຕັ້ງແຕ່ປີ ຄ.ສ. 1940 ທີ່ມີສ່ວນຄ້າຍກັບການພັດທະນາຊຸມຊົນທີ່ມີມາຕັ້ງແຕ່ປີ ຄ.ສ. 1920 ການວິໄຈນີ້ (PAR) ມີຊື່ເອີ້ນແຕກຕ່າງກັນໄປໃນແຕ່ລະແຫ່ງ

ເຊັ່ນ ການວິໄຈມີສ່ວນຮ່ວມປະຕິບັດການແບບສອບສວນສືບສວນ “Investigation Action Participative” (IAP) ການວິໄຈແບບມີສ່ວນຮ່ວມ ‘Research Participative” ຫລື ການວິໄຈພາກປະຕິບັດ “Research Action” ເປັນຕົ້ນ ບາງທີກໍ່ເອີ້ນວ່າ ການວິໄຈປະຕິບັດການແບບຮ່ວມມື “Collaborative Action Research” ການວິໄຈທີ່ກ່າວມານັ້ນຈະມີຊື່ເອີ້ນທີ່ຕ່າງກັນ ແຕ່ເນື້ອໃນຄວາມຫມາຍກໍຄ້າຍກັນຄື ເປັນການເຮັດວິໄຈ ເພື່ອທາງເລືອກທີ່ດີກວ່າການວິຈັຍໃນຮູບແບບເດີມທີ່ເຄີຍເຮັດມາຫລືໃນແນວເກົ່າ ເພາະເປັນການແນ່ໃສ່ແກ້ໄຂບັນຫາໃຫ້ກັບຕົນເອງ ສັງຄົມ ແລະ ຊຸມຊົນ

ຄ.ສ. 1967 - 1972 ລໍວເຣັນສ໌ ສະເຕັນເຮົ້າຮ໌ (Lawrence Stenhouse) ແຫ່ງມະຫາວິທະຍາໄລ East Anglia ຊຶ່ງເປັນຜູ້ອຳນວຍການໂຄງການ Humanities Curriculum Project ໄດ້ກະຕຸ້ນໃຫ້ຄູຜູ້ສອນ ນາວິທີການວິໄຈປະເພດນີ້ໄປໃຊ້ໃນການຈັດການສຶກສາ ເພື່ອປ່ຽນແປງສະພາບຂອງຄູຈາກການເປັນຜູ້ສອນຕາມປົກກະຕິໃຫ້ເປັນຄູໃນຖານະນັກວິໄຈ

ຄ.ສ. 1973 - 1975 ແອນເລອອດ ແລະອະເດນແມນ (John Elliott & Clem Adelman) ໄດ້ນຳວິທີການວິໄຈປະເພດນີ້ເຂົ້າໃນໂຄງການ Ford Teaching Project ໂດຍໃຫ້ຄູສ້າງແລະຜະລິດນະວັດຕະກຳເພື່ອໃຊ້ເຂົ້າໃນການສອນ ແລ້ວນຳຜົນການປະຕິບັດງານມາແລກປ່ຽນກັບຄູຄົນອື່ນໆ ໂດຍໃຊ້ວິທີການຕິດຕາມຜົນການກະທຳທີ່ເກີດຈາກຊ່ອງວ່າງລະຫວ່າງຄວາມຄາດຫວັງກັບການປະຕິບັດງານຈິງຂອງຄູ ຊ່ວຍເຫຼືອຄູໃຫ້ເກີດການພັດທະນາການຮຽນການສອນເພື່ອໃຫ້ເກີດການຮຽນຮູ້ແລະສືບສວນສອບສວນໃນຫ້ອງຮຽນ ແລະເນັ້ນເຮັດວຽກດ້ວຍການຄວບຄຸມຕົນເອງຫລືດ້ວຍກຸ່ມຫຼາຍກວ່າການໃຊ້ຜູ້ຄວບຄຸມຈາກພາຍນອກ

ຄ.ສ. 1982 ເຄມມິດ ແລະແມກແທກກາດ (Stephen Kemmis, & Robin McTaggart) ໄດ້ສະ ເໜີຂະບວນການວິໄຈເຊີງປະຕິບັດການທີ່ສົມບູນແບບຫຼາຍຍິ່ງຂຶ້ນ ແລະເປັນທີ່ຍອມຮັບກັນຢ່າງແພ່ຫຼາຍໃນຮູບຂອງວົງຈອນການວິໄຈທີ່ມີຊື່ເອີ້ນຫຍໍ້ໆວ່າ ຫຼັກການ PAOR ຄື P ຫຍໍ້ມາຈາກ Planning ໝາຍເຖິງການວາງແຜນ A ຫຍໍ້ມາຈາກ Action ໝາຍເຖິງ ການປະຕິບັດຕາມແຜນ O ຫຍໍ້ມາຈາກ Observing ໝາຍເຖິງການສັງເກດຜົນທີ່ເກີດຈາກການປະຕິບັດຕາມແຜນ ແລະ R ຫຍໍ້ມາຈາກ Reflecting ໝາຍເຖິງການສະທ້ອນຜົນຂອງການປະຕິບັດງານໃນດ້ານທີ່ເດັ່ນແລະບົກຜ່ອງ

ກ່າວສະຫຼຸບໄດ້ວ່າ ການວິໄຈພາກປະຕິບັດແບບມີສ່ວນຮ່ວມນີ້ ມີນັກວິໄຈ ຄູແລະຜູ້ບໍລິຫານນິຍົມນຳມາປະຍຸກໃຊ້ໃນທາງການສຶກສາຢ່າງກວ້າງຂວາງເພາະເປັນການວິໄຈທີ່ເປີດໂອກາດໃຫ້ທຸກຝ່າຍທີ່ກ່ຽວຂ້ອງໄດ້ເຂົ້າມາມີສ່ວນຮ່ວມໃນການພັດທະນາແລະແກ້ໄຂບັນຫາການຮຽນການສອນ ເປັນວິໄຈທີ່ປະສົມຜະສານແນວຄວາມຄິດການມີສ່ວນຮ່ວມເຂົ້າກັບການປະຕິບັດຕົວຈິງ ຈຶ່ງເປັນການວິໄຈທີ່ສ້າງປະໂຫຍດແລະຮັບໃຊ້ສັງຄົມ ດ້ວຍເຫດນີ້ການວິໄຈຈຶ່ງຄວນຄຳນຶງເຖິງຜົນປະໂຫຍດສູງສຸດ ແລະການວິໄຈທີ່ຈະໃຫ້ຜົນປະໂຫຍດສູງສຸດນັ້ນຄວນເປັນການວິໄຈເພື່ອພັດທະນາ (Research for Development) ຫຼື ການວິໄຈພັດທະນາ (Research and Development) ໂດຍທີ່ການພັດທະນາແລະການເປັນຫຸ້ນສ່ວນຈະຕ້ອງເດີນທາງຮ່ວມກັນ ດັ່ງນັ້ນ ທຸກຄົນຈະຕ້ອງເປັນສ່ວນຫນຶ່ງຂອງການພັດທະນາຢ່າງມີເສລີພາບແລະເປັນປະຊາທິປະໄຕ ໂດຍຈຸດທີ່ແຕກຕ່າງກັນຂອງງານວິໄຈພາກປະຕິບັດການແບບມີສ່ວນຮ່ວມກັບງານວິໄຈແບບມີສ່ວນຮ່ວມກໍຄື ການວິໄຈແບບມີສ່ວນຮ່ວມນັ້ນ ເປັນການວິໄຈທີ່ເນັ້ນໃນມິຕິຂອງການເກັບຂໍ້ມູນ ແຕ່ການວິໄຈພາກປະຕິບັດການແບບມີສ່ວນຮ່ວມເປັນການປະຍຸກ ຫາວິທີການແກ້ໄຂ

ບັນຫາໄປພ້ອມ ໆ ກັນ ຫລື ກ່າວໄດ້ວ່າມີການສະແຫວງຫາແນວຄວາມຄິດແລະແນວທາງໃນການແກ້ໄຂບັນຫາ ແລະຊັບພະຍາກອນທີ່ຜູ້ວິໄຈມີຢູ່ ເພື່ອຊ່ວຍໃນການແກ້ໄຂບັນຫາ (ນິດຍາ ເງິນປະເສີດສີ, 2544; ສຸພາງ ຈັນທະວານິດ, 2531; ອິງອາດ ໄນພັດ, 2549)

### 3.7.1 ຄວາມໝາຍຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມ

Kemmis & Mc Taggart (1988) ກ່າວເຖິງການວິໄຈພາກປະຕິບັດການແບບມີສ່ວນຮ່ວມວ່າ ເປັນຮູບແບບໜຶ່ງຂອງການວິໄຈທີ່ບໍ່ໄດ້ແຕກຕ່າງໄປຈາກການວິໄຈອື່ນໆ ໃນດ້ານເທັກນິກ ແຕ່ແຕກຕ່າງໃນດ້ານວິທີການ ຊຶ່ງວິທີການຂອງການວິໄຈ ຄື ການເຮັດວຽກງານທີ່ເປັນການສະທ້ອນຜົນການປະຕິບັດຕາມແຜນຂອງຕົນເອງທີ່ເປັນວົງຈອນແບບກ້ຽວວົນ (Spiral of Self-Reflecting) ໂດຍເລີ່ມຕົ້ນທີ່ຂັ້ນຕອນການວາງແຜນ (planning) ການປະຕິບັດຕາມແຜນ (action) ການສັງເກດການປະຕິບັດແຜນ (observing) ແລະການສະທ້ອນຜົນ (reflecting) ເປັນການວິໄຈທີ່ອາໄສການມີສ່ວນຮ່ວມຂອງທຸກຄົນທີ່ກ່ຽວຂ້ອງ ເພື່ອໃຫ້ເກີດການພັດທະນາປັບປຸງການເຮັດວຽກງານໃຫ້ດີຂຶ້ນ ສຸພາງ ຈັນທະວານິດ (2531) ກ່າວໄວ້ວ່າ ເປັນການວິໄຈທີ່ນໍາແນວຄິດ 2 ປະການມາປະສົມປະສານກັນຄື ແນວຄິດແນວຄິດໃນການປະຕິບັດການກັບແນວຄິດໃນການມີສ່ວນຮ່ວມຄື ການມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງໃນການດໍາເນີນການວິໄຈເພື່ອປັບປຸງແລະແກ້ໄຂບັນຫາຮ່ວມກັນ

ສ່ວນ ຂະນິດຖາ ກາຍຈິນສິນທ໌ (2536) ກ່າວວ່າ ເປັນການວິໄຈທີ່ຜູ້ວິໄຈໃຫ້ຄວາມສົນໃຈໃນການສຶກສາຊຸມຊຸນ ໂດຍເນັ້ນການວິເຄາະບັນຫາ ສຶກສາຫາແນວທາງໃນການແກ້ໄຂບັນຫາ ວາງແຜນແລະດໍາເນີນການຕາມແຜນ ທັງໝົດທັງການດໍາເນີນການປະເມີນຜົນ ໂດຍທີ່ຊຸມຊົນເຂົ້າໄປມີສ່ວນຮ່ວມໃນການດໍາເນີນການວິໄຈ

ນົງພັນ ພິຣິຍານຸບວົງສ໌ (2546) ກ່າວວ່າ ເປັນການວິໄຈທີ່ຊຸມຊົນເຂົ້າມາເປັນຫຸ້ນສ່ວນຂອງການດໍາເນີນການວິໄຈ ຮັບຮູ້ແລະໃຊ້ປະໂຫຍດຮ່ວມກັນ ຊາວບ້ານເປັນຜູ້ລະບຸບັນຫາຂອງຊຸມຊົນ ສະເໜີຍຸດທະວິທີໃນການແກ້ໄຂບັນຫາຮ່ວມກັນ

ມັກ ເຂັມກັດ ແລະ ໂກວິດຢ໌ ພວງງາມ (2547) ສະຫຼຸບຄວາໝາຍຂອງການວິໄຈພາກປະຕິບັດແບບມີສ່ວນຮ່ວມວ່າ ເປັນການວິໄຈເພື່ອພັດທະນາ (R&D) ທີ່ຮ່ວມເອົາແນວຄວາມຄິດຂອງການວິໄຈແບບມີສ່ວນຮ່ວມມາປະສົມປະສານກັບການວິໄຈພາກປະຕິບັດການ ເຮັດໃຫ້ໄດ້ການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ຄືເປັນການວິໄຈທີ່ຊຸມຊົນຫລືຜູ້ກ່ຽວຂ້ອງມີສ່ວນຮ່ວມໃນການກໍານົດບັນຫາ ວິທີການແກ້ໄຂບັນຫາ ຕະຫຼອດເຖິງການດໍາເນີນງານແລະຕິດຕາມຜົນ

Selener (1998) ກ່າວເຖິງການວິໄຈປະຕິບັດການແບບມີສ່ວນຮ່ວມວ່າ ເປັນການວິໄຈທີ່ເກີດຂຶ້ນແລະສິ້ນສຸດລົງໃນຊຸມຊົນທີ່ດໍາເນີນການວິໄຈ ເປັນການວິໄຈທີ່ເນັ້ນແກ້ໄຂບັນຫາແບບພາກປະຕິບັດການ ໂດຍທີ່ນັກວິໄຈແລະຊຸມຊົນເຮັດວຽກຮ່ວມກັນໃນດໍາເນີນງານໃນການແກ້ໄຂບັນຫາ

ສະຫລຸບ ຈາກການສຶກສາຄວາມຫມາຍຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມຂອງນັກວິຊາການຫຼາຍທ່ານ ຜູ້ວິໄຈສາມາດນິຍາມການວິໄຈພາກປະຕິບັດການແບບມີສ່ວນຮ່ວມ (PAR) ໃຫ້ສອດຄ່ອງກັບການດໍາເນີນການວິໄຈໃນເທື່ອນີ້ໄດ້ວ່າ ການວິໄຈພາກປະຕິບັດການແບບມີສ່ວນຮ່ວມໝາຍເຖິງ ການຂະບວນການມີສ່ວນຮ່ວມແລະການຮ່ວມມືກັນດໍາເນີນວິໄຈ ໂດຍຜູ້ທີ່ມີສ່ວນກ່ຽວຂ້ອງໃນການເສີມສ້າງພາວະຜູ້ນໍາຂອງຄູ ໄດ້ແກ່ ພໍ່ແມ່ນັກຮຽນ ຄູ ຜູ້ບໍລິຫານ ນັກຮຽນ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອສິ່ງເສີມພາວະຜູ້ນໍາຄູໃຫ້ເກີດຂຶ້ນ ໂດຍໃຊ້ວົງ

ຈອນພາກປະຕິບັດການແບບຮອບວຽນ (PAOR) ຕາມແນວຄິດຂອງເຄມມິດ ແລະແມກແທກກາດ (Kemmis & McTaggart) ເປັນຫຼັກຄວບຄຸມຂະບວນການແກ້ໄຂບັນຫາການຮຽນການສອນ

**3.7.2 ແນວຄິດການວິໄຈພາກປະຕິບັດການແບບມີສ່ວນຮ່ວມ**

Arhar, Holly, and Kassten (2001) ໄດ້ສະແດງທັດນະໄວ້ວ່າ ການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ເປັນການວິໄຈທີ່ໃຫ້ຄວາມສຳຄັນກັບການຮ່ວມມືກັນໃນການແກ້ໄຂບັນຫາ ມີຄວາມເປັນປະຊາທິປະໄຕ ທຸກຄົນມີອິດສະຫຼະພາບໃນການສະແດງອອກ ມີການແລກປ່ຽນຄວາມຮູ້ລະຫວ່າງຜູ້ທີ່ມີປະສົບການຫລາຍກັບຜູ້ທີ່ມີປະສົບການໜ້ອຍ ແລະສະທ້ອນຜົນການເຮັດວຽກງານ ເຮັດໃຫ້ໄດ້ຂໍ້ມູນແລະວິທີການແບບໃໝ່ໆ ໃນການແກ້ບັນຫາຮ່ວມກັນໄດ້ເປັນຢ່າງດີແລະເປັນເຫດເປັນຜົນ ເຮັດໃຫ້ອົງການໄດ້ຮັບການພັດທະນາແບບຕໍ່ເນື່ອງ ນັກຮຽນມີຜົນສຳເລັດທາງການຮຽນດີຂຶ້ນ

ກະມົນ ສຸດປະເສີດ (2540) ໃຫ້ຄວາມເຫັນວ່າ ການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ເປັນການເຮັດວຽກງານຮ່ວມກັນຂອງກຸ່ມຜູ້ດຳເນີນການວິໄຈ ຊຶ່ງຕ້ອງອາໄສການສືບສວນຄົ້ນຄວ້າຫາບັນຫາແລະຂໍ້ໂຕ້ແຍ້ງຮ່ວມກັນເປັນກຸ່ມ ວິເຄາະຫາສາເຫດແຫ່ງບັນຫາແລະແກ້ໄຂຕາມຫຼັກການຂອງການວິໄຈປະເພດນີ້ ເພື່ອເຮັດໃຫ້ເກີດຜົນສຳລິດຢ່າງນ້ອຍສາມປະການ ໄດ້ແກ່ 1) ຜູ້ດຳເນີນການວິໄຈໄດ້ຮຽນຮູ້ສິ່ງໃໝ່ໆ ຮ່ວມກັນ 2) ທຸກຄົນເຮັດວຽກຫຼາຍຂຶ້ນ 3) ມີການເຜີຍແຜ່ພະລັງຄວາມຮູ້ຫຼາຍຂຶ້ນ

ພັນທິບ ຣາມສູດ (2540) ກ່າວເຖິງການວິໄຈພາກປະຕິບັດການແບບມີສ່ວນຮ່ວມວ່າ ເປັນການວິໄຈທີ່ໃຫ້ຄວາມສຳຄັນກັບຊາວບ້ານ ພູມປັນຍາທ້ອງຖິ່ນ ປະຊາຊົນແລະຄົນໃນທ້ອງຖິ່ນມີສ່ວນຮ່ວມໃນການສ້າງອົງຄວາມຮູ້ໃໝ່ໆ ຊຶ່ງມີລັກສະນະດັ່ງຕໍ່ໄປນີ້

1) ເສີມສ້າງຄວາມສາມາດແລະພັດທະນາສັກກະຍະພາບຂອງຊາວບ້ານ ດ້ວຍການໃຫ້ການສຶກສາ ສ້າງຄວາມເຊື່ອໝັ້ນໃນການຮຽນຮູ້ແລະກໍ່ການວິໄຈຮ່ວມກັນ ເພື່ອເພີ່ມສັກກະຍະພາບໃນການວິເຄາະ ສັງເຄາະສາພາບບັນຫາທີ່ຊຸມຊົນປະສົບພົບພໍ້ ແລ້ວດຳເນີນການແກ້ໄຂຮ່ວມກັນຢ່າງມີຫຼັກການ ດ້ວຍຂະບວນການວິໄຈແບບມີສ່ວນຮ່ວມ

2) ຊາວາບ້ານໄດ້ຮັບຄວາມຮູ້ທີ່ເໝາະສົມແລະສາມາດນຳໄປໃຊ້ຈິງໃນຊີວິດປະຈຳວັນ

3) ຂໍ້ມູນຂ່າວສານທີ່ໄດ້ຮັບຈາກຊາວບ້ານຈະຊ່ວຍແກ້ໄຂບັນຫາໄດ້ກົງຈຸດ

4) ໃຫ້ຄວາມເຄົາລົບຊາວບ້ານ ແລະປ່ອຍໃຫ້ຊາວບ້ານໄດ້ສະແດງອອກຢ່າງເຕັມທີ່ ເພື່ອທີ່ຈະເບິ່ງພາບຂອງບັນຫາໄດ້ກວ້າງ ແລ້ວຮ່ວມກັນວິໄຈແກ້ໄຂຢ່າງກົງປະເດັນ

ຂະນິດຖາ ກາຍຈິນລັງສີ (2547) ໄດ້ສະເໜີແນວຄວາມຄິດທີ່ເປັນພື້ນຖານໃຫ້ແກ່ການດຳເນີນການວິໄຈໄວ້ວ່າ ເປັນເປັນການດຳເນີນການວິໄຈແບບຕໍ່ເນື່ອງ ມີຮອບວຽນການວິໄຈທີ່ບໍ່ສິ້ນສຸດ ບໍ່ຢູ່ກັບທີ່ ການວິໄຈຈະປະສົບຄວາມສຳເລັດໄດ້ເມື່ອຜູ້ເຂົ້າຮ່ວມໃນການດຳເນີນການວິໄຈເຊື່ອວ່າ ບັນຫາການວິໄຈນັ້ນໄດ້ຮັບການແກ້ໄຂ ຫຼື ກໍ່ໃຫ້ເກີດການປ່ຽນແປງຢ່າງໃດຢ່າງໜຶ່ງ ຊຶ່ງວິໂຣດ ສານະຣັດຕະນະ (2550) ໄດ້ສະເໜີຫຼັກການຂອງການວິໄຈປະເພດນີ້ໄວ້ 10 ປະການ ຄື 1) ບໍລິບົດສະເພາະ 2) ທັກສະທີ່ຫຼາກຫຼາຍ 3) ເນັ້ນການປ່ຽນແປງ 4) ເນັ້ນໃຫ້ເກີດການກະທຳເພື່ອປັບປຸງຜົນ 5) ຜູ້ວິໄຈທຸກຄົນໄດ້ສະແດງຄວາມຄິດເຫັນຢ່າງເຕັມທີ່ 6) ວິເຄາະ ວິພາກແລະປະເມີນຕົນເອງ 7) ຮັບ

ຮູ້ໃນສັກກະຍະພາບຂອງສະມາຊິກໃນກຸ່ມ 8) ການຮຽນຮູ້ຮ່ວມກັນຢ່າງເປັນລະບົບ 9) ມີການບັນທຶກຂອງຜູ້ຮ່ວມວິໄຈ ແລະ 10) ນຳໄປສູ່ການປະຕິບັດຫລືພັດທະນາທີ່ຍືນຍົງ

### 3.7.3 ອົງປະກອບຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມ

ນິດຍາ ເງິນປະເສີດສີລີ (2544) ໄດ້ສະແດງໃຫ້ເຫັນເຖິງອົງປະກອບຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມ

1) ການມີສ່ວນຮ່ວມ (Participation) ຊຶ່ງສະແດງໃຫ້ເຫັນເຖິງຄວາມເປັນອິດສະຫລະໃນການສະແດງອອກໃນການວິໄຈ ໂດຍຮັບຮູ້ແລະໃຫ້ຄຸນຄ່າຜູ້ເຂົ້າຮ່ວມການວິໄຈທຸກຄົນຢ່າງສະເໝີພາບ ຍອມຮັບຟັງຄວາມເປັນເຫັນຂອງອື່ນຢ່າງຈິງໃຈ ແລະບໍ່ລຳອຽງ ໃຫ້ໂອກາດທຸກຄົນໄດ້ເຂົ້າເຖິງຂໍ້ມູນຄວາມຈິງເທົ່າທຽມກັນ

2) ການປະຕິບັດ (Action) ບົ່ງບອກເຖິງ ຄວາມພະຍາຍາມຂອງກຸ່ມຜູ້ວິໄຈທີ່ດຳເນີນການວິໄຈເພື່ອປ່ຽນແປງແລະແກ້ໄຂບັນຫາຮ່ວມກັນ ດັ່ງນັ້ນ ທຸກຄົນຈຶ່ງດຳເນີນງານແບບພາກປະຕິບັດຮ່ວມກັນ

3) ການວິໄຈ (Research) ບົ່ງບອກໃຫ້ເຫັນເຖິງ ຄວາມພະຍາຍາມຂອງກຸ່ມຜູ້ວິໄຈທີ່ມີການສຶກສາຫາຄວາມຮູ້ຢ່າງເປັນລະບົບແລະມີລະບຽບແບບແຜນເພື່ອແກ້ໄຂບັນຫາໃຫ້ກັນກຸ່ມແລະຊຸມຊົນ

### 3.7.4 ລະບຽບວິທີການວິໄຈແບບມີສ່ວນຮ່ວມ

ການດຳເນີນການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ມີກຸ່ມຜູ້ທີ່ຈະດຳເນີນການວິໄຈຢູ່ 2 ກຸ່ມ ທີ່ແຕກຕ່າງກັນ (ກະມົນ ສຸດປຣະເສຣິດ, 2540) ໄດ້ແກ່

1. ກຸ່ມທີ່ 1 ເປັນການວິໄຈຂອງຜູ້ປະສານງານຫລືຜູ້ອຳນວຍການວິໄຈ
2. ກຸ່ມທີ່ 2 ເປັນການດຳເນີນການວິໄຈໂດຍຊຸມຊົນ

1. ການດຳເນີນການວິຈັຍຂອງຜູ້ປະສານງານຫລືຜູ້ອຳນວຍການວິໄຈ ກໍຄື ການດຳເນີນກິດຈະກຳການສຶກສາຫາຄວາມຮູ້ຂອງກຸ່ມວິໄຈ ໂດຍຮູບແບບຂອງການວິໄຈເປັນການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ການດຳເນີນການເປັນໄປຕາມຫຼັກການວິໄຈທາງວິທະຍາສາດ ແລະຜົນຂອງການວິໄຈຕ້ອງສາມາດພິມເຜີຍແຜ່ສູ່ສັງຄົມ ແລະແກ້ໄຂບັນຫາໃຫ້ກັບສັງຄົມຢ່າງຄຸ້ມຄ່າສູງສຸດ ເພາະຄ່າໃຊ້ຈ່າຍບໍ່ຫລາຍ ແຕ່ກັບໄດ້ຮັບຜົນຕອບແທນສູງ

2. ການດຳເນີນການວິໄຈໂດຍຊຸມຊົນ ຄື ການວິໄຈທີ່ຊຸມຊຸນໃຫ້ຄວາມສຳຄັນກັບບັນຫາຂອງຊຸມຊົນ ຮ່ວມມືກັນດຳເນີນການວິໄຈ ໂດຍມີຜູ້ວິໄຈເຮັດຫນ້າທີ່ເປັນຜູ້ປະສານງານ ຂະນະທີ່ຜູ້ອຳນວຍການວິໄຈຈະເຮັດຫນ້າທີ່ເປັນຜູ້ຢູ່ເບື້ອງຫຼັງ ໃຫ້ການຊ່ວຍເຫລືອ ສະໜັບສະໜູນຈົນກວ່າບັນຫາຈະໄດ້ຮັບການແກ້ໄຂ

### 3.7.5 ຂັ້ນຕອນຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ໄດ້ແກ່

1. ວິທີການກຳນົດກຸ່ມເປົ້າໝາຍ ການກຳນົດກຸ່ມເປົ້າໝາຍຕ້ອງເຮັດຢ່າງເປັນລະບົບ ເລີ່ມຈາກການເກັບລວບລວບຂໍ້ມູນກຸ່ມເປົ້າໝາຍເພື່ອພິຈາລະນາຄັດເລືອກເຂົ້າຮ່ວມໂຄງການ ໃນການຄັດເລືອກໃຊ້ເກນທີ່ຜູ້ວິໄຈສ້າງຂຶ້ນ

2. ສ້າງບັນຍາກາດທີ່ດີໃຫ້ເກີດຂຶ້ນພາຍໃນກຸ່ມເປົ້າໝາຍ

3. ການລະບຸບັນຫາແລະການແກ້ໄຂບັນຫາຢ່າງມີປະສິດທິພາບ ຄື ສຶກສາຄວາມຕ້ອງການຂອງຊຸມຊົນ ລະບຸບັນຫາຂອງຊຸມຊົນ ຄົ້ນຫາວິທີແກ້ໄຂບັນຫາທີ່ມີສັກກະພາບ ແລະ ຫຍິບຍົກເອົາຂໍ້ຈຳກັດມາພິຈາລະນາເພື່ອໃຫ້ເຂົ້າໃຈຫຼາຍຂຶ້ນ

4. ການວາງແຜນ ເປັນການກຳນົດເທັກນິກແລະຍຸດທະສາດເພື່ອຊ່ວຍຜູ້ວິໄຈກຽມໂຄງການພັດທະນາໃຫ້ເປັນ ມີການກຳນົດຈຸດປະສົງ ໄລຍະເວລາຂອງການວິໄຈ ຊັບພະຍາກອນ ກຸ່ມເປົ້າໝາຍ ກິດຈະກຳ ແລະ ຊັບພະຍາກອນທີ່ຈຳເປັນຕໍ່ການດຳເນີນການວິໄຈ

5. ການປະຕິບັດຕາມແຜນ ເປັນການປະຕິບັດຕາມໂຄງການຂອງຜູ້ວິໄຈ ແຜນປະຕິບັດການວິໄຈຕ້ອງນຳມາເຜີຍແຜ່ໃຫ້ຜູ້ມີສ່ວນກ່ຽວຂ້ອງໃນການວິໄຈໄດ້ຮັບຮູ້ແລະກະຕຸ້ນໃຫ້ເກີດການປະຕິບັດຕາມແຜນທີ່ວາງໄວ້ຢ່າງແຈ່ມແຈ້ງ ແລະ ໂປ່ງໃສ

6. ການປະເມີນຜົນ ແລະ ສະທ້ອນຜົນ ຜູ້ວິໄຈຕ້ອງເຮັດບັນທຶກປະຈຳວັນ ບັນທຶກການຈັດການແລະສິ່ງທີ່ໄດ້ລົງມືເຮັດໃນແຕ່ລະໄລຍະ ແລະເມື່ອຈົບໂຄງການ ດຳເນີນການປະເມີນຜົນ

7. ຂັ້ນກຽມການຖອນຕົວແລະເຜີຍແຜ່ຜົນງານ ເປັນຂັ້ນຕອນກ່ອນທີ່ຜູ້ວິໄຈກຽມຕົວຖອນອອກຈາກສະຖານທີ່ການວິໄຈ ຄືຜູ້ວິໄຈຕ້ອງແນ່ໃຈກ່ອນວ່າ ການວິໄຈພາກປະຕິບັດການແບບມີສ່ວນຮ່ວມໄດ້ຖືກປຸກຝັງໃຫ້ກັບກຸ່ມເປົ້າໝາຍແລ້ວ ແລະເມື່ອສິ້ນສຸດການວິໄຈ ຜູ້ວິໄຈຈະຕ້ອງນຳສະເໜີຜົນການວິໄຈໃນການສຳມະນາແລະພິມເຜີຍແຜ່ຜົນຂອງການວິໄຈເພື່ອໃຫ້ຊຸມຊົນໄດ້ຮັບຮູ້ຮ່ວມກັນ

ອີງອາດ ໄນພັດນ໌ (2548) ໄດ້ສະຫຼຸບຂະບວນການຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມເປັນຂັ້ນຕອນຍ່ອຍໆ ໄວ້ 10 ຂັ້ນຕອນ ໄດ້ແກ່

1. ລະບຸແນວຄິດແລະນິຍາມບັນຫາຢ່າງຊັດເຈນ

2. ລວບລວມຂໍ້ມູນພື້ນຖານທີ່ກ່ຽວຂ້ອງເພື່ອອະທິບາຍຂໍ້ເທັດຈິງຂອງສະພາວການທີ່ເປັນບັນຫາ ຊຶ່ງຜູ້ວິໄຈຕ້ອງເຂົ້າໄປປັບປຸງແລະແກ້ໄຂ

3. ວາງແຜນເພື່ອກຳນົດຍຸດທະວິທີປະຕິບັດການແກ້ໄຂບັນຫາ

4. ນຳຍຸດທະວິທີປະຕິບັດທີ່ວາງໄວ້ໄປລົງມືປະຕິບັດຈິງ

5. ສັງເກດ ການຕິດຕາມກວດສອບ ແລະປະເມີນຜົນ

6. ສະທ້ອນຜົນຂອງການນຳຍຸດທະວິທີປະຕິບັດທີ່ໄດ້ລົງມືປະຕິບັດແລ້ວ ໂດຍອາໃສການຄິດໃນແບບວິພາກດ້ວຍທັດນະອັນຫຼາກຫຼາຍຈາກນັກວິໄຈແລະຜູ້ມີສ່ວນຮ່ວມໃນການວິໄຈບົນພື້ນຖານຂອງຂໍ້ມູນຫຼັກຖານຮ່ອງຮອຍຕ່າງໆ

7. ທົບທວນແຜນຍຸດທະວິທີປະຕິບັດການແກ້ໄຂບັນຫາ

8. ນຳແຜນຍຸດທະວິທີປະຕິບັດທີ່ປັບແລ້ວໄປລົງມືປະຕິບັດຈິງ

9. ສະທ້ອນຜົນຂອງການນຳຍຸດທະວິທີປະຕິບັດທີ່ປັບແລະລົງມືປະຕິບັດແລ້ວ

10. ດຳເນີນການເຊັ່ນນີ້ຕໍ່ໄປເລື້ອຍໆ ຈົນກວ່າຜູ້ມີສ່ວນຮ່ວມໃນການວິໄຈມີຄວາມເຫັນຮ່ວມກັນຢ່າງສອດຄ່ອງວ່າ ສະຖານະການທີ່ເປັນບັນຫານັ້ນຖືກປັບປຸງແກ້ໄຂຈົນຢູ່ໃນລະດັບທີ່ພໍໃຈ

ອີງອາດ ໄນພັດນ໌ (2549) ກ່າວວ່າ ຕາມທັດນະແລະແນວຄວາມຄິດຂອງ Kurt Lewin ຂະບວນການວິໄຈພາກປະຕິບັດການມີລັກສະນະເປັນຮອບວຽນ (Spiral of Steps) ຊຶ່ງແຕ່ລະຮອບປະກອບມີ 4 ຂັ້ນຕອນ ໄດ້ແກ່ 1) ການກຽມຄວາມພ້ອມ (pre-step) 2) ການວາງແຜນ (planning) 3) ການປະຕິບັດຕາມແຜນ (action) 4) ຂັ້ນຕອນການຄົ້ນຫາຄວາມຈິງ (fact finding) ຕໍ່ມາ Kemmis and McTaggart (1981) ໄດ້ປະຍຸກແນວຄິດຂອງ Kurt

Lewin ໂດຍໄດ້ແບ່ງແບບການວິໄຈພາກປະຕິບັດການອອກເປັນ 4 ຂັ້ນຕອນເຊັ່ນກັນ ຄື 1) ການວາງແຜນ (planning) 2) ການລົງມືປະຕິບັດ (action) 3) ການສັງເກດຜົນການປະຕິບັດງານ (observation) ແລະ 4) ການສະທ້ອນຜົນການປະຕິບັດງານ (reflection) ຊຶ່ງລາຍລະອຽດຂອງການດຳເນີນກິດຈະກຳການວິໄຈແຕ່ລະຂັ້ນຕອນ ຜູ້ວິໄຈອະທິບາຍໄດ້ດັ່ງນີ້

1. ການວາງແຜນງານ (planning) ເປັນການກຳນົດແນວທາງປະຕິບັດໄວ້ລ່ວງໜ້າວ່າຈະເຮັດຫຍັງ ຢູ່ທີ່ໃດ ເມື່ອໃດ ແລະ ຢ່າງໃດ ກິດຈະກຳການດຳເນີນງານຖືກກຳນົດໄວ້ຢ່າງລະອຽດ ພ້ອມທັງໄລຍະເວລາໃນການປະຕິບັດແຕ່ລະກິດຈະກຳ

2. ຂັ້ນຕອນການລົງມືປະຕິບັດ (action) ເປັນຂັ້ນຕອນທີ່ຜູ້ວິໄຈດຳເນີນກິດຈະກຳຕ່າງໆຕາມແຜນທີ່ກຳນົດໄວ້ຢ່າງລະມັດຣະວັງ ແລະຄວບຄຸມການວິໄຈໃຫ້ເປັນໄປຕາມຂັ້ນຕອນທີ່ລະບຸໄວ້ໃນແຜນ

3. ການສັງເກດຜົນການປະຕິບັດງານ (observation) ເປັນການເກັບລວບລວມຂໍ້ມູນຂອງການປະຕິບັດຕາມແຜນ ຜົນທີ່ເກີດຈາກການປະຕິບັດແຜນ ໂດຍເຄື່ອງມືທີ່ໃຊ້ນັ້ນມີຫຼາກຫຼາຍ ເຊັ່ນ ແບບສັງເກດ ສາພາດ ແລະແບບສອບຖາມ

4. ການສະທ້ອນກັບ (reflection) ເປັນຂະບວນການ ທົບທວນສິ່ງທີ່ໄດ້ປະຕິບັດຕາມຂໍ້ມູນທີໄດ້ບັນທຶກໄວ້ຈາກການສັງເກດຢ່າງມີການຄິດວິເຄາະ ວິພາກ ກົນລະຍຸດວິທີການທີ່ຈະເຮັດໃຫ້ການສະທ້ອນຜົນເກີດຂຶ້ນຢ່າງໄດ້ຜົນ ໄດ້ແກ່ ການສົນທະນາ ອະພິປາຍ ການຕັ້ງຄຳຖາມໃນລັກສະນະວິພາກວິຈານຫລືການປະເມີນຜົນການປະຕິບັດຂອງຜູ້ມີສ່ວນຮ່ວມໃນການວິໄຈ

Zuber-Skerritt (1992) ກ່າວເຖິງຂັ້ນຕອນການວິໄຈພາກປະຕິບັດການ ຊຶ່ງຜູ້ວິໄຈສາມາດສະຫຼຸບໄດ້ຄື 1) ຂະບວນການວາງແຜນ (Plan) ຄື ເປັນຂັ້ນແຣກໂດຍການສຳຫຼວດບັນຫາຕ່າງໆ ທີ່ຕ້ອງການແກ້ໄຂ ຜູ້ວິໄຈແລະຜູ້ກ່ຽວຂ້ອງ ຜູ້ຮຽນ ຜູ້ປົກຄອງຫລືຜູ້ບໍລິຫານຈະຮ່ວມກັນວາງແຜນແລະທຳການສຳຫຼວດພາບປະຈຸບັນວ່າບັນຫາມີຫຍັງແດ່ ແລະແນວທາງທີ່ຈະແກ້ໄຂບັນຫາຕ່າງໆ ມີຢ່າງໃດ 2) ການປະຕິບັດ (Act) ຄື ເມື່ອດຳເນີນການສຳຫຼວດສະພາບປະຈຸບັນ ແລະສະພາບຕ່າງໆ ໃນຂັ້ນຕອນປະຕິບັດອາດມີຄວາມຍືດຫຍຸ່ນໄດ້ດ້ວຍ ຜູ້ວິໄຈອາດຕ້ອງໃຊ້ຂະບວນການວິເຄາະ ໂດຍຕ້ອງເປີດໃຈຮັບຟັງທັດນະຂອງຄົນອື່ນ ຫລືອາດໃຊ້ຂໍ້ມູນດ້ານອື່ນໆປະກອບດ້ວຍ 3) ການສັງເກດຕິດຕາມແລະປະເມີນຜົນ (Observe) ເປັນການດຳເນີນການໄປພ້ອມໆ ກັບຂັ້ນທີ່ອື່ນ ໂດຍຈະຕ້ອງທຳການສັງເກດຢ່າງລະມັດລະວັງດ້ວຍຄວາມໃຈກວ້າງ ພ້ອມທັງບັນທຶກການທຸກປາກົດການທີ່ເຫັນ ບໍ່ວ່າຈະເປັນສິ່ງທີ່ຄາດຫວັງຫລືບໍ່ຄາດຫວັງ ແລະ 4) ການສະທ້ອນຜົນ (Reflect) ເປັນການກວດສອບການວິໄຈໃນຂັ້ນຕອນທີ່ເຫຼືອຫລືສະທ້ອນຜົນການວິໄຈໃນຂັ້ນຕອນທີ່ເຫຼືອ ໂດຍຜູ້ວິໄຈແລະຜູ້ຮ່ວມວິໄຈນຳຜົນທີ່ໄດ້ຈາກການສັງເກດມາກວດສອບ ໂດຍການອະພິປາຍເພື່ອຫາແນວທາງໃນການປັບປຸງແກ້ໄຂແລະວາງແຜນການປະຕິບັດຕໍ່ໄປ

2.5.6 ເງື່ອນໄຂຄວາມສຳເລັດຂອງການວິໄຈພາກປະຕິບັດການແບບມີສ່ວນຮ່ວມ

ຜູ້ວິໄຈທີ່ຕ້ອງການນຳໃຊ້ການວິໄຈປະເພດນີ້ເຂົ້າໃນການແກ້ໄຂບັນຫາ ຈະຕ້ອງເຂົ້າໃຈເງື່ອນໄຂເບື້ອງຕົ້ນແລະມີທັດສນະທີ່ສະໜັບສະໜູນການເຮັດວິໄຈ ດັ່ງນີ້

1) ໄດ້ຮັບການຍອມຮັບຈາກຊຸມຊົນ ໂດຍຄົນໃນຊຸມຊົນເຕັມໃຈ ແລະສະໜັບສະໜູນເລື່ອງແຮງກາຍໃຈ ແລະເວລາ ໃນຂະນະທີ່ຜູ້ຮ່ວມງານທີ່ເປັນຄົນພາຍນອກມີຄວາມໄວ້ວາງໃຈ ແລະເຊື່ອມັ່ນໃນຊຸມຊົນ

2) ມີການຖ່າຍທອດຄວາມຮູ້ຈາກນັກປະຕິບັດທີ່ມີປະສົບການ ຫລື ນັກວິໄຈໄປຢັ້ງຄົນໃນທ້ອງຖິ່ນ ມີການຝຶກອົບຮົມ ແລະໃຫ້ຄວາມຊ່ວຍເຫລືອທາງເທັກນິກແກ່ຄົນໃນທ້ອງຖິ່ນ

3) ຄຳນຶງເຖິງວັດທະນະທຳຂອງຊຸມຊົນທີ່ເຂົ້າໄປສຶກສາ ຄວາມພະຍາຍາມໃນການປ່ຽນແປງຈະຕ້ອງພິຈາລະນາໃນເລື່ອງວັດທະນະທຳດ້ວຍ

4) ຕິດຕໍ່ປະສານງານກັນຢູ່ຕະຫລອດເວລາແລະທົ່ວເຖິງ ແລະເຂົ້າໃຈເປັນເອກພາບກັນ

### 3.7.6 ຄວາມກົງ ແລະ ຄວາມທ່ຽງຂອງການວິໄຈພາປະຕິບັດການແບບມີສ່ວນຮ່ວມ

ແນວຄວາມຄິດເລື່ອງຄວາມກົງແລະຄວາມທ່ຽງໃນງານວິໄຈພາກປະຕິບັດການແບບມີສ່ວນຮ່ວມສະຫຼຸບໄດ້ວ່າ ການພິຈາລະນາຄວາມກົງແລະຄວາມທ່ຽງແມ່ນພິຈາລະນາຈາກຜົນປະໂຫຍດທີ່ໄດ້ຮັບ ຫລືຈາກສິ່ງທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເຊັ່ນ ພາຍຫຼັງການດຳເນີນການວິໄຈ ຊີວິດການເປັນຢູ່ຂອງຄົນໃນຊຸມຊົນໄດ້ຮັບການຍົກລະດັບດີຂຶ້ນ ນີ້ໝາຍເຖິງຄວາມກົງແລະຄວາມທ່ຽງຂອງການວິໄຈ ຊຶ່ງຄົນໃນທ້ອງຖິ່ນຮັບຮູ້ເຖິງຄວາມກົງແລະຄວາມທ່ຽງນີ້ເປັນຢ່າງດີ ເພາະຄົນໃນທ້ອງຖິ່ນໄດ້ຮັບໂອກາດແລະກຳນົດແນວທາງແກ້ໄຂບັນຫາໃຫ້ກັບຕົວເອງ ນອກຈາກນີ້ ໃນການຫາຄວາມກົງແລະຄວາມທ່ຽງວິທີການສາມເສົ້າ ຊຶ່ງປະກອບມີຢູ່ 2 ວິທີ ໄດ້ແກ່ ວິທີການສາມເສົ້າພາຍນອກ (External Triangulation) ວິທີການສາມເສົ້າພາຍໃນ (Internal Triangulation) ລາຍລະອຽດມີດັ່ງນີ້

1) ວິທີການສາມເສົ້າພາຍນອກ (External Triangulation) ເປັນການກວດສອບໂດຍການປຽບທຽບຂໍ້ມູນດຳເນີນການວິໄຈ ກັບຂໍ້ມູນເກັບລວບລວມໄດ້ຈາກແຫຼ່ງອື່ນ ເຊັ່ນ ສະຖິຕິຂອງຫນ່ວຍລາດການ ພາບຖ່າຍ ພູມປັນຍາທ້ອງຖິ່ນ ເປັນຕົ້ນ ການກວດສອບພາຍນອກມັກຂຶ້ນຢູ່ກັບການກວດສອບຈາກຂໍ້ມູນທຸຕິຍະພູມ

2) ວິທີການສາມເສົ້າພາຍໃນ (Internal Triangulation) ເປັນການໃຊ້ເທັກນິກຕ່າງ ໆ ພາຍໃນການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ເພື່ອເສີມສ້າງຄວາມກົງໃນການວິໄຈພາກປະຕິບັດການແບບມີສ່ວນຮ່ວມ ຊຶ່ງເທັກນິກໃນວິທີການສາມເສົ້າພາຍໃນມີ ດັ່ງນີ້

(1). ການໃຊ້ຂໍ້ມູນຈາກກຸ່ມຜົນປະໂຫຍດທີ່ຕ່າງກັນ ເພື່ອປຽບທຽບທັດນະທີ່ແຕກຕ່າງກັນ ໂດຍກຸ່ມຜົນປະໂຫຍດທີ່ແຕກຕ່າງກັນຈະມີການຮັບຮູ້ກ່ຽວກັບຄວາມຈິງທີ່ແຕກຕ່າງກັນ

(2). ການໃຊ້ວິທີການແລະເທັກນິກທີ່ແຕກຕ່າງກັນເພື່ອສຳຫຼວດກວດສອບໃນຫົວຂໍ້ດຽວກັນ ເຊັ່ນ ການສ້າງແຜນທີ່ຂອງຊຸມຊົນ ໂດຍໃຊ້ວິທີຍ່າງສັງເກດ ສາພາດກຸ່ມ ແລະໃຫ້ທຸກຄົນໄດ້ຮ່ວມກັນເຮັດແຜນທີ່ສະແດງເຂດແດນທີ່ແຕ່ລະຄົນໄດ້ຈາກການເກັບຂໍ້ມູນຕົວຈິງ

(3). ການໃຊ້ຄົນອື່ນທີ່ມີຄວາມເປັນມືອາຊີບທີ່ບໍ່ແມ່ນຄົນໃນທ້ອງຖິ່ນ ແລະເປັນຜູ້ທີ່ມີພູມຫຼັງທາງວິຊາການທີ່ແຕກຕ່າງກັນໃນປະເດັນດຽວກັນ ເຊັ່ນ ການວາງແຜນຄອບຄົວຂອງຜູ້ຍິງໃນຊຸມຊົນ ຈະປະເມີນໂດຍນັກມະນຸດວິທະຍາ (ໃຊ້ຄຳຖາມປາຍເປີດ) ພະນັກງານທີ່ເປັນແພດ ໝໍ ຫຼືນາງພະຍາບານແລະການອະພິປາຍກຸ່ມຮ່ວມກັບກຸ່ມຜູ້ຍິງໃນຊຸມຊົນ

## 3.8 ປະໂຫຍດຂອງການວິໄຈໃນຫ້ອງຮຽນ

ຜົນຂອງການວິໄຈໃນຫ້ອງຮຽນກໍ່ໃຫ້ເກີດປະໂຫຍດກັບບຸກຄະລາກອນທຸກຝ່າຍໃນໂຮງຮຽນປະໂຫຍດໂດຍກົງກໍ່ຄືນັກຮຽນແລະຍັງເປັນປະໂຫຍດກັບຕົວຄູເອງເພື່ອນຄູໃນໂຮງຮຽນແລະໜ່ວຍງານທີ່ກ່ຽວຂ້ອງອື່ນໆດັ່ງສະແດງໃນແຜນວາດລຸ່ມນີ້:




ແຜນວາດທີ 9: ປະໂຫຍດຂອງການວິໄຈໃນຫ້ອງຮຽນ (ຂໍ້ມູນຈາກມົນສິດສິດທິສົມບູນ, ບປພ)

**ສະຫຼຸບ** ລັກສະນະຂອງການວິໄຈໃນຫ້ອງຮຽນເພື່ອພັດທະນາຜູ້ຮຽນໄດ້ແກ່:

1. ການວິໄຈໃນຫ້ອງຮຽນແມ່ນຄູເປັນຜູ້ເຮັດ ແລະຜູ້ຖືກແກ້ໄຂບັນຫາແມ່ນນັກຮຽນ
2. ຜູ້ເຮັດວິໄຈຍັງຄົງເຮັດວຽກຕາມປົກກະຕິຄື ສອນໄປນໍາເຮັດວິໄຈໄປນໍາ
3. ຈະສ້າງເຄື່ອງມືວິໄຈຫຼືບໍ່ຕ້ອງສ້າງເຄື່ອງມືວິໄຈກໍ່ໄດ້ເພາະການເກັບກໍາຂໍ້ມູນໃຊ້ການສັງເກດເປັນຫຼັກ
4. ບໍ່ມີຂໍ້ມູນຈໍານວນຫຼາຍຄືກັນກັບການວິໄຈທາງວິຊາການເພາະໃຊ້ເວລາປະຕິບັດວ່ອງໄວ
5. ຂໍ້ມູນສ່ວນໃຫຍ່ມາຈາກການສັງເກດການໂອລົມ ແລະ ໃຊ້ການວິເຄາະເນື້ອຫາ
6. ບໍ່ຕ້ອງທົບທວນລາຍງານວິໄຈທີ່ກ່ຽວຂ້ອງ
7. ໃຊ້ເວລາເຮັດວິໄຈບໍ່ດົນຂຶ້ນຢູ່ກັບສາເຫດຂອງບັນຫາ ແລະຈໍານວນບຸກຄົນທີ່ຕ້ອງການແກ້ໄຂ
8. ຜູ້ຮຽນໄດ້ຮັບການແກ້ໄຂ ຫຼືພັດທະນາໃນເວລາດຽວກັນຄູຜູ້ເຮັດວິໄຈກໍ່ໄດ້ປັບປຸງແລະພັດທະນາຕົນເອງ
9. ເປັນການວິໄຈດ້ານຄຸນລັກສະນະ(qualitative research)ຫຼາຍກວ່າດ້ານປະລິມານ(quantitative research)
10. ເນັ້ນການແກ້ໄຂທີ່ສາເຫດຂອງບັນຫາຂອງຜູ້ຮຽນບາງຄົນບາງເລື່ອງ

ການວິໄຈພາກປະຕິບັດໃນຫ້ອງຮຽນເປັນເຄື່ອງມືສໍາຄັນທີ່ຊ່ວຍໃນການພັດທະນາວິຊາຊີບຄູ ເນື່ອງຈາກຂໍ້ຄົ້ນພົບທີ່ໄດ້ມາຈາກກະບວນການສືບຄົ້ນທີ່ເປັນລະບົບແລະເຊື່ອຖືໄດ້ ເຮັດ ໃຫ້ຜູ້ຮຽນເກີດການພັດທະນາການຮຽນຮູ້ ແລະດ້ວຍຫຼັກການສໍາຄັນຂອງການວິໄຈພາກປະຕິບັດທີ່ເນັ້ນການສະທ້ອນຄືນ ເຮັດໃຫ້ການວິໄຈແບບນີ້ສົ່ງ

ເສີມບັນຍາກາດຂອງການເຮັດແບບປະຊາທິປະໄຕທີ່ທຸກຝ່າຍເກີດການແລກປ່ຽນປະສົບການແລະຍອມຮັບໃນການຄົ້ນພົບຮ່ວມກັນ (ສຸວິມົນ, 2544: 15)

ການວິໄຈພາກປະຕິບັດ ໃນຫ້ອງຮຽນເປັນການວິໄຈທາງການສຶກສາຂະແໜງໜຶ່ງທີ່ມີປະໂຫຍດ ແລະຄຸນຄ່າຕໍ່ການຈັດການຮຽນຮູ້ ຫຼື ການຈັດການສຶກສາໃນຫຼາຍ ໆ ດ້ານໂດຍນັກວິຊາການຫຼາຍ ໆ ຄົນໄດ້ກ່າວເຖິງເລື່ອງນີ້ໄວ້ຄື:

ກະມົນ ສຸດປະເສີດ (2528) ກ່າວວ່າ ເຮົາຈະຊີ້ແນວທາງໃຫ້ໄປເຖິງຄູຜູ້ສອນວ່າພວກເຂົາສາມາດທີ່ຈະເຮັດວິໄຈເກັບຜົນງານຕ່າງໆ ຂອງພວກເຂົາໄວ້ ມື້ໜຶ່ງໃນອະນາຄົດພວກເຂົາຈະເປັນຄູຊັ້ນຢ້ຽມຄູທີ່ເຮັດວຽກດ້ວຍຜົນງານວິໄຈ ມີຜົນງານວິໄຈວ່າໄດ້ແກ້ບັນຫາເດັກຕ່າງ ໆ ຢ່າງໃດ ໄດ້ສາມາດໃຊ້ເທກໂນໂລຍີໃໝ່ໆ ໃນການສຶກສາແລະເຮັດໃຫ້ນັກຮຽນຂອງຕົນກ້າວໜ້າໃນທາງທີ່ຄວນ

ວິເວກ ປາງພຸດທິພົງ (2529) ໄດ້ກ່າວເຖິງຄຸນຄ່າຂອງການວິໄຈໃນໂຮງຮຽນໄວ້ວ່າ: ງານວິໄຈນີ້ບໍ່ຈຳເປັນຕ້ອງວາງໂຄງການໃຫຍ່-ໂຕ ເພື່ອຈະວິໄຈ ຫຼື ແກ້ບັນຫາລະດັບສູງໃນລະດັບກົມ ກະຊວງເທົ່ານັ້ນ ບັນຫາໃນຫ້ອງຮຽນຂອງເຮົາ ບັນຫາທີ່ເຮົາສອນນັກຮຽນທຸກ ໆ ມື້ ບັນຫາສະເພາະກິດສະເພາະຢ່າງ ໂດຍສະເພາະເຮົາກໍຕ້ອງມີການສຶກສາວິໄຈວ່າບັນຫານັ້ນເກີດຢ່າງໃດ ແລະຈະແກ້ໄຂໄດ້ຢ່າງໃດ ວຽກສອນໃນໂຮງຮຽນ ກໍມີເລື່ອງຕ່າງໆ ທີ່ຈະຕ້ອງສຶກສາວິເຄາະວິໄຈຫຼວງ-ຫຼາຍ ຖ້າເຮົາເອົາຫຼັກການວິໄຈໄປໃຊ້ໃນຫ້ອງຮຽນເຮົາກໍຈະໄດ້ຜົນງານຢ່າງນ້ອຍກໍເຮັດໃຫ້ການຮຽນ-ການສອນໃນໂຮງຮຽນດີຂຶ້ນ ຖ້າເຮົາໃຊ້ຫຼັກວິທະຍາສາດນີ້ມາວິເຄາະມາພັດທະນາແລ້ວກໍຈະເຮັດໃຫ້ງານນັ້ນດຳເນີນໄປຢ່າງມີປະສິດທິພາບ

ພະນົມ ພົງໄພບູນ (2537) ກ່າວວ່າ ການວິໄຈເປັນການຊ່ວຍຄູໃນດ້ານການຮຽນຮູ້ໃຫ້ຮູ້ຈັກເລືອກໃຊ້ວິທີສອນໄດ້ຢ່າງເໝາະສົມ ປັບປຸງຂະບວນການຮຽນຮູ້ ແລະ ຮູ້ສາເຫດຂອງບັນຫາທີ່ເກີດຂຶ້ນນອກຈາກນັ້ນຄູຍັງໄດ້ພັດທະນາທາງດ້ານວິຊາການໄປດ້ວຍ

ສຸວັດທະນາ ສຸວັນນະເຂດນິກົມ (2537) ກ່າວວ່າ ຖ້າຄູເຮັດວິໄຈໃນຊັ້ນຮຽນຄວບຄູ່ໄປກັບການປະຕິບັດການສອນຢ່າງເໝາະສົມ ຈະກໍ່ໃຫ້ເກີດຜົນດີ ຄື:

1. ນັກຮຽນຈະມີການຮຽນຮູ້ທີ່ມີຄຸນນະພາບແລະປະສິດທິພາບຍິ່ງຂຶ້ນ

2. ໃນຂົງເຂດວິຊາການການສຶກສາຈະມີຂໍ້ຄວາມຮູ້ ຫຼື ນະວະຕະກຳທາງການຈັດການຮຽນຮູ້ທີ່ເປັນຈິງຫຼາຍຂຶ້ນ ອັນຈະເປັນປະໂຫຍດຕໍ່ຕົວຄູແລະເພື່ອນຄູໃນການພັດທະນາການຈັດການຮຽນຮູ້

3. ວັດທະນະທຳໃນການເຮັດວຽກງານຂອງຄູ ຈະພັດທະນາໄປສູ່ຄວາມເປັນຄູມືອາຊີບ (professional teacher)ຫຼາຍຍິ່ງຂຶ້ນ ເພາະຄູຈະມີຄຸນສົມບັດຂອງການເປັນຜູ້ສະແຫວງຫາຄວາມຮູ້ໃນການສອນຢ່າງຕໍ່ເນື່ອງແລະມີຊີວິດຊີວາ

ໄຊພົດ ຮັກງາມ (2539) ກ່າວວ່າ ການວິໄຈໃນຫ້ອງຮຽນເປັນປະໂຫຍດກັບຄູໃນດ້ານການສຶກສາບັນຫາໂດຍຄູຜູ້ສອນ ດຳເນີນການພັດທະນານະວະຕະກຳເພື່ອແກ້ບັນຫາໂດຍຄູ ນັ້ນຄື ‘ຄູຄົ້ນ ຄູຄິດ ແລະຄູແກ້ບັນຫາໃນຫ້ອງຮຽນໄດ້’’

ການປະຕິຮູບການສຶກສາທັງລະບົບ ໂດຍເນັ້ນປັບວິທີຄິດແລະວິທີການເຮັດວຽກງານໃໝ່ໃຫ້ກັບທຸກຝ່າຍທີ່ຈະຕ້ອງເນັ້ນຜູ້ຮຽນເປັນສູນກາງພັດທະນາຂະບວນການວິໄຈ ນຳຜົນການວິໄຈທີ່ເຊື່ອຖືໄດ້ມາໃຊ້ເປັນເຄື່ອງມືໃນ

ການພັດທະນາ ເຊິ່ງທາງເລືອກນີ້ໜ້າຈະຊ່ວຍໃຫ້ຜູ້ບໍລິຫານແລະຜູ້ສອນໄດ້ຂໍ້ມູນເພື່ອການຕັດສິນໃຈແກ້ບັນຫາໄດ້ຖືກຕ້ອງກົງປະເດັນ ຈະຊ່ວຍໃຫ້ເຂົ້າໃຈປະກົດການທີ່ຊັດເຈນຂຶ້ນ ຊ່ວຍໃຫ້ໄດ້ແນວທາງໃໝ່ໃນການເຮັດວຽກງານຢ່າງເປັນລະບົບ ແລະມີປະສິດທິຜົນ ເຊິ່ງມີຜົນຕໍ່ການປະຕິຮູບສະຖານສຶກສາທີ່ຖືວ່າຜູ້ຮຽນສຳຄັນທີ່ສຸດແລະສິ່ງທີ່ເຊື່ອວ່າຈະຕາມມາຢ່າງເປັນຮູບທຳ ຄື ຄວາມກ້າວໜ້າຂອງຜູ້ບໍລິຫານ ຜູ້ສອນແລະ ຜູ້ທີ່ກ່ຽວຂ້ອງ (ຈິລະພັນ, 2543)

ສຸພາພອນ ມັ່ງເກດວິດ (2544) ໄດ້ກ່າວເຖິງປະໂຫຍດຂອງການວິໄຈໃນຫ້ອງຮຽນໄວ້ວ່າ:

1. ຊ່ວຍແກ້ບັນຫາໃນຫ້ອງຮຽນ
2. ຊ່ວຍເຮັດໃຫ້ເກີດການປ່ຽນແປງໃນທາງທີ່ດີ
3. ປັບປ່ຽນບົດບາດຄູໃໝ່
4. ເສີມພະລັງອຳນາດແກ່ຄູໃນການແກ້ບັນຫາໃນຫ້ອງຮຽນ
5. ເຮັດໃຫ້ໄດ້ຮູ້ເຖິງວິທີການຮຽນການສອນທີ່ມີປະສິດທິຜົນ
6. ກະຕຸ້ນການສອນແບບສະທ້ອນຄືນ
7. ກະຕຸ້ນໃຫ້ເກີດຄວາມຮູ້ສຶກເປັນເຈົ້າຂອງແນວທາງປະຕິບັດກ່ຽວກັບການສອນທີ່ມີປະສິດທິຜົນ
8. ຊ່ວຍກວດກາວິທີການເຮັດວຽກຂອງຄູໃຫ້ມີປະສິດທິພາບ
9. ຊ່ວຍພັດທະນາທັກສະທາງວິຊາຊີບຄູ
10. ເປັນການເຊື່ອມໂຍງລະຫວ່າງວິທີສອນກັບຜົນທີ່ໄດ້ຮັບ
11. ຊ່ວຍໃຫ້ຄູນຳຜົນການວິໄຈໄປໃຊ້ໃນຫ້ອງຮຽນ
12. ເຮັດໃຫ້ຄູສາມາດເປັນອົງກອນທີ່ກໍ່ໃຫ້ເກີດການປ່ຽນແປງໄດ້ (change agent)

ຈາກທີ່ກ່າວມາຂ້າງເທິງ ສາມາດສະຫຼຸບໄດ້ວ່າການເຮັດວິໄຈພາກປະຕິບັດ ໃນຊັ້ນຮຽນມີປະໂຫຍດ ຄື:

1. ຊ່ວຍໃຫ້ຄູເຮັດວຽກຢ່າງເປັນລະບົບ ມີການວາງແຜນໃນການເຮັດວຽກງານ
2. ຊ່ວຍໃຫ້ຄູຈັດການຮຽນ-ການສອນຢ່າງມີຄຸນນະພາບໂດຍໃຊ້ວິທີການທີ່ມີປະສິດທິພາບ
3. ຄູສາມາດສ້າງແລະວິເຄາະທາງເລືອກຢ່າງຫຼາກຫຼາຍ ແລະຕັດສິນໃຈເລືອກທາງເລືອກຢ່າງມີຄຸນນະພາບມີເຫດຜົນແລະສ້າງສັນ
4. ຄູໃຊ້ຂະບວນການວິໄຈໃນການພັດທະນາການຮຽນ-ການສອນ
5. ນຳຜົນການວິໄຈໄປໃຊ້ໃນການກຳນົດນະໂຍບາຍແລະ ພັດທະນາຫຼັກສູດການຮຽນ-ການສອນຂອງໂຮງຮຽນໄດ້
6. ຄູມີຄວາມຮູ້-ຄວາມສາມາດທາງດ້ານການສອນ ແລະ ພັດທະນາຕົນຢ່າງຕໍ່ເນື່ອງ ເພື່ອໃຫ້ກາຍເປັນຄູມືອາຊີບໄດ້

### 3.9 ຮູບແບບຂອງການເຮັດວິໄຈ

ການວິໄຈພາກປະຕິບັດ 2 ຮູບແບບຄືການວິໄຈພາກປະຕິບັດແບບເປັນທາງການ ແລະ ບໍ່ເປັນທາງການ ( formal and informal research)

#### 3.9.1 ການວິໄຈແບບເປັນທາງການ( formal research )

ເປັນງານວິໄຈທີ່ມີແບບແຜນການວິໄຈທີ່ເຄັ່ງຄັດມີລັກສະນະການດຳເນີນການແລະການນຳສະເໜີເໝືອນກັບວິໄຈແບບວິຊາການ(academicresearch) ຂອງນັກວິໄຈມືອາຊີບນັກວິຊາການໃນມະຫາວິທະຍາໄລຫຼືຂອງນັກສຶກສາທີ່ເປັນວິທະຍານິພົນມີການອອກແບບການວິໄຈທີ່ຮອບຄອບເພື່ອໃຫ້ຕອບຄຳຖາມໄດ້ຈະແຈ້ງແລະມີຮູບແບບການນຳສະເໜີລາຍງານຜົນການວິໄຈທີ່ກຳນົດຈະແຈ້ງສ່ວນໃຫຍ່ຈຳແນກເນື້ອຫາສາລະອອກເປັນ 5 ບົດ

**3.9.2 ການວິໄຈບໍ່ເປັນທາງການ ( informal research )**

ເປັນງານວິໄຈທີ່ບໍ່ຍຶດແບບການວິໄຈຢ່າງເຄັ່ງຄັດເໝືອນການວິໄຈທາງວິຊາການເນັ້ນການຕອບຄຳຖາມວິໄຈຫຼາຍກວ່າການຍຶດຮູບແບບການວິໄຈແບບເປັນທາງການການຂໍ້ມູນທີ່ໃຊ້ໃນການວິໄຈກໍ່ພະຍາຍາມໃຊ້ຂໍ້ມູນທີ່ມີຢູ່ແລ້ວຈາກການຮຽນການສອນຕາມປົກກະຕິການນຳສະເໜີຜົນການວິໄຈຄວບຄຸມພຽງປະເດັນສຳຄັນທີ່ຜູ້ວິໄຈຕ້ອງການນຳສະເໜີງານວິໄຈນີ້ບາງຄັ້ງເຫັນວ່າມີລາຍງານພຽງ 1-2 ໜ້າ

## ຮູບແບບການວິໄຈພາກປະຕິບັດຕາມແນວຄິດຂອງKemmis ແລະZuber-Skerritt

**1 ການວິໄຈພາກປະຕິບັດທາງເຕັກນິກ ( Technical Action Research)**

ການວິໄຈຕາມແບບນີ້ມີເປົ້າໝາຍຂອງການວິໄຈເພື່ອປັບປຸງປະສິດທິຜົນແລະປະສິດທິພາບຂອງການປະຕິບັດງານໂດຍອາໃສບຸກຄົນພາຍນອກ(outsiders)ມາຊ່ວຍໃນການເຮັດວິໄຈໃນໜ່ວຍງານ ຜູ້ປະຕິບັດ (ຄູ) ຈະຢູ່ພາຍໃຕ້ການຄວບຄຸມກຳກັບຂອງນັກວິໄຈພາຍນອກ ບຸກຄົນພາຍນອກໃຊ້ບົດບາດຂອງຜູ້ວິໄຈຫຼັກໂດຍທີ່ຄູບໍ່ຄ່ອຍມີບົດບາດໃນການນຳສະເໜີຄວາມຄິດ ວິທີການຕ່າງໆ ທີ່ໃຊ້ໃນການວິໄຈມາຈາກຄວາມຄິດຂອງນັກວິໄຈພາຍນອກເປັນສ່ວນໃຫຍ່ ເຊິ່ງ ເນັ້ນເຕັກນິກການເຮັດວິໄຈທີ່ຕອບຄຳຖາມວິໄຈທີ່ກະທັດຮັດ ຂໍ້ຄົ້ນພົບທີ່ໄດ້ອາດຈະໃຊ້ບໍ່ໄດ້ກັບການປະຕິບັດຕົວຈິງ

**2 ການວິໄຈພາກປະຕິບັດແບບການປະຕິບັດຈິງ ( Practical Action Research)**

ເປັນການວິໄຈທີ່ມີນັກວິໄຈພາຍນອກສະແດງບົດບາດຂອງທີ່ປຶກສາດ້ານຂະບວນການເຮັດວຽກ (processconsultancy role)ມີເປົ້າໝາຍຂອງການວິໄຈທີ່ຫຼາຍກວ່າແບບທຳອິດຄືນອກຈາກຊ່ວຍປັບປຸງປະສິດທິພາບຜົນການເຮັດວຽກແລ້ວຍັງເນັ້ນສ້າງຄວາມເຂົ້າໃຈແລະເນັ້ນພັດທະນາວິຊາຊີບໃຫ້ກັບຜູ້ປະຕິບັດດ້ວຍໃນຂະບວນການວິໄຈຈະສົ່ງເສີມໃຫ້ຜູ້ປະຕິບັດສະທ້ອນຜົນແລະຄິດວິເຄາະພັດທະນາປັບປຸງການເຮັດວຽກຂອງຕົນເອງດັ່ງນັ້ນຄູເຊິ່ງເປັນຜູ້ປະຕິບັດໃນໂຮງຮຽນມີໂອກາດທີ່ຈະຮຽນຮູ້ຂະບວນການວິໄຈແລະມີສ່ວນຮ່ວມໃນການສະເໜີຄວາມຄິດໃນປະເດັນບັນຫາວິໄຈທີ່ມາຈາກການປະຕິບັດຈິງແລະສາມາດນຳຜົນວິໄຈໄປໃຊ້ໄດ້

**3. ການວິໄຈແບບວິພາກ-ອິດສະຫຼະ (Critical/Emancipatory Action Research)**

ເປັນການວິໄຈທີ່ມີການເຮັດວຽກຮ່ວມກັນລະຫວ່າງນັກວິໄຈພາຍນອກແລະຜູ້ປະຕິບັດວຽກໃນໜ່ວຍງານເປົ້າໝາຍຂອງການວິໄຈເພີ່ມເຕີມຈາກການວິໄຈພາກປະຕິບັດແບບທີ1 ແລະ 2 ຄືນອກຈາກພັດທະນາປະສິດທິຜົນຂອງການເຮັດວຽກແລ້ວການສົ່ງເສີມໃຫ້ເກີດຄວາມເຂົ້າໃຈໃນການພັດທະນາ-ປັບປຸງການເຮັດວຽກແກ່ຜູ້ປະຕິບັດແລ້ວຍັງຕ້ອງການໃຫ້ເກີດການປ່ຽນແປງໃນລະບົບການເຮັດວຽກທີ່ເປັນຢູ່ໃນອົງກອນໃຫ້ດີຂຶ້ນກວ່າເດີມເຖິງແມ່ນຈະມີບຸກຄົນພາຍນອກຮ່ວມດ້ວຍແຕ່ທຸກຄົນຕ່າງມີສິດມີສຽງໃນການສະແດງຄວາມຄິດຄວາມເຫັນເທົ່າທຽມກັນຈະບໍ່ມີຜູ້ສະແດງ

ປົດບາດເປັນທີ່ປຶກສາການວິໄຈແບບທີສອງການວິໄຈແບບນີ້ເປີດໂອກາດໃຫ້ເກີດການພັດທະນາຄວາມສາມາດດ້ານການວິໄຈແກ້ຜູ້ປະຕິບັດແລະນັກວິໄຈຈະເປັນອິດສະຫຼະຈາກຄວາມຮູ້ກົດເກນແລະພັນທະນາການທາງຄວາມຄິດເດີມ

ຈະເຫັນວ່າແນວທາງການວິໄຈພາກປະຕິບັດທັງ 3 ແບບມີການປ່ຽນແປງແນວຄິດຂອງການເຮັດວຽກຈາກທີ່ຜູ້ປະຕິບັດຖືກຄອບງໍາຄວາມຄິດໂດຍນັກວິໄຈພາກນອກ(cooption)ເຊິ່ງເປັນແບບທໍາອິດມາເປັນການເຮັດວຽກຮ່ວມກັນ(cooperation)ໃນແບບທີ່ສອງແລະຮູບແບບການເຮັດວຽກທີ່ສາມເຊິ່ງເປັນການເຮັດວຽກແບບຮ່ວມມື (collabor- ation)ເຊິ່ງເປັນແນວທາງການວິໄຈພາກປະຕິບັດທີ່ກໍາລັງເປັນທີ່ນິຍົມແລະຍອມຮັບກັນວ່າຈະສົ່ງຜົນໃຫ້ເກີດການພັດທະນາວິຊາຊີບຂອງຜູ້ປະຕິບັດຫຼາຍກວ່າແບບອື່ນໆ

## ຮູບແບບການວິໄຈພາກປະຕິບັດຕາມແນວຄິດຂອງCalhoun

**1 ການວິໄຈຂອງຄູແບບເຮັດຄົນດຽວ(Individual Teacher Research)**

ເປັນການວິໄຈທີ່ເນັ້ນການປ່ຽນແປງໃນຫ້ອງຮຽນໃດຫ້ອງຮຽນໜຶ່ງໂດຍຄູກໍານົດບັນຫາໃນຫ້ອງຮຽນທີ່ຕ້ອງການແກ້ໄຂແລະຫາແນວທາງແກ້ໄຂນັກຮຽນອາດບໍ່ມີສ່ວນໃນການຊ່ວຍກໍານົດທາງເລືອກຕ່າງໆຫາກຈະມີຜູ້ປຶກຄອງກ່ຽວຂ້ອງດ້ວຍໃນການເຮັດວິໄຈກໍ່ຈະເປັນພຽງຜູ້ໃຫ້ຂໍ້ມູນຫຼາຍກວ່າ

**2 ການວິໄຈພາກປະຕິບັດແບບຮ່ວມມື(Collaborative Action Research)**

ເປັນການວິໄຈທີ່ເຮັດເປັນກຸ່ມຜູ້ວິໄຈມີຈໍານວນ 1-2 ຄົນຂຶ້ນໄປປະກອບດ້ວຍຄູຜູ້ບໍລິຫານແລະນັກວິຊາການຈາກມະຫາວິທະຍາໄລຫຼືບຸກຄະລາກອນອື່ນໆມີຈຸດໝາຍເນັ້ນທີ່ບັນຫາແລະການປ່ຽນແປງເຊິ່ງເກີດຂຶ້ນໃນຫ້ອງຮຽນໃດຫ້ອງຮຽນໜຶ່ງຄະນະວິໄຈອາດຈະເນັ້ນບັນຫາໃນລະດັບພື້ນທີ່ຂອງຕົນແຕ່ຍັງເປັນຂະບວນການທີ່ເປັນການສືບຄົ້ນຄວາມຮູ້ໃນຫ້ອງຮຽນຂະບວນການເຮັດວິໄຈຈະເໝືອນກັບການເຮັດວິໄຈຂອງຄູທີ່ເຮັດຄົນດຽວ

**3 ການວິໄຈພາກປະຕິບັດແບບເຮັດໝົດໂຮງຮຽນ(Schoolwide Action Research)**

ເປັນການວິໄຈທີ່ຄະນະເຮັດວຽກເປັນຜູ້ປະຕິບັດໃນໂຮງຮຽນມີການເຮັດວຽກໂດຍເລືອກບັນຫາວິໄຈທີ່ສົນໃຈຮ່ວມກັນມີການລວບລວມຂໍ້ມູນການຈັດລະບົບແລະການແປຄວາມໝາຍຂໍ້ມູນທີ່ໄດ້ຈາກໂຮງຮຽນຫຼືເອກະສານທີ່ກ່ຽວຂ້ອງຂະບວນການວິໄຈເປັນແບບວົງຈອນຕໍ່ເນື່ອງທີ່ມີໜ້າທີ່ເໝືອນການປະເມີນຄວາມກ້າວໜ້າມີຈຸດໝາຍເນັ້ນທີ່ການປັບປຸງໂຮງຮຽນໄດ້ແກ່ (1) ການຄົ້ນຫາວິທີປັບປຸງໂຮງຮຽນເພື່ອແກ້ບັນຫາ (2) ພະຍາຍາມປັບປຸງການເຮັດວຽກເພື່ອໃຫ້ເກີດຄວາມເທົ່າທຽມກັນແກ່ນັກຮຽນ (3) ເພີ່ມຂອບເຂດຂອງເນື້ອຫາໃນການສຶກສາຫາຫາແນວທາງການແກ້ບັນຫາ

## ຮູບແບບການວິໄຈພາກປະຕິບັດຈາກການສັງເຄາະຂອງນົງລັກວິລັດໄຊ

**1.ການວິໄຈພາກປະຕິບັດໃນຫ້ອງຮຽນ ( Classroom Action Research)**

ເປັນການວິໄຈທີ່ເຮັດໂດຍຄູເພື່ອສະແຫວງຫາວິທີການແກ້ໄຂບັນຫາແລະພັດທະນາການປະຕິບັດວຽກຫຼືການຮຽນ-ການສອນໃນຫ້ອງຮຽນຂອງຕົນ

**2. ການວິໄຈພາກປະຕິບັດແບບມີສ່ວນຮ່ວມ(Collaborative Action Research)**

ເປັນງານວິໄຈທີ່ດຳເນີນໂດຍຄູຫຼາຍຄົນຮ່ວມກັນເຮັດວິໄຈເພື່ອແກ້ບັນຫາໃນຫ້ອງຮຽນຫຼາຍຫ້ອງຫຼືແຜນວິຊາການຫຼືພາກວິຊາຄະນະນັກວິໄຈເກີດຈາກການລວມຕົວກັນຂອງຄູທີ່ມີຄວາມຊຳນານສະເພາະຕ່າງກັນມາຮ່ວມມືກັນເຮັດວິໄຈໂດຍມີຈຸດໝາຍດຽວກັນ

**3.ການວິໄຈພາກປະຕິບັດລະດັບໂຮງຮຽນ (School Action Research)**

ເປັນການວິໄຈທີ່ດຳເນີນການໂດຍຜູ້ບໍລິຫານໂຮງຮຽນແລະບຸກຄະລາກອນທາງການສຶກສາຂອງໂຮງຮຽນອາດຈະລວມເອົາໜ່ວຍງານນອກໂຮງຮຽນດ້ວຍມີເປົ້າໝາຍເພື່ອພັດທະນາໂຮງຮຽນແລະສະພາບແວດລ້ອມໃນໂຮງຮຽນ

**4.ການວິໄຈພາກປະຕິບັດແບບອີງຊຸມຊົນ(Community-based Action Research)**

ເປັນການວິໄຈທີ່ອາໃສຄວາມຮ່ວມມືລະຫວ່າງໂຮງຮຽນກັບຊຸມຊົນໂດຍອາໃສພະລັງຂອງຊຸມຊົນທີ່ຈະລະດົມຊັບພະຍາກອນຈາກທຸກແຫຼ່ງມາພັດທະນາຊຸມຊົນຢ່າງມີປະສິດທິພາບ ດັ່ງແສດງໃນຕາຕະລາງຂອງຫນ້າຖັດໄປ

ຕາຕະລາງທີ 5 ຮູບແບບຂອງການວິໄຈພາກປະຕິບັດ

| **ແບບຂອງການວິໄຈ** | **ລະດັບຂອງຄວາມຮ່ວມມືແລະລະດັບຂອງບັນຫາການວິໄຈ** | **ບົດບາດຂອງບຸກຄົນພາຍນອກທີ່ມີສ່ວນຮ່ວມໃນການວິໄຈ** |
|---|---|---|
| 1. ແບບເປັນທາງການ | 1. ແບບເຮັດຄົນດຽວ(ສະເພາະບັນຫາໃນຫ້ອງຮຽນຂອງຕົນເອງ) | 1. ທາງເຕັກນິກ (ບຸກຄົນພາຍນອກມີບົດບາດຫຼາຍກວ່າ) |
| 2. ແບບບໍ່ເປັນທາງການ | 2. ແບບຮ່ວມມື (ເຮັດເປັນທີມລວມກຸ່ມທີ່ສົນໃຈຮ່ວມກັນໃນບັນຫາດຽວກັນ | 2. ແບບການປະຕິບັດຈິງ (ບຸກຄົນພາຍນອກມີບົດບາດຫຼາຍກວ່າແຕ່ນ້ອຍກວ່າແບບທຳອິດ) |
| | 3. ແບບເຮັດທັງໝົດໃນໂຮງຮຽນ (ເຮັດຮ່ວມກັນໃນໂຮງຮຽນເປັນບັນຫາລະດັບ | 3. ແບບອິດສະຫຼະ (ບຸກຄົນພາຍນອກມີບົດບາດເທົ່າທຽມກັນກັບຜູ້ |

ຕາຕະລາງທີ 5 ຮູບແບບຂອງການວິໄຈພາກປະຕິບັດ (ຕໍ່)

| **ແບບຂອງການວິໄຈ** | **ລະດັບຂອງຄວາມຮ່ວມມືແລະລະດັບຂອງບັນຫາການວິໄຈ** | **ບົດບາດຂອງບຸກຄົນພາຍນອກທີ່ມີສ່ວນຮ່ວມໃນການວິໄຈ** |
|---|---|---|
| | ໂຮງຮຽນ) | ປະຕິບັດ) |
| | 4. ແບບອີງຊຸມຊົນ (ເຮັດຮ່ວມກັນລະຫວ່າງໂຮງຮຽນກັບຊຸມຊົນ) | 4. ແບບບໍ່ມີບຸກຄົນພາຍນອກ |

### 3.10 ຂັ້ນຕອນການເຮັດວິໄຈພາກປະຕິບັດ

#### 1. ຮອບວຽນການວິໄຈພາກປະຕິບັດ

Freeman(1998 ອ້າງເຖິງໃນສຸວິມົນວ່ອງວານິດ, 2554) ສະເໜີຂັ້ນຕອນການວິໄຈພາກປະຕິບັດເປັນ 6 ຂັ້ນຕອນ(ເບິ່ງແຜນວາດທີ 5) ໂດຍຂັ້ນຕອນທຳອິດເປັນການຕັ້ງຂໍ້ສົງໃສກ່ຽວກັບສະພາບທີ່ເກີດຂຶ້ນຂັ້ນຕອນທີສອງເປັນການກຳນົດບັນຫາວິໄຈຫຼືຄຳຖາມວິໄຈທີ່ມີຄວາມສະເພາະເຈາະຈົງຫຼາຍຂຶ້ນເປັນຄຳຖາມທີ່ສາມາດວິໄຈໄດ້ຂັ້ນຕອນທີສາມ

ເປັນການເກັບລວບລວມຂໍ້ມູນຂັ້ນຕອນທີສີ່ເປັນການວິເຄາະຂໍ້ມູນເພື່ອຕອບຄຳຖາມວິໄຈຂັ້ນຕອນທີຫ້າເປັນການສ້າງຄວາມເຂົ້າໃຈກັບສິ່ງທີ່ເກີດຂຶ້ນແລະຂັ້ນຕອນທີຫົກເປັນການນຳຂໍ້ຄົ້ນພົບໄປເຜີຍແຜ່ໃຫ້ຜູ້ກ່ຽວຂ້ອງຮູ້ແລະໃຊ້ປະໂຫຍດໃນຮອບວຽນການວິໄຈຂອງFreeman (1998) ມີລັກສະນະພິເສດທີ່ເລີ່ມຕົ້ນການເຮັດວິໄຈໃນຂັ້ນຕອນໃດກໍ່ໄດ້ເຊັ່ນເລີ່ມທີ່ການວິເຄາະຂໍ້ມູນທີ່ຖືມີຢູ່ໃນມືສ້າງຄວາມໃຈກັບຜົນການວິເຄາະຂໍ້ມູນແລ້ວກຳນົດເປັນຄຳຖາມທີ່ຕ້ອງການວິໄຈເພື່ອຫາຄຳອະທິບາຍໃນຜົນທີ່ເກີດຂຶ້ນເປັນຕົ້ນ




ແຜນວາດທີ 10: ຮອບວຽນການວິໄຈພາກປະຕິບັດຂອງ Freeman

Zuber-Skerritt, O. (1996 ອ້າງເຖິງໃນສຸວິມົນວ່ອງວານິດ, 2554) ກ່າວວ່າການວິໄຈພາກປະຕິບັດເປັນຂະບວນການທີ່ມີຂັ້ນຕອນການເຮັດວຽກເປັນຮອບວຽນຕໍ່ເນື່ອງ 4 ຂັ້ນຕອນ ໄດ້ແກ່ (1) ການວາງແຜນກົນລະຍຸດ (2) ການນຳແຜນໄປປະຕິບັດ (3) ການສັງເກດ (ໂດຍມີການປະເມີນຕົນເອງ) ແລະ (4) ການສະທ້ອນຄືນ ເຊິ່ງວິພາກຈາກຕົນເອງ ແລະ ເພື່ອຮ່ວມງານໃນຜົນທີ່ໄດ້ຈາກຂັ້ນຕອນທີ 1-3 ຈາກນັ້ນມີການເຮັດວຽກໃນຮອບວຽນທີ 2 ໂດຍມີການປັບແຜນການດຳເນີນການ ແລ້ວນຳໄປປະຕິບັດສັງເກດຜົນທີ່ເກີດຂຶ້ນ ແລະສະທ້ອນຄືນເພື່ອປັບປຸງຕໍ່ໄປ

## ຂັ້ນຕອນການດຳເນີນການວິໄຈພາກປະຕິບັດ




ແຜນວາດທີ 11 : ຂັ້ນຕອນການດຳເນີນການວິໄຈ

ໃນແຕ່ລະຂັ້ນຕອນຂອງຮອບວຽນການວິໄຈພາກປະຕິບັດນັກຮຽນວິໄຈຄວນເຮັດຫຍັງໄດ້ສະແດງໄວ້ໃນຕາຕະລາງລຸ່ມນີ້:

ຕາຕະລາງທີ 6 ກິດຈະກຳທີ່ປະຕິບັດໃນແຕ່ລະຂັ້ນຕອນ

| **ຂັ້ນຕອນ** | **ເຮັດຫຍັງ** |
|---|---|
| ການສຶກສາສະພາບບັນຫາ Reconnaissance | 1. ການກຳນົດຫົວຂໍ້ຫຼືບັນຫາທີ່ພົວພັນກັບວຽກງານຂອງທ່ານທີ່ປັບປຸງແກ້ໄຂ<br>2. ກຸ່ມວິໄຈຂອງທ່ານສົນທະນາກັນເພື່ອຊອກຫາຄວາມເປັນມາແລະສາເຫດເບື້ອງຕົ້ນຂອງບັນຫາ<br>3. ເກັບກຳແລະວິເຄາະຂໍ້ມູນເພື່ອໃຫ້ທ່ານເຂົ້າໃຈສາເຫດອັນແທ້ຈິງຂອງບັນຫາ<br>4. ບັນທຶກອັນທີ່ຄວນຄົ້ນພົບແລະຂຽນຄຳຖາມວິໄຈໄວ້ໃນປຶ້ມບັນທຶກປະຈຳວັນຂອງທ່ານ |
| ການວາງແຜນ | 1.ກຳນົດບັນຫາວິທີການຕ່າງໆຫຼືແນວຄວາມຄິດຮ່ວມກັບເພື່ອນວິໄຈໃນກຸ່ມຂອງທ່ານທີ່ຈະຊ່ວຍແກ້ກຸ່ມບັນຫາຫຼືຫົວຂໍ້ທີ່ທ່ານໄດ້ກຳນົດໄວ້<br>2. ວາງແຜນວ່າຈະນຳໃຊ້ບັນດາວິທີການເຫຼົ່ານີ້ແນວໃດ<br>3. ວາງແຜນວ່າທ່ານຈະເກັບກຳຂໍ້ມູນຫຍັງ? ເກັບແນວໃດ? ເວລາໃດ? ຢູ່ໃນຂັ້ນຕອນປະຕິບັດແລະສັງເກດ<br>4. ຂຽນບັນທຶກປະຈຳວັນ |
| ການປະຕິບັດແລະສັງເກດ | 1. ນຳແຜນທີ່ທ່ານວາງໄວ້ປະຕິບັດ<br>2. ຂໍຮ້ອງໃຫ້ເພື່ອນຮ່ວມງານສັງເກດການສອນຂອງທ່ານແລະຂຽນບັນທຶກສິ່ງທີ່ເຂົາເຈົ້າເຫັນ<br>3. ບັນທຶກເຫດການຕ່າງໆທີ່ເກີດຂຶ້ນໃນໄລຍະທີ່ທ່ານນຳແຜນໄປປະຕິບັດ<br>4. ວິເຄາະຂໍ້ມູນທີ່ໄດ້ມາເພື່ອຊອກຫາຜົນຂອງການປະຕິບັດແຜນການຂອງທ່ານ<br>5. ຂຽນບັນທຶກປະຈຳວັນ |
| ການສະທ້ອນຄືນ | 1. ສົນທະນາສິ່ງທີ່ທ່ານຄົ້ນພົບໃນກຸ່ມວິໄຈຂອງທ່ານ<br>2. ແລກປ່ຽນຄວາມຄິດເຫັນຂອງທ່ານພາຍໃນກຸ່ມ |
| | 3. ຕັດສິນໃຈວ່າອັນໃດໄດ້ຜົນແລະອັນໃດບໍ່ໄດ້ຜົນແລະບອກເຫດຜົນວ່າຍ້ອນຫຍັງ?<br>4. ບັນທຶກສິ່ງທີ່ທ່ານໄດ້ສົນທະນາກັນເຂົ້າໃນບົດລາຍງານ |

ຕາຕະລາງທີ 6 ກິດຈະກຳທີ່ປະຕິບັດໃນແຕ່ລະຂັ້ນຕອນ (ຕໍ່)

| **ຂັ້ນຕອນ** | **ເຮັດຫຍັງ** |
|---|---|
| | 2. ແຜນການໃໝ່ຂອງທ່ານອາດນຳໃຊ້ໄດ້ໃນຫົວຂໍ້ໃໝ່ຫຼືຫົວຂໍ້ເກົ່າທີ່ທ່ານໄດ້ຄົ້ນພົບໃນໄລຍະຮອບວຽນທຳອິດ |

3. ຂຽນບັນທຶກປະຈຳວັນ

ຂໍ້ມູນຈາກກະຊວງສຶກສາທິການກົມສ້າງຄູ. ປຶ້ມແບບຮຽນວິໄຈພາກປະຕິບັດ, (2009)

**3.11 ການວາງແຜນການວິໄຈ**

ການວາງແຜນການວິໄຈພາກປະຕິບັດເປັນຂະບວນການທີ່ກ່ຽວຂ້ອງກັບກິດຈະກຳທີ່ສຳຄັນຫຼາຍຢ່າງໄດ້ແກ່ (1) ຄວາມໝາຍແລະທີ່ມາຂອງບັນຫາ (2) ການວິເຄາະສະພາບບັນຫາທີ່ເກີດຂຶ້ນໃນຫ້ອງຮຽນເພື່ອຕັ້ງຂໍ້ສົງໄສ (3) ການຕັ້ງຄຳຖາມວິໄຈທີ່ມີຄວາມສະເພາະເຈາະຈົງ, ມີຄວາມເປັນຮູບປະທຳແລະເປັນຄຳຖາມທີ່ວິໄຈໄດ້ (4) ການກຳນົດແນວທາງການແກ້ໄຂບັນຫາ (5) ການອອກແບບການວິໄຈສຳລັບເປັນແນວທາງໃນການສຶກສາເພື່ອໃຫ້ໄດ້ຄຳຕອບກ່ອນທີ່ຈະນຳແຜນໄປປະຕິບັດຈິງ (6) ການກຽມແຜນໄປປະຕິບັດ

**3.11.1 ຄວາມໝາຍແລະທີ່ມາຂອງບັນຫາການວິໄຈໃນຫ້ອງຮຽນ**

**1) ຄວາມໝາຍຂອງບັນຫາການວິໄຈໃນຫ້ອງຮຽນ**

ພິດສະນຸຟອງສີ ( 2009) ກ່າວວ່າບັນຫາການວິໄຈໃນຫ້ອງຮຽນເປັນປະເດັນທີ່ຄູຜູ້ວິໄຈສົງໄສຢາກຮູ້ເພື່ອນຳໄປສູ່ການແກ້ບັນຫາຫຼືພັດທະນາຢ່າງເປັນຮູບປະທຳແລະຕ້ອງການດຳເນີນການຕາມຂະບວນການວິໄຈເພື່ອໃຫ້ໄດ້ຄຳຕອບເຊັ່ນດຽວກັນພຽງແຕ່ອາດມີຂັ້ນຕອນຫຼືຂະບວນການທີ່ລັດລົງດັ່ງກ່າວມາແລ້ວໂດຍເປັນບັນຫາທີ່ແຄບກວ່າຄືສະເພາະໃນຫ້ອງຮຽນຫຼືໃນສະຖານະການທີ່ຄູປະສົບການໂດຍກົງເຊິ່ງຄຳວ່າບັນຫາການວິໄຈ(Research Problem) ອາດເຂົ້າໃຈຜິດວ່າເປັນບັນຫາ ຫຼື ອຸປະສັກໃນການດຳເນີນການວິໄຈເພາະແປມາຈາກພາສາອັງກິດ ແຕ່ໃນການວໄຈ ຫຼື ວິໄຈໃນຫ້ອງຮຽນໝາຍເຖິງ ຄວາມສົງໄສຂອງນັກວິໄຈ ຫຼື ຄູ ເຊິ່ງເປັນຫົວຂໍ້ ຫຼື ເລື່ອງທີ່ກຽມຈະເຮັດວິໄຈເພື່ອແກ້ບັນຫາ ຫຼື ພັດທະນາຜູ້ຮຽນ

ບັນຫາໝາຍເຖິງ ຄວາມແຕກຕ່າງລະຫວ່າງສະພາບທີ່ຄາດຫວັງ ແລະ ສະພາບທີ່ເປັນຈິງທີ່ເກີດຂຶ້ນດັ່ງສະແດງໃນຕົວຢ່າງຂ້າງລຸ່ມນີ້:

ຕົວຢ່າງ: ຄວາມແຕກຕ່າງລະຫວ່າງສະພາບທີ່ຄາດຫວັງ ແລະ ສະພາບທີ່ເປັນຈິງ

ສະພາບທີ່ຄາດຫວັງນັກຮຽນໝົດທຸກຄົນໃນຊັ້ນປ4 ຫານເລກສອງຖ້ານໄດ້




ແຜນວາດທີ 12 ສະແດງຄວາມແຕກຕ່າງລະຫວ່າງສະພາບທີ່ຄາດຫວັງແລະສະພາບທີ່ເປັນຈິງ

ທີ່ມາ ກະຊວງສຶກສາທິການ, ກົມສ້າງຄູ. ປຶ້ມແບບຮຽນວິໄຈພາກປະຕິບັດ, 2009

ນັກຮຽນທຸກຄົນໃນຊັ້ນປ4 ຫານເລກສອງຖ້ານໄດ້ (ສະພາບທີ່ຄາດຫວັງ) ບັນຫາຄືມີນັກຮຽນ 50% ຫານເລກສອງຖ້ານບໍ່ໄດ້ (ສະພາບທີ່ເປັນຈິງ ຖ້າເສັ້ນສະພາບທີ່ຄາດຫວັງກັບເສັ້ນສະພາບທີ່ເປັນຈິງເຕັງກັນກໍ່ຈະບໍ່ມີສະພາບທີ່ເປັນບັນຫາ

**2) ທີ່ມາຂອງບັນຫາການວິໄຈໃນຫ້ອງຮຽນ**

ທີ່ມາຂອງບັນຫາຈະໄດ້ໂດຍກົງຈາກປະສົບການໃນຫ້ອງຮຽນ ແລະ ມີຂອບເຂດຂອງການວິໄຈນ້ອຍກວ່າການວິໄຈທົ່ວໄປແຕ່ຄູສາມາດໄດ້ບັນຫາເລື່ອງທີ່ຈະດຳເນີນການວິໄຈໄດ້ງ່າຍກວ່າ ເພາະຄູເຫັນບັນຫາໂດຍກົງດ້ວຍຕົນ ເອງ ຈຶ່ງເຂົ້າໃຈໄດ້ລະອຽດເລິກເຊິ່ງ ສາມາດກຳນົດບັນຫາໄດ້ງ່າຍ ແລະ ໄວກວ່າ ສ່ວນການວິໄຈທົ່ວໄປເຖິງຈະມີທີ່ມາຫຼາຍບ່ອນເພື່ອສຶກສາບັນຫາວິໄຈຫຼາຍກວ່າແຕ່ກໍ່ໄດ້ເລື່ອງທີ່ຈະດຳເນີນການວິໄຈໄດ້ຍາກ ແລະ ຊ້າກວ່າສະເໝີ ດັ່ງນັ້ນ, ໃນການດຳເນີນການວິໄຈໃນຫ້ອງຮຽນຊ່ວຍປະຫຍັດເວລາໃນການສຶກສາບັນຫາລົງໄດ້ ເຊິ່ງຖືເປັນຂັ້ນຕອນ ການວິໄຈທີ່ສຳຄັນທີ່ສຸດ ໃນການກຳນົດບັນຫາເນັ້ນໃຊ້ວິທີພິຈາລະນາປຽບທຽບລະຫວ່າງສະພາບທີ່ຄວນຈະເປັນກັບສະພາບທີ່ເກີດຂຶ້ນຈິງວ່າມີຊ່ອງຫວ່າງ (Gap)ໜ້ອຍຫຼາຍປານໃດ ຖ້າແຕກຕ່າງກັນຫຼາຍກໍ່ສະແດງວ່າເປັນບັນຫາ ຫຼາຍ ຫຼື ໃນກໍລະນີບໍ່ເກີດບັນຫາອາດຫາທາງປ້ອງກັນບໍ່ໃຫ້ເກີດ ຫຼື ພັດທະນາໃຫ້ດີຂຶ້ນກໍ່ໄດ້ ໂດຍເອີ້ນວ່າບັນຫາປະເພດຂັດຂ້ອງ ປະເພດປ້ອງກັນ ແລະ ປະເພດພັດທະນາ

**3.11.2 ການວິເຄາະສະພາບບັນຫາທີ່ເກີດຂຶ້ນໃນຫ້ອງຮຽນ**

ສະພາບບັນຫາທີ່ເກີດຂຶ້ນໃນຫ້ອງຮຽນຄືປະກົດການຫຼືສິ່ງຕ່າງໆທີ່ເກີດຂຶ້ນໃນຫ້ອງຮຽນຫຼືສິ່ງທີ່ເກີດກັບຜູ້ຮຽນເຊິ່ງເປັນບັນຫາທີ່ສົ່ງຜົນໃຫ້ການຮຽນ-ການສອນບໍ່ບັນລຸເປົ້າໝາຍຕາມທີ່ກຳນົດສິ່ງທີ່ສັງເກດເຫັນດັ່ງກ່າວຈະນຳ

ໄປເຖິງການກຳນົດຂໍ້ສົງໄສວ່າ "ມີຫຍັງແນ່ເກີດຂຶ້ນ" ສິ່ງນັ້ນກໍ່ໃຫ້ເກີດບັນຫາຫຍັງແນ່ "ເປັນຫຍັງຈຶ່ງເປັນເຊັ່ນນັ້ນ" "ເປັນຫຍັງຈຶ່ງບໍ່ເປັນໄປຕາມທີ່ຄວນຈະເປັນ" "ຂ້ອຍສາມາດເຮັດຫຍັງໄດ້ແດ່" ຂໍ້ສົງໄສທີ່ກຳນົດໃນລັກສະນະຄຳຖາມທີ່ກວ້າງນີ້ເຮັດໃຫ້ຄູເກີດຄວາມສົນໃຈທີ່ຈະຄົ້ນຫາຄຳຕອບແລະເຮັດການສຶກສາເພື່ອໃຫ້ຕົນເອງມີຄວາມເຂົ້າໃຈໃນສິ່ງຕ່າງໆທີ່ເກີດຂຶ້ນ

ການວິເຄາະສະພາບບັນຫາໃນຫ້ອງຮຽນຈຶ່ງເປັນຂັ້ນຕອນສຳຄັນທີ່ຄູແຕ່ລະຄົນຕ້ອງເຮັດການສຳຫຼວດຫຼືສຶກສາວ່າມີຫຍັງເກີດຂຶ້ນໃນຫ້ອງຮຽນສິ່ງນັ້ນເປັນບັນຫາຫຼືບໍ່ແລະຫາກສະພາບທີ່ເກີດຂຶ້ນໃນຫ້ອງຮຽນສະແດງເຖິງບັນຫາຫຼາຍຢ່າງທີ່ຕ້ອງການແກ້ໄຂຄູກໍ່ຈຳເປັນຕ້ອງຈັດລຳດັບຄວາມສຳຄັນກ່ອນ-ຫຼັງຂອງບັນຫາເລົ່ານັ້ນ

**1) ປະເດັນໃນການວິເຄາະສະພາບບັນຫາ**

ຄູນັກວິໄຈຄວນຕັ້ງຄຳຖາມກັບຕົນເອງຫຼັງຈາກສັງເກດເຫັນບັນຫາທີ່ເກີດຂຶ້ນໃນຫ້ອງຮຽນທີ່ຕົນເອງຮັບຜິດຊອບດັ່ງຕໍ່ໄປນີ້:

1. ບັນຫາທີ່ເກີດຂຶ້ນແມ່ນຫຍັງ
2. ບັນຫາທີ່ເກີດຂຶ້ນເປັນບັນຫາຂອງໃຜ
3. ບັນຫາທີ່ເກີດຂຶ້ນສົ່ງຜົນກະທົບຕໍ່ໃຜແລະສິ່ງໃດແນ່
4. ບັນຫາທີ່ເກີດຂຶ້ນມີຄວາມສຳຄັນໃນລະດັບໃດເມື່ອທຽບກັບບັນຫາອື່ນບັນຫາໃດສຳຄັນກວ່າກັນ
5. ບັນຫາທີ່ເກີດຂຶ້ນກ່ຽວຂ້ອງສຳພັນກັບບັນຫາຫຼືເຫດການອື່ນໆມີຫຍັງແນ່ແລະແບບໃດ?
6. ໃຜຄືຜູ້ຮັບຜິດຊອບຫຼັກໃນການແກ້ໄຂບັນຫາດັ່ງກ່າວແລະການແກ້ໄຂບັນຫານັ້ນຕ້ອງກ່ຽວຂ້ອງກັບໃຜແນ່ແນວໃດ?

**2) ການໃຊ້ປະໂຫຍດຈາກຜົນການວິເຄາະສະພາບບັນຫາ**

ຜົນທີ່ໄດ້ຈາກການວິເຄາະສະພາບບັນຫານີ້ນຳໄປເຖິງການກຳນົດຄຳຖາມວິໄຈທີ່ສອດຄ່ອງກັບສະພາບການທີ່ເກີດຂຶ້ນໃນຫ້ອງຮຽນເຮັດໃຫ້ຜູ້ວິໄຈສາມາດຕັດສິນໃຈໃນການວາງແຜນການວິໄຈດັ່ງນີ້:

1. ສະພາບບັນຫາທີ່ເກີດຂຶ້ນນຳໄປເຖິງການກຳນົດຄຳຖາມວິໄຈໄດ້ຫຼາຍຄຳຖາມທີ່ບໍ່ຄືກັນການວິເຄາະສະບັນຫາຈະເຮັດໃຫ້ຮູ້ວ່າຄຳຖາມວິໄຈໃດມີຄວາມສຳຄັນທີ່ສຸດຫຼືຮີບດ່ວນທີ່ສຸດທີ່ຕ້ອງນຳມາຫາຄຳຕອບກ່ອນ

2. ສະພາບບັນຫາທີ່ເກີດຂຶ້ນອາດເກີດຂຶ້ນກັບນັກຮຽນທັງຫ້ອງຫຼືເກີດກັບນັກຮຽນບາງຄົນການວິເຄາະບັນຫາເຮັດໃຫ້ຜູ້ວິໄຈຕັດສິນໃຈໄດ້ວ່າກຸ່ມເປົ້າໝາຍຂອງການສຶກສາຄັ້ງນັ້ນແມ່ນໃຜ

3. ສະພາບບັນຫາທີ່ເກີດຂຶ້ນບາງຄັ້ງຄູຄົນດຽວແກ້ໄຂບໍ່ໄດ້ຕ້ອງອາໃສເພື່ອນຄູຄົນອື່ນຫຼືຜູ້ກ່ຽວຂ້ອງຫຼືນັກວິຊາການພາຍນອກມາຮ່ວມກັນວາງແຜນການແກ້ໄຂບັນຫາ ດັ່ງນັ້ນຄູຜູ້ທີ່ກຳລັງເຮັດການວິໄຈຈະມີຂໍ້ມູນຕັດສິນໃຈວ່າໃນການເຮັດວິໄຈນັ້ນສົມຄວນໃຊ້ຮູບແບບການວິໄຈແບບໃດຈຳເປັນຕ້ອງເຊີນບຸກຄົນພາຍນອກມາຊ່ວຍໃຫ້ຄຳແນະນຳຫຼືບໍ່ເຊັ່ນການໃຊ້ຮູບແບບການຈັດການຮຽນ-ການສອນແບບເນັ້ນຜູ້ຮຽນເປັນສູນກາງຖ້າຄູບໍ່ຮູ້ວ່າຈະຈັດການຮຽນຮູ້ແບບໃດກໍ່ຕ້ອງລະດົມຄວາມຄິດຈາກຜູ້ກ່ຽວຂ້ອງທັງໝົດການວິໄຈທີ່ເໝາະສົມສຳລັບກໍລະນີນີ້ກໍ່ຈະເປັນການວິໄຈພາກປະຕິບັດແບບຮ່ວມມື

4. ໃນບາງຄຳຖາມວິໄຈຈຳເປັນຕ້ອງແກ້ໄຂໃນລະດັບກວ້າງຫຼືເຮັດໃນລະດັບໂຮງຮຽນບໍ່ແມ່ນເປັນບັນຫາທີ່ແກ້ໄຂໄດ້ໃນຫ້ອງຮຽນນັ້ນເຊັ່ນບັນຫາໃນການຮຽນຄະນິດສາດຖ້າຜູ້ຮຽນມີພື້ນຖານອ່ອນອັນເນື່ອງມາຈາກການຈັດຂະບວນ

ການຮຽນຮູ້ກ່ອນໜ້ານັ້ນການແກ້ໄຂສະເພາະລາຍບຸກຄົນບໍ່ໄດ້ກຳຈັດຕົ້ນເຫດຂອງບັນຫາໃຫ້ໝົດໄປໄດ້ອາດຈຳເປັນຕ້ອງແກ້ໄຂໂດຍປະຕິຮູບການຮຽນຮູ້ກ່ຽວກັບການສອນຄະນິດສາດໃໝ່ທັງໝົດລັກສະນະຂອງການວິໄຈຈຶ່ງໜ້າຈະເປັນການວິໄຈພາກປະຕິບັດແບບເຮັດໃນລະດັບໂຮງຮຽນ

**3) ການຕັ້ງຂໍ້ສົງໄສ**

ຄູຕ້ອງເປັນຄົນມັກສັງເກດແລ້ວສະທ້ອນຄືນສິ່ງທີ່ສັງເກດເຫັນຕັ້ງເປັນຂໍ້ສົງໄສໂດຍການຖາມຕົນເອງດັ່ງຕົວຢ່າງຕໍ່ໄປນີ້

1. ທ່ານມີຂໍ້ສົງໄສຫຍັງແນ່ກ່ຽວກັບການສອນແລະການຮຽນຮູ້ຂອງນັກຮຽນຂອງທ່ານ

2. ສິ່ງທີ່ເຮັດໃຫ້ທ່ານສົງໄສວ່າເປັນບັນຫາໃນຫ້ອງຮຽນຂອງທ່ານເປັນເລື່ອງທີ່ກ່ຽວຂ້ອງກັບເນື້ອຫາສາລະຫຼືການຈັດການຮຽນ-ການສອນ

3. ລັກສະນະແບບໃດແດ່ໃນການຮຽນຮູ້ຂອງນັກຮຽນທີ່ທ່ານຢາກສ້າງຄວາມເຂົ້າໃຈໃຫ້ດີຂຶ້ນ

4. ທ່ານຮູ້ຫຍັງແນ່ກ່ຽວກັບການສອນຂອງທ່ານແລະກ່ຽວກັບການຮຽນຮູ້ຂອງນັກຮຽນເຊິ່ງທ່ານຕ້ອງການກວດກາ

**3.11.3 ການຕັ້ງຄຳຖາມວິໄຈ**

ຄຳຖາມວິໄຈເປັນການກຳນົດປະເດັນຂໍ້ສົງໄສທີ່ຕ້ອງການຄົ້ນຫາຄຳຕອບໂດຍນັກຂຽນຢູ່ໃນຮູບປະໂຫຍກທີ່ເປັນຄຳຖາມທີ່ມີຄວາມສະເພາະເຈາະຈົງສາມາດສັງເກດສຳຫຼວດແລະສຶກສາວິໄຈໄດ້

**1) ເກນການກຳນົດຄຳຖາມວິໄຈ**

1. ການຕັ້ງຄຳຖາມວິໄຈບໍ່ຄວນໃຊ້ຄຳຖາມYes/Noແຕ່ຄວນໃຊ້ຄຳຖາມ 'ເປັນຫຍັງຢ່າງໃດແມ່ນຫຍັງ"

2. ມີຄວາມໜ້າສົນໃຈຈະສຶກສາຫຼືຄວນນຳມາສຶກສາເພື່ອຊ່ວຍນັກຮຽນທີ່ມີບັນຫາ

3. ຄຳຖາມວິໄຈນັ້ນມີຄວາມສຳຄັນທັງຕໍ່ຄູຜູ້ສອນແລະຜູ້ຮຽນ

4. ຄຳຖາມວິໄຈນັ້ນສາມາດຈັດການໃຫ້ຢູ່ພາຍໃຕ້ການຄວບຄຸມຂອງຜູ້ວິໄຈໄດ້ແລະສາມາດຕັດສິນໃຈເຮັດສິ່ງໃດກໍ່ໄດ້ຕາມຂໍ້ຄົ້ນພົບ

5. ຄຳຖາມວິໄຈນັ້ນມີຄວາມເປັນໄປໄດ້ໃນການເຮັດເໝາະສົມກັບເວລາຊັບພະຍາກອນໃນໄລຍະທຳອິດຄວນຄິດເຖິງການເຮັດວິໄຈໃນປະເດັນນ້ອຍໆ(small scale)ເຊິ່ງຢູ່ໃນກຳລັງຄວາມສາມາດທີ່ສາມາດເຮັດໃຫ້ສຳເລັດໄດ້

6. ບໍ່ເລືອກບັນຫາວິໄຈທີ່ຄູຫຼືຜູ້ກ່ຽວຂ້ອງບໍ່ສາມາດເຮັດສິ່ງໃດໄດ້ເຖິງຈະຮູ້ຄຳຕອບ

**ສະຫຼຸບການຄັດເລືອກຄຳຖາມວິໄຈຄວນມີການຖາມຄຳຖາມຕົນເອງ ດັ່ງນີ້**

ກ. ຄຳຖາມນັ້ນມີຄວາມສຳຄັນກັບທ່ານຫຼາຍປານໃດ

ຂ. ຄຳຖາມນັ້ນເກີດປະໂຫຍດຕໍ່ນັກຮຽນຫຼາຍປານໃດ

ຄ. ໂອກາດໃນການສຳຫຼວດຂໍ້ມູນມີໜ້ອຍຫຼາຍປານໃດ

ງ. ໃຜແນ່ທີ່ສາມາດຊ່ວຍໃນການເຮັດວິໄຈນີ້ໄດ້

ຈ. ທ່ານສາມາດຈັດການເລື່ອງເວລາໃນການວິໄຈເລື່ອງນັ້ນໄດ້ໜ້ອຍຫຼາຍປານໃດ

**2) ລະດັບຂອງຄຳຖາມວິໄຈ**

1. ການວິໄຈລະດັບທີ່ໜຶ່ງ(first-order research)ເປັນການສຶກສາວິໄຈເພື່ອຕອບຄຳຖາມວ່າ "ໃຜເຮັດຫຍັງ" "ໄດ້ຜົນແບບໃດ" ດັ່ງຕົວຢ່າງ

ກ. ນັກຮຽນມີຄວາມກ້າວໜ້າຫຼາຍປານໃດຫຼັງຈາກໃຊ້ກິດຈະກຳການຟັງແບບທີ່ຄູນຳມາທົດລອງໃຊ້

ຂ. ກິດຈະກຳແບບໃດທີ່ເຮັດໃຫ້ນັກຮຽນຮຽນຮູ້ໄດ້ດີທີ່ສຸດ

2. ການວິໄຈລະດັບທີສອງ (second-order research) ເປັນການສຶກສາວິໄຈເພື່ອຕອບຄຳຖາມວ່າ 'ຄົນຮັບຮູ້ສິ່ງທີ່ຕົນເອງເຮັດແນວໃດ" (ສຶກສາຄວາມຄິດຂອງຄົນຕໍ່ສິ່ງທີ່ເກີດຂຶ້ນ) ຄຳຖາມວິໄຈລະດັບທີສອງໃຫ້ຂໍ້ມູນທີ່ມີຄວາມລະອຽດແລະມີຄວາມເລິກເຊິ່ງກວ່າຄຳຖາມວິໄຈແບບທຳອິດຕົວຢ່າງເຊັ່ນ:

3. ນັກຮຽນມັກກິດຈະກຳການຮຽນ-ການສອນແບບໃດເປັນຫຍັງຈຶ່ງເປັນເຊັ່ນນັ້ນ (ຄຳຖາມນີ້ເຮັດໃຫ້ເຂົ້າໃຈຄວາມຄິດຂອງນັກຮຽນເຊິ່ງຄວາມຄິດຂອງນັກຮຽນອາດຈະບໍ່ຄືກັບຄວາມຄິດຂອງຄູ)

**3) ວິທີການເຮັດໃຫ້ໄດ້ຄຳຖາມວິໄຈທີ່ດີ**

ການຕັ້ງຄຳຖາມວິໄຈທີ່ດີໄດ້ຕ້ອງອາໄສຂະບວນການຕໍ່ໄປນີ້

1. ເຝິກເປັນຄົນຊ່າງສັງເກດ

2. ສ້າງນິໄສຮັກການອ່ານໂດຍສະເພາະການອ່ານເນື້ອໃນທີ່ກ່ຽວກັບບັນຫາຂອງນັກຮຽນແລະວິທີການແກ້ໄຂບັນຫາ

3. ເຝິກຕັ້ງຂໍ້ສົງໄສແລະຕັ້ງຄຳຖາມວິໄຈທົດລອງຕັ້ງຄຳຖາມແລະຄາດເດົາຄຳຕອບ

4. ຫາເວລາສະທ້ອນຄວາມຄິດກັບເພື່ອນຢ່າງສະໝ່ຳສະເໝີເພື່ອກວດກາຄວາມຄິດຂອງຕົນເອງໂດຍສະເພາະຄວາມສົມເຫດສົມຜົນຂອງຄຳຖາມວິໄຈ

5. ສາມາດປັບຄຳຖາມວິໄຈລະຫວ່າງການຮຽນ-ການສອນໃຫ້ເໝາະສົມກວ່າເກົ່າໄດ້ (ຖ້າຈຳເປັນ)

**4) ເກນການເລືອກຄຳຖາມວິໄຈມາສຶກສາ**

ໃນການເລືອກຄຳຖາມວິໄຈມາສຶກສາຜູ້ວິໄຈຕ້ອງເລືອກໂດຍມີຫຼັກເກນດັ່ງຕໍ່ໄປນີ້:

1. ບັນຫາຂອງນັກຮຽນທຸກຄົນຕ້ອງໄດ້ຮັບຄວາມສົນໃຈຈາກຄູໃນການແກ້ໄຂຢ່າງເທົ່າທຽມກັນ

2. ຜົນການວິໄຈຂອງຄູຕ້ອງເກີດປະໂຫຍດກັບຫ້ອງຮຽນຫຼືໂຮງຮຽນ

3. ຄຳຖາມວິໄຈທີ່ເລືອກມາສຶກສາຕ້ອງຄຳນຶງເຖິງຈະລິຍະທຳຂອງການວິໄຈບໍ່ສົ່ງຜົນກະທົບຕໍ່ຜູ້ໃດ

4. ຄຳຖາມວິໄຈນັ້ນສາມາດໃຊ້ຂໍ້ມູນທີ່ມີຢູ່ແລ້ວໃນຫ້ອງຮຽນບໍ່ຈຳເປັນຕ້ອງເກັບໃໝ່ຈົນກະທົບການຮຽນ-ການສອນຫຼືບໍ່ກ່ຽວກັບການຮຽນ-ການສອນໃນເວລານັ້ນຫາກຈຳເປັນຕ້ອງເກັບໃໝ່ເພີ່ມເຕີມກໍ່ຄວນວາງແຜນໃຫ້ເໝາະສົມ

**ຕົວຢ່າງຂອງປະເດັນຄຳຖາມວິໄຈທີ່ມີຄວາມເໝາະສົມ**

ກ. ຂ້ອຍຕ້ອງການພັດທະນາຄຸນະພາບຂອງທັກສະການຂຽນພາສາອັງກິດຈະສາມາດເຮັດໄດ້ແນວໃດ?

ຂ. ຖ້າມີວິທີການພັດທະນາການຮຽນຮູ້ຂອງຜູ້ຮຽນຢູ່ສອງວິທີຄວນໃຊ້ວິທີໃດຈຶ່ງຈະ ເໝາະສົມກວ່າກັນ

ຄ. ຂ້ອຍຢາກນຳຄອມພິວເຕີຊ່ວຍສອນມາໃຊ້ໃນການສອນຄະນິດສາດຈະຮູ້ໄດ້ແນວໃດວ່າວິທີດັ່ງກ່າວໄດ້ຜົນ?

ງ. ເປັນຫຍັງນັກຮຽນຈຶ່ງບໍ່ສົນໃຈຢາກຮຽນມີວິທີສ້າງນິໄສດັ່ງກ່າວໄດ້ແນວໃດ?

ຈ. ຈະເຮັດໃຫ້ນັກຮຽນເຫັນໂທດຂອງຢາເສບຕິດແລະຫຼີກໜີຈາກສິ່ງເສບຕິດໄດ້ແນວໃດ?

**ຕົວຢ່າງຂອງປະເດັນຄຳຖາມວິໄຈທີ່ມີຄວາມສົນໃຈໜ້ອຍກວ່າ**

ກ. ນັກຮຽນທີ່ຂາດໂຮງຮຽນມີພູມຫຼັງທາງຄອບຄົວແບບໃດ?

ຂ. ຈຳນວນນັກຮຽນທີ່ມີຄອບຄົວແຕກແຍກມີນີຈັກຄອບຄົວ?

ຄ. ມີສາເຫດຫຍັງແນ່ທີ່ນັກຮຽນມາໂຮງຮຽນຊ້າ ?

ງ. ນັກຮຽນມາໂຮງຮຽນຊ້າມີຈຳນວນຫຼາຍປານໃດ?

ຈ. ຄວາມສຳພັນລະຫວ່າງເວລາໃນການມາໂຮງຮຽນກັບເດັກທີ່ພໍ່ແມ່ຫຍ່າຮ້າງກັນມີລັກສະນະແບບໃດ?

ສ. ປະລິມານຂອງເວລາທີ່ເດັກໃຊ້ໃນຫ້ອງຮຽນສຳພັນກັບຜົນສຳເລັດທາງການຮຽນຫຼືບໍ່?

ຊ. ເປັນຫຍັງນັກຮຽນມັກນຳອຸປະກອນການຮຽນມາບໍ່ຄົບ?

ກະລຸນາສັງເກດວ່າຄຳຖາມຫຼືປະເດັນວິໄຈໃນກຸ່ມຫຼັງມີຄວາມເໝາະສົມນ້ອຍກວ່າກຸ່ມທຳອິດເນື່ອງຈາກຂໍ້ຄົ້ນພົບທີ່ໄດ້ບໍ່ໄດ້ມີສ່ວນປັບປຸງແກ້ໄຂສິ່ງໃດໃຫ້ດີຂຶ້ນໄດ້ດີເທົ່າທີ່ຄວນປານໃດນອກຈາກນີ້ຫຼາຍຄຳຖາມກໍ່ມີຄຳຕອບໃນດ້ານທິດສະດີຢູ່ແລ້ວບໍ່ຈຳເປັນຕ້ອງສຶກສາອີກເຊັ່ນຄຳຖາມວິໄຈຂໍ້ທີ 1, 2 ເຊິ່ງເປັນຄຳຖາມທີ່ກ່ຽວຂ້ອງກັບພູມຫຼັງທາງຄອບຄົວຂອງນັກຮຽນການຮູ້ສະຖິຕິຂອງນັກຮຽນທີ່ມີຄອບຄົວແຕກແຍກຈະເກີດປະໂຫຍດຕໍ່ນັກຮຽນຂ້ອນຂ້າງໜ້ອຍການຮູ້ວ່ານັກຮຽນທີ່ພໍ່ແມ່ແຕກແຍກຈະສົ່ງຜົນຕໍ່ອັດຕາການມາໂຮງຮຽນຂອງນັກຮຽນຫຼືການຮຽນຂອງນັກຮຽນກໍ່ບໍ່ສາມາດຊ່ວຍຫຍັງໄດ້ຫຼາຍປານໃດຄຳຖາມປະເພດນີ້ເປັນຄຳຖາມທີ່ແມ່ນຈະຮູ້ຄຳຕອບແລ້ວຄູກໍ່ບໍ່ມີບົດບາດຫຼາຍໃນການເຂົ້າໄປແກ້ໄຂແລະກໍ່ບໍ່ແມ່ນໜ້າທີ່ຂອງຄູທີ່ເຂົ້າໄປເຮັດໃຫ້ພໍ່ແມ່ຂອງນັກຮຽນຄືນດີກັນຂໍ້ມູນແບບນີ້ໂຮງຮຽນຈຳເປັນຕ້ອງມີການຈັດເກັບເພື່ອໃຫ້ເຂົ້າໃຈສະພາບຂອງນັກຮຽນແຕ່ບໍ່ແມ່ນນຳມາກຳນົດເປັນຄຳຖາມວິໄຈຫຼັກຄຳຖາມວິໄຈທີ່ໜ້າຈະເປັນປະໂຫຍດຫຼາຍກວ່າຄືຄູຈະໃຊ້ວິທີການແບບໃດໃນການແກ້ໄຂບັນຫາດ້ານການຮຽນສຳລັບນັກຮຽນທີ່ມີບັນຫາທາງບ້ານແລະວິທີທີ່ນຳມາໃຊ້ໄດ້ຜົນຫຼາຍປານໃດ

**ຕົວຢ່າງ**

ທັກສະພື້ນຖານທາງດ້ານການອ່ານເປັນທັກສະທີ່ຈຳເປັນຢ່າງຍິ່ງສຳລັບນັກຮຽນຊັ້ນປະຖົມສຶກສາປີທີ1 ຈາກການສຶກສາຫາຂໍ້ບົກຜ່ອງໃນການອ່ານຂອງນັກຮຽນຊັ້ນປະຖົມສຶກສາປີທີ1 ມີກຸ່ມນັກຮຽນທີ່ຍັງບໍ່ສາມາດອ່ານແລະສະກົດຄຳໄດ້ຖືກຕ້ອງຢູ່ເປັນຈຳນວນຫຼາຍເຮັດໃຫ້ເກີດບັນຫາໃນການຮຽນ-ການສອນໃນຊັ້ນຮຽນແລະນັກຮຽນບໍ່ສາມາດຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມຈາກການອ່ານໄດ້ໂດຍນັກຮຽນກຸ່ມນີ້ສ່ວນໃຫຍ່ບໍ່ສາມາດບອກຮູບສະຫຼະທີ່ປະສົມຢູ່ກັບຄຳໄດ້ໂດຍສະເພາະສະຫຼະປະສົມ

**ການວິເຄາະສະພາບບັນຫາ**

1. ບັນຫາທີ່ເກີດຂຶ້ນແມ່ນຫຍັງ

**ຕອບ:** ນັກຮຽນມີຂໍ້ບົກຜ່ອງດ້ານທັກສະການອ່ານ

ນັກຮຽນຄົ້ນຄວ້າຄວາມຮູ້ເພີ່ມເຕີມບໍ່ໄດ້

2. ບັນຫາທີ່ເກີດຂຶ້ນເປັນບັນຫາຂອງໃຜ

**ຕອບ**: ເປັນບັນຫາຂອງນັກຮຽນສ່ວນໃຫຍ່ໃນຫ້ອງ

3. ບັນຫາທີ່ເກີດຂຶ້ນສົ່ງຜົນກະທົບຕໍ່ໃຜແນ່

**ຕອບ**: ສິ່ງຜົນກະທົບຕໍ່ການສອນທີ່ກ່ຽວຂ້ອງກັບຄູເຮັດໃຫ້ການຝຶກໃຫ້ນັກຮຽນຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມນອກຫ້ອງຮຽນມີບັນຫາ

4. ບັນຫາທີ່ເກີດຂຶ້ນມີຄວາມສຳຄັນໃນລະດັບໃດ

**ຕອບ**: ມີຄວາມສຳຄັນຫຼາຍເພາະເຮັດໃຫ້ນັກຮຽນຫາຄວາມຮູ້ເພີ່ມເຕີມບໍ່ໄດ້

5. ບັນຫາທີ່ເກີດຂຶ້ນກ່ຽວຂ້ອງສຳພັນກັບບັນຫາຫຼືເຫດການອື່ນໆອັນໃດແດ່ແບບໃດ

**ຕອບ:** ຜູ້ວິໄຈລະບຸວ່າເປັນບັນຫາສືບເນື່ອງມາຈາກການບອກຮູບສະຫຼະທີ່ປະສົມຢູ່ກັບຄຳບໍ່ໄດ້

6. ໃຜຄືຜູ້ຮັບຜິດຊອບຫຼັກໃນການແກ້ໄຂບັນຫາດັ່ງກ່າວແລະການແກ້ໄຂບັນຫານັ້ນຕ້ອງກ່ຽວຂ້ອງກັບໃຜແດ່

**ຕອບ**: ຄູທີ່ສອນທັກສະການອ່ານ

**ການຕັ້ງຄຳຖາມວິໄຈ**

**ຄຳຖາມວິໄຈທີ່ບໍ່ເໝາະສົມ**

1. ນັກຮຽນມີບັນຫາກ່ຽວກັບທັກສະພື້ນຖານການອ່ານຫຼືບໍ່
2. ຈິງຫຼືບໍ່ທີ່ນັກຮຽນຄົ້ນຄວ້າຄວາມຮູ້ເພີ່ມເຕີມນອກຫ້ອງຮຽນບໍ່ໄດ້ເນື່ອງຈາກນັກຮຽນມີບັນຫາດ້ານທັກສະການອ່ານ

**ຄຳຖາມວິໄຈທີ່ມີປະໂຫຍດໃນການສຶກສາຫຼາຍກວ່າ**

1. ແມ່ນຫຍັງຄືສາເຫດທີ່ເຮັດໃຫ້ນັກຮຽນມີບັນຫາດ້ານການອ່ານ
2. ນັກຮຽນມີພຶດຕິກຳການຄົ້ນຄວ້ານອກຫ້ອງຮຽນຢູ່ໃນລະດັບໃດມີອົງປະກອບຫຍັງແດ່ທີ່ອະທິບາຍພຶດຕິກຳການຄົ້ນຄວ້ານອກຫ້ອງຮຽນ
3. ທັກສະການອ່ານມີຄວາມສຳພັນກັບການຄົ້ນຄວ້າເພີ່ມເຕີມນອກຫ້ອງຮຽນໜ້ອຍ-ຫຼາຍປານໃດ
4. ແນວທາງການແກ້ໄຂຂໍ້ບົກຜ່ອງດ້ານການອ່ານມີຫຍັງແດ່ວິທີທີ່ເໝາະສົມກັບນັກຮຽນໃນຫ້ອງນີ້ແມ່ນຫຍັງ
5. ວິທີທີ່ນຳມາໃຊ້ໄດ້ຜົນຫຼາຍປານໃດເປັນຫຍັງຈຶ່ງເປັນເຊັ່ນນັ້ນ
6. ພຶດຕິກຳຂອງນັກຮຽນປ່ຽນໄປແນວໃດແດ່ຫຼັງຈາກທັກສະການອ່ານໄດ້ຮັບການພັດທະນາຂຶ້ນ

ການຕັ້ງຄຳຖາມວິໄຈມີຄວາມສຳຄັນຫຼາຍຕໍ່ການວິໄຈຂອງຄູເນື່ອງຈາກຄຸນຄ່າຂອງການວິໄຈຈະມີຫຼາຍຫຼືໜ້ອຍຂຶ້ນຢູ່ກັບຄຸນນະພາບຂອງຄຳຖາມວິໄຈທີ່ກຳນົດຂຶ້ນຢ່າງໃດກໍ່ຕາມສຳລັບຄູທີ່ເລີ່ມເຮັດວິໄຈບໍ່ຄວນຈະກຸ້ມໃຈວ່າຄຳຖາມວິໄຈຂອງຕົນຈະເໝາະສົມໜ້ອຍ-ຫຼາຍປານໃດແລະວິທີການຕັ້ງຄຳຖາມຖືກຕ້ອງຫຼືບໍ່ເພາະຂະບວນການວິໄຈພາກປະຕິບັດໃນຫ້ອງຮຽນເປີດໂອກາດໃຫ້ຜູ້ກ່ຽວຂ້ອງວິພາກວິຈານງານວິໄຈຂອງຄູຫາກຄູມີຄວາມກ້າທີ່ຈະເຮັດວິໄຈກ້າເປີດຮັບຄວາມຄິດຂອງຜູ້ອື່ນແລະບໍ່ຢ້ານທີ່ຈະຖືກຈານຄຳຖາມວິໄຈຂອງຄູຈະໄດ້ຮັບການພັດທະນາໃຫ້ດີຂຶ້ນໄດ້ໃນທີ່ສຸດ

## ຕົວຢ່າງ

ຈາກການຮຽນການສອນໃນທຸກຊົ່ວໂມງ ຂ້າພະເຈົ້າເຫັນວ່ານັກຮຽນສ່ວນຫຼາຍມີບັນຫາໃນເລື່ອງການເຂົ້າ ແຖວສົ່ງລາຍງານ ຫຼື ເຂົ້າແຖວເຮັດກິດຈະກຳຕ່າງໆ ໂດຍນັກຮຽນມັກຈະຊິງກັນຢູ່ຂ້າງໜ້າ ມີການແຊງກັນລະ ຫວ່າງການເຂົ້າແຖວ ບາງທີກໍ່ເກີດການຜິດຖຽງກັນ ໂດຍບໍ່ຄຳນຶງເຖິງການມາກ່ອນມາຫຼັງ ຂ້າພະເຈົ້າຈຶ່ງຈຳເປັນ ຕ້ອງເວົ້າກັບນັກຮຽນເລື່ອງການເຂົ້າແຖວທຸກຄັ້ງທີ່ມີນັກຮຽນມາຟ້ອງ ແລະ ຕ້ອງຄອຍຢືນເວົ້າທຸກຄັ້ງຈຶ່ງຈະເປັນ ລະບຽບ ເຊິ່ງເຮັດໃຫ້ເສຍເວລາໃນການຮຽນ-ການສອນ ເປັນພາບທີ່ບໍ່ໜ້າເບິ່ງ ແລະ ເປັນການຂາດລະບຽບວິໄນ ໃນການເຂົ້າແຖວ (ອາຈານ ສີນ້ອຍ ລາວັງ ອ້າງເຖິງໃນ ສຸວິມົນ ວ່ອງວານິດ)

1. ການວິເຄາະບັນຫາ
ນັກຮຽນບໍ່ສາມາດຄວບຄຸມລະບຽບວິໄຈໃນການເຂົ້າແຖວ
ການບໍ່ມີລະບຽບວິໄນເຮັດໃຫ້ຄູເສຍເວລາການສອນ
2. ບັນຫາທີ່ເກີດຂຶ້ນເປັນບັນຫາຂອງໃຜ
ເປັນບັນຫາຂອງນັກຮຽນເກືອບໝົດທັງຫ້ອງ
3. ບັນຫາທີ່ເກີດຂຶ້ນສົ່ງຜົນກະທົບຕໍ່ໃຜແນ່
ສົ່ງຜົນກະທົບຕໍ່ການສອນທີ່ກ່ຽວຂ້ອງກັບຄູ ເຮັດໃຫ້ເສຍເວລາຮຽນຂອງເດັກຄົນອື່ນຫຼາຍ
4. ບັນຫາທີ່ເກີດຂຶ້ນມີຄວາມສຳຄັນໃນລະດັບໃດ
ບັນຫາທີ່ເກີດຂຶ້ນມີຄວາມສຳຄັນຫຼາຍ ເພາະນອກຈາກກະທົບການສອນແລ້ວ ຍັງເປັນການສະທ້ອນເຖິງນິໄສທີ່ ຕ້ອງປັບປຸງຂອງຜູ້ຮຽນ ຈຳເປັນຕ້ອງໄດ້ຮັບການແກ້ໄຂ
5. ບັນຫາທີ່ເກີດຂຶ້ນກ່ຽວຂ້ອງສຳພັນກັບບັນຫາ ຫຼື ເຫດການອື່ນໆຫຍັງແດ່ ແບບໃດ
ຕາມຕົວຢ່າງທີ່ໃຫ້ມາບໍ່ໄດ້ອະທິບາຍລະອຽດ ແຕ່ບົ່ງຊີ້ໃຫ້ເຫັນວ່າການສອນຂອງຄູເສຍເວລາ ຄວນສຶກສາຂໍ້ມູນ ເພີ້ມຕື່ມເພື່ອສຶກສາວ່າບັນຫານີ້ເກີດໃນວິຊາອື່ນ ຫຼື ຫ້ອງຮຽນອື່ນ ຫຼື ບໍ່ ຈະໄດ້ວາງແຜນຮ່ວມກັນ
6. ໃຜຄືຜູ້ຮັບຜິດຊອບຫຼັກໃນການແກ້ໄຂບັນຫາ ແລະ ການແກ້ໄຂບັນຫານັ້ນຕ້ອງກ່ຽວຂ້ອງກັບໃຜແດ່
ຄູທີ່ຮັບຜິດຊອບນັກຮຽນຫ້ອງນີ້ ຄວນປຶກສາຫາລືກັບຄູຄົນອື່ນເຖິງສະພາບບັນຫານີ້ດ້ວຍ

**ການຕັ້ງຄຳຖາມວິໄຈ**

**ຄຳຖາມວິໄຈທີ່ບໍ່ເໝາະສົມ**

1. ນັກຮຽນຂາດລະບຽບວິໄນແທ້ບໍ
2. ນັກຮຽນຈຳນວນຫຼາຍປານໃດທີ່ຂາດລະບຽບວິໄນ
3. ການມີ/ບໍ່ມີລະບຽບວິໄນຂອງນັກຮຽນໄດ້ຮັບຜົນເສຍຫາຍຄືແນວໃດ

ຈະເຫັນວ່າການຕັ້ງຄຳຖາມດັ່ງກ່າວບໍ່ເກີດປະໂຫຍດຕໍ່ການພັດທະນາການຮຽນ-ການສອນເທົ່າທີ່ຄວນເນື່ອງ ຈາກເປັນຄຳຖາມທີ່ຄູສົນໃຈຫາຄຳຕອບເພື່ອຢັ້ງຢືນວ່າສະພາບທີ່ເກີດຂຶ້ນເປັນຈິງຕາມທີ່ຄູສັງເກດເຫັນ ຫຼື ບໍ່ ຄຳ ຕອບທີ່ໄດ້ຍັງບໍ່ທັນໄດ້ໃຫ້ແນວທາງທີ່ນຳໄປສູ່ການພັດທະນາລະບຽບວິໄນຂອງນັກຮຽນໃຫ້ດີຂຶ້ນ

**ຕົວຢ່າງການຕັ້ງຄຳຖາມວິໄຈ (ຕໍ່)**

| **ຄຳຖາມວິໄຈທີ່ມີປະໂຫຍດໃນການສຶກສາຫຼາຍກວ່າ** |
| --- |
| 1. ເປັນຫຍັງນັກຮຽນຈຶ່ງບໍ່ສ້າງຕົນເອງໃຫ້ເປັນຄົນມີລະບຽບວິໄນ<br>2. ນັກຮຽນມີຄວາມຮູ້ສຶກແບບໃດຕໍ່ພຶດຕິກຳ ຫຼື ນິໄສດັ່ງກ່າວຂອງຕົນເອງ<br>3. ຈະເຮັດແນວໃດທີ່ຈະເຮັດໃຫ້ນັກຮຽນມີລະບຽບວິໄນໃນການເຂົ້າແຖວ<br>4. ແນວທາງການແກ້ໄຂບັນຫາກ່ຽວກັບລະບຽບວິໄນຂອງນັກຮຽນທີ່ຄວນຈະເປັນມີຫຍັງແດ່ ຖ້າຈະນຳແນວທາງເຫຼົ່ານັ້ນມາໃຊ້ ຈະມີເກນການເລືອກວິທີດັ່ງກ່າວໄດ້ແນວໃດ<br>5. ວິທີທີ່ຄູໃຊ້ໃນການແກ້ໄຂບັນຫາໄດ້ຜົນແນວໃດ<br>6. ນັກຮຽນມີຄວາມຮູ້ສຶກ ແລະ ຄິດເຫັນຢ່າງໃດຫຼັງຈາກຄູໃຊ້ວິທີການປັບພຶດຕິກຳຂອງນັກຮຽນ |

**3.11.4 ການກຳນົດແນວທາງແກ້ໄຂບັນຫາ**

ຄຳຖາມວິໄຈຫຼາຍຄຳຖາມເປັນພຽງການເຮັດວິໄຈເພື່ອສຳຫຼວດສະພາບທີ່ເກີດຂຶ້ນໃນຫ້ອງຮຽນບາງຄຳຖາມເປັນຄຳຖາມທີ່ເນັ້ນການອະທິບາຍປະກົດການທີ່ເກີດຂຶ້ນ ແຕ່ຄຳຖາມສ່ວນໃຫຍ່ເນັ້ນການຫາວິທີການແກ້ໄຂບັນຫາ

**1) ສະພາບບັນຫາທີ່ເກີດຂຶ້ນ**

ສິ່ງທີ່ເປັນບັນຫາຂອງຄູຄື ການຄິດຫາວິທີການແກ້ໄຂບັນຫາ ການກຳນົດສິ່ງທົດລອງເພື່ອໃຊ້ໃນການຈັດການຮຽນ-ການສອນ ຫຼາຍຄັ້ງທີ່ຄູກຳນົດບັນຫາວິໄຈ ແຕ່ຫາວິທີການແກ້ໄຂບໍ່ໄດ້ ເມື່ອເປັນເຊັ່ນນີ້ຄູກໍ່ບໍ່ສາມາດເຮັດວິໄຈໄດ້ ເນື່ອງຈາກບໍ່ສາມາດຫາ "ສິ່ງໃດ" ໄປທົດລອງໃຊ້ໄດ້ ດັ່ງນັ້ນ ມີຫຼາຍເທື່ອທີ່ເຫັນວ່າ ຄູມັກຕັ້ງຄຳຖາມວິໄຈວ່າ "ເປັນຫຍັງນັກຮຽນຈຶ່ງມີຂໍ້ຜິດພາດດ້ານການອ່ານ" "ເປັນຫຍັງນັກຮຽນຈຶ່ງຂຽນສະກົດຄຳບໍ່ໄດ້" ການຕັ້ງຄຳຖາມແບບນີ້ເຮັດໃຫ້ໄດ້ຄຳຕອບກ່ຽວກັບສາເຫດຂອງບັນຫາ ເຊິ່ງຄູສາມາດວິເຄາະໄດ້ຈາກພຶດຕິກຳການຮຽນຂອງນັກ ຮຽນ ແລະ ພຶດຕິກຳການສອນຂອງຄູ ຄຳຖາມວິໄຈແບບນີ້ມີປະໂຫຍດລະດັບໜຶ່ງ ແຕ່ຈະບໍ່ສາມາດແກ້ບັນຫາໄດ້ ເລີຍ ຫາຄູບໍ່ຕັ້ງຄຳຖາມວິໄຈຕໍ່ໄປວ່າ "ວິທີແກ້ໄຂບັນຫານັ້ນໃຊ້ໄດ້ຜົນຫຼືບໍ່ ຢ່າງໃດ"

ປະຈຸບັນນີ້ ໂລກມີການພັດທະນາຢ່າງວ່ອງໄວ ຂໍ້ມູນຂ່າວສານມີການປ່ຽນແປງຢູ່ຕະຫຼອດເວລາ ຄູ ຫຼາຍຄົນມີສະຕິຕື່ນຕົວພັດທະນາຕົນເອງຢ່າງຕໍ່ເນື່ອງ ເພື່ອສ້າງຕົນເອງໃຫ້ເປັນຄົນທັນໂລກທັນເຫດການ ບໍ່ຕົກຍຸກ ຕົກສະໄໝ ມີການຮຽນຮູ້ຂໍ້ມູນຂ່າວສານຜ່ານລະບົບອອນໄລ (online) ການເຂົ້າເຖິງຂໍ້ມູນຂ່າວສານຈຶ່ງວ່ອງໄວ ກວ່າແຕ່ກ່ອນໆ ຫຼາຍເທົ່າຕົວ ປະຫຍັດທັງເວລາ ແລະ ພະລັງງານ

ຜູ້ຂຽນເຫັນວ່າຄູຮູ້ສະພາບບັນຫາທີ່ເກີດຂຶ້ນໃນຫ້ອງຮຽນ ແຕ່ຄູບໍ່ຮູ້ວ່າຈະໃຊ້ວິທີການແກ້ໄຂບັນຫາຢ່າງໃດ ເຮັດໃຫ້ຄູບໍ່ຮູ້ວ່າຈະວິໄຈເລື່ອງໃດ ຫົວຂໍ້ວິໄຈຂອງຄູຈຶ່ງເປັນຫົວຂໍ້ວິໄຈທີ່ເນັ້ນການສຳຫຼວດບັນຫາ ແລ້ວບໍ່ສາມາດ ດຳເນີນການວິໄຈຕໍ່ເຖິງຂັ້ນການຫາວິທີແກ້ບັນຫາ ບັນຫາໃນຫ້ອງຮຽນຫຼາຍບັນຫາຈຶ່ງຍັງແກ້ໄຂບໍ່ໄດ້ ຈາກປະສົບ ການໃນການຮັບຜິດຊອບວຽກງານວິໄຈພາກປະຕິບັດຂອງຜູ້ຂຽນ ເຫັນວ່າຄູຫຼາຍຄົນ ມີຄວາມຕ້ອງການທີ່ຈະເຮັດ ວິໄຈເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃນຫ້ອງຮຽນທີ່ຕົນເອງສອນ ແຕ່ພໍເຮັດໄປເຖິງຂັ້ນແກ້ໄຂບັນຫາແລ້ວ ກໍ່ບໍ່ຮູ້ຈະແກ້ ໄຂບັນຫາດ້ວຍວິທີ ແລະ ນະວະຕະກຳຊະນິດ

ສາເຫດທີ່ເປັນເຊັ່ນນີ້ເນື່ອງຈາກຄວາມຮູ້ກ່ຽວກັບການຈັດການຮຽນ-ການສອນຕາມທາງການປະຕິຮູບ ມີຈຳກັດ ແລະ ຄູຍັງສ່ວນຫຼາຍຍັງບໍ່ເຄີຍ ແລະ ບໍ່ກ້າທີ່ຈະຄິດສ້າງນະວະຕະກຳໃໝ່ໆມາທົດລອງໃຊ້ໃນຫ້ອງຮຽນ ຫຼື ຖ້າໃຊ້ກໍ່ອະທິບາຍບໍ່ໄດ້ວ່າມີເຫດຜົນແນວໃດໃນການນຳແນວຄວາມຄິດນັ້ນມາໃຊ້ ເຮັດໃຫ້ການວິໄຈຂອງຄູບໍ່ກ້າວໜ້າ ແລະ ບໍ່ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງຕາມທີ່ຄວນຈະເປັນ

**2) ວິທີການແກ້ໄຂ**

ແນວທາງການແກ້ໄຂບັນຫາດັ່ງທີ່ໄດ້ກ່າວມາຂ້າງເທິງ (ສຸວິມົນ ວ່ອງວານິດ, 2540) ມີດັ່ງນີ້:

ກ. ຄູຕ້ອງອ່ານໃຫ້ຫຼາຍໆ ຕິດຕາມຄວາມເຄື່ອນໄຫວກ່ຽວກັບວິທະຍາການດ້ານການສອນໃຫ້ຫຼາຍ

ຂ. ຄູຕ້ອງມີການລວມຕົວກັນ ແລະ ຫາໂອກາດອະພິປາຍເພື່ອແລກປ່ຽນປະສົບການດ້ານການສອນໃໝ່ໆ ເນື່ອງຈາກກຸ່ມຄູເປັນຜູ້ປະຕິບັດທີ່ຮູ້ເລື່ອງດີທີ່ສຸດກ່ຽວກັບ 'ນັກຮຽນ'' ແລະ 'ຫ້ອງຮຽນ''

ຄ. ຕ້ອງມີການສຳຫຼວດ ແລະ ຈັດລະບົບຖານຂໍ້ມູນກ່ຽວກັບນະວະຕະກຳດ້ານການຮຽນຮູ້ ເທກນິກ ການພັດທະນາດ້ານການຮຽນຮູ້ຂອງຜູ້ຮຽນມີຄວາມຫຼາກຫຼາຍ ແຕ່ທີ່ຜ່ານມາບໍ່ມີການຈັດລະບົບຖານຂໍ້ມູນ ຫຼື ເຜີຍ ແຜ່ເຕັກນິກດັ່ງກ່າວຢ່າງເຂັ້ມຂົ້ນ ຕົວຢ່າງຂອງເຕັກນິກການສອນຈະມີພຽງໜ້ອຍດຽວ ແລະ ບໍ່ສອດຄ່ອງກັບສະພາບບັນຫາທີ່ເກີດຂຶ້ນຈິງ ການຈັດຂໍ້ມູນເພື່ອລວບລວມຕົວຢ່າງເຕັກນິກການຈັດການຈັດການຮຽນຮູ້ໃໝ່ໆ ຈະເປັນການຂະຫຍາຍຄວາມຄິດ ແລະ ເປີດໂລກະທັດໃໝ່ໃຫ້ກັບຄູ ເຮັດໃຫ້ຄູໄດ້ພັດທະນາຄວາມຄິດສ້າງສັນຂອງຕົນເອງ ໂດຍ ຂະຫຍາຍຄວາມຄິດຕໍ່ຈາກທີ່ຜູ້ອື່ນໄດ້ຄິດໄວ້ແລ້ວ

ງ. ການຈັດຕັ້ງເຄືອຂ່າຍການວິໄຈພາກປະຕິບັດໃນຫ້ອງຮຽນ (Classroom Action Research Network) ໂດຍເປັນສູນກາງຂອງການເກັບລວບລວມຜົນການວິໄຈ ແລກປ່ຽນປະສົບການ ແລະ ແນວທາງການເຮັດວິໄຈພາກປະຕິບັດໃນຫ້ອງຮຽນ ແລ້ວຈັດເຮັດເປັນຖານຂໍ້ມູນລະດັບຊາດ ສົມມຸດໜ່ວຍງານໜຶ່ງມີລະບົບຖານຂໍ້ ມູນທີ່ສະແດງລາຍງານການວິໄຈກ່ຽວກັບວິທີການເຮັດໃຫ້ເດັກມັກດື່ມນົມໄດ້ ໃນຖານຂໍ້ມູນນັ້ນຈະເຮັດໃຫ້ເຫັນວິທີ ການຕ່າງໆ ຈາກຄູທີ່ສອນເດັກນ້ອຍທີ່ສະເໜີມາຍັງເຄືອຂ່າຍດັ່ງກ່າວເປັນພັນເປັນໝື່ນເລື່ອງ ງານວິໄຈດັ່ງກ່າວເມື່ອນຳ ມາສັງເຄາະຈະສາມາດສ້າງອີງຄວາມຮູ້ກ່ຽວກັບການສ້າງນິໄສການດື່ມນົມທີ່ໄດ້ຜົນ ຖານຂໍ້ມູນນີ້ຈະເປັນປະໂຫຍດ ຫຼາຍຕໍ່ຄູອີກນັບໝື່ນທີ່ສົນໃຈຈະນຳໄປໃຊ້ໃນຫ້ອງຮຽນ ຫຼື ນັກຮຽນຂອງຕົນ

ຈ. ສຸວິມົນ ວ່ອງວານິດເຫັນວ່າ ຈະຕ້ອງມີການລວບລວມປຶ້ມ ລວບລວມວິທີການແກ້ບັນຫາໃນຫ້ອງຮຽນ ເຊິ່ງທ່ານໄດ້ໃຊ້ຄຳວ່າ 'ປຶ້ມແຟຊັ່ນ'' 'Fashion Book'' ປຶ້ມນີ້ຈະສະແດງຕົວຢ່າງຂອງວິທີການຕ່າງໆທີ່ໃຊ້ ໃນການແກ້ໄຂບັນຫາໃນຫ້ອງຮຽນຢ່າງເປັນໝວດໝູ່ເໝືອນປຶ້ມຮູບແຟຊັ່ນການແຕ່ງກາຍ ກຸ່ມຄົນທີ່ສາມາດເຮັດປຶ້ມ ແຟຊັ່ນນີ້ໄດ້ ໜ້າຈະເປັນກຸ່ມສຶກສານິເທດ ເຊິ່ງມີປະສົບການນິເທດໂຮງຮຽນ ຫຼື ກຸ່ມວິຊາການໃນມະຫາວິທະຍາໄລ ຖ້າມີປຶ້ມແຟຊັ່ນນີ້ກະຈາຍໄປຍັງໂຮງຮຽນຕ່າງໆ ຈະເຮັດໃຫ້ຄູເກີດຄວາມຄິດທີ່ຈະປ່ຽນແປງ ຫຼື ຄັດເລືອກວິທີການ ທີ່ຕ້ອງການນຳໄປທົດລອງໃຊ້ ສິ່ງທີ່ຕ້ອງລະວັງໃນການຈັດເຮັດປຶ້ມແຟຊັ່ນດັ່ງກ່າວ ຄື ໃນປຶ້ມດັ່ງກ່າວຕ້ອງມີຕົວຢ່າງ ທີ່ນຳສະເໜີວິທີການທີ່ຫຼາກຫຼາຍໃນການແກ້ບັນຫາດຽວກັນ ບໍ່ຄວນນຳສະເໜີຕົວຢ່າງດຽວ ເພາະອາດເຮັດໃຫ້ເກີດການກ່າຍ ແລະ ເປັນການຈຳກັດຄວາມຄິດຂອງຄູ ເຊິ່ງນອກຈາກຈະບໍ່ເກີດປະໂຫຍດແລ້ວຍັງສິ່ງຜົນເສຍໄດ້

# 4. ແນວຄິດກ່ຽວກັບການຝຶກ

## 4.1 ລັກສະນະຂອງຊຸດຝຶກອົບຮົມ

ສິຣິພັນ ສາຍຫົງ ແລະ ສົມປະສົງ ວິທະຍະກຽດ (2534) ໄດ້ໃຫ້ຄວາມໝາຍຂອງຊຸດຝຶກອົບຮົມໄວ້ວ່າ ເປັນສື່ການສຶກສາປະເພດໜຶ່ງທີ່ສ້າງຂຶ້ນມາເພື່ອໃຫ້ເປັນຊຸດປະສົບການສຳລັບການຝຶກອົບຮົມ ຊຸດຝຶກອົບຮົມອາດຈະປະກອບດ້ວຍສື່ດຽວຫຼືສື່ປະສົມທີ່ໄດ້ຮັບການພັດທະນາຂຶ້ນມາເພື່ອຊ່ວຍຜູ້ໃຫ້ການຝຶກອົບຮົມໃຊ້ປະກອບກິດຈະກຳການຝຶກອົບຮົມ ຫຼື ຊ່ວຍຜູ້ຮັບການຝຶກອົບຮົມສາມາດທີ່ຈະສຶກສາຫາຄວາມຮູ້ໄດ້ດ້ວຍຕົນເອງ ສຳລັບລັກສະນະສຳຄັນໆ ຂອງຊຸດຝຶກອົບຮົມນັ້ນຈະກ່ຽວຂ້ອງກັບຈຸດມຸ້ງໝາຍ ສື່ທີ່ໃຊ້ ໄລຍະເວລາ ສະຖານທີ່ ແລະ ປະໂຫຍດທີ່ຈະໄດ້ຮັບ ເຊິ່ງພໍອະທິບາຍສະຫຼຸບໄດ້ ດັ່ງຕໍ່ໄປນີ້

1. ເປັນສື່ທີ່ມຸດຈຸດມຸ້ງໝາຍສະເພາະເລື່ອງ ຊຸດຝຶກອົບຮົມທີ່ພັດທະນາຂຶ້ນໂດຍທົ່ວໄປຈະມີຈຸດມຸ້ງໝາຍສະເພາະເລື່ອງໆ ໄປ ຖ້າຫາກເນື້ອຫາທີ່ຕໍ່ເນື່ອງເປັນເລື່ອງຍາວກໍ່ຈະເຮັດເປັນຊຸດໆ ຕໍ່ເນື່ອງກັນໄປ ເພື່ອໃຫ້ແຕ່ລະຊຸດຝຶກອົບຮົມບໍ່ຍາກຈົນເກີນໄປ
2. ເປັນສື່ປະສົມ ຊຸດຝຶກອົບົຣມໂດຍທົ່ວໄປທັ້ງໃນການສຶກສານອກລະບົບແລະໃນລະບົບຈະພັດທະນາດ້ວຍສື່ປະສົມ ຄື ປະກອບດ້ວຍສື່ຕັ້ງແຕ່ສອງປະເພດຂຶ້ນໄປ ເຊັ່ນ ຊຸດຝຶກອົບຮົມປະກອບດ້ວຍສື່ພາບນິ້ງແລະເທບສຽງ ຊຸດຝຶກອົບຮົມທີ່ໃຊ້ວິດີໂອແລະສື່ສິ່ງພິມ ເພື່ອຊ່ວຍໃຫ້ຜູ້ເຂົ້າຮັບການອົບຮົມໄດ້ສຶກສາຫາຄວາມຮູ້ຫຼາຍໆ ດ້າຍດ້ວຍກັນ
3. ເປັນສື່ເສີມກິດຈະກຳການຝຶກອົບຮົມທີ່ມີຜູ້ໃຫ້ການຝຶກອົບຮົມຫຼືເປັນສື່ທີ່ຜູ້ຮັບການຝຶກອົບຮົມສຶກສາດ້ວຍຕົນເອງ
4. ເປັນສື່ທີ່ໃຊ້ໄລຍະເວລາຝຶກອົບຮົມສັ້ນ ຊຸດຝຶກອົບຮົມໂດຍທົ່ວໄປມີຄວາມມຸ້ງໝາຍທີ່ຈະອົບຮົມສະເພາະເລື່ອງ ໄລຍະເວລາທີ່ໃຊ້ໃນແຕ່ລະຊຸດຈຶ່ງສັ້ນໆ ຖ້າຫາກເນື້ອຫາຍາວຫຼາຍກໍ່ຈະຈັດເຮັດຂຶ້ນຫລາຍຊຸດໂດຍແບ່ງເນື້ອຫາເປັນເລື່ອງໆ ໄປ ເຊິ່ງເຮັດໃຫ້ຜູ້ເຂົ້າຮັບການອົບຮົມບໍ່ເກີດຄວາມເບື່ອໜ່າຍໃນການສຶກສາ
5. ເປັນສື່ທີ່ໃຊ້ໄດ້ທຸກສະຖານທີ່ແລະທຸກເວລາ ເຊິ່ງຈະເຮັດໃຫ້ຜູ້ຝຶກອົບຮົມສາມາດສຶກສາຫາຄວາມຮູ້ໄດ້ ຢູ່ທີ່ໃດກໍ່ໄດ້ ຊຸດຝຶກອົບຮົມສ່ວນໃຫຍ່ຈະເຮັດຂຶ້ນມາເພື່ອອຳນວຍຄວາມສະດວກໃນເລື່ອງການໃຊ້ໄດ້ທຸກວເວລາ ຍິ່ງເປັນສື່ທີ່ສຶກສາດ້ວຍຕົນເອງແລ້ວ ຜູ້ຮັບການຝຶກອົບຮົມສາມາດຈະສຶກສາເມື່ອໃດກໍ່ໄດ້ຕາມທີ່ຕ້ອງການ
6. ເປັນສື່ທີ່ສົມບູນໃນຕົວເອງ ຊຸດຝຶກອົບຮົມແຕ່ລະຊຸດຈະເຮັດຂຶ້ນໃຫ້ສົມບູນໃນຕົວເອງ ເຮັດໃຫ້ຜູ້ຝຶກອົບຮົມສາມາດທີ່ຈະເລືອກສຶກສາຫາຄວາມຮູ້ຈາກຊຸດຝຶກອົບຮົມໄດ້ຕາມຄວາມຕ້ອງການ ຫຼື ຜູ້ຮັບການຝຶກອົບຮົມຕ້ອງການສຶກສາສະເພາະເລື່ອງໃດເລື່ອງໜຶ່ງຈາກຊຸດຝຶກອົບຮົມກໍ່ຈະສາມາດທີ່ຈະເລືອກສຶກສາສະເພາະເລື່ອງໄດ້ ໂດຍບໍ່ຕ້ອງອ່ານຕໍ່ເນື່ອງໄປຍັງສິ່ງທີ່ບໍ່ຕ້ອງການສຶກສາ

**4.2 ປະເພດຊຸດຝຶກອົບຮົມ**

ຈາກລັກສະນະທີ່ສຳຄັນຂອງຊຸດຝຶກອົບຮົມດັ່ງໄດ້ກ່າວມາແລ້ວ ເຮັດໃຫ້ສາມາດແບ່ງປະເພດຂອງຊຸດຝຶກອົບຮົມອອກເປັນ 2 ປະເພດໃຫຍ່ໆ ຄື ຊຸດຝຶກອົບຮົມສົ່ງເສີມກິດຈະກຳຝຶກອົບຮົມແລະຊຸດຝຶກອົບຮົມສຶກສາດ້ວຍຕົນເອງ

**4.2.1 ຊຸດຝຶກອົບຮົມສົ່ງເສີມກິດຈະກຳການຝຶກອົບຮົມ**

ຊຸດຝຶກອົບຮົມທີ່ສົ່ງເສີມກິດຈະກຳການຝຶກອົບຮົມນັ້ນຜູ້ໃຫ້ການຝຶກອົບຮົມອາດຈະຈັດກິດຈະກຳການຝຶກອົບຮົມໄດ້ໃນ 2 ລັກສະນະ ຄື ການໃຊ້ສື່ຂອງຊຸດຝຶກອົບຮົມບາງສ່ວນມາປະກອບການບັນລະຍາຍ ຫຼື ປະກອບກິດຈະກຳການຝຶກອົບຮົມ ແລະ ອີກປະການໜຶ່ງຄື ຜູ້ໃຫ້ການຝຶກອົບຮົມຈະຈັດກິດຈະກຳຝຶກອົບຮົມຕາມຊຸດຝຶກອົບຮົມນັ້ນ ໂດຍມີຜູ້ໃຫ້ການຝຶກອົບຮົມເປັນຜູ້ອຳນວຍຄວາມສະດວກ (facilitator) ຫຼື ຜູ້ດຳເນີນການ (organizer) ບໍ່ແມ່ນເປັນພຽງແຕ່ຜູ້ບັນຍາຍເທົ່ານັ້ນ

**4.2.2 ຊຸດຝຶກອົບຮົມດ້ວຍຕົນເອງ**

ເປັນຊຸດຝຶກອົບຮົມທີ່ຜູ້ອົບຮົມສາມາດທີ່ຈະຮຽນຮູ້ດ້ວຍຕົນເອງ ແລະຊ່ວຍໃນການຝຶກອົບຮົມໃຫ້ແກ່ຄົນຈຳນວນຫຼາຍໄດ້ ເພາະໃນການຝຶກອົບຮົມແຕ່ລະຄັ້ງຈຳເປັນຕ້ອງໃຊ້ຊັບພະຍາກອນໃນການຈັດທັ້ງບຸກຄະລາກອນ ງົບປະມານ ແລະ ວັດສະດຸອຸປະກອນຕ່າງໆ ເຮັດໃຫ້ການຝຶກອົບຮົມຈັດໄດ້ໜ້ອຍຄັ້ງ ຈຳນວນຜູ້ຮັບການຝຶກອົບຮົມບໍ່ໄດ້ຫຼາຍ ຊຸດຝຶກອົບຮົມປະເພດນີ້ເຮັດຂຶ້ນໃນຮູບຂອງສື່ທີ່ສອດຄ່ອງກັບວັດຖຸປະສົງເນື້ອຫາຄວາມຮູ້ ກຳລັງຊັບພະຍາກອນທີ່ມີຢູ່ ແລະ ຄວາມສະດວກໃນການສົ່ງສື່ໄປສູ່ຜູ້ຮັບການຝຶກອົບຮົມ ແລະ ສະຖານທີ່ເຊິ່ງຜູ້ຮັບການອົບຮົມຈະສຶກສາຫາຄວາມຮູ້ ຊຸດຝຶກອົບຮົມສຶກສາດ້ວຍຕົນເອງ ອາດຈະເປັນຊຸດຝຶກອົບຮົມໃນຮູບຂອງສະໄລປະກອບສຽງ ຊຸດຝຶກອົບຮົມເຄື່ອງສາຍ ເທບສຽງ ຊຸດຝຶກອົບຮົມແບບຮຽນສຳເລັດຮູບ ຊຸດຝຶກອົບຮົມໂມດູນເປັນຕົ້ນ (ສິລິພັນ ສາຍທົງ ແລະ ສົມປະສົງ ວິທະຍະກຽດ, 2534) ຊຸດຝຶກອົບຮົມທີ່ພັດທະນາຂຶ້ນໃນຄັ້ງນີ້ ຜູ້ວິໄຈເລືອກທີ່ຈະສ້າງ ແລະ ພັດທະນາຊຸດຝຶກອົບຮົມເປັນແບບສົ່ງເສີມກິດຈະກຳການຝຶກອົບຮົມ ໂດຍມີຜູ້ໃຫ້ການຝຶກອົບຮົມເປັນຜູ້ອຳນວຍຄວາມສະດວກ (facilitator) ຫຼື ຜູ້ດຳເນີນການ (organizer) ແຕ່ໃນຂະນະດຽວກັນຈະເນັ້ນໃຫ້ຊຸດຝຶກອົບຮົມມີລັກສະນະທີ່ຜູ້ເຂົ້າຮັບການຝຶກອົບຮົມໄດ້ສຶກສາດ້ວຍຕົນເອງຫຼາຍທີ່ສຸດ ດັ່ງນັ້ນ ຊຸດຝຶກອົບຮົມຈຶ່ງມີຄວາມຍືດຫຍຸ່ນແລະສຳເລັດໃນຕົວເອງຢ່າງສົມບູນແບບ ມີວັດຖຸປະສົງຊັດເຈນ ຜູ້ຮັບການອົບຮົມສາມາດສຶກສາຢ່າງມີເປົ້າໝາຍ ແລະ ສາມາດເລືອກວິທີການທີ່ຈະຮຽນຮູ້ໄດ້ຢ່າງອິດສະຫຼະໄປຕາມຄວາມສາມາດຂອງແຕ່ລະບຸກຄົນ ດັ່ງທີ່ປານ ກິມປີ ແລະ ກັນນິກາ ແຍ້ມເກສອນ (2533) ໄດ້ກ່າວໄວ້ວ່າ ຊຸດຝຶກອົບຮົມດ້ວຍຕົນເອງເປັນຊຸດຝຶກອົບຮົມທີ່ຍືດຫຍຸ່ນແລະຄ່ອງຕົວ ຜູ້ທີ່ຮັບການອົບຮົມຈະໄດ້ສຶກສາໄປຕາມຄວາມສາມາດຂອງຕົນເອງ ຊຸດຝຶກອົບຮົມປະເພດນີ້ ຖ້າໄດ້ຮັບການພັດທະນາມາເປັນຢ່າງດີ ຈະໃຊ້ງ່າຍ ສະດວກ ມີຜົນສຳເລັດສູດ

### 4.3 ອົງປະກອບຂອງຊຸດຝຶກອົບຮົມ

ຊຸດຝຶກອົບຮົມມີລັກສະນະເປັນສື່ທີ່ໃຫ້ຜູ້ຮັບການອົບຮົມສາມາດສຶກສາຫາຄວາມຮູ້ໄດ້ດ້ວຍຕົນເອງ ລັກສະນະດຽວກັບຊຸດການຮຽນຮູ້ດ້ວຍຕົນເອງ ດັ່ງນັ້ນອົງປະກອບຫຼືໂຄງສ້າງ ຈຶ່ງມີລັກສະນະເຊັ່ນດຽວກັນກັບຊຸດການຮຽນຮູ້ດ້ວຍຕົນເອງ ຊື່ງວິໄຊ ວົງໃຫຍ່ (2537) ໄດ້ກ່າວເຖິງອົງປະກອບຂອງຊຸດການຮຽນຮູ້ດ້ວຍຕົນເອງດັ່ງນີ້

1. ແນວຄວາມຄິດ ຫຼັກການແລະເຫດຜົນ
2. ຈຸດປະສົງ
3. ການປະເມີນຜົນເບື້ອງຕົ້ນ
4. ກິດຈະກຳການຮຽນແລະສື່
5. ການປະເມີນຜົນຫຼັງການຮຽນ

ເຊິ່ງສາມາດອະທິບາຍລາຍລະອຽດໂດຍສະຫຼຸບຂອງອົງປະກອບຂອງຊຸດຝຶກອົບຮົມ ຫຼືຊຸດການຮຽນຮູ້ດ້ວຍຕົນເອງ ແຕ່ລະຫົວຂໍ້ໄດ້ ດັ່ງນີ້

**ແນວຄວາມຄິດ ຫຼັກການ ແລະ ເຫດຜົນ** ຈະອະທິບາຍຄວາມເປັນມາກ່ຽວກັບສົມມຸດຕິຖານ ຄວາມເຊື່ອ ໂຄງສ້າງແລະຮູບແບບຂອງຊຸດຝຶກອົບຮົມຫຼື ຊຸດການຮຽນ ລະບຸວ່າຜູ້ຮຽນຄວນມີຄວາມຮູ້ພື້ນຖານທີ່ຈະເຮັດຫຍັງໄດ້ແດ່ ແນວຄິດສຳຄັນທີ່ຈະເກີດຂຶ້ນກັບຜູ້ຮຽນພາຍຫຼັງການສຶກສາ ຂະບວນການສ້າງ ຫຼື ການສະແຫວງຫາຄວາມຮູ້ ສິ່ງເລົ່ານີ້ຈະສະທ້ອນອອກມາໃນຮູບຂອງພາບລວມໃຫ້ຜູ້ຮຽນເຫັນໄດ້ຢ່າງຈະແຈ້ງເປັນລຳດັບທຳອິດ

**ຈຸດປະສົງຂອງການຮຽນ** ຈະເປັນສິ່ງການົດທິດທາງໃນການຮຽນໃນເລື່ອງນີ້ວ່າມີຄວາມຄາດຫວັງຈະໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດໃນເລື່ອງໃດ ຈຸດປະສົງຂອງການຮຽນຈະມີຄວາມຈະແຈ້ງແລະອະທິບາຍໄປສູ່ການອອກແບບກິດຈະກຳ ການສະເໜີເນື້ອຫາ ແລະ ການປະເມີຜົນ

**ການປະເມີນຜົນເບື້ອງຕົ້ນ** ຈຸດປະສົງຂອງການປະເມີນເບື້ອງຕົ້ນຂອງຊຸດຝຶກອົບຮົມຫຼືຊຸດການຮຽນຮູ້ດ້ວຍຕົນເອງ ມີ 2 ລັກສະນະການອອກແບບຄື

1) ຕ້ອງການຈະທົດສອບຄວາມຮູ້ຂອງຜູ້ຮຽນວ່າ ມີຄວາມຮູ້ພື້ນຖານໃນເລື່ອງທີ່ຈະຮຽນແລະຄວາມພ້ອມໜ້ອຍຫຼາຍປານໃດ ການທົດສອບຈະທົດສອບຄວາມຮູ້ພື້ນຖານເທົ່ານັ້ນ ຈະບໍ່ວັດຄວາມຮູ້ທີ່ມີຢູ່ໃນຊຸດຝຶກອົບຮົມ ຫຼື ຊຸດການຮຽນ
2) ຕ້ອງການວັດຄວາມຮູ້ຄວາມສາມາດຂອງຜູ້ຮຽນກ່ຽວກັບເນື້ອຫາສາລະຄວາມຮູ້ໃນຊຸດການຮຽນນີ້ວ່າມີຄວາມຮູ້ໃນລະດັບເກນທີ່ກຳນົດໄວ້ໜ້ອຍຫຼາຍປານໃດ ແລະ ຜູ້ທີ່ມີຄວາມຮູ້ໃນລະດັບເກນເປັນການສົ່ງເສີມຄວາມສາມາດການຮຽນຂອງແຕ່ລະບຸກຄົນ ການປະເມີນຜົນເບື້ອງຕົ້ນນີ້ ຈຳເປັນຈະຕ້ອງມີ ຫຼື ບໍ່ນັ້ນຂຶ້ນຢູ່ກັບການອອກແບບຊຸດຝຶກອົບຮົມ ຫຼື ຊຸດການຮຽນການສອນ ແລະ ທຳມະຊາດຂອງແຕ່ລະວິຊາ

**ກິດຈະກຳການຮຽນ ແລະ ສື່** ການອອກແບບກິດຈະກາການຮຽນຫຼືຝຶກອົບຮົມນັ້ນ ຈະຕ້ອງຍຶດຈຸດປະສົງຫຼັກ ກິດຈະກຳທີ່ນຳສະເໜີນັ້ນ ບໍ່ວ່າຈະເປັນໜັງສື ເອກະສານ ວິດີໂອ ແລະ ວັດສະດຸອື່ນ ໆ ຈະຕ້ອງຈຳໄວ້ສະເໜີວ່າຕ້ອງເປັນສື່ທີ່ຜູ້ຮຽນສົນໃຈ ກິດຈະກຳຈະຕ້ອງລະບຸໃຫ້ຊັດເຈນ ຜູ້ຮຽນຈະຕ້ອງໄດ້ຜັດໂດຍກົງ ເຊັ່ນເທບ ແລະ ວິດີໂອພາບ ເປັນຕົ້ນ

**ການປະເມີນຜົນການຮຽນ** ເຊິ່ງອາດຈະເປັນແບບທົດສອບສະບັບດຽວກັນກັບແບບປະເມີນຜົນເບື້ອງຕົ້ນກໍ່ໄດ້ ຖ້າເປັນການວັດຄວາມຮູ້ ໃນເນື້ອຫາຂອງຊຸດນີ້ ຫຼື ອາດຈະເປັນອີກສະບັບໜຶ່ງກໍ່ໄດ້ ທັ້ງນີ້ຂຶ້ນຢູ່ກັບວັດຖຸປະສົງຂອງການອອກແບບຊຸດການຮຽນຫຼືຊຸດຝຶກອົບຮົມ

ຂະບວນການສ້າງຊຸດຝຶກອົບຮົມ

ການສ້າງຊຸດຝຶກອົບຮົມ ຫຼື ບົດຮຽນໂປຼແກຼມຕ່າງໆ ໂດຍທົ່ວໄປແລ້ວ ການດຳເນີນງານແບ່ງອອກເປັນ 3 ໄລຍະຄື ການດຳເນີນງານໃນການສ້າງເຄື່ອງມື ຫຼື ບົດຮຽນ ໂປຼແກຼມການຝຶກອົບຮົມ ການນຳຊຸດຝຶກອົບຮົມຫຼື ບົດຮຽນ ໂປຼແກຼມການຝຶກອົບຮົມທີ່ສ້າງຂຶ້ນໄປທົດລອງໃຊ້ ເພື່ອປັບປຸງ ແກ້ໄຂ ແລະ ການໃຊ້ຜົນຜະລິດ (ນິພົນ ໄທພານິດ, 2535)

ຈາກການສຶກສາເອກະສານທີ່ກ່ຽວຂ້ອງ ເຫັນວ່າ ຊຸດຝຶກອົບຮົມ ມີລັກສະນະແລະຂັ້ນຕອນໃນການສ້າງ ເຊັ່ນດຽວກັນກັບຂະບວນການສ້າງຊຸດຮຽນ ບົດຮຽນໂມດູນ ຫຼື ບົດຮຽນໂປຼແກຼມ ເຊິ່ງວິໄຊ ວົງໃຫຍ່ (2537) ໄດ້ ສະເໜີຂັ້ນຕອນຂອງການສ້າງຊຸດການຮຽນຮູ້ດ້ວຍຕົນເອງໄວ້ 9 ຂັ້ນຕອນ ດັ່ງນີ້

1. ສຶກສາຫຼັກສູດທັ້ງດ້ານວັດຖຸປະສົງແລະເນື້ອຫາ ກຳນົດຈຸດປະສົງໃນການສ້າງຊຸດການຮຽນ ໃຫ້ ສອດຄ່ອງກັບຄວາມຈຳເປັນໃນການຮຽນຮູ້ ວິເຄາະເນື້ອຫາ ແລະແບ່ງເນື້ອຫາອອກເປັນໜ່ວຍຍ່ອຍໆ
2. ສຶກສາກຸ່ມເປົ້າໝາຍວ່າແມ່ນໃຜ ຈະສ້າງສະຖານະການເງື່ອນໄຂແບບໃດໃຫ້ກັບຜູ້ຮຽນ ມີກິດຈະກຳ ຫຍັງແດ່ທີ່ຈະສົ່ງເສີມມໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດແລະທັກສະ
3. ຂຽນຈຸດປະສົງຂອງແຕ່ລະໜ່ວຍການຮຽນ ໂດຍໃຫ້ຄອບຄຸມເນື້ອຫາແຕ່ລະໜ່ວຍ ຄວນຂຽນໃນຮູບ ແບບຈຸດປະສົງທາງດ້ານພຶດຕິກຳ ເຊິ່ງສະແດງໃຫ້ເຫັນວ່າຜູ້ຮຽນສາມາດສະແດງຄວາມຮູ້ ທັກສະ ທີ່ ປະກົດເດັ່ນຊັດພາຍຫຼັງສິ້ນສຸດການຮຽນຫຼືການອົບຮົມ ພຶດຕິກຳເລົ່ານີ້ສາມາດວັດແລະສັງເກດໄດ້ຕາມ ຈຸດປະສົງ
4. ສ້າງແບບປະເມີນຫຼືສ້າງຂໍ້ທົດສອບ ໂດຍຈະຕ້ອງຍຶດຖືເອົາຈຸດປະສົງເປັນຫຼັກ ແລະ ຈະຕ້ອງສອດຄ່ອງ ກັບເນື້ອຫາວິຊາຂອງໜ່ວຍນັ້ນໆ ການປະເມີນກ່ອນຮຽນແລະຫຼັງຮຽນອາດໃຊ້ແບບທົດສອບດຽວກັນ ໄດ້
5. ເລືອກວິທີການຮຽນຫຼືກິດຈະກຳໃຫ້ສອດຄ່ອງກັບຈຸດປະສົງແລະເນື້ອຫາ ເຊັ່ນ ການສະເໜີໃນຮູບ ແບບຂອງການສົນທະນາ ເອກະສານ ຮູບພາບ ກໍລະນີສຶກສາ ແລະ ແບບຝຶກຫັດ ເປັນຕົ້ນ
6. ສ້າງ ຈັດຫາ ລວບລວມສື່ການຮຽນໃຫ້ສອດຄ່ອງກັບກິດຈະກຳທີ່ກຳນົດໃຫ້ ເຊັ່ນ ບົດບັນຍາຍ ເອກະສານນ ກໍລະນີສຶກສາ ຄຳຖາມ ແລະ ສະເລີຍຮູບພາບເປັນຕົ້ນ
7. ຜະລິດຕົ້ນແບບຂອງຊຸດການຮຽນ ໂດຍນຳເອົາຂໍ້ມູນແລະສິ່ງຕ່າງໆ ແຕ່ຂໍ້ 1-6 ມາຈັດລວບລວມຮຽບ ຮຽງລຳດັບປະກອບເປັນຊຸດການຮຽນ ຈາກນັ້ນນຳຊຸດການຮຽນມາກວດສອບກັບເກນທີ່ກຳນົດໄວ້
8. ການກວດສອບຄຸນນະພາບຂອງຊຸດການຮຽນເບື້ອງຕົ້ນ ສາມາດເຮັດໄດ້ 2 ປະການ ປະການທຳອິດ ຄື ການປະຊຸມພິຈາລະນາຊຸດການຮຽນຈາກຄະນະກຳມະການ ຫຼື ຜູ້ຊ່ຽວຊານ ປະການທີສອງ ຄື ນຳຊຸດ ການຮຽນໄປທົດລອງກັບກຸ່ມເປົ້າໝາຍ ຫຼື ກຸ່ມອື່ນທີ່ມີລັກສະນະຄືກັນກັບກຸ່ມຕົວຢ່າງປະມານ 3 – 5 ຄົນ ແລ້ວນຳຂໍ້ຄົ້ນພົບມາປັບປຸງກ່ອນທີ່ຈະນຳໄປຫາປະສິດທິພາບຕໍ່ໄປ
9. ການທົດລອງຫາປະສິດທິພາບຂອງຊຸດການຮຽນ ໂດຍນຳໄປທົດລອງໃຊ້ກັບກຸ່ມເປົ້າໝາຍປະມານ 30 ຄົນ ແລ້ວປັບປຸງແກ້ໄຂຕາມຂໍ້ຄົ້ນພົບ ເພື່ອເປັນຕົ້ນແບບຂອງຊຸດການຮຽນ ສາລັບດາເນີນການ ຜະລິດໃຫ້ພຽງພໍກັບກຸ່ມເປົ້າໝາຍຕໍ່ໄປ

ບຸນຊົມ ສີສະອາດ (2537) ໄດ້ກ່າວເຖິງຂັ້ນຕອນການສ້າງບົດຮຽນໂມດູນ ເຊິ່ງມີ 11 ຂັ້ນຕອນ ດັ່ງນີ້

1. ກຳນົດເລື່ອງທີ່ຈະສ້າງບົດຮຽນ ຂັ້ນທຳອິດຜູ້ສ້າງຕ້ອງຕັດສິນໃຈວ່າຈະສ້າງບົດຮຽນເລື່ອງໃດ ຄວນເລືອກເລື່ອງທີ່ຕົນມີຄວາມສົນໃຈແລະຮອບຮູ້ໃນເລື່ອງນັ້ນ
2. ຂຽນຫຼັກການແລະເຫດຜົນ ອະທິບາຍຫຼັກການແລະເຫດຜົນທີ່ຢູ່ເບື້ອງຫຼັງບົດຮຽນນັ້ນ ຄວາມສຳຄັນຂອງບົດຮຽນ ຂອບເຂດຂອງເນື້ອຫາບົດຮຽນ ແລະ ຄວາມສຳພັນກັບເລື່ອງອື່ນໆ
3. ກຳນົດຈຸດປະສົງຂອງບົດຮຽນ ເພື່ອເປັນແນວແລະຫຼັກການໃນການຂຽນເນື້ອຫາການຮຽນໃນການກຳນົດກິດຈະກຳແລະສື່ການຮຽນຕ່າງໆ ລວມທັ້ງໃນການສ້າງເຄື່ອງມືວັດຜົນ ການຮຽນຄວນກຳນົດໃນຮູບຂອງຈຸດປະສົງທາງດ້ານພຶດຕິກຳ (behavioral objective) ແລະກຳນົດເກນທີ່ໃຊ້ສຳລັບພິຈາລະນາວ່າຜູ້ຮຽນບັນລຸຜົນການຮຽນໃນລະດັບທີ່ພໍໃຈຫຼືບໍ່
4. ສຳຫຼວດສື່ການຮຽນແລະແຫຼ່ງຄົ້ນຄວ້າ ໂດຍຜູ້ສ້າງບົດຮຽນຈະຕ້ອງສຶກສາຄົ້ນຄວ້າຕຳລາເອກະສານ ວາລະສານ ອຸປະກອນປະເພດເຄື່ອງສາຍ ເພື່ອທີ່ຈະນຳຂໍ້ມູນເລົ່ານັ້ນມາພິຈາລະນາກຳນົດກິດຈະກຳ ແລະ ສືການຮຽນຕ່າງໆ
5. ວິເຄາະພາລະກິດ (task analysis) ເປັນການວິເຄາະເພື່ອໃຫ້ເຫັນວ່າ ໃນການຮຽນເລື່ອງນັ້ນໆຈະຕ້ອງອາໃສຄວາມຮູ້ແລະສະມັດຖານະພື້ນຖານຫຍັງແດ່ລະຫວ່າງທີ່ຮຽນຈະຕ້ອງຮຽນຮູ້ຫຍັງແດ່ ຈຸດປະສົງແຕ່ລະຂໍ້ຄວນໃຊ້ກິດຈະກຳຫຍັງແດ່ ຢູ່ໃນລັກສະນະໃດ
6. ກຳນົດກິດຈະກຳການຮຽນແລະສື່ການຮຽນ ຂັ້ນນີ້ຈະເປັນການພິຈາລະນາກຳນົດກິດຈະກຳທີ່ຈະໃຫ້ຜູ້ຮຽນເຮັດ ເພື່ອຊ່ວຍໃຫ້ເກີດການຮຽນຮູ້ຕາມຈຸດປະສົງຂອງບົດຮຽນ ຄວນຈັດໃຫ້ມີກິດຈະກຳການຮຽນຫຼາຍຢ່າງ ໃຊ້ສື່ການຮຽນຫຼາຍຊະນິດ ເພື່ອໃຫ້ຜູ້ຮຽນໄດ້ເລືອກຮຽນ
7. ສ້າງເຄື່ອງມືປະເມີນຜົນ ສຳລັບປະເມີນກ່ອນແລະຫຼັງຮຽນ ໂດຍວັດທັ້ງໃນສ່ວນທີ່ເປັນຄວາມຮູ້ແລະສະມັດຖານະພື້ນຖານທີ່ຈຳເປັນຕໍ່ການຮຽນບົດຮຽນແລະເປັນສ່ວນທີ່ເປັນຄວາມຮູ້ແລະສະມັດຖະພາບຄວບຄຸມຕາມຈຸດປະສົງຂອງບົດຮຽນ
8. ປັບປຸງຕາມຂໍ້ສະເໜີແນະຂອງຜູ້ຊຽວຊານ ນຳບົດຮຽນທີ່ສ້າງຂຶ້ນໄປໃຫ້ຜູ້ຊ່ຽວຊານປະເມີນພິຈາລະນາແລະໃຫ້ຂໍ້ສະເໜີແນະ ແລ້ວນຳມາປັບປຸງແກ້ໄຂ
9. ທົດລອງກຸ່ມຍ່ອຍ ນຳບົດຮຽນທີ່ຜ່ານການປັບປຸງແກ້ໄຂໃນຂັ້ນທີ 8 ມາທົດລອງໃຊ້ກັບຜູ້ຮຽນກຸ່ມຍ່ອຍ 5 – 10 ຄົນ ເພື່ອຫາປະສິດທິພາບຂອງບົດຮຽນ ລວມທັງນາຂໍ້ມູນທີ່ໄດ້ມາແກ້ໄຂຂໍ້ບົກຜ່ອງຕ່າງໆ
10. ທົດລອງໃຊ້ໃນຫ້ອງຮຽນ ນຳບົດຮຽນທີ່ແກ້ໄຂໃນຂັ້ນທີ່ 9 ມາທົດລອງໃຊ້ກັບຜູ້ຮຽນໃນສະຖານະການຈິງ ນັ້ນຄືໃຊ້ກັບຜູ້ຮຽນທີ່ເປັນກຸ່ມເປົ້າໝາຍທັງໝົດໃນຫ້ອງຮຽນ
11. ພິມສະບັບຈິງ ນຳບົດຮຽນພິມເປັນສະບັບຈິງເພື່ອນຳໄປຊ້ກັບຜູ້ຮຽນທີ່ເປັນເປົ້າ ໝາຍຕໍ່ໄປ

ລັດດາ ສຸກປີດີ (2522) ໄດ້ກ່າວເຖິງຂັ້ນຕອນຂອງການສ້າງບົດຮຽນໂປຼແກຼມເອົາໄວ້ ດັ່ງນີ້

1. ຕັ້ງຈຸດປະສົງຂອງບົດຮຽນ (objectives) ຈະຕ້ອງຕັ້ງຈຸດປະສົງບົດຮຽນເປັນລັກສະນະຈຸດປະສົງທາງດ້ານພຶດຕິກຳ (behavioral objective)
2. ວິເຄາະພາລະກິດ (task analysis) ຄື ການຈຳແນກເປົ້າໝາຍຂອງການຮຽນການສອນ ເພື່ອໃຫ້ເຫັນລຳດັບຂັ້ນຂອງການຮຽນການສອນ ຕະຫຼອດຈົນການໃຊ້ສື່ການຮຽນການສອນ
3. ສ້າງແບບທົດສອບ (prepare test) ເພື່ອວັດພຶດຕິກຳຂອງຜູ້ຮຽນຕັ້ງແຕ່ ເລີ່ມຮຽນຈົນເຖິງພຶດຕິກຳສຸດທ້າຍວ່າຜູ້ຮຽນບັນລຸເປົ້າໝາຍຫຼືບໍ່
4. ຈັດລຳດັບເນື້ອຫາ (instructional sequences) ຫຼັງຈາກວິເຄາະພາລະກິດແລ້ວ ຈະຕ້ອງມີການກຳນົດເນື້ອຫາ ແລະ ລຳດັບຂັ້ນຂອງການຮຽນຮູ້ທີ່ຈະນຳຜູ້ຮຽນໄປສູ່ເປົ້າໝາຍສຸດທ້າຍ
5. ການເລືອກສື່ (select media) ສື່ທີ່ດີຈະຕ້ອງສອດຄ່ອງກັບເປົ້າໝາຍຂອງການຮຽນການສອນເໝາະກັບລະດັບຄວາມສາມາດແລະຊ່ວຍສົ່ງເສີມໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນກິດຈະກຳການຮຽນຢ່າງແທ້ຈິງ ທັງຍັງໃຫ້ຂໍ້ມູນສະທ້ອນກັບແກ່ຜູ້ຮຽນ
6. ສ້າງກອບການຮຽນ (instructional frames) ການຈັດລຳດັບເນື້ອຫາ ແລະສື່ໃນບົດຮຽນໂປຼແກຼມຈະຕ້ອງເປັນຂັ້ນໆ ຕາມລຳດັບຕໍ່ເນື່ອງກັນ ເພື່ອໃຫ້ຜູ້ຮຽນຄ່ອຍໆ ຮຽນແລະບັນລຸພຶດຕິກຳຂັ້ນສຸດທ້າຍ
7. ທົດລອງກັບຜູ້ຮຽນເປັນລາຍບຸກຄົນ (individual tryout) ນຳບົດຮຽນໄປທົດລອງກັບຜູ້ຮຽນເປັນລາຍບຸກຄົນ ຫຼື ກຸ່ມຍ່ອຍໆ ກ່ອນ ເພື່ອນຳຂໍ້ມູນມາວິເຄາະແລະປັບປຸງແກ້ໄຂ
8. ທົດລອງໃນສະຖານະການຈິງ (field tryout) ເປັນການນຳບົດຮຽນໄປໃຊ້ສອນຈິງໆ ກັບນັກຮຽນເປັນກຸ່ມໃຫຍ່ ແລ້ວນຳຂໍ້ມູນມາວິເຄາະ ຖ້າເຫັນຂໍ້ບົກຜ່ອງກໍ່ປັບປຸງແກ້ໄຂໃໝ່ ແຕ່ຖ້າຜູ້ຮຽນບັນລຸເຖິງເປົ້າໝາຍທີ່ຕ້ອງການແລ້ວ ກໍ່ສະແດງວ່າບົດຮຽນນັ້ນນຳໄປໃຊ້ໄດ້ຢ່າງກວ້າງຂວາງ

ຈາກການສຶກສາແນວຄວາມຄິດຂອງນັກວິຊາການທີ່ກ່າວມາຂ້າງຕົ້ນນັ້ນ ເຫັນວ່າ ຂະບວນການສ້າງຊຸດການຮຽນ ການສ້າງບົດຮຽນໂມດູນ ການສ້າງບົດຮຽນໂປຼແກຼມມີຂະບວນການ ຂັ້ນຕອນ ແລະ ອົງປະກອບການສ້າງຮ່ວມກັນຫຼືຄ້າຍຄືກັນ ໃນການວິໄຈຄັ້ງນີ້ຜູ້ວິໄຈຈຶ່ງພິຈາລະນາເລືອກໃຊ້ ແລະ ສາມາດນຳມາສະຫຼຸບເປັນຂັ້ນຕອນ ແລະຂະບວນການສ້າງຊຸດຝຶກອົບຮົມໄດ້ ດັ່ງນີ້

1. ການກຳນົດວັດຖຸປະສົງ
2. ການວິເຄາະເນື້ອຫາ
3. ການຈັດລະບົບເນື້ອຫາ
4. ການສ້າງແບບປະເມີນ
5. ການຜະລິດສື່ຝຶກອົບຮົມ
6. ການກວດສອບຄຸນນະພາບຂອງຊຸດຝຶກອົບຮົມ
7. ການວິເຄາະປັບປຸງແກ້ໄຂ
8. ການນຳໄປໃຊ້ຝຶກອົບຮົມ

## 4.4 ປະໂຫຍດຂອງຊຸດຝຶກອົບຮົມ

ຊຸດຝຶກອົບຮົມດ້ວຍຕົນເອງແລະຊຸດຝຶກອົບຮົມສົ່ງເສີມກິດຈະກຳການອົບຮົມທີ່ຜ່ານຂະບວນການສ້າງຫຼືຜະລິດຢ່າງເປັນລະບົບ ຈະມີປະໂຫຍດຕໍ່ຜູ້ໃຫ້ການອົບຮົມແລະຜູ້ຮັບການອົບຮົມ ດັ່ງຕໍ່ໄປນີ້ (ສິລິພັນ ສາຫົງ ແລະ ສົມປະສົງ ວິທະຍະກຽດ, 2534)

ປະໂຫຍດຕໍ່ຜູ້ໃຫ້ການອົບຮົມ

1. ຊຸດຝຶກອົບຮົມຈະມີຄູ່ມືດຳເນີນກິດຈະກຳທຸກຂັ້ນຕອນ ຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ຜູ້ໃຫ້ການອົບຮົມ
2. ຊຸດຝຶກອົບຮົມປະກອບດ້ວຍສື່ ເອກະສານ ແລະ ອຸປະກອນປະກອບການຝຶກອົບຮົມ ລວມທັງແຫຼ່ງຂໍ້ມູນທີ່ວິທະຍາກອນອາດຈະຕ້ອງໄປສຶກສາເພີ່ມເຕີມ ເຮັດໃຫ້ຜູ້ໃຫ້ການອົບຮົມບໍ່ຕ້ອງເສຍເວລາໃນການກະກຽມການຝຶກອົບຮົມ
3. ປະຫຍັດເວລາໃນການກະກຽມການຝຶກອົບຮົມ ເນື່ອງຈາກຊຸດຝຶກອົບຮົມໄດ້ກະກຽມທຸກສິ່ງທຸກຢ່າງດັ່ງກ່າວຂ້າງຕົ້ນສຳລັບຜູ້ໃຫ້ການອົບຮົມແລ້ວ
4. ມີຄວາມໝັ້ນໃຈໃນການດຳເນີນການຝຶກອົບຮົມ ເພາະຮູ້ຂັ້ນຕອນຕ່າງໆ ຢ່າງຈະແຈ້ງແລະມີສື່ອຸປະກອນປະກອບການຝຶກອົບຮົມໄວ້ຢ່າງພ້ອມພຽງແລ້ວ

ປະໂຫຍດຕໍ່ຜູ້ຮັບການອົບຮົມ

1. ສ້າງແຮງຈູງໃຈແລະຄວາມສົນໃຈໃນການຮຽນໃຫ້ກັບຜູ້ຮັບການອົບຮົມ ໂດຍຈັດໃຫ້ມີກິດຈະກຳການຮຽນທີ່ຫຼາກຫຼາຍ ມີການສົ່ງເສີມຜູ້ຮຽນໂດຍການສະເລີຍຄຳຕອບໃນການໃຊ້ສື່ການຮຽນແບບປະສົມ ເຮັດໃຫ້ຜູ້ຮັບການຝຶກອົບຮົມບໍ່ເບື່ອໜ່າຍ ແລະ ຕື່ນຕົວໃນການຝຶກອົບຮົມຢູ່ຕະຫຼອດເວລາ
2. ສາມາດສຶກສາດ້ວຍຕົນເອງໃນເນື້ອຫາວິຊາທີ່ສົນໃຈໄດ້ໂດຍບໍ່ຈຳແນກເວລາ ແລະ ສະຖານທີ່
3. ສາມາດສຶກສາບົດທົບທວນໄດ້ ບໍ່ເໝືອນກັບຟັງວິທະຍຸ ເມື່ອລາຍການຜ່ານໄປແລ້ວບໍ່ສາມາດຍ້ອນກັບໄດ້
4. ສະໜອງຕອບຕໍ່ຄວາມແຕກຕ່າງລະຫວ່າງບຸກຄົນໄດ້ ຜູ້ຮັບການອົບຮົມທີ່ມີສະຕິປັນຍາແຕກຕ່າງກັນສາມາດຮຽນຊ້າໄວຕາມຄວາມສາມາດທີ່ມີຢູ່
5. ຊຸດຝຶກອົບຮົມສ່ວນໃຫຍ່ເນັ້ນຂະບວນການຮຽນຮູ້ຫຼາຍກວ່າເນື້ອຫາ ເຮັດໃຫ້ຜູ້ຮຽນຮູ້ຈັກວິທີການສະແຫວງຫາຄວາມຮູ້ດ້ວຍຕົນເອ ເຮັດໃຫ້ສາມາດປັບຕົວໃຫ້ທັນກັບການປ່ຽນແປງທາງເສດຖະກິດ ແລະສັງຄົມໄດ້
6. ຝຶກອົບຮົມວິໄນໃນຕົນເອງໄດ້ ທັງນີ້ເພາະຊຸດຝຶກອົບຮົມດ້ວຍຕົນເອງ ຜູ້ອົບຮົມຈະຕ້ອງມີຄວາມເອົາໃຈໃສ່ສຶກສາດ້ວຍຕົນເອງ ຕ້ອງຮູ້ຈັກບັງຄັບໃຈຕົນເອງ ແລະ ຕ້ອງຊື່ສັດຕໍ່ຕົນເອງ
7. ໃຊ້ເປັນສື່ສອນສົ່ງເສີມສຳລັບຜູ້ຮຽນອ່ອນ ແລະ ເພີ່ມເຕີມເສີມຄວາມຮູ້ໃຫ້ກັບຜູ້ຮຽນເກັ່ງ

## 4.5 ການຫາປະສິດທິພາບຂອງຊຸດຝຶກອົບຮົມ

ການຫາປະສິດທິພາບຂອງຊຸດຝຶກອົບຮົມ ເປັນການນຳເອົາຊຸດຝຶກອົບຮົມໄປທົດລອງໃຊ້ຕາມຂັ້ນຕອນທີ່ກຳນົດໄວ້ ເພື່ອປັບປຸງປະສິດທິພາບຂອງຊຸດຝຶກອົບຮົມໃຫ້ໄດ້ຕາມເກນທີ່ກຳນົດໄວ້ແລ້ວຈຶ່ງນຳໄປໃຊ້ຝຶກອົບຮົມຈິງ ໄຊຍົງ ພົມວົງ ແລະ ຄະນະ (2520) ໄດ້ກຳນົດເກນປະສິດທິພາບ ເຊິ່ງຈະເຮັດໄດ້ໂດຍປະເມີນພຶດຕິກຳຂອງຜູ້ຮຽນ ຫຼື ຜູ້ອົບຮົມໄວ້ 2 ປະເພດ ຄື ພຶດຕິກຳຕໍ່ເນື່ອງ (ຂະບວນການ) ແລະ ພຶດຕິກຳຂັ້ນສຸດທ້າຍ (ຜົນລັບ) ໂດຍກຳນົດປະສິດທິພາບເປັນ E1 (ປະສິດທິພາບຂອງຂະບວນການ) E2 (ປະສິດທິພາບຂອງຜົນລັບ)

ປະສິດທິພາບຂອງຂະບວນການ (E1) ຄືການປະເມີນພຶດຕິກຳຕໍ່ເນື່ອງຂອງຜູ້ອົບຮົມໄດ້ແກ່ ການປະກອບກິດຈະກຳລາຍບຸກຄົນ ກິດຈະກຳກຸ່ມ ລວມທັງວຽກມອບໝາຍ ແລະ ວຽກອື່ນໆ ທີ່ກຳນົດໄວ້ ສາມາດເຮັດໂດຍເອົາຄະແນນທັງໝົດມາຫາຄ່າສະເລ່ຍແລ້ວທຽບສ່ວນເປັນຮ້ອຍລະ

ປະສິດທິພາບຂອງຜົນລັບ (E2) ຄື ການປະເມີນພຶດຕິກຳຂັ້ນສຸດທ້າຍໂດຍພິຈາລະນາຈາກການທົດສອບຫຼັງຮຽນ ເຮັດໂດຍເອົາຄະແນນທັງໝົດມາຫາຄ່າສະເລ່ຍ ແລ້ວທຽບສ່ວນເປັນຮ້ອຍລະເຊັ່ນດຽວກັນ

ເມື່ອຜະລິດຊຸດຝຶກອົບຮົມສຳເລັດແລ້ວ ຕ້ອງນຳຊຸດຝຶກອົບຮົມທີ່ສ້າງຂຶ້ນໄປຫາປະສິດທິພາບ ດັ່ງທີ່ ໄຊຍົງ ພົມວົງແລະຄະນະ (2520) ແລະ ບຸນຊົມ ສີສະອາດ (2537) ໄດ້ສະເໜີຂັ້ນຕອນໃນການຫາປະສິດທິພາບຂອງຊຸດການສອນໄດ້ ດັ່ງນີ້

1. ທົດລອງເປັນລາຍບຸກຄົນ ທົດລອງກັບຜູ້ຮຽນໜຶ່ງຄົນ ສັງເກດບັນທຶກພຶດຕິກຳຂອງຜູ້ຮຽນລະຫວ່າງຮຽນ ແລ້ວນຳຂໍ້ມູນທີ່ໄດ້ມາປັບປຸງແກ້ໄຂຂໍ້ບົກຜ່ອງ
2. ທົດລອງກັບກຸ່ມຍ່ອຍ ໂດຍນຳຊຸດຝຶກອົບຮົມທີ່ປັບປຸງແລ້ວ ໄປທົດລອງໃຊ້ກັບຜູ້ຮຽນຈຳນວນ 5 – 10 ຄົນ ມີການທົດສອບຜົນສາເລັດທາງການຮຽນ ແລ້ວເອົາຜົນທີ່ໄດ້ມາວິເຄາະຫາປະສິດທິພາບຂອງຊຸດຝຶກອົບຮົມຕາມເກນທີ່ກຳນົດ ແລະ ປັບປຸງແກ້ໄຂຂໍ້ບົກຜ່ອງ ທັງດ້ານກິດຈະກຳ ເນື້ອຫາ ລວມທັງສື່ຕ່າງໆ
3. ທົດລອງກັບກຸ່ມໃຫຍ່ ຫຼັງຈາກທົດລອງ ແລະ ປັບປຸງແກ້ໄຂຊຸດຝຶກອົບຮົມທັງສອງຄັ້ງແລ້ວ ຈຶ່ງນຳໄປທົດລອງກັບກຸ່ມໃຫຍ່ທັງໝົດ ແລ້ວນຳຜົນທີ່ໄດ້ມາວິເຄາະຫາປະສິດທິພາບຕາມເກນທີ່ກຳນົດໄວ້

ໃນການກຳນົດເກນປະສິດທິພາບ E1/E2 ໃຫ້ມີຄ່າເທົ່າໃດນັ້ນຂຶ້ນຢູ່ກັບຜູ້ສ້າງເປັນຜູ້ພິຈາລະນາ ໂດຍປົກກະຕິທົ່ວໄປທີ່ເປັນຄວາມຮູ້ ຄວາມຈຳ ມັກຈະຕັ້ງໄວ້ທີ່ 80/80, 85/85 ຫຼື 90/90 ສ່ວນເນື້ອໃນທີ່ເປັນທັກສະຫຼືເຈຕະຄະຕິ ອາດຈະຕັ້ງໄວ້ຕໍ່າກວ່ານີ້ ເຊັ່ນ 75/75 ເປັນຕົ້ນ

# 5. ຄວາມຮູ້ກ່ຽວກັບສື່ປະສົມ

## 5.1 ຄວາມໝາຍຂອງສື່ປະສົມ

ຊຸດຝຶກອົບຮົມໂດຍທົ່ວໄປທັງການສຶກສາໃນລະບົບ ແລະ ນອກລະບົບ ຈະພັດທະນາດ້ວຍສື່ປະສົມ ຄືປະກອບດ້ວຍສື່ຕັ້ງແຕ່ 2 ປະເພດຂຶ້ນໄປ ໂດຍມີການໃຫ້ເນື້ອໃນຜ່ານສື່ປະເພດຕ່າງໆ

ໄຊຍົງ ພົມວົງ (2520) ໄດ້ກ່າວວ່າ ການໃຊ້ສື່ປະສົມ ໝາຍເຖິງ ການອາໃສຫຼັກການນຳເອົາສື່ການສອນຫຼາຍໆ ຢ່າງມາສຳພັນກັນ ແລະ ມີຄຸນຄ່າທີ່ສົ່ງເສີມເຊິ່ງກັນແລະກັນຢ່າງມີລະບົບ ສື່ການສອນຢ່າງໜຶ່ງອາດຈະໃຊ້ເພື່ອສ້າງຄວາມສົນໃຈ ໃນຂະນະທີ່ສື່ອີກຢ່າງໜຶ່ງໃຊ້ເພື່ອອະທິບາຍຂໍ້ແທ້ຈິງຂອງເນື້ອໃນບົດຮຽນ ແລະ ອີກຊະນິດ

ໜຶ່ງອາດຈະໃຊ້ເພື່ອກໍ່ໃຫ້ເກີດຄວາມເຂົ້າໃຈຫຼາຍຂຶ້ນ ແລະ ປ້ອງກັນການເຂົ້າໃຈຄວາມໝາຍຜິດ ການໃຊ້ສື່ປະສົມຈະຊ່ວຍໃຫ້ຜູ້ຮຽນມີປະສົບການຈາກປະສາດສຳຜັດທີ່ຜະສົມຜະສານກັນໃຫ້ນັກຮຽນໄດ້ຄົ້ນພົບວິທີການທີ່ຈະຮຽນໃນສິ່ງທີ່ຕ້ອງການໄດ້ດ້ວຍຕົນເອງຫຼາຍຍິ່ງຂຶ້ນ

ວາຣິນ ຣັດສະມີພົມ (2531) ໃຫ້ຄວາມໝາຍສື່ປະສົມໄວ້ວ່າ ເປັນການລວບລວມວັດສະດຸ ເພື່ອການຮຽນການສອນທີ່ປະກອບດ້ວຍສືຫຼາຍກວ່າໜຶ່ງຊະນິດຂຶ້ນໄປ ມາຈັດລະບົບໄວ້ຢ່າງກ່ຽວເນື່ອງກັນ ໃນການສອນເນື້ອຫາວິຊາພຽງເລື່ອງດຽວຊຸດສືປະສົມອາດຈະປະກອບດ້ວຍສະໄລ ເທບສຽງ ພາບນິ້ງ ເອກະສານຄຳອະທິບາຍ ຮູບພາບແຜ່ນພາບ ແບບຈຳລອງ ແລະອື່ນໆ

ກິດານັນ ມະລິທອງ (2543) ໄດ້ກ່າວວ່າໃນການໃຊ້ສື່ການສອນຕ່າງໆ ບໍ່ວ່າຈະເປັນສື່ຊະນິດໃດຫຼືປະເພດໃດກໍ່ຕາມ ຜູ້ສອນອາດຈະໃຊ້ສື່ຄັ້ງລະພຽງສື່ດຽວ ຫຼື ອາດຈະໃຊ້ສື່ຮ່ວມກັນຫຼາຍຢ່າງໃນຮູບແບບຂອງ "ສື່ປະສົມ" ກໍ່ໄດ້ ໂດຍອາດຈະເປັນການໃຊ້ກັບຜູ້ຮຽນກຸ່ມໃຫຍ່ ກຸ່ມຍ່ອຍ ຫຼື ໃນການສຶກສາລາຍບຸກຄົນ ການໃຊ້ສື່ປະສົມນີ້ໂດຍທົ່ວໄປແລ້ວຈະໃຊ້ສື່ແຕ່ລະຄັ້ງຢ່າງເປັນຂັ້ນຕອນໄປ ແຕ່ໃນບາງຄັ້ງກໍ່ອາດຈະໃຊ້ສື່ຫຼາຍຊະນິດພ້ອມກັນກໍ່ໄດ້

ການນຳສື່ປະສົມມາໃຊ້ໃນຂະບວນການສອນ ອາດຢູ່ໃນລັກສະນະເປັນຊຸດ ຖ້າອອກແບບມາເພື່ອໃຊ້ໃນການຮຽນການສອນສະເພາະເລື່ອງໃດເລື່ອງໜຶ່ງພຽງເລື່ອງດຽວ ກໍ່ຈັດເປັນ "ຊຸດການສອນ" (ວາດສະໜາ ຊາວຫາ, 2533) ສຳລັບໃຫ້ຜູ້ສອນໄດ້ໃຊ້ຢ່າງມີປະສິດທິພາບ ແລະ "ຊຸດການຮຽນ" ສຳລັບຜູ້ຮຽນ ເພື່ອໃຫ້ສາມາດໃຊ້ຮຽນຮູ້ໄດ້ດ້ວຍຕົນເອງ ໃນລັກສະນະດຽວກັນ ເມື່ອນຳມາໃຊ້ໃນຂະບວນການຝຶກອົບຮົມກໍ່ຢູ່ໃນລັກສະນເປັນຊຸດຝຶກອົບຮົມ ຄື ປະກອບດ້ວຍສື່ຕັ້ງແຕ່ 2 ປະເພດຂຶ້ນໄປ ທັ້ງນີ້ສື່ແຕ່ລະຊະນິດຈະມີທັ້ງສ່ວນເດັ່ນ ແລະ ສ່ວນດ້ອຍແຕກຕ່າງກັນໄປ ການນຳສື່ແຕ່ລະຊະນິດມາໃຊ້ຮ່ວມ ເພື່ອສະໜັບສະໜຸນແລະສົ່ງເສີມເຊິ່ງກັນແລະກັນ ເຮັດໃຫ້ເກີດປະໂຫຍດຕໍ່ການຝຶກອົບຮົມ

**5.2 ປະໂຫຍດຂອງສື່ປະສົມ**

ໄຊຍົງ ພົມວົງ (2520) ໄດ້ກ່າວເຖິງປະໂຫຍດຂອງສື່ປະສົມ ດັ່ງນີ້

1. ຜູ້ຮຽນສາມາດຮຽນໄດ້ດ້ວຍຕົນເອງຕາມທີ່ຕ້ອງການ ຈາກແຫຼ່ງຄວາມຮູ້ຫຼາຍແຫຼ່ງ
2. ຊ່ວຍປະຫຍັດເວລາ ບໍ່ຈຳເປັນຕ້ອງຮຽນຮູ້ໃນສິ່ງທີ່ຜູ້ຮຽນຮູ້ແລ້ວ
3. ຊ່ວຍລົດຈຳນວນຜູ້ສອບເສັງຕົກ ເພາະວ່າທັ້ງຄົນເກັ່ງຫຼືອ່ອນ ຕ່າງກໍ່ຮຽນສຳເລັດ ເຖີງຈະໃຊ້ເວລາຕ່າງກັນ
4. ສາມາດວັດໄດ້ວ່າ ປະສົບການໃດໃນສື່ປະສົບຜົນສຳເລັດແລະປະສົບການໃດບໍ່ປະສົບຜົນສຳເລັດ ເພື່ອປັບປຸງແກ້ໄຂໃຫ້ດີຂຶ້ນ

# 6. ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

## 12.2 ງານວິໄຈທີ່ກ່ຽວຂ້ອງ

ສຸເມດ ໂຊດຕະກຸນ (2554) ໄດ້ວິໄຈເລື່ອງການຮັບຮູ້ຂໍ້ມູນຂ່າວສານຂອງປະຊາຊົນໃນເມືອງພິຈິດ ແຂວງພິຈິດ ປະເທດໄທ ກຸ່ມຕົວຢ່າງທີ່ສຶກສາໄດ້ຈາກການເກັບຂໍ້ມູນຈາກກຸ່ມຕົວຢ່າງຊຶ່ງເປັນຜູ້ນຳຊຸມຊົນ ແລະ ຫົວໜ້າຄອບຄົວ ຫຼື ຕົວແທນຄອບຄົວຈຳນວນ 376 ຄົນ ເຄື່ອງມືທີ່ໃຊ້ໃນການສຶກສາ ຄື ແບບສອບຖາມທາງດ້ານປະລິມານ ຜົນການວິໄຈເຫັນວ່າ ຂໍ້ມູນທົ່ວໄປກ່ຽວກັບປັດໄຈດ້ານປະຊາກອນທີ່ໃຊ້ໃນການາສຶກສາດ້ານ

ເພດ ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ສ່ວນຫຼາຍເປັນເພດຍິງ ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ມີອາຍຸຢູ່ໃນຊ່ວງລະຫວ່າງ 46 – 55 ປີ ການສຶກສາມີລະດັບການສຶກສາມັດທະຍົມຕອນຕົ້ນ ມີອາຊີບຫຼັກຄື ກະເສດຕະກຳ ມີຕຳແໜ່ງຫຼາຍທີ່ສຸດຄື ປະຊາຊົນທົ່ວໄປມີໄລຍະເວລາທີ່ພັກອາໃສຢູ່ໃນພື້ນທີ່ 10 ປີຂຶ້ນໄປ ວິທີການຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການພັດທະນາທ້ອງຖິ່ນໂດຍຜ່ານສື່ຕ່າງໆ ມີຈຳນວນຄັ້ງຂອງການໄດ້ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການພັດທະນາທ້ອງຖິ່ນທີ່ດຳເນີນການໂດຍອົງການບໍລິຫານຫຼາຍກວ່າ 10 ຄັ້ງຂຶ້ນໄປ/ປີ ການມີສ່ວນຮ່ວມໃນການເຮັດກິດຈະກຳປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ມີສ່ວນຮ່ວມໃນການເຮັດກິດຈະກຳຫຼາຍທີ່ສຸດຄື 3 – 4 ຄັ້ງ ຄິດເປັນ 90 % ການຮັບຮູ້ຂໍ້ມູນຂ່າວສານຂອງປະຊາກອນຜ່ານສື່ຕ່າງໆ ໂດຍລວມຢູ່ໃນລະດັບປານກາງ ເມື່ອພິຈາລະນາລາຍຂໍ້ເຫັນວ່າ ລະດັບຫຼາຍ ມີຢູ່ 2 ຂໍ້ ຄື ການຮັບຮູ້ຂໍ້ມູນຂ່າວສານຈາກການກະຈາຍສຽງພາຍໃນໝູ່ບ້ານ ແລະ ການຮັບຮູ້ຂໍ້ມູນຂ່າວສານຈາກຜູ້ນຳໝູ່ບ້ານ ເຊັ່ນ ຫົວໜ້າກຸ່ມ ພໍ່ບ້ານ ສະມາຊິກອົງການບໍລິຫານ ແລະ ຈາກເວັບໄຊ ຢູ່ໃນລະດັບໜ້ອຍທີ່ສຸດ ທັງນີ້ອາດເປັນເພາະປະຊາຊົນໃນພື້ນທີ່ຍັງບໍ່ເຫັນຄວາມສຳຄັນຂອງການຮັບຮູ້ຂໍ້ມູນຂ່າວສານ ແລະ ຍັງຂາດຄວາມຮູ້ ຂາດອຸປະກອນເຄື່ອງມືໃນການໃຊ້ອິນເຕີເນັດ ສ່ວນການຮັບຮູ້ຂໍ້ມູນຂ່າວສານຂອງປະຊາຊົນຜ່ານການເຂົ້າຮ່ວມກິດຈະກຳ ຫຼື ໂຄງການຕ່າງໆ ໂດຍລວມຢູ່ໃນລະດັບໜ້ອຍ ເມື່ອພິຈາລະນາລາຍຂໍ້ເຫັນວ່າການຮັບຮູ້ຂໍ້ມູນຂ່າວສານຂອງປະຊາຊົນຜ່ານການເຂົ້າຮ່ວມກິດຈະກຳ ຫຼື ໂຄງການຕ່າງໆ ທີ່ຢູ່ໃນລະດັບປານກາງ ຄື ຂໍຮັບຮູ້ຂໍ້ມູນຂ່າວສານຈາກອົງການບໍລິຫານ ຮ່ວມຄັດຄ້ານຂໍ້ບັງຄັບທີ່ກະທົບຕໍ່ວິຖີຊີວິດ ແລະ ຄວາມເດືອດຮ້ອນແກ່ຊາວບ້ານ ແລະ ຮ່ວມຮັບຟັງການຊີ້ແຈ້ງ ຜົນການດຳເນີນໂຄງການຕາມແຜນພັດທະນາ ແລະ ການໃຊ້ຈ່າຍງົບປະມານປະຈຳປີ ແລະ ສ່ວນທີ່ຢູ່ໃນລະດັບນ້ອຍທີ່ສຸດຄື ຮ່ວມຮັບຟັງການປະຊຸມສະພາອົງການບໍລິຫານ ຮ່ວມເປັນຄະນະກຳມະການຈັດທຳແຜນພັດທະນາ ແລະ ອື່ນໆ

ຄຳພັນ ກໍມຸກໂຊ (2535) ໄດ້ພັດທະນາຊຸດຝຶກອົບຮົມດ້ວຍຕົນເອງເພື່ອພັດທະນາມະໂນທັດດ້ານການສອນຂອງຄູປະຖົມ ເຫັນວ່າ ຊຸດຝຶກອົບຮົມທີ່ສ້າງຂຶ້ນທັງ 5 ຊຸດ ມີປະສິດທິພາບຕາມເກນ 80/80 ຄື ມີປະສິດທິພາບຕັ້ງແຕ່ ມີປະສິດທິພາບຕັ້ງແຕ່ 80.95/91.38 ຂຶ້ນໄປ ແລະ ຄະແນນທົດສອບກ່ອນ ແລະ ຫຼັງຮຽນແຕ່ກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05

ກິດສະໜາ ປຣະຊາກຸນ (2537) ໄດ້ສ້າງຊຸດຝຶກອົບຮົມເລື່ອງ ການເລືອກສື່ການຮຽນການສອນ ສຳລັບຄູຜູ້ສອນໃນໂຮງຮຽນມັດທະຍົມສຶກສາ ເຫັນວ່າ ຊຸດຝຶກອົບຮົມທີ່ສ້າງຂຶ້ນມີປະສິດທິພາບ 80/86.7 ສູງກວ່າເກນ 80/80 ແລະຜົນການປຽບທຽບການທົດສອບກ່ອນ ແລະ ຫຼັງການອົບຮົມ ແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05 ສ່ວນຜົນສຳເລັດຫຼັງການໃຊ້ຊຸດຝຶກອົບຮົມລະຫວ່າງຄູ-ອາຈານທີ່ມີພື້ນທີ່ຄວາມຮູ້ແລະບໍ່ມີພື້ນຖານຄວາມຮູ້ດ້ານເທກໂນໂລຊີການສຶກສາແຕກຕ່າງກັນຢ່າງບໍ່ມີໄນຍະສຳຄັນທາງສະຖິຕິ

ນາດຕະຍາ ແກ້ວໃສ (2542) ໄດ້ພັດທະນາຫຼັກສູດແລະຊຸດຝຶກອົບຮົມຂອງຄູ ເລື່ອງ ການໃຊ້ໂປຼແກຼມ Powerpoint ຜູ້ວິໄຈໄດ້ໃຫ້ຜູ້ເຂົ້າຮັບການອົບຮົມແລະເຮັດການທົດສອບການຝຶກອົບຮົມ (Pretest) ເມື່ອຂະບວນການຝຶກອົບຮົມສຳເລັດແລ້ວ ໃຫ້ຜູ້ເຂົ້າຮັບການຝຶກອົບຮົມເຮັດແບບປະເມີນຄວາມເພິ່ງພໍໃຈໃນການຝຶກອົບຮົມ ແລະແບບທົດສອບວັດຜົນສຳເລັດທາງການຝຶກອົບຮົມ (Posttest) ຫຼັງຈາກນັ້ນນຳຂໍ້ມູນທີ່ໄດ້ມາຄຳນວນຫາປະສິດທິພາບຂອງຫຼັກສູດແລະຊຸດຝຶກອົບຮົມ ຜົນການວິໄຈເຫັນວ່າ ຫຼັກສູດທີ່ສ້າງຂຶ້ນໃຊ້ຝຶກອົບຮົມໄດ້ຢ່າງມີປະສິດທິພາບ ຊຸດຝຶກອົບຮົມມີປະສິດທິພາບທາງທິດສະດີເທົ່າກັບ 89.31/81.96 ແລະມີປະສິດທິພາບທາງພາກ

ປະຕິບັດເທົ່າກັບ 87.11/90.18 ສູງກວ່າເກນ 80/80 ຕາມທີ່ກຳນົດໄວ້ ແລະ ຄະແນນສອບກ່ອນແລະຫຼັງຝຶກອົບຮົມມີຄວາມແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ .01

ພູມິນ ເຫຼົາອຳນາດ (2010, ໜ້າ 1) ໄດ້ສຶກສາເລື່ອງ ການສຶກສາສະພາບ ແລະ ບັນຫາການວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດຣາຊະສິທາຣາມ ສຳນັກງານເຂດບາງກອກໃຫຍ່ ສັງກັດກຸງເທບມະຫານະຄອນ ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ 1) ສຶກສາສະພາບການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດຣາຊະສິດທາຣາມ ສຳນັກງານເຂດບາງກອກໃຫຍ່ ສັງກັດກຸງເທບມະຫານະຄອນ ແລະ 2) ສຶກສາບັນຫາການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດຣາຊະສິດທາຣາມສຳນັກງານເຂດບາງກອກໃຫຍ່ສັງກັດກຸງເທບມະຫານະຄອນ ປະຊາກອນທີ່ໃຊ້ໃນການວິໄຈໄດ້ແກ່ ຄູຈຳນວນ 33 ຄົນ ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ ໄດ້ແກ່ແບບສອບຖາມປະເມີນຄ່າ 5 ລະດັບ ແລະ ແບບກວດສອບລາຍການ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າຮ້ອຍລະ ຄ່າສະເລ່ຍ ແລະ ຄ່າສ່ວນບ່ຽງເບນມາດຕະຖານ

ຜົນການວິໄຈ ເຫັນວ່າ

1. ສະພາບການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດຣາຊະສິດທາຣາມ ສຳນັກງານເຂດບາງກອກໃຫຍ່ ສັງກັດກຸງເທບມະຫານະຄອນ ໂດຍລວມຢູ່ໃນລະດັບປານກາງ ເມື່ອພິຈາລະນາເປັນດ້ານໆ ລຽງລຳດັບຄ່າສະເລ່ຍ ດັ່ງນີ້ ດ້ານຄວາມຮູ້ມມີຄ່າສະເລ່ຍສູງສຸດ ຮອງລົງມາ ຄື ດ້ານການສົ່ງເສີມສະໜັບສະໜູນຈາກຜູ້ບໍລິຫານ ແລະ ດ້ານເຄື່ອງມື ວັດສະດຸອຸປະກອນ ມີຄ່າສະເລ່ຍຕ່ຳສຸດ

2. ບັນຫາການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດຣາຊະສິດທາຣາມສຳນັກງານເຂດບາງກອນໃຫຍ່ສັງກັດກຸງເທບມະຫານະຄອນ ໂດຍລວມຢູ່ໃນລະດັບນ້ອຍ ເມື່ອພິຈາລະນາເປັນດ້ານໆ ລຽງລຳດັບຄ່າສະເລ່ຍ ດັ່ງນີ້ ດ້ານເວລາ ມີຄ່າສະເລ່ຍສູງສຸດ ຮອງລົງມາຄືດ້ານຄວາມຮູ້ ແລະ ດ້ານການສົ່ງເສີມສະນຸນຈາກຜູ້ບໍລິຫານມີຄ່າສະເລ່ຍຕ່ຳສຸດ

ສະໄຫວ ຈຸລາ (2010,ບົດຄັດຫຍໍ້) ໄດ້ສຶກສາເລື່ອງ ການສຶກສາຄວາມຄິດເຫັນກ່ຽວກັບບັນຫາ ແລະ ແນວທາງພັດທະນາວຽກງານວິໄຈໃນຫ້ອງຮຽນຂອງຄູ-ອາຈານໂຮງຮຽນສາລາຄູ້ ເຂດມີນບຸຣີ ກຸງເທບມະຫານະຄອນ ການວິໄຈມີຈຸດປະສົງເພື່ອສຶກສາຄວາມຄິດເຫັນຂອງບຸກຄະລາກອນທີ່ມີຕໍ່ບັນຫາການເຮັດວິໄຈໃນຫ້ອງຮຽນຂອງຄູອາຈານໃນໂຮງຮຽນສາລາຄູ້ ແລະ ສຶກສາແນວທາງການພັດທະນາການເຮັດວິໄຈໃນຫ້ອງຮຽນເພື່ອພັດທະນາການຮຽນຮູ້ຂອງນັກຮຽນ ໂດຍຈຳແນກສະພາບບັນຫາການດຳເນີນການວິໄຈໃນຫ້ອງຮຽນຕາມຜົນການປະຊຸມຂອງສຶກສານິເທດທົ່ວປະເທດ ແບ່ງເປັນ 4 ດ້ານໄດ້ແກ່ ດ້ານຄວາມຮູ້ໃນການເຮັດວິໄຈໃນຫ້ອງຮຽນຂອງຄູ ດ້ານການພັດທະນາບຸກຄະລາກອນ ດ້ານການສະໜັບສະໜູນຈາກໂຮງຮຽນ ແລະ ດ້ານຄວາມສາມາດໃນການເຮັດວິໄຈໃນຫ້ອງຮຽນຂອງຄູ ກຸ່ມຕົວຢ່າງໄດ້ແກ່ ຄູ-ອາຈານໂຮງຮຽນສາລາຄູ້ ຈຳນວນ 21 ຄົນ ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນ ຄື ແບບສອບຖາມ ການວິເຄາະຂໍ້ມູນດ້ວຍເຄື່ອງຄອມພິວເຕີ ໂປຣແກຣມສຳເລັດຮູບSPSS for the Windowsໂດຍໃຊ້ຄ່າຮ້ອຍລະ ຄ່າສະເລ່ຍ ຄ່າຄວາມບ່ຽງເບນມາດຕະຖານ ແລະ ທົດສອບຄ່າ t (t-test)

ຜົນການສຶກສາຄັ້ງນີ້ເຫັນວ່າ ການເຮັດວິໄຈໃນຫ້ອງຮຽນມີລະດັບບັນຫາທັງ 4 ດ້ານ ຕາມຄວາມຄິດເຫັນຂອງຄູຜູ້ສອນ ຢູ່ໃນລະດັບນ້ອຍ ພະນັກງານຄູບໍ່ມີຄວາມໝັ້ນໃຈໃນການເຮັດວິໄຈໃນຫ້ອງຮຽນ ຂາດຮູບແບບ ແລະ ຕົວຢ່າງການເຮັດວິໄຈທີ່ຖືກຕ້ອງ ແນວທາງການແກ້ບັນຫາ ໂຮງຮຽນຈັດໃຫ້ມີການອົບຮົມການເຮັດວິໄຈໃນ

ຫ້ອງຮຽນ ແລະ ຕິດຕາມຜົນດໍາເນີນການວິໄຈຢ່າງຕໍ່ເນື່ອງ ຈັດຫາເອກະສານ ຕໍາລາ ແຫຼ່ງຄວາມຮູ້ດ້ານການວິໄຈໃນຫ້ອງຮຽນເພີ່ມຕື່ມ ເນັ້ນການວິໄຈເພື່ອພັດທະນາ

ການປຽບທຽບຄວາມຄິດເຫັນຂອງພະນັກງານຄູໂຮງຮຽນສາລາຄູ້ ສໍານັກງານມິນບຸຣີ ກຸງເທບມະຫານະຄອນ ກ່ຽວກັບບັນຫາການວິໄຈໃນຫ້ອງຮຽນ ກັບສະຖານະພາບຂອງຄູ ປະກອບດ້ວຍວຸດທິການສຶກສາ ປະສົບການໃນການສອນ ແລະ ການອົບຮົມວິໄຈໃນຫ້ອງຮຽນ ເຫັນວ່າ ບໍ່ມີຄວາມແຕກຕ່າງກັນຢ່າງມີຄວາມໝາຍສໍາຄັນທາງສະຖິຕິທີ່ລະດັບ .05

ໂດຍສະຫຼຸບການວິໄຈຄັ້ງນີ້ ເຮັດໃຫ້ຮູ້ຄວາມຄິດເຫັນຂອງພະນັກງານຄູໂຮງຮຽນສາລາຄູ້ທີ່ມີຕໍ່ສະພາບບັນຫາການເຮັດວິໄຈໃນຫ້ອງຮຽນ ແລະ ແນວທາງພັດທະນາການວິໄຈໃນຫ້ອງຮຽນ ຈະສົ່ງຜົນໃຫ້ຄູເຮັດວິໄຈໃນຫ້ອງຮຽນໄດ້ແທ້ຈິງ ແລະ ນໍາມາໃຊ້ໃນການຈັດການຮຽນ-ການສອນ ເຊິ່ງສົ່ງຜົນໃຫ້ນັກຮຽນມີຜົນສໍາເລັດທາງການຮຽນສູງຂຶ້ນຕໍ່ໄປ

ອັງຄະນາ ນຸດຕະຍະກຸນ ແລະ ຄະນະ (2010, ໜ້າ 1-3) ໄດ້ສຶກສາເລື່ອງ ສະພາບ ແລະ ແນວທາງການພັດທະນາການວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສ່ວນດຸສິດ ເຊິ່ງການວິໄຈມີຈຸດປະສົງເພື່ອ 1) ສຶກສາສະພາບການເຮັດວິໄຈໃນຫ້ອງຮຽນຂອງຄູ-ອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ 2) ປຽບທຽບສະພາບການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ຈໍາແນກຕາມສະຖານະພາບທົ່ວໄປຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ 3) ສຶກສາເຈຕະຄະຕິຕໍ່ການວິໄຈຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ 4) ສຶກສາຄວາມສໍາພັນລະຫວ່າງເຈຕະຄະຕິຕໍ່ການວິໄຈກັບສະພາບການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ແລະ 5) ສຶກສາແນວທາງການພັດທະນາການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ໃຊ້ວິທີວິໄຈແບບປະສົມປະສານປະກອບດ້ວຍການວິໄຈທາງດ້ານປະລິມານ ແລະ ທາງດ້ານຄຸນນະພາບ ກຸ່ມຕົວຢ່າງໃນການວິໄຈທາງປະລິມານ ຄື ອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ຈໍານວນ 233 ຄົນ ໄດ້ມາຈາກການສຸ່ມຕົວຢ່າງແບບງ່າຍ (simple random sampling)ໂດຍການທຽບສັດສ່ວນຈາກປະຊາກອນແຕ່ລະຄະນະ ເຄື່ອງມືທີ່ໃຊ້ເກັບລວບລວມຂໍ້ມູນ ຄື ແບບສອບຖາມສະພາບການເຮັດວິໄຈໃນຫ້ອງຮຽນ ແລະ ເຈຕະຄະຕິຕໍ່ການເຮັດວິໄຈຂອງອາຈານມະຫາວິທະຍາໄລສວນດຸສິດ ມີຄ່າຄວາມເຊື່ອໝັ້ນທັງຊຸດຕາມວິທີຄຣອນບາກ ເທົ່າກັບ .9282 ວິເຄາະຂໍ້ມູນໂດຍໃຊ້ຄ່າຮ້ອຍລະ ຄ່າສະເລ່ຍ ແລະ ສ່ວນບ່ຽງເບນມາດຕະຖານ ແລະ ປຽບທຽບສະພາບການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສ່ວນດຸສິດ ຈໍາແນກຕາມສະຖານະພາບທົ່ວໄປຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ສະຖິຕິທີ່ໃຊ້ ຄື ສະຖິຕິທົດສອບທີ ການວິເຄາະຄວາມແປປວນທາງດຽວ ການທົດສອບລາຍຄູ່ໂດຍວິທີ LSDແລະ ສໍາປະສິດສະຫະສໍາພັນແບບເພຍຣ໌ສັນ ແລະ ຜູ້ໃຫ້ຂໍ້ມູນສໍາຄັນໃນການວິໄຈທາງດ້ານຄຸນນະພາບ ຄື ນັກວິຊາການ ຜູ້ບໍລິຫານໃນມະຫາວິທະຍາໄລຣາດຊະພັດສວນດຸສິດ ແລະ ນັກວິຊາການ ຜູ້ບໍລິຫານມະຫາວິທະຍາໄລຈາກພາຍນອກທີ່ມີຜົນງານ ແລະ ຄວາມຊໍານານ ຫຼື ປະສົບການດ້ານການວິໄຈໃນຫ້ອງຮຽນ ແລະ ກໍານົດນະໂຍບາຍດ້ານການວິໄຈໃນຫ້ອງຮຽນ ຈໍານວນ 19 ຄົນ ເກັບລວບລວມຂໍ້ມູນໂດຍໃຊ້ການສໍາພາດທາງເລິກ ວິເຄາະຂໍ້ມູນໂດຍໃຊ້ການວິເຄາະເນື້ອຫາ ແລະ ຫາຄ່າຄວາມຖີ່ ຊຶ່ງຜົນການວິໄຈ ເຫັນວ່າ :

1) ສະພາບການວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດ ອາຈານມະຫາວິທະຍາໄລສວນດຸສິດທີ່ເປັນກຸ່ມຕົວຢ່າງມີລະດັບປະຕິບັດການເຮັດວິໄຈໃນຫ້ອງຮຽນໃນພາບລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນລາຍດ້ານ ເຫັນວ່າ ອັນດັບທຳອິດ ຄື ດ້ານຂະບວນການເຮັດວິໄຈ ໂດຍມີລະດັບປະຕິບັດສູງສຸດອັນດັບທຳອິດຄື ອາຈານເຮັດວິໄຈຄວບຄູ່ກັບການຮຽນການສອນ ແລະ ມີເປົ້າໝາຍໃນການເຮັດວິໄຈໃນຫ້ອງຮຽນເພື່ອພັດທະນາການຮຽນ-ການສອນ ຮອງລົງມາຄື ດ້ານບໍລິຫານຈັດການ ໂດຍມີລະດັບປະຕິບັດສູງສຸດອັນດັບທຳອິດ ຄື ການໃຊ້ງົບປະມານສ່ວນຕົວໃນການເຮັດວິໄຈໃນຫ້ອງຮຽນ ແລະ ດ້ານການເສີມແຮງ ໂດຍມີລະດັບປະຕິບັດສູງສຸດອັນດັບທຳອິດຄື ມະຫາວິທະຍາໄລກຳນົດໃຫ້ການເຮັດວິໄຈໃນຫ້ອງຮຽນເປັນສ່ວນໜຶ່ງຂອງພາລະວຽກງານຕາມລຳດັບ

2) ອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດທີ່ມີສະຖານະພາບທົ່ວໄປດ້ານຄະນະທີ່ສັງກັດ ແລະ ສະຖານະພາບການເຮັດວິໄຈຕ່າງກັນ ມີສະຖາບການເຮັດວິໄຈໃນຫ້ອງຮຽນໃນພາບລວມແຕກຕ່າງກັນຢ່າງມີຄວາມໝາຍສຳຄັນທາງສະຖິຕິທີ່ລະດັບ .001 ແລະ .05 ຕາມລຳດັບ ສ່ວນສະຖານະພາບທົ່ວໄປດ້ານອື່ນໆ ບໍ່ແຕກຕ່າງກັນ

3) ເຈຕະຄະຕິຕໍ່ການວິໄຈກັບສະພາບການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດໃນພາບລວມມີຄວາມສຳພັນກັນຢ່າງມີຄວາມໝາຍສຳຄັນທາງສະຖິຕິທີ່ລະດັບ .01

4) ແນວທາງການພັດທະນາການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດມີ 3 ດ້ານຄື: 1) ດ້ານຂະບວນການວິໄຈ ອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດຄວນໄດ້ຮັບການສະໜັບສະໜູນຈາກມະຫາວິທະຍາໄລຣາດຊະພັດສວນດຸສິດ ໃນເລື່ອງຂະບວນການພັດທະນາການເຮັດວິໄຈໃນຫ້ອງຮຽນ ການໃຫ້ຄວາມຮູ້ດ້ານການວິໄຈໃນຫ້ອງຮຽນຮູບແບບທີ່ຫຼາກຫຼາຍ ການຈັດລະບົບຄູທີ່ປຶກສາການຈັດລະບົບຕິດຕາມຂະບວນການວິໄຈໃນຫ້ອງຮຽນຢ່າງຕໍ່ເນື່ອງ ການຂຽນລາຍງານການວິໄຈໃນຫ້ອງທີ່ຊັດເຈນ ການເຜີຍແຜ່ ແລະ ການນຳສະເໜີຜົນການວິໄຈໃນຫ້ອງຮຽນ 2) ດ້ານການບໍລິຫານຈັດການມະຫາວິທະຍາໄລຣາດຊະພັດສວນດຸສິດ ຄວນກຳນົດນະໂຍບາຍດ້ານໄລຍະເວລາໃນການເຮັດວິໄຈໃນຫ້ອງຮຽນ ການຈັດສັນເວລາ ແລະ ການນຳນະວັດຕະກຳມາໃຊ້ສຳລັບການວິໄຈໃນຫ້ອງຮຽນ ແລະ 3) ດ້ານການເສີມແຮງອາຈານມະຫາວິທະຍາໄລຣາດຊະພັດສວນດຸສິດໃນເລື່ອງເງິນງົບປະມານສະໜັບສະໜູນການວິໄຈໃນຫ້ອງຮຽນ ຂະບວນການເຜີຍແຜ່ຜົນງານວິໄຈໃນຫ້ອງຮຽນ ການອົບຮົມຢ່າງຕໍ່ເນື່ອງທັງພາຍໃນ ແລະ ພາຍນອກ ລາງວັນ ວັດສະດຸອຸປະກອນໃນການເຮັດວິໄຈໃນຫ້ອງຮຽນ ແລະ ການໄດ້ຮັບຄວາມຮ່ວມມືຈາກໜ່ວຍງານທີ່ກ່ຽວຂ້ອງ

ປາໂມດ ວິຣະວັນ ແລະ ຄະນະ (2007, ໜ້າ 149-150) ສຶກສາເລື່ອງ ການພັດທະນາຄູດ້ານການເຮັດວິໄຈໃນຫ້ອງຮຽນ: ກໍລະນີສຶກສາໂຮງຮຽນບ້ານທ່າສອງຄອນ ສຳນັກງານເຂດພື້ນທີ່ການສຶກສາມະຫາສາລະຄາມ ເຂດ1 ເຊິ່ງການວິໄຈມີຈຸດປະສົງຄື 1) ເພື່ອພັດທະນາຄູດ້ານການເຮັດວິໄຈໃນຫ້ອງຮຽນໃຫ້ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການເຮັດວິໄຈໃນຫ້ອງຮຽນ ມີຄວາມສາມາດໃນການເຮັດວິໄຈໃນຫ້ອງຮຽນ ແລະ 2) ເພື່ອສຶກສາຄວາມຄິດເຫັນຂອງກຸ່ມຕົວຢ່າງທີ່ມີຕໍ່ການດຳເນີນການພັດທະນາຄູດ້ານການເຮັດວິໄຈໃນຫ້ອງຮຽນ ກຸ່ມຕົວຢ່າງໃນການວິໄຈ ຄື ຄູຜູ້ສອນໂຮງຮຽນບ້ານທ່າສອງຄອນ ຈຳນວນ 21 ຄົນ ດຳເນີນການພັດທະນາຄູກ່ຽວກັບການເຮັດວິໄຈໃນຫ້ອງຮຽນພາຍໃຕ້ກອບການສຶກສາຕາມຂະບວນການຂັ້ນຕອນການເຮັດວິໄຈໃນຫ້ອງຮຽນປະກອບດ້ວຍ 6 ດ້ານ ໄດ້ແກ່ ການສຳຫຼວດ ແລະ ວິເຄາະບັນຫາ ການກຳນົດວິທີການໃນການແກ້ບັນຫາ ການພັດທະນາວິທີການ ຫຼື ນະວັດຕະກຳ ການນຳວິທີການ

ຫຼື ນະວັດຕະກຳໄປໃຊ້ ການສະຫຼຸບຜົນການວິໄຈ ແລະ ການຂຽນລາຍງານຜົນການວິໄຈ ການວິໄຈນີ້ເປັນການວິໄຈພາປະຕິບັດ (Action research) ດຳເນີນການ 3 ຮອບວຽນ ດ້ວຍກົນລະຍຸດທາງການອົບຮົມພາກປະຕິບັດ ແລະ ການນິເທດພາຍໃນ

ຜົນການວິໄຈ ເຫັນວ່າ

1) ຄວາມຮູ້ຄວາມເຂົ້າໃຈກ່ຽວກັບການເຮັດວິໄຈໃນຫ້ອງຮຽນໂດຍພາບລວມ ກຸ່ມຕົວຢ່າງມີຄະແນນຜົນການທົດສອບຄວາມຮູ້ຄວາມເຂົ້າໃຈກ່ຽວກັບການເຮັດວິໄຈໃນຫ້ອງຮຽນເທົ່າກັບ 26.19 ເຊິ່ງຜ່ານເກນ ( 75% ຫຼື 22.50 ຄະແນນ) ການພິຈາລະນາເປັນລາຍບຸກຄົນ ກຸ່ມຕົວຢ່າງ ຈຳນວນ 19 ຄົນ ມີຄະແນນຜ່ານເກນ ມີຜູ້ທີ່ບໍ່ຜ່ານເກນ ຈຳນວນ 2 ຄົນ

2) ຄວາມສາມາດໃນການເຮັດວິໄຈໃນຫ້ອງຮຽນ ຄະແນນຜົນການປະເມີນຜົນງານວິໄຈຫ້ອງຮຽນຂອງກຸ່ມຕົວຢ່າງ ຈຳນວນ 21 ເລື່ອງ ຜົນງານວິໄຈໃນຫ້ອງຮຽນທີ່ກຸ່ມຕົວຢ່າງຈັດຂຶ້ນຜ່ານເກນການປະເມີນ (75%) ຈຳນວນ 19 ເລື່ອງ ຜົນງານວິໄຈໃນຫ້ອງຮຽນບໍ່ຜ່ານເກນການປະເມີນ ຈຳນວນ 2 ເລື່ອງ

3) ຄວາມຄິດເຫັນຕໍ່ການດຳເນີນການພັດທະນາຄູດ້ານການເຮັດວິໄຈໃນຫ້ອງຮຽນ ໃນພາບລວມກຸ່ມຕົວຢ່າງມີລະດັບຄວາມຄິດເຫັນຕໍ່ການພັດທະນາບຸກຄະລາກອນດ້ານການເຮັດວິໄຈໃນຫ້ອງຮຽນ ຂອງໂຮງຮຽນໂດຍລວມຢູ່ໃນລະດັບຫຼາຍ

ເພັນສີລີ ມຸກສົມບັດ ໄດ້ສຶກສາເລື່ອງ ການພັດທະນາບຸກຄະລາກອນກ່ຽວກັບການເຮັດວິໄຈໃນຫ້ອງຮຽນ ໂຮງຮຽນບ້ານແກ່ງຈະເລີນ ເມືອງພິບູນມັງສາຫານ ແຂວງອຸບົນຣາດຊະທານີ ຈຸດປະສົງຂອງການວິໄຈແມ່ນເພື່ອພັດທະນາບຸກຄະລາກອນໂຮງຮຽນບ້ານແກ່ງຈະເລີນ ເມືອງພິບູນມັງສາຫານ ແຂວງອຸບົນຣາດຊະທານີ ໃຫ້ມີຄວາມຮູ້ຄວາມເຂົ້າໃຈ ແລະ ຄວາມສາມາດໃນການເຮັດວິໄຈໃນຫ້ອງຮຽນ ດຳເນີນການໂດຍໃຊ້ວິໄຈພາກປະຕິບັດ (Action research) 2 ຮອບວຽນ ແຕ່ລະຮອບວຽນປະກອບດ້ວຍຂັ້ນຕອນການວາງແຜນ (Planning)ຂັ້ນຕອນການປະຕິບັດ (Action)ຂັ້ນຕອນການສັງເກດ (Observation)ແລະ ຂັ້ນຕອນການສະທ້ອນຄືນ (Reflection)ກຸ່ມຜູ້ຮ່ວມສຶກສາຄົ້ນຄວ້າມີ 8 ຄົນ ໄດ້ແກ່ ຜູ້ສຶກສາຄົ້ນຄວ້າຈຳນວນ 1 ຄົນ ຄູຜູ້ຮ່ວມສຶກສາໂດຍສະໝັກໃຈຈຳນວນ 4 ຄົນ ກຸ່ມຜູ້ໃຫ້ຂໍ້ມູນມີຈຳນວນ 3 ຄົນ ຄື ວິທະຍາການກົນລະຍຸດທີ່ໃຊ້ໃນການພັດທະນາການປະຊຸມພາກປະຕິບັດ ແລະ ການນິເທດ ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນໄດ້ແກ່ ແບບທົດສອບກ່ອນ-ຫຼັງການປະຊຸມພາກປະຕິບັດ ແບບສັງເກດ ແບບສຳພາດ ແບບບັນທຶກປະຈຳວັນ ແບບປະເມີນໂຄງການວິໄຈໃນຫ້ອງຮຽນ ແລະ ແບບປະເມີນລາຍງານວິໄຈໃນຫ້ອງຮຽນ ການກວດກາຂໍ້ມູນໃຊ້ຫຼັກການກວດສອບຂໍ້ມູນແບບຫຼາຍມິຕິ (Triangulation)ແລະນຳສະເໜີຜົນການສຶກສາຄົ້ນຄວ້າຂໍ້ມູນແບບພັນລະນາຜົນການສຶກສາເຫັນວ່າ ສະພາບກ່ອນພັດທະນາໃນການດຳເນີນວຽກງານກ່ຽວກັບການວິໄຈໃນຫ້ອງຮຽນຂອງ ບຸກຄະລາກອນໃນຫ້ອງຮຽນຄື ຄູສ່ວນຫຼາຍບໍ່ມີຄວາມຮູ້ ຄວາມເຂົ້າໃຈໃນຫຼັກການ ແລະ ຂະບວນການວິໄຈໃນຫ້ອງຮຽນ ຍັງບໍ່ດຳເນີນການວິໄຈຫ້ອງຮຽນ ສົ່ງຜົນໃຫ້ນັກຮຽນບໍ່ສາມາດພັດທະນາຕົນເອງໄດ້ເຕັມສັກກະຍະພາບຫຼັງຈາກໄດ້ດຳເນີນການພັດທະນາບຸກຄະລາກອນກ່ຽວກັບການວິໄຈໃນຫ້ອງຮຽນ ໂດຍໃຊ້ກົນລະຍຸດຄື ການປະຊຸມພາກປະຕິບັດ ແລະ ການນິເທດ ໃນຮອບວຽນທີ 1 ຜົນປະກົດວ່າ ກຸ່ມເປົ້າໝາຍທັງໝົດມີຄວາມຮູ້ ຄວາມເຂົ້າໃຈໃນການຂຽນໂຄງການວິໄຈໃນຫ້ອງຮຽນ ແລະ ການຂຽນລາຍງານວິໄຈໃນຫ້ອງຮຽນໄດ້ທຸກຄົນຕາມຂັ້ນຕອນການວິໄຈໃນຫ້ອງຮຽນທັງ 5 ຂັ້ນຕອນຄື ການສຳຫຼວດ ແລະ ວິເຄາະບັນຫາ ການກຳນົດວິທີການແກ້

ບັນຫາ ການພັດທະນາວິທີການ ຫຼື ນະວັດຕະກຳ ການນຳວິທີການ ຫຼື ນະວັດຕະກຳໄປໃຊ້ ແລະ ການສະຫຼຸບຜົນການວິໄຈໃນຫ້ອງຮຽນ ແຕ່ຍັງມີບັນຫາທີ່ຄວນພັດທະນາຕໍ່ໄປກໍ່ຄື ຄວາມຊຳນານໃນການເຮັດວິໄຈໃນຫ້ອງຮຽນໃນດ້ານການພັດທະນານະວັດຕະກຳທາງການສຶກສາ ການວິເຄາະຂໍ້ມູນດ້ວຍສະຖິຕິ ແລະ ການຂຽນລາຍງານການວິໄຈໃນຫ້ອງຮຽນຂອງກຸ່ມເປົ້າໝາຍທຸກຄົນ ຈຶ່ງໄດ້ດຳເນີນການພັດທະນາຕໍ່ໄປໃນຮອບວຽນທີ 2 ໂດຍໃຊ້ການນິເທດແກ່ກຸ່ມເປົ້າໝາຍກ່ຽວກັບການພັດທະນານະວັດຕະກຳທາງການສຶກສາ ການວິເຄາະຂໍ້ມູນດ້ວຍສະຖິຕິ ແລະ ການຂຽນລາຍງານການວິໄຈໃນຫ້ອງຮຽນ ຜົນການພັດທະນາ ປະກົດວ່າກຸ່ມເປົ້າໝາຍ ມີຄວາມຮູ້ ຄວາມເຂົ້າໃຈ ແລະ ສາມາດຂຽນລາຍງານການວິໄຈໃນຫ້ອງຮຽນໄດ້ຄົບທັງ 5 ຂັ້ນຕອນໄດ້ດີຂຶ້ນໂດຍສະຫຼຸບ ການພັດທະນາບຸກຄະລາກອນກ່ຽວກັບການວິໄຈໃນຫ້ອງຮຽນ ໂດຍໃຊ້ກົນລະຍຸດ ການປະຊຸມພາກປະຕິບັດ ແລະ ການນິເທດ ສາມາດນຳໄປເປັນແນວທາງໃນການພັດທະນາບຸກຄະລາກອນກ່ຽວກັບການວິໄຈໃນຫ້ອງຮຽນໃນໂຮງຮຽນໄດ້ເປັນຢ່າງດີ ບຸກຄະລາກອນສ່ວນຫຼາຍ ໄດ້ກໍ່ໃຫ້ເກີດການປ່ຽນແປງທີ່ດີຂຶ້ນ ສາມາດເຮັດການວິໄຈໃນຫ້ອງຮຽນໄດ້ ແລະ ນຳຂະບວນການວິໄຈໃນຫ້ອງຮຽນມາເປັນເຄື່ອງມືໃນການແກ້ບັນຫາການຮຽນ-ການສອນ ສິ່ງຜົນດີຕໍ່ຄຸນນະພາບຂອງນັກຮຽນ ແຕ່ຄວນມີການດຳເນີນການຢ່າງຕໍ່ເນື່ອງເພື່ອປັບປຸງພັດທະນາງານວິໄຈໃນຫ້ອງຮຽນໃຫ້ມີປະສິດທິພາບ ແລະ ສ້າງຄວາມໝັ້ນໃຈໃຫ້ກັບບຸກຄະລາກອນໃນການດຳເນີນການກ່ຽວກັບການວິໄຈໃນຫ້ອງຮຽນ ແລະ ຍັງເປັນຂໍ້ມູນສຳລັບຜູ້ບໍລິຫານ ໜ່ວຍງານ ແລະ ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການຕັດສິນໃຈ ແລະ ການບໍລິຫານວຽກງານດ້ານການນິເທດພາຍໃນໜ່ວຍງານຂອງຕົນໄດ້ດີອີກດ້ວຍ.

ນິບພະດົນ ເອລະການົນ (2542) ໄດ້ສ້າງແລະຫາປະທິພາບຊຸດຝຶກອົບຮົມໂປຼແກຼມອໍໂຕແຄດ (Autocat) ເລື່ອງການໃຊ້ຄຳສັ່ງໃນການສ້າງຮູບ 3 ມິຕິ ໂດຍໄດ້ນຳຊຸດຝຶກອົບຮົມໄປໃຊ້ກັບນັກສຶກສາວິສາວະ ຊ່າງເທັກນິກ ລວມ 30 ຄົນ ຜົນການວິໄຈເຫັນວ່າ ຊຸດຝຶກອົບຮົມທີ່ສ້າງຂຶ້ນມີປະສິດທິພາບທາງພາກທິດສະດີ 83.48/81.42 ແລະປະສິດທິພາບທາງພາກປະຕິບັດ 84.26/80.57 ເຊິ່ງສູງກວ່າເກນທີ່ກຳນົດໄວ້ 80/80 ຜົນການວິເຄາະຫາຄວາມກ້າວໜ້າຂອງການຝຶກອົບຮົມ ມີຄວາມແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ .01 ໂດຍຄະແນນສະເລ່ຍຫຼັງຝຶກອົບຮົມສູງກວ່າກ່ອນຝຶກອົບຮົມ

ເຄຣບ (Krepps, 1986) ໄດ້ທົດສອບຊຸດຝຶກອົບຮົມຄອມພິວເຕີຕໍ່ການຕອບສະໜອງຂອງງານທີ່ມີຕໍ່ອາລົມແລະຄວາມຮູ້ສຶກຂອງພະນັກງານທີ່ປ່ຽນເປັນການປະຕິບັດໂດຍອັດຕະໂນມັດ ເພື່ອທົດສອບປະຕິກິລິຍາຄວາມຮູ້ສຶກຂອງພະນັກງານທີ່ມີຕໍ່ງານ ມີການປຽບທຽບລະຫວ່າງກຸ່ມທົດລອງ ແລະ ກຸ່ມຄວບຄຸມໃນສະຖານທີ່ຕ່າງກັນ ທຳການທົດລອງ 2 ຄັ້ງ ຈາກຜົນການວິໄຈ ເຫັນວ່າ ຫຼັງການທົດລອງໃຊ້ຊຸດຝຶກອົບຮົມການປະຕິບັດວຽກງານມີການວິເຄາະສຳຫຼວດວຽກງານຫຼາຍຂຶ້ນ ຊີ້ໃຫ້ເຫັນວ່າ ຊຸດຝຶກອົບຮົມທີ່ສ້າງຂຶ້ນມີຜົນຫຼາຍຕໍ່ການປ່ຽນແປງຂອງພະນັກງານໃນດ້ານຄວາມພໍໃຈໃນການເຮັດວຽກທົ່ວໆ ໄປ ແຮງກະຕຸ້ນໃນການເຮັດວຽກ ແລະ ຄວາມເພິ່ງພໍໃຈໃນຄວາມໝັ້ນຄົງຂອງວຽກງານ

ພອນລອກ (Pollock, 1991) ໄດ້ເຮັດການວິໄຈໂດຍປະເມີນຄ່າຄວາມສຳຄັນ ແລະ ອິດທິພົນຂອງຊຸດຝຶກອົບຮົມທີ່ໃຊ້ໃນການພັດທະນາອາຊີບເຊິ່ງມີເນື້ອຫາກ່ຽວກັບຄວາມຮູ້ຄວາມເຂົ້າໃຈຄອມພິວເຕີໃນໄວເດັກນ້ອຍ ຊຸດຝຶກອົບຮົມດັ່ງກ່າວໄດ້ມີການພັດທະນາຂຶ້ນເພື່ອໄປໃຊ້ຝຶກອົບຮົມເດັກໃນປະເທດແຄນນາດາກ່ຽວກັບຄວາມຮູ້ຄວາມເຂົ້າໃຈເລື່ອງຄອມພິວເຕີທົ່ວໄປ ຜົນການສຶກສາເຫັນວ່າ ຊຸດຝຶກອົບຮົມໄດ້ຮັບຄວາມສົນໃຈຈາກກຸ່ມເປົ້າໝາຍ ມີ

ຄວາມຮູ້ ແລະ ທັດສະນະຄະຕິທີ່ດີຕໍ່ຊຸດຝຶກອົບຮົມ ລວມທັງປະສົບຜົນສຳເລັດໃນການສົ່ງເສີມໃຫ້ເດັກນ້ອຍມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບຄອມພິວເຕີ ພ້ອມດຽວກັນຍັງສະ ເໜີໃຫ້ມີການສົ່ງເສີມສະໜັບສະໜຸນການສ້າງຊຸດຝຶກອົບຮົມພັດທະນາວິຊາຊີບ

ຄາເຕີ (Carter, 1998) ໄດ້ພັດທະນາຊຸດຝຶກອົບຮົມແບບສຳພາດທາງວີດີໂອເພື່ອຝຶກທັກສະການສຳພາດຂອງນັກສຶກສາສາຂາຈິດວິທະຍາ ໂດຍແບ່ງກຸ່ມຕົວຢ່າງອອກເປັນ 5 ກຸ່ມແຍກເປັນກຸ່ມທົດລອງ 3 ກຸ່ມ ແລະ ກຸ່ມຄວບຄຸມ 2 ກຸ່ມ ກຸ່ມລະປະມານ 15 – 16 ຄົນ ໃຊ້ວິທີການທົດສອບຫຼັງການອົບຮົມ (Posttest) ຜົນການວິໄຈເຫັນວ່ານັກສຶກສາກຸ່ມທົດລອງທີ່ສຶກສາດ້ວຍຊຸດຝຶກອົບຮົມທີ່ສ້າງຂຶ້ນມີທັກສະດ້ານການສຳພາດຫຼັງການອົບຮົມ 86% ສູງກວ່າເກນທີ່ກຳນົດໄວ້ (80%)

Auger and Widerman (2000 ອ້າງເຖິງໃນພັດຊະລະພອນ ສັນຕິວິຈິດກຸນ 2000, ໜ້າ 44) ໄດ້ສຶກສາການເປີດໂລກການໃຊ້ວິໄຈພາກປະຕິບັດເພື່ອການຮຽນຮູ້ຢ່າງຊ່ຽວຊານຕະຫຼອດຊີວິດ ເພື່ອສຳຫຼວດສັກກະຍະພາບຂອງການວິໄຈພາກປະຕິບັດໃນຫຼັກສູດການສຶກສາລະດັບປະລິນຍາຕີຂອງຄູ ໂດຍການສຳຫຼວດທາງອ້ອມ ແລະ ທາງກົງ ແລະ ສຶກສາເປັນລາຍບຸກຄົນຈາກການເຮັດວິໄຈພາກປະຕິບັດໂດຍການເຝິກສອນຈາກ 42 ອາທິດ ເຮັດການວິໄຈພຽງ 13 ອາທິດ ເຫັນວ່າ ຫຼັກສູດການສຶກສາລະດັບປະລິນຍາຕີຄວນມີການເຮັດວິໄຈພາກປະຕິບັດ ເພາະຈະເຮັດໃຫ້ເພີ່ມຄວາມຊຳນານ ແລະ ເພີ່ມຄວາມສາມາດທາງການສຶກສາ

Kenneth (1992 ອ້າງເຖິງໃນພັດຊະລະພອນ ສັນຕິວິຈິດກຸນ 2000, ໜ້າ 44) ໄດ້ສຶກສາເລື່ອງ ການພັດທະນາຄູ-ນັກວິໄຈໃນໂຮງຮຽນມັດທະຍົມສຶກສາຕອນປາຍຂອງລັດເພນຊິວາເນຍຕອນເໜືອ ເຫັນວ່າ ມີບົດສະຫຼຸບກ່ຽວກັບການວິໄຈຂອງຄູທັງໝົດ 6 ຂໍ້ໃຫຍ່ໆ ແຕ່ຂໍ້ສະຫຼຸບທີ 3 – 6 ສະທ້ອນເຖິງຄວາມຄິດຂອງຄູຕໍ່ສະພາບການດຳເນີນການວິໄຈພາກປະຕິບັດຂອງຄູ ດັ່ງນີ້ ຂໍ້ສະຫຼຸບທີ 3 ການສະໜັບສະໜຸນໃຫ້ຄວາມຮ່ວມມືຈາກຝ່າຍບໍລິຫານມີຄວາມສຳຄັນຫຼາຍຕໍ່ຄວາມພະຍາມໃນການເຮັດວິໄຈຂອງຄູ ຂໍ້ສະຫຼຸບທີ 4 ການວິໄຈເປັນເຄື່ອງມືພັດທະນາວິຊາຊີບທີ່ໄດ້ຜົນ 5 ອຸປະສັກເດັ່ນໆ ທີ່ເປັນອຸປະສັກຕໍ່ວຽກງານວິໄຈຂອງຄູ ຄື ເວລາ ແລະ ທັດສະນະຄະຕິ ຂໍ້ສະຫຼຸບທີ 6 ມີຄວາມເປັນໄປໄດ້ໃນການສົ່ງເສີມການວິໄຈຂອງຄູໃນໂຮງຮຽນຂອງລັດເພນຊິວາເນຍເພື່ອພັດທະນາບຸກຄະລາກອນ ແຕ່ຄູຕ້ອງເຮັດວິໄຈດ້ວຍຄວາມສະໝັກໃຈ ເຮັດເປັນລະບົບ ແລະ ຮ່ວມມືຮ່ວມໃຈກັນ

ຈາກການສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງສະຫຼຸບໄດ້ວ່າ ນະວະຕະກຳການພັດທະນາການຮຽນການສອນ ຫຼື ການວິໄຈໃນຫ້ອງຮຽນມີບົດບາດທີ່ສຳຄັນຫຼາຍໃນການພັດທະນາວິທີການຈັດການຮຽນ-ການສອນ ແລະ ການປັບປຸງແກ້ໄຂພຶດຕິກຳຂອງຜູ້ຮຽນທັງໃນດ້ານການຮຽນ ຄວາມຮູ້ຄວາມສາມາດ ແລະ ດ້ານອື່ນໆ ຄູຜູ້ສອນຈຶ່ງຕ້ອງປັບວິທີຮຽນປ່ຽນວິທີສອນ ແລ ໃຊ້ການວິໄຈໃນຫ້ອງຮຽນຄວບຄູ່ໄປກັບການຮຽນ-ການສອນ ໂດຍການສຶກສາຫາຄວາມຮູ້ເພີ່ມຕື່ມ ແລະ ເຮັດວິໄຈໃນຫ້ອງຮຽນຢ່າງຕໍ່ເນື່ອງ ເພື່ອສຶກສາສະພາບບັນຫາ ແລະ ຄວາມຕ້ອງການຂອງຜູ້ຮຽນ ນຳມາວາງແຜນແກ້ບັນຫາຕ່າງໆ ໃນຫ້ອງຮຽນເພື່ອໃຫ້ການຈັດການຮຽນ-ການສອນປະສົບຜົນສຳເລັດ ແລະ ມີປະສິດທິພາບຕໍ່ໄປ

# ບົດທີ 3

# ວິທີດຳເນີນການວິໄຈ

ການວິໄຈ ເລື່ອງ ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ເປັນການວິໄຈພາກປະຕິບັດ ໂດຍມີຮູບແບບ ແລະ ວິທີການດຳເນີນການໃນຫົວຂໍ້ຕ່າງໆ ຕາມຂັ້ນຕອນ ຕໍ່ໄປນີ້

3.1 ປະຊາກອນ

3.2 ກຸ່ມຕົວຢ່າງ

3.3 ຕົວປ່ຽນຂອງການວິໄຈ

3.4 ເຄື່ອງມືທີ່ໃຊ້ໃນການວິໄຈ

3.5 ການສ້າງເຄື່ອງມື

3.6 ຮູບແບບການວິໄຈ

3.7 ການເກັບກຳລວບລວມຂໍ້ມູນ

3.8 ການວິເຄາະຂໍ້ມູນ

3.9 ສະຖິຕິທີ່ໃຊ້ໃນການວິໄຈ

## 1. ປະຊາກອນ

ການວິໄຈນີ້ຕ້ອງການສ້າງ ແລະ ພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ຄືນັກສຶກສາສາຍເຄມີ ປີ 2 ຈຳນວນ 9 ຄົນ, ຍິງ 6 ຄົນ

## 2. ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ຄື ນັກສຶກສາສາຍເຄມີ ປີ 2 ຈຳນວນ 9 ຄົນ, ຍິງ 6 ຄົນ ຊຶ່ງໄດ້ມາໂດຍວິທີເລືອກແບບເຈາະຈົງ (purposive sampling)

## 3. ຕົວປ່ຽນທີ່ໃຊ້ໃນການວິໄຈ

### 3.1 ຕົວປ່ຽນຕົ້ນ

- ແນວຄິດ-ທິດສະດີກ່ຽວກັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈ
- ທິດສະດີທາງການວິໄຈໃນຫ້ອງຮຽນ
- ແນວຄວາມຄິດກ່ຽວກັບການຝຶກ

- ຄວາມຮູ້ກ່ຽວກັບສື່ປະສົມ

### 3.2 ຕົວປ່ຽນຕາມ

- ໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ຄວາມເຂົ້າໃຈຂອງນັກສຶກສາຕໍ່ການວິໄຈໃນຫ້ອງຮຽນ
- ລະດັບຄວາມຮູ້-ຄວາມເຂົ້າໃຈຂອງນັກສຶກສາຕໍ່ການວິໄຈໃນຫ້ອງຮຽນ
- ຜົນສຳເລັດຂອງຂອງນັກສຶກສາຈາກການນຳໃຊ້ໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ຄວາມເຂົ້າໃຈຂອງນັກສຶກສາຕໍ່ການວິໄຈໃນຫ້ອງຮຽນ

## 4. ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍ

4.1 ແບບສັງເກດ

4.2 ໂມດູນການຝຶກ

4.3 ແບບທົດສອບລະຫວ່າງ ແລະ ຫຼັງຮຽນ ເລື່ອງ ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

4.4 ແບບປະເມີນ

4.5 ແຜນການຈັດການຮຽນການສອນ

## 5. ການສ້າງ ແລະ ຫາຄຸນນະພາບເຄື່ອງມື

ຂັ້ນຕອນການສ້າງ ແລະ ກວດກາຄຸນພາບຂອງເຄື່ອງມື ຜູ້ວິໄຈໄດ້ປະຕິບັດ ດັ່ງນີ້:

### 5.1 ການສ້າງ ແລະ ຫາຄຸນນະພາບ ແບບສັງເກດ

5.1.1 ສຶກສາເອກະສານກ່ຽວກັບແບບສັງເກດ

5.1.2 ວິເຄາະເນື້ອໃນເອກະສານ

5.1.3 ອອກແບບຮ່າງສັງເກດ

5.1.4 ຂຽນລາຍການສັງເກດໃສ່ຮ່າງສັງເກດ

5.1.5 ນຳຮ່າງແບບສັງເກດສະເໜີທີ່ປຶກສາເພື່ອປັບປຸງແກ້ໄຂ

5.1.6 ປັບປຸງແກ້ໄຂຕາມການແນະນຳຂອງທີ່ປຶກສາ

### 5.2 ການສ້າງ ແລະ ຫາຄຸນນະພາບ ໂມດູນການຝຶກ

5.2.1 ສຶກສາເອກະສານ ແລະ ງານວິໄຈຕ່າງໆ ທີ່ກ່ຽວຂ້ອງ

5.2.2 ວິເຄາະເນື້ອໃນເອກະສານ ແລະ ງານວິໄຈຕ່າງໆ

5.2.3 ອອກແບບໂມດູນການຝຶກ

5.2.4 ຂຽນຮ່າງໂມດູນການຝຶກ

5.2.5 ຜ່ານທີ່ປຶກສາເພື່ອຂໍຄຳແນະນຳປັບປຸງ

5.2.6 ນຳສະເໜີຮ່າງໂມດູນການຝຶກໃຫ້ກັບຜູ້ຊ່ຽວຊານກວດກາຄວາມຖືກຕ້ອງດ້ານເນື້ອໃນ ແລະ ຄວາມເໝາະສົມ

5.2.7 ນໍາເອົາຂໍ້ຄິດເຫັນຂອງທີ່ປຶກສາມາວິເຄາະຂໍ້ມູນທາງດ້ານຄຸນນະພາບ, ວິເຄາະຄວາມເໝາະສົມ ແລະ ຄວາມສອດຄ່ອງທາງດ້ານປະລິມານ

5.2.8 ປັບປຸງຕາມຜົນການວິເຄາະ ກ່ອນນໍາໄປໃຊ້ຕົວຈິງກັບກຸ່ມຕົວຢ່າງ

**5.3 ການສ້າງ ແລະ ຫາຄຸນນະພາບ ແບບທົດສອບ**

5.3.1 ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ,

5.3.2 ວິເຄາະເນື້ອໃນເອກະສານ

5.3.3 ຂຽນຂໍ້ຄໍາຖາມແບບທົດສອບຈໍານວນ 20 ຂໍ້

5.3.4 ນໍາເອົາແບບທົດສອບຜ່ານທີ່ປຶກສາ ເພື່ອປັບປຸງແກ້ໄຂ

5.3.5 ທົດລອງແບບທົດສອບກັບນັກສຶກສາທີ່ບໍ່ແມ່ນກຸ່ມຕົວຢ່າງ

5.3.6 ນໍາເອົາຜົນການທົດສອບຂອງຄະແນນມາວິເຄາະຜົນ

5.3.7 ເລືອກ ແລະ ຮັກສາຂໍ້ຄໍາຖາມທີ່ມີຄະແນນຄ່າອໍານາດຈໍາແນກ ແລະ ຄ່າຄວາມຍາກງ່າຍທີ່ຢູ່ໃນເກນກໍານົດ

5.3.8 ປັບປຸງຂໍ້ຄໍາຖາມທີ່ມີຄ່າອໍານາດຈໍາແນກ ແລະ ຄ່າຄວາມຍາກງ່າຍຕໍ່າກວ່າເກນ

5.3.9 ນໍາເອົາແບບທົດສອບໄປໃຊ້ກັບກຸ່ມຕົວຢ່າງ

**5.4 ການສ້າງ ແລະ ຫາຄຸນນະພາບຂອງແບບປະເມີນໂມດູນ**

5.4.1 ສຶກສາເອກະສານ ແລະ ຫຼັກການສ້າງເກນປະເມີນ

5.4.2 ວິເຄາະເນື້ອໃນເອກະສານ ແລະ ຫຼັກການສ້າງ

5.4.3 ອອກແບບ ແລະ ສ້າງເກນປະເມີນຕາມຫຼັກການ

5.4.4 ນໍາເອົາແບບປະເມີນໄປຜ່ານທີ່ປຶກສາ ແລະ ຜູ້ຊ່ຽວຊານ

5.4.5 ປັບປຸງຕາມຄໍາແນະນໍາຂອງທີ່ປຶກສາ ແລະ ຜູ້ຊ່ຽວຊານ

5.4.6 ນໍາເອົາແບປະເມີນໄປໃຊ້ຕົວຈິງ

## 6. ຮູບແບບການວິໄຈ

ການຄົ້ນຄວ້າວິໄຈຄັ້ງນີ້ເປັນການວິໄຈພາກປະຕິບັດ ເພື່ອສົ່ງເສີມຊຸກຍູ້ການຈັດການຮຽນການສອນ ໂດຍການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ

## 7. ການເກັບກໍາລວບລວມຂໍ້ມູນ

ຜູ້ວິໄຈດໍາເນີນການລວບລວມຂໍ້ມູນຕາມຂັ້ນຕອນດັ່ງນີ້:

**3.1 ການເກັບຂໍ້ມູນຈາກແບບສັງເກດ**: ຜູ້ວິໄຈໄດ້ດໍາເນີນການຈັດເກັບຂໍ້ມູນໃນລະຫວ່າງການຈັດການຮຽນການສອນ ເຊິ່ງໄດ້ປະຕິບັດຕາມຂັ້ນຕອນຕ່າງໆ ດັ່ງລຸ່ມນີ້:

1) ຈັດການຮຽນການສອນຕາມແຜນທີ່ກໍານົດໄວ້ ໂດຍເນັ້ນການຈັດກິດຈະກໍາການຮຽນການສອນທີ່ຖືເອົານັກຮຽນເປັນໃຈກາງຄື: ນັກຮຽນໄດ້ຝຶກປະຕິບັດກິດຈະກໍາຕົວຈິງໃນຫ້ອງຮຽນ, ໄດ້ແລກປ່ຽນຮຽນຮ່ວມກັນ

ໂດຍການຊຸກຍູ້ ແລະ ຊ່ວຍເຫຼືອຈາກຄູ; ທຸກຄົນໄດ້ຮັບໂອກາດຂຶ້ນນຳສະເໜີຄວາມກ້າວໜ້າໃນການປະຕິບັດກິດຈະກຳແຕ່ລະໂມດູນ;

2) ໃນລະຫວ່າງທີ່ນັກສຶກສາປະຕິບັດກິດຈະກຳໃນຫ້ອງຮຽນ, ຜູ້ວິໄຈໄດ້ສັງເກດການມີຂອງນັກສຶກສາຕາມຕົວຊີ້ວັດໃນຮ່າງສັງເກດ

3) ສັງເກດຢ່າງທົ່ວເຖິງ, ໃຫ້ການຊຸກຍູ້ ແລະ ຊ່ວຍເຫຼືອນັກສຶກສາເມື່ອພວກເຂົາມີຄວາມຕ້ອງການໃນການຝຶກປະຕິບັດກິດຈະກຳ ແລະ ການນຳສະເໜີຄວາມກ້າວໜ້າ

4) ໃນລະຫວ່າງຈັດກິດຈະກຳການຮຽນການສອນ  ແລະ ສັງເກດໄປພ້ອມໆກັນກໍໄດ້ມີການໃຫ້ຄະແນນນັກສຶກສາຕາມເກນທີ່ລະບຸໄວ້ໃນຮ່າງສັງເກດ

**3.2 ການເກັບຂໍ້ມູນຈາກໂມດູນການຝຶກ**: ໂມດູນການຝຶກທັງໝົດປະກອບມີ 5 ໂມດູນ ແລະ 1 ຊຸດໃບຄວາມຮູ້ ທີ່ປະກອບມີ 20 ໃບຄວາມຮູ້ (ໃບຄວາມຮູ້ທີ 1 – 20) ໂມດູນການຝຶກຖືເປັນເຄື່ອງມືວິໄຈປະເພດແກ້ໄຂບັນຫາ ທີ່ຜູ້ວິໄຈໃຊ້ເພື່ອສົ່ງເສີມ ແລະ ຊຸກຍູ້ການຄວາມຮັບຮູ້ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ໂດຍປະຕິບັດຕາມຂະບວນການ ແລະ ຂັ້ນຕອນ ດັ່ງລຸ່ມນີ້:

1) ມອບໝາຍໂມດູນການຝຶກໃຫ້ກັບນັກສຶກສາໄດ້ປະຕິບັດຄັ້ງລະໂມດູນຕາມໄລຍະເວລາທີ່ກຳນົດໄວ້ໃນໂມດູນ ພ້ອມທັງອະທິບາຍການປະຕິບັດກິດຈະກຳໃນແຕ່ລະໂມດູນໃຫ້ນັກສຶກສາໄດ້ເຂົ້າໃຈ

2່) ນັກສຶກສາລາຍງານຄວາມກ້າວໜ້າຂອງການປະຕິບັດກິດຈະກຳໃນແຕ່ລະໂມດູນຕາມຕາຕະລາງຂອງແຜນການຈັດການຮຽນການສອນ

3) ໃຫ້ການອະທິບາຍ, ຊີ້ແຈງ ແລະ ຊ່ວຍເຫຼືອໃນປະເດັນທີ່ນັກສຶກສາຕ້ອງການ ພ້ອມທັງມອບໃຫ້ນັກສຶກສາໄດ້ໄປອ່ານໃບຄວາມຮູ້ທີ່ກ່ຽວຂ້ອງ

4) ຕິດຕາມ, ຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອ ໂດຍການຕອບປະເດັນຄຳຖາມ ແລະ ຂໍ້ສົງໄສຜ່ານທາງກຸ່ມເມັດເຊັນເຈີ (messenger).

**3.3 ການເກັບຂໍ້ມູນຈາກແບບທົດສອບ**: ແບບທົດສອບເປັນເຄື່ອງມືການວິໄຈປະເພດເກັບຂໍ້ມູນດ້ານຄວາມຮູ້ຄວາມສາມາດຂອງນັກສຶກສາ ຊຶ່ງຜູ້ວິໄຈໄດ້ປະຕິບັດການດຳເນີນເກັບຂໍ້ມູນຕາມຂັ້ນຕອນ ລຸ່ມນີ້:

1) ໃນລະຫວ່າງການປະຕິບັດແຜນການຈັດກິດຈະກຳການຮຽນການສອນວິໄຈໃນຫ້ອງຮຽນ, ຜູ້ວິໄຈໄດ້ດຳເນີນການທົດສອບຍ່ອຍນັກສຶກສາ

2) ພາຍຫຼັງສຳເລັດການຈັດກິດຈະກຳການຮຽນການສອນວິໄຈໃນຫ້ອງຮຽນ, ຜູ້ວິໄຈໄດ້ດຳເນີນການທົດສອບນັກສຶກສາອີກຄັ້ງ

**3.4 ການເກັບຂໍ້ມູນຈາກແບບປະເມີນ**

1) ເມື່ອນັກສຶກສາສົ່ງກິດຈະກຳແຕ່ລະໂມດູນ, ຜູ້ວິໄຈໄດ້ທຳການກວດກາກິດຈະກຳຂອງນັກສຶກສາແຕ່ລະຄົນ ແລະ ທຳການປະເມີນໃຫ້ຄະແນນຕາມເກນຄະແນນທີ່ກຳນົດໄວ້ໃນແບບປະເມີນ

2) ສັງລວມຂໍ້ມູນການປະເມີນໄວ້ຢ່າງເປັນລະບົບເພື່ອທຳການວິເຄາະໃນລຳດັບຖັດໄປ

**3.5 ການເກັບຂໍ້ມູນຈາກແຜນການສອນ**

1) ຈັດການຮຽນການສອນຕາມແຜນທີ່ວາງໄວ້;

2) ໃນລະຫວ່າງສອນມີການບັນທຶກຂໍ້ມູນທີ່ຈຳໄວ້ໃນປື້ມບັນທຶກ;

3) ທຳການສະທ້ອນຄືນຜົນການຈັດການຮຽນການສອນ.

# 8. ການວິເຄາະຂໍ້ມູນ

ການວິໄຈຄັ້ງນີ້ ຜູ້ວິໄຈໄດ້ວິເຄາະຂໍ້ມູນທີ່ໄດ້ຈາກແບບສັງເກດ ແລະ ແບບທົດສອບໂດຍໃຊ້ໂປແກມເອັກເຊວ (excel) ແລ້ວແປຜົນຂໍ້ມູນ ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

## 8.1 ການວິເຄາະຂໍ້ມູນຈາກແບບສັງເກດ

1) ເອົາຂໍ້ມູນຄະແນນທີ່ໄດ້ຈາກແບບສັງເກດມາປ້ອນລົງໃສ່ໂປແກມສຳເລັດຮູບ

2) ເມື່ອປ້ອນຂໍ້ມູນສຳເລັດແລ້ວ ທຳການວິເຄາະຂໍ້ມູນໂດຍໂປແກມເພື່ອຫາຄ່າສະເລ່ຍ

3) ອ່ານຜົນການວິເຄາະ ແລະ ແປຜົນການວິເຄາະຂໍ້ມູນທີ່ໄດ້ຈາກໂປແກມສຳເລັດຮູບ

## 8.2 ການວິເຄາະຂໍ້ມູນຈາກໂມດູນການຝຶກ

1) ຕິດຕາມ ແລະ ກວດກາເນື້ອໃນຂອງການປະຕິບັດກິດຈະກຳໃນແຕ່ລະໂມດູນຂອງນັກສຶກສາ

2) ໃຫ້ຄຳອະທິບາຍ ແລະ ແນະນຳເພີ່ມເຕີມໃນສ່ວນທີ່ນັກສຶກສາປະຕິບັດກິດຈະກຳຍັງບໍ່ທັນໄດ້ດີ

3) ສົ່ງເສີມ ແລະ ຊຸກຍູ້ໃຫ້ນັກສຶກສາປະຕິບັດກິດຈະກຳຢ່າງເປັນປົກກະຕິ

## 8.3 ວິເຄາະຂໍ້ມູນຈາກແບບທົດສອບ

1) ນຳເອົາຄະແນນຂອງແບບທົດສອບລະຫວ່າງ ແລະ ຫຼັງມາປ້ອນໃສ່ໂປແກມສຳເລັດຮູບ

2) ເມື່ອປ້ອນຂໍ້ມູນສຳເລັດແລ້ວ ທຳການວິເຄາະຂໍ້ມູນໂດຍໂປແກມເພື່ອຫາຄ່າສະເລ່ຍ

3) ອ່ານຜົນການວິເຄາະ ແລະ ແປຜົນການວິເຄາະຂໍ້ມູນທີ່ໄດ້ຈາກໂປແກມ

⇨ **ສູດຄິດໄລ່ຫາຄ່າຄວາມຍາກງ່າຍ ແລະ ຄ່າອຳນາດຈຳແນກ**

$$P = \frac{R}{N}$$

| | | | |
|---|---|---|---|
| ເມື່ອ | P | ແທນ | ແທນຄ່າຄວາມຍາກງ່າຍຂອງຄຳຖາມແຕ່ລະຂໍ້ |
| | R | | ແທນຄ່າອຳນາດຈຳແນກຂອງຂໍ້ຄຳຖາມແຕ່ລະຂໍ້ |
| | N | | ຈຳນວນນັກສຶກສາທີ່ເຮັດຂໍ້ນັ້ນຖືກ |
| ສູດ | D | = | $\frac{Ru-Rl}{N/2}$ |
| ເມື່ອ | D | ແທນ | ຄ່າອຳນາດຈຳແນກ |
| | Ru | | ຈຳນວນຜູ້ທີ່ຕອບຖືກໃນກຸ່ມເກັ່ງ |
| | Rl | | ຈຳນວນຜູ້ທີ່ຕອບຖືກໃນກຸ່ມອ່ອນ |
| | N | | ຈຳນວນນັກຮຽນໃນກຸ່ມເກັ່ງ ແລະ ກຸ່ມອ່ອນ |

⇨ **ສູດຄິດໄລ່ຄ່າສະເລ່ຍ**

$$\overline{X} = \frac{\sum fx}{N}$$

$\overline{X}$ = ຄ່າສະເລ່ຍ

$\sum fx$ = ຜົນບວກຂອງຜົນຄູນລະຫວ່າງ f ກັບ x

N= ຈໍານວນກຸ່ມຕົວຢ່າງ

⇨ **ການຄິດໄລ່ຄະແນນລະຫວ່າງຮຽນ ແລະ ຫຼັງ ໂດຍໃຊ້ສູດ $E_1/E_2$**

$$E_1 = \frac{\frac{\sum X}{N}}{A} \times 100$$

ເມື່ອ $E_1$ ແທນ ປະສິດທິພາບກ່ອນຮຽນ

$\sum X$ ແທນ ຄະແນນລວມທັງໝົດກ່ອນຮຽນ

A ແທນ ຄະແນນເຕັມຂອງແບບທົດສອບກ່ອນຮຽນ

N ແທນ ຈໍານວນຜູ້ຮຽນ

ສູດ $$E_2 = \frac{\frac{\sum X}{N}}{B} \times 100$$

ເມື່ອ $E_2$ ແທນ ປະສິດທິພາບຫຼັງການຮຽນ

B ແທນ ຄະແນນລວມທັງໝົດຫຼັງຮຽນ

N ແທນ ຈໍານວນຜູ້ຮຽນ

### 3.8.4 ວິເຄາະຂໍ້ມູນຈາກແບບປະເມີນ

1) ນໍາເອົາຄະແນນຈາກເກນປະເມີນທີ່ໄດ້ມາວິເຄາະໂດຍປ້ອນຂໍ້ມູນໃສ່ໂປແກມສໍາເລັດຮູບ
2) ເມື່ອປ້ອນຂໍ້ມູນສໍາເລັດແລ້ວ ທໍາການວິເຄາະຂໍ້ມູນໂດຍໂປແກມສໍາເລັດຮູບເພື່ອຫາຄ່າສະເລ່ຍ
3) ອ່ານຜົນການວິເຄາະ ແລະ ແປຜົນການວິເຄາະຂໍ້ມູນທີ່ໄດ້ຈາກໂປແກມສໍາເລັດຮູບ

⇨ **ການຄິດໄລ່ດັດສະນີປະສິດທິຜົນ (Effectiveness Index: E.I.) ຫຼື ພັດທະນາການໃນການຮຽນໂດຍສູດ**

$$\textbf{E.I.} = \frac{P2-P1}{total-P1}$$

ເມື່ອ $P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນທຸກຄົນ

Total ແທນ ຜົນຄູນຂອງຈໍານວນນັກຮຽນກັບຄະແນນເຕັມ

### 3.8.5 ການວິເຄາະຂໍ້ມູນຈາກແຜນການສອນ

1) ນໍາເອົາເນື້ອໃນຂອງການສະທ້ອນຄືນການຈັດການຮຽນການສອນ ຈາກແຜນການສອນແຕ່ລະຄັ້ງມາວິເຄາະເນື້ອໃນ ໂດຍໜ່ວຍວິເຄາະກໍ່ຄືແຜນການສອນ;

2) ຈັດການວິເຄາະຂໍ້ມູນແຕ່ລະໜ່ວຍຕາມລໍາດັບຕາມເນື້ອໃນທີ່ໄດ້ຈາກການສະທ້ອນຄືນ;

3) ແປຄວາມໝາຍ ແລະ ຈັດລ້ຽງລໍາດັບການນໍາສະເໜີຂໍ້ມູນໃຫ້ມີຄວາມສອດຄ່ອງ ແລະ ເຂົ້າໃຈງ່າຍ;

4) ນໍາເອົາຜົນການວິເຄາະຂໍ້ມູນສະເໜີທີ່ປຶກສາ ແລະ ປັບປຸງຕາມການແນະນໍາ.

## 9. ສະຖິຕິທີ່ໃຊ້ໃນການວິໄຈ

- ຄ່າສະເລ່ຍເລຂາຄະນິດ ( $\bar{x}$ )
- ຄ່າຫາປະສິດທິຜົນຕາມສູດ $E_1/E_2$

# ບົດທີ 4

# ຜົນການວິເຄາະຂໍ້ມູນ

ການສຶກສາເລື່ອງ ການພັດທະນາໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ການວິໄຈໃນຫ້ອງຮຽນ ມີຈຸດປະສົງເພື່ອ 1) ພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ; 2) ສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ; 3) ປະເມີນຄວາມຮັບຮູ້ ແລະ ຄວາມສາມາດຂອງນັກສຶກສາໃນການນຳໃຊ້ໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ. ຜູ້ວິໄຈໄດ້ວິເຄາະຂໍ້ມູນໂດຍໃຊ້ໂປແກມເອັກເຊວ ເພື່ອຄຳນວນຄ່າສະເລ່ຍ (Arithmetic Mean) ແລະ ປະສິດທິຜົນຂອງໂມດູນ ($E_1/E_2$)

ການນຳເໜີຜົນການວິເຄາະຂໍ້ມູນ ຜູ້ວິໄຈໄດ້ນຳສະເໜີຜົນການສຶກສາເປັນ 3 ສ່ວນ ດັ່ງນີ້

1. ຜົນການພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ

2. ຜົນການສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ

3. ຜົນການປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.

## 1. ຜົນການພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ

ຈາກການສຶກສາເອກະສານ ແລະ ງານວິໄຈຕ່າງໆ ຜູ້ວິໄຈໄດ້ວິເຄາະ, ອອກແບບ ແລະ ແບ່ງໂມດູນການຝຶກການວິໄຈໃນຫ້ອງຮຽນອອກເປັນ 5 ໂມດູນ ຊຶ່ງມີລາຍລະອຽດໂດຍສັງເຂບ ດັ່ງລຸ່ມນີ້:

**- ໂມດູນທີ 1** : ການສຳຫຼວດບັນຫາການສອນ ປະກອບມີ 3 ກິດຈະກຳຄື: 1) ການສຳຫຼວດບັນຫາການສອນ ຊຶ່ງໃຊ້ເວລາປະຕິບັດກິດຈະກຳ 1 ຊົ່ວໂມງ, 2) ສ້າງ ແລະ ນຳໃຊ້ເຄື່ອງມືເກັບຂໍ້ມູນກ່ຽວກັບບັນຫາທີ່ເກີດຈາກການສອນ ຊຶ່ງໃຊ້ເວລາປະຕິບັດກິດຈະກຳ 2 ຊົ່ວໂມງ, 3) ຄົ້ນຫາວິທີແກ້ໄຂບັນຫາໃນແຕ່ລະສາເຫດ ຊຶ່ງໃຊ້ເວລາປະຕິບັດກິດຈະກຳຢູ່ 1 ຊົ່ວໂມງ

**- ໂມດູນທີ 2** : ການທົບທວນວັນນະກຳ ແລະ ງານວິໄຈທີ່ກ່ຽວຂ້ອງ ປະກອບມີ 3 ກິດຈະກຳຄື: 1) ການກຳນົດ ແລະ ສຶກສາເອກສານ ແລະ ງານວິໄຈທີ່ກ່ຽວຂ້ອງ ຊຶ່ງໃຊ້ເວລາປະຕິບັດກິດຈະກຳຢູ່ 5 ຊົ່ວໂມງ, 2) ການສັງເຄາະເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງລົງໃນຕາຕະລາງ ຊຶ່ງໃຊ້ເວລາປະຕິບັດກິດຈະກຳ 3 ຊົ່ວໂມງ ແລະ 3) ການຂຽນເຄົ້າໂຄງການວິໄຈ ຊຶ່ງໃຊ້ເວລາປະຕິບັດກິດຈະກຳ 2 ຊົ່ວໂມງ

**- ໂມດູນທີ 3** : ວິທີແກ້ບັນຫາ ແລະ ນະວັດຕະກຳທາງການສຶກສາ ປະກອບມີ 3 ກິດຈະກຳຄື: 1) ນະວັດຕະກຳທາງການສຶກສາ ໃຊ້ເວລາ 2 ຊົ່ວໂມງ, 2) ການວາງແຜນໃຊ້ນະວັດຕະກຳ ແລະ ສ້າງເຄື່ອງມືເກັບຂໍ້ມູນ ໃຊ້ເວລາ 2 ຊົ່ວໂມງ ແລະ 3) ນຳສະເໜີເຄື່ອງມື/ນະວັດຕະກຳ/ວິທີສອນ 2 ຊົ່ວໂມງ

**- ໂມດູນທີ 4** : ການດຳເນີນການວິໄຈໃນຫ້ອງຮຽນ ປະກອບມີ 1 ກິດຈະກຳຄື: ການດຳເນີນການວິໄຈໃນຫ້ອງຮຽນ ຊຶ່ງໃຊ້ເວລາປະຕິບັດກິດຈະກຳ 8 ຊົ່ວໂມງ

**- ໂມດູນທີ 5** : ການລາຍງານຜົນການວິໄຈ ປະກອບມີ 1 ກິດຈະກຳຄື: ການລາຍງານຜົນການວິໄຈ ໃຊ້ເວລາ 4 ຊົ່ວໂມງ

## 2. ຜົນການການສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ

ຜົນການສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນທັງ 4 ຄັ້ງ ສະແດງອອກໃນຕາຕະລາງຕ່າງໆຕໍ່ໄປນີ້

ຕາຕະລາງທີ 7 **ຜົນການສັງເກດ ແລະ ປະເມີນຄັ້ງທີ 1**

| ລ/ດ | ຊື່ ແລະ ນາມສະກຸນ | **ພຶດຕິກຳ/ລະດັບຄະແນນ** | | | | | | | | | | | | | | | **ລວມ** |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | **ຄວາມສົນໃຈໃນການເຮັດກິດຈະກຳ** | | | **ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ** | | | **ການຕອບຄຳຖາມ** | | | **ການຮັບຟັງຄວາມຄິດເຫັນຜູ້ອື່ນ** | | | **ການເຮັດວຽກຕາມທີ່ໄດ້ຮັບມອບໝາຍ** | | | |
| | | **3** | **2** | **1** | **3** | **2** | **1** | **3** | **2** | **1** | **3** | **2** | **1** | **3** | **2** | **1** | |
| 1 | ນ. ກ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | | 1 | **9** |
| 2 | ນ. ຂ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | 2 | | **10** |
| 3 | ນ. ຄ (ນາມສົມມຸດ) | | | 1 | | 2 | | | | 1 | | 2 | | | | 1 | **7** |
| 4 | ນ. ງ (ນາມສົມມຸດ) | 3 | | | | 2 | | | 2 | | 3 | | | | 2 | | **12** |
| 5 | ນ. ຈ (ນາມສົມມຸດ) | | | 1 | | 2 | | | | 1 | | | 1 | | 2 | | **7** |
| 6 | ນ. ສ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | | 1 | **8** |
| 7 | ທ. ຊ (ນາມສົມມຸດ) | | 2 | | | 2 | | | | 1 | | | 1 | | | 1 | **7** |
| 8 | ທ. ຍ (ນາມສົມມຸດ) | 3 | | | 3 | | | | 2 | | | | 1 | | 2 | | **11** |
| 9 | ທ. ດ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | | 2 | | **12** |

ຈາກຕາຕະລາງທີ 7 ຂ້າງເທິງເຫັນວ່າ ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບປານກາງ 12 ຄະແນນ ມີ 2 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງປານກາງ 11 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງການ 10 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນປານກາງ 9 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປັບປຸງ 8 ຄະແນນ ມີ 1 ຄົນ (ບໍ່ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປັບປຸງ 7 ຄະແນນ ມີ 3 ຄົນ (ບໍ່ຜ່ານເກນ) **ໂດຍສະຫຼຸບແລ້ວ** ຜົນການສັງເກດພຶດຕິກຳຄັ້ງທີ 1 ນັກສຶກສາທີ່ຜ່ານເກນຢູ່ໃນລະດັບປານກາງມີ 5 ຄົນ, ຍິງ 3 ຄົນ ແລະ ນັກສຶກສາທີ່ບໍ່ຜ່ານເກນຕ້ອງໄດ້ປັບປຸງພຶດຕິກຳຕົນເອງມີ 4 ຄົນ, ຍິງ 3 ຄົນ

**ຕາຕະລາງທີ 8 ຜົນການສັງເກດ ແລະ ປະເມີນຄັ້ງທີ 2**

| ລ/ດ | ຊື່ ແລະ ນາມສະກຸນ | ພຶດຕິກຳ/ລະດັບຄະແນນ | | | | | | | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ຄວາມສົນໃຈໃນການເຮັດກິດຈະກຳ | | | ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ | | | ການຕອບຄຳຖາມ | | | ການຮັບຟັງຄວາມຄິດເຫັນຜູ້ອື່ນ | | | ການເຮັດວຽກຕາມທີ່ໄດ້ຮັບມອບໝາຍ | | | |
| | | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | |
| 1 | ນ. ກ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **10** |
| 2 | ນ. ຂ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | 2 | | **10** |
| 3 | ນ. ຄ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | | 1 | **8** |
| 4 | ນ. ງ (ນາມສົມມຸດ) | 3 | | | | 2 | | 3 | | | 3 | | | | 2 | | **13** |
| 5 | ນ. ຈ (ນາມສົມມຸດ) | | 2 | | | 2 | | | | 1 | | | 1 | | 2 | | **8** |
| 6 | ນ. ສ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | 2 | | **9** |
| 7 | ທ. ຊ (ນາມສົມມຸດ) | | 2 | | | 2 | | | | 1 | | | 1 | | 2 | | **8** |
| 8 | ທ. ຍ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | | 2 | | **12** |
| 9 | ທ. ດ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | | 2 | | **12** |

ຈາກຕາຕະລາງທີ 8 ຂ້າງເທິງເຫັນວ່າ ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13 ຄະແນນ ມີ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບປານກາງ 12 ຄະແນນ ມີ 2 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງປານກາງ 11 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງການ 10 ຄະແນນ ມີ 2 ຄົນ (ຜ່ານເກນ), ໄດ້ຄະແນນປານກາງ 9 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປັບປຸງ 8 ຄະແນນ ມີ 3 ຄົນ (ບໍ່ຜ່ານເກນ) **ໂດຍສະຫຼຸບແລ້ວ** ຜົນການສັງເກດພຶດຕິກຳຄັ້ງທີ 2 ນັກສຶກສາທີ່ຜ່ານເກນຢູ່ໃນລະດັບປານກາງມີ 6 ຄົນ, ຍິງ 4 ຄົນ ແລະ ນັກສຶກສາທີ່ບໍ່ຜ່ານເກນຕ້ອງໄດ້ປັບປຸງພຶດຕິກຳຕົນເອງມີ 3 ຄົນ, ຍິງ 2 ຄົນ

**ຕາຕະລາງທີ 9 ຜົນການສັງເກດ ແລະ ປະເມີນຄັ້ງທີ 3**

| ລ/ດ | ຊື່ ແລະ ນາມສະກຸນ | ພຶດຕິກຳ/ລະດັບຄະແນນ | | | | | | | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ຄວາມສົນໃຈໃນການເຮັດກິດຈະກຳ | | | ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ | | | ການຕອບຄຳຖາມ | | | ການຮັບຟັງຄວາມຄິດເຫັນຜູ້ອື່ນ | | | ການເຮັດວຽກຕາມທີ່ໄດ້ຮັບມອບໝາຍ | | | |
| | | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | |
| 1 | ນ. ກ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **10** |
| 2 | ນ. ຂ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **11** |
| 3 | ນ. ຄ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | 2 | | **9** |
| 4 | ນ. ງ (ນາມສົມມຸດ) | 3 | | | | 2 | | 3 | | | 3 | | | 3 | | | **14** |

**ຕາຕະລາງທີ 9 ຜົນການສັງເກດ ແລະ ປະເມີນຄັ້ງທີ 3 (ຕໍ່)**

| ລ/ດ | ຊື່ ແລະ ນາມສະກຸນ | ພຶດຕິກຳ/ລະດັບຄະແນນ | | | | | | | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ຄວາມສົນໃຈໃນການເຮັດກິດຈະກຳ | | | ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ | | | ການຕອບຄຳຖາມ | | | ການຮັບຟັງຄວາມຄິດເຫັນຜູ້ອື່ນ | | | ການເຮັດວຽກຕາມທີ່ໄດ້ຮັບມອບໝາຍ | | | |
| | | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | |
| 5 | ນ. ຈ (ນາມສົມມຸດ) | | 2 | | | 2 | | | 2 | | | | 1 | | 2 | | **9** |
| 6 | ນ. ສ (ນາມສົມມຸດ) | | 2 | | | 2 | | | | 1 | | 2 | | | 2 | | **9** |
| 7 | ທ. ຊ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **10** |
| 8 | ທ. ຍ (ນາມສົມມຸດ) | 3 | | | 3 | | | 3 | | | | 2 | | | 2 | | **13** |
| 9 | ທ. ດ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | 3 | | | **13** |

ຈາກຕາຕະລາງທີ 9 ຂ້າງເທິງເຫັນວ່າ ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 14 ຄະແນນ ມີ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13 ຄະແນນ ມີ 2 ຄົນ, ໄດ້ຄະແນນຢູ່ໃນລະດັບປາງປານກາງ 11 ຄະແນນ ມີ 1 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງກາງ 10 ຄະແນນ ມີ 2 ຄົນ (ຜ່ານເກນ), ໄດ້ຄະແນນປານກາງ 9 ຄະແນນ ມີ 3 ຄົນ (ຜ່ານເກນ), **ໂດຍສະຫຼຸບແລ້ວ** ຜົນການສັງເກດພຶດຕິກຳຄັ້ງທີ 3 ນັກສຶກສາທຸກຄົນສາມາດຜ່ານເກນຄືມີຄະແນນຕ່ຳສຸດເທົ່າກັບ 9 ຄະແນນ ແລະ ສູງສຸດເທົ່າກັບ 14 ຄະແນນ (ລະດັບປານກາງຫາດີ)

**ຕາຕະລາງທີ 10 ຜົນການສັງເກດ ແລະ ປະເມີນຄັ້ງທີ 4**

| ລ/ດ | ຊື່ ແລະ ນາມສະກຸນ | ພຶດຕິກຳ/ລະດັບຄະແນນ | | | | | | | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ຄວາມສົນໃຈໃນການເຮັດກິດຈະກຳ | | | ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ | | | ການຕອບຄຳຖາມ | | | ການຮັບຟັງຄວາມຄິດເຫັນຜູ້ອື່ນ | | | ການເຮັດວຽກຕາມທີ່ໄດ້ຮັບມອບໝາຍ | | | |
| | | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | 3 | 2 | 1 | |
| 1 | ນ. ກ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | 3 | | | **13** |
| 2 | ນ. ຂ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **11** |
| 3 | ນ. ຄ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **10** |
| 4 | ນ. ງ (ນາມສົມມຸດ) | 3 | | | 3 | | | 3 | | | 3 | | | 3 | | | **15** |
| 5 | ນ. ຈ (ນາມສົມມຸດ) | | 2 | | | 2 | | | 2 | | | 2 | | | 2 | | **10** |
| 6 | ນ. ສ (ນາມສົມມຸດ) | 3 | | | 3 | | | | 2 | | | 2 | | | 2 | | **12** |
| 7 | ທ. ຊ (ນາມສົມມຸດ) | 3 | | | | 2 | | | 2 | | | 2 | | | 2 | | **11** |
| 8 | ທ. ຍ (ນາມສົມມຸດ) | 3 | | | 3 | | | 3 | | | | 2 | | 3 | | | **14** |
| 9 | ທ. ດ (ນາມສົມມຸດ) | 3 | | | 3 | | | 3 | | | 3 | | | 3 | | | **15** |

ຈາກຕາຕະລາງທີ 10 ໃນໜ້າທີ່ແລ້ວເຫັນວ່າ ນັກສຶກສາທີ່ໄດ້ຄະແນນເຕັມຢູ່ໃນລະດັບ 15 ຄະແນນ ມີ 2 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 14 ຄະແນນ ມີ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13 ຄະແນນ ມີ 1 ຄົນ, ນັກສຶກສາໄດ້ຄະແນນຢູ່ໃນລະດັບປານກາງ 12 ຄະແນນ ມີ 1 ຄົນ, ນັກສຶກສາໄດ້ຄະແນນຢູ່ໃນລະດັບປາງປານກາງ 11 ຄະແນນ ມີ 2 ຄົນ (ຜ່ານເກນ), ໄດ້ຄະແນນຢູ່ໃນລະດັບປາງການ 10 ຄະແນນ ມີ 2 ຄົນ (ຜ່ານເກນ) **ໂດຍສະຫຼຸບແລ້ວ** ຜົນການສັງເກດພຶດຕິກຳຄັ້ງທີ 4 ນັກສຶກສາທຸກຄົນສາມາດຜ່ານເກນຄື ມີຄະແນນຕ່ຳສຸດເທົ່າກັບ 10 ຄະແນນ ແລະ ສູງສຸດເທົ່າກັບ 15 (ລະດັບປານກາງຂຶ້ນໄປຫາດີ)

**ຕາຕະລາງທີ 11 ສະແດງຜົນການປະເມີນພຶດຕິກຳການມີສ່ວນຮ່ວມຂອງນັກສຶກສາໃນການຈັດການຮຽນການສອນວິຊາວິໄຈໃນຫ້ອງຮຽນ ສະເລ່ຍລວມທັງ 4 ຄັ້ງ**

| ລ/ດ | ຊື່ ແລະ ນາມສະກຸນ | ຄະແນນລວມຜົນການປະເມີນແຕ່ລະຄັ້ງ | | | | ລວມ | ສະເລ່ຍ |
|---|---|---|---|---|---|---|---|
| | | ຄັ້ງທີ1 | ຄັ້ງທີ2 | ຄັ້ງທີ3 | ຄັ້ງທີ 4 | | |
| 1 | ນ. ກ (ນາມສົມມຸດ) | 9 | 10 | 10 | 13 | 42 | 10.5 |
| 2 | ນ. ຂ (ນາມສົມມຸດ) | 10 | 10 | 11 | 11 | 42 | 10.5 |
| 3 | ນ. ຄ (ນາມສົມມຸດ) | 7 | 8 | 9 | 10 | 34 | 8.5 |
| 4 | ນ. ງ (ນາມສົມມຸດ) | 12 | 13 | 14 | 15 | 54 | 13.5 |
| 5 | ນ. ຈ (ນາມສົມມຸດ) | 7 | 8 | 9 | 10 | 34 | 8.5 |
| 6 | ນ. ສ (ນາມສົມມຸດ) | 8 | 9 | 9 | 12 | 38 | 9.5 |
| 7 | ທ. ຊ (ນາມສົມມຸດ) | 7 | 8 | 10 | 11 | 36 | 9 |
| 8 | ທ. ຍ (ນາມສົມມຸດ) | 11 | 12 | 13 | 14 | 50 | 12.5 |
| 9 | ທ. ດ (ນາມສົມມຸດ) | 12 | 12 | 13 | 15 | 52 | 13 |

ຈາກຕາຕະລາງທີ 11 ເຫັນວ່າ ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13.5 ມີຈຳນວນ 1 ຄົນ, 13 ຄະແນນ ມີຈຳນວນ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບປານກາງ 12.5 ມີຈຳນວນ 1 ຄົນ, 10.5 ມີຈຳນວນ 2 ຄົນ, 9.5 ຄະແນນ ມີຈຳນວນ 1 ຄົນ, 9 ຄະແນນ ມີຈຳນວນ 1 ຄົນ ແລະ 8.5 ຄະແນນ ມີຈຳນວນ 2 ຄົນ. **ໂດຍສະຫຼຸບແລ້ວ**ນັກສຶກສາໝົດທຸກຄົນຜ່ານເກນ ຄື ມີຄະແນນ ຕ່ຳສຸດເທົ່າກັບ 9 ຄະແນນ ແລະ ສູງສຸດເທົ່າ 15 ຄະແນນ

## 3. ຜົນການປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.

### 3.1 ຜົນການປະເມີນກ່ອນ ແລະ ຫຼັງຮຽນ

ໃນການປະເມີນປະສິດທິຜົນຂອງໂມດູນທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ ທີ່ຜູ້ວິໄຈສ້າງ ແລະ ພັດທະນາຂຶ້ນ, ຜູ້ວິໄຈໄດ້ດຳເນີນການທົດສອບໃນລະຫວ່າງຮຽນ ແລະ ຫຼັງຮຽນ ການຈັດກິດຈະກຳການຮຽນການສອນວິຊາ ວິໄຈໃນຫ້ອງຮຽນ ໂດຍການຈັດການຮຽນການສອນແມ່ນໄດ້

ໃຫ້ນັກຮຽນນໍາໃຊ້ໂມດູນຊຸດຝຶກຄວບຄູ່ກັບການປະຕິບັດຕາມຫຼັກສູດການຮຽນການສອນ ເພື່ອໃຫ້ນັກຮຽນຮຽນຮູ້ທັງພາກທິດສະດີ ແລະ ການປະຕິບັດຕົວຈິງໄປພ້ອມໆ ກັນ ຊຶ່ງຜົນຂອງການປະເມີນປະສິດທິຜົນຂອງໂມດູນສະແດງອອກໃນຕາຕະລາງລຸ່ມນີ້:

ຕາຕະລາງທີ 12 ສະແດງຄະແນນລະຫວ່າງ ແລະ ຫຼັງຮຽນ

| **ຄົນທີ** | **ຄະແນນລະຫວ່າງຮຽນ (ຄະແນນເຕັມແຕ່ລະຄັ້ງ)** | | | | **ລວມ ($E_1$) (ຄະແນນເຕັມ 20)** | **ຄະແນນຫຼັງຮຽນ ($E_2$) (ຄະແນນເຕັມ 20)** |
|---|---|---|---|---|---|---|
| | T1 | T2 | T3 | T4 | | |
| 1 | 4 | 4 | 5 | 4 | 17 | 17 |
| 2 | 4 | 5 | 4 | 5 | 18 | 18 |
| 3 | 3 | 3 | 3 | 4 | 13 | 14 |
| 4 | 5 | 4 | 4 | 4 | 17 | 18 |
| 5 | 3 | 3 | 4 | 4 | 14 | 16 |
| 6 | 4 | 4 | 4 | 4 | 16 | 17 |
| 7 | 4 | 5 | 4 | 5 | 18 | 18 |
| 8 | 5 | 4 | 5 | 4 | 18 | 19 |
| 9 | 4 | 5 | 4 | 4 | 17 | 17 |
| ລວມ | 36 | 37 | 37 | 38 | 148 | 154 |
| ສະເລ່ຍ | 4.00 | 4.11 | 4.11 | 4.22 | 16.44 | 17.11 |
| $E_1$ | 80 | 82.22 | 82.222 | 84.44 | 82.22 | 85.56 |

ຈາກຕາຕະລາງທີ 12 ສະແດງໃຫ້ເຫັນວ່າ ຄະແນນສະເລ່ຍລວມຂອງການທົດສອບຍ່ອຍທັງ 4 ຄັ້ງເທົ່າກັບ 16.44 ຈາກຄະແນນເຕັມ 20 ຄະແນນ ໝາຍເຖິງ ຄ່າປະສິດທິພາບລະຫວ່າງ ຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ກັບນັກສຶກສາສາຍເຄມີເທົ່າ 82.22 ເປີເຊັນ, ແຕ່ເມື່ອພິຈາລະນາຄະແນນສະເລ່ຍລວມຂອງການທົດສອບຍ່ອຍໃນແຕ່ລະຄັ້ງເຫັນວ່າ ຄະແນນຕໍ່າສຸດ 4.00 ຂຶ້ນໄປ ຈາກຄະແນນເຕັມ 5 ຄະແນນ ນີ້ສະແດງໃຫ້ຮູ້ວ່າ ພາຍຫຼັງການນໍາໃຊ້ວິທີສອນແບບຮ່ວມມືໃນແຕ່ລະຄັ້ງ ນັກຮຽນມີຄວາມຮັບຮູ້, ເຂົ້າໃຈ ແລະ ເກັບກໍາເນື້ອໃນບົດຮຽນໄດ້ດີ. ສ່ວນການທົດສອບຫຼັງການຮຽນຄະແນນສະເລ່ຍເທົ່າກັບ 17.11 ເຊິ່ງຄ່າປະສິດທິພາບເທົ່າກັບ 85.56 ເປີເຊັນ ໝາຍຄວາມວ່າ ພັດທະນາການທາງການຮຽນຂອງນັກສຶກສາເພີ່ມຂຶ້ນ.

### 3.2 ຜົນການວິເຄາະປະສິດທິຜົນຂອງໂມດູນ

**ຕາຕະລາງທີ** 13 ປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາຕໍ່ວິຊາວິໄຈໃນຫ້ອງຮຽນ

| ຜົນຄູນຂອງຈໍານວນນັກສຶກສາກັບຄະແນນເຕັມ | ຜົນລວມຂອງຄະແນນຫຼັງຮຽນ | ຜົນລວມຂອງຄະແນນລະຫວ່າງຮຽນ | E.I. | ເປີເຊັນ |
|---|---|---|---|---|
| 9 x 20 | 154 | 148 | 0.1875 | 18.75 |

ຈາກຕາຕະລາງທີ 13 ສະແດງໃຫ້ເຫັນວ່າ ຄ່າດັດສະນີປະສິດທິຜົນມີຄ່າເທົ່າກັບ 0.1875 ເຊິ່ງໝາຍຄວາມວ່າ ນັກສຶກສາມີຄະແນນເພີ່ມຂຶ້ນເທົ່າກັບ 0.1875 ຫຼື ຄິດເປັນ 18.75 ເປີເຊັນ.

### 3.3 ຜົນການປະເມີນແຕ່ລະໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ

ຕາຕະລາງທີ 14 ສະແດງຄະແນນປະເມີນນັກສຶກສາແຕ່ລະຄົນໃນການປະຕິບັດກິດຈະກຳຂອງແຕ່ລະໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ

| ລ/ດ | ຊື່ ແລະ ນາມສະກຸນ (ນາມສົມມຸດ) | ຄະແນນການປະເມີນໃນແຕ່ລະໂມດູນ | | | | | ລວມ (200) | ເປີເຊັນ |
|---|---|---|---|---|---|---|---|---|
| | | ໂມດູນ1 (45) | ໂມດູນ2 (45) | ໂມດູນ3 (25) | ໂມດູນ4 (45) | ໂມດູນ5 (40) | | |
| 1 | ນ. ກ | 33 | 33 | 19 | 31 | 30 | 146 | 73 |
| 2 | ນ. ຂ | 37 | 31 | 19 | 33 | 30 | 150 | 75 |
| 3 | ນ. ຄ | 29 | 28 | 17 | 30 | 30 | 134 | 67 |
| 4 | ນ. ງ | 32 | 32 | 17 | 32 | 29 | 142 | 71 |
| 5 | ນ. ຈ | 40 | 40 | 21 | 35 | 34 | 170 | 85 |
| 6 | ນ. ສ | 41 | 40 | 20 | 35 | 32 | 168 | 84 |
| 7 | ທ. ຊ | 39 | 37 | 19 | 36 | 33 | 164 | 82 |
| 8 | ທ. ຍ | 29 | 31 | 17 | 29 | 30 | 136 | 68 |
| 9 | ທ. ດ | 31 | 30 | 16 | 33 | 32 | 142 | 71 |

ຈາກຕາຕະລາງທີ 14 ເຫັນວ່າ ນັກສຶກສາທີ່ໄດ້ຄະແນນຕໍ່າສຸດແມ່ນ ນ. ຄ (ນາມສົມມຸດ) ໄດ້ຄະແນນລວມ 134 ຄະແນນ (ຈາກ 200 ຄະແນນເຕັມ) ຄິດເປັນ 67 ເປີເຊັນຂອງຄະເຕັມ ຊຶ່ງຖືວ່າເປັນຄະແນນທີ່ເກີນເຄິ່ງໜຶ່ງຂອງຄະແນນເຕັມ ສ່ວນນັກສຶກສາທີ່ໄດ້ຄະແນນສູງສຸດແມ່ນ ນ. ຈ (ນາມສົມມຸດ) ໄດ້ຄະແນນລວມ 170 ຄະແນນ (ຈາກຄະແນນເຕັມ 200 ຄະແນນ) ຄິດເປັນ 85 ເປີເຊັນ ໂດຍສະຫຼຸບ ເມື່ອພິຈາລະນາຄະແນນຈາກເປີເຊັນແລ້ວເຫັນວ່າ ນັກສຶກສາໄດ້ຄະແນນເກີນ 50 ເປີເຊັນທຸກຄົນ ຊຶ່ງໝາຍຄວາມວ່ານັກສຶກສາໄດ້ຄະແນນຢູ່ໃນລະດັບປານກາງຫາດີ.

# ບົດທີ 5
# ສະຫຼຸບ ອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການວິໄຈຄັ້ງນີ້ເປັນການວິໄຈພາກປະຕິບັດໃນຫ້ອງຮຽນ ທີ່ເນັ້ນການສ້າງ ແລະ ພັດທະນານະວັດຕະກຳປະເພດໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ ຊຶ່ງລາຍລະອຽດຜົນຂອງການສະຫຼຸບ ອະພິປາຍ ແລະ ຂໍ້ສະເໜີແນະ ມີດັ່ງຕໍ່ໄປນີ້:

## 1. ສະຫຼຸບຜົນການວິໄຈ

### 1.1 ຈຸດປະສົງຂອງການວິໄຈ

1) ເພື່ອພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາ ວິໄຈໃນຫ້ອງຮຽນ;

2) ເພື່ອສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ;

3) ເພື່ອປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.

### 1.2 ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ນຳໃຊ້ຮູບແບບການວິໄຈພາກປະຕິບັດປະເພດສ້າງ ແລະ ພັດທະນານະວັດຕະກຳທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ກັບນັກສຶກສາສາຍເຄມີຕໍ່ການຮຽນວິຊາ ວິໄຈໃນຫ້ອງຮຽນ. ການສ້າງ ແລະ ພັດທະນາເຄື່ອງແມ່ນຢູ່ພື້ນຖານແນວຄິດທິດສະດີທີ່ສຶກສາ ແລະ ຄຳຄິດເຫັນຂອງຜູ້ຊ່ຽວຊານໂດຍໄດ້ກຳນົດຂອງເຂດຂອງການສຶກສາດັ່ງນີ້:

**1) ລະບຽບແບບແຜນການວິໄຈ**: ນຳໃຊ້ລະບຽບຂອງການວິໄຈພາກປະຕິບັດ (ແບບໂປຣ໌ແອັກຕິບ:proactive)

**2) ປະຊາກອນທີ່ຈະສຶກສາ**

ປະຊາກອນທີ່ຈະສຶກສາໃນການວິໄຈຄັ້ງນີ້ມີ ດັ່ງນີ້

- ນັກສຶກສາຄູສາຍເຄມີ ຈຳນວນ 9 ຄົນ, ຍິງ 6 ຄົນ

**3) ກຸ່ມຕົວຢ່າງທີ່ຈະສຶກສາ**

- ນັກສຶກສາຄູສາຍເຄມີ ຈຳນວນ 9 ຄົນ, ຍິງ 6 ຄົນ ຊຶ່ງໄດ້ມາໂດຍວິທີເລືອກແບບເຈາະຈົງ

**4) ຕົວປ່ຽນທີ່ສຶກສາ (variables)**

ໃນການສຶກສາຕົວປ່ຽນໃນການວິໄຈຄັ້ງນີ້ໄດ້ກຳນົດຕົວປ່ຽນຫຼັກ 2 ຕົວປ່ຽນຄື:

(1) ຕົວປ່ຽນຕົ້ນ (Independent Variable) ປະກອບດ້ວຍ ແນວຄິດທິດສະດີທີ່ກ່ຽວຂ້ອງ ແລະ ຄຳຄິດເຫັນຂອງຜູ້ຊ່ຽວຊານ

(2) ຕົວປ່ຽນຕາມ (Dependent Variable) ຄື ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີ ແລະ ປະສິດທິຜົນຂອງໂມດູນການຝຶກ

5) ໄລຍະເວລາໃນການດຳເນີນການວິໄຈ

- ການດຳເນີນການວິໄຈໃນຄັ້ງນີ້ ໃຊ້ເວລາດຳເນີນ 1 ພາກຮຽນ

## 1.3 ຜົນການວິໄຈ

ໃນການສະຫຼຸບຜົນຂອງການວິໄຈ, ຜູ້ວິໄຈໄດ້ນຳສະເໜີຕາມຈຸດປະສົງທີ່ສຶກສາ ຊຶ່ງມີລາຍລະອຽດສະແດງເປັນຂໍ້ໆ ດັ່ງຕໍ່ໄປນີ້:

**1) ຜົນການສຶກສາຕາມຈຸດປະສົງທີ 1 : ການພັດທະນາໂມດູນທີ່ສົ່ງເສີມການຮຽນຮູ້ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາວິໄຈໃນຫ້ອງຮຽນ**

ຜົນການສຶກສາ ແລະ ພັດທະນາໄດ້ໂມດູນການຝຶກທີ່ສົ່ງເສີມການຮຽນຮູ້ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງການສອນໃນລາຍວິຊາ ວິໄຈໃນຫ້ອງຮຽນທັງໝົດ 5 ໂມດູນຄື: **ໂມດູນທີ 1** : ການສຳຫຼວດບັນຫາການສອນ, **ໂມດູນທີ 2** : ການທົບທວນວັນນະກຳ ແລະ ງານວິໄຈທີ່ກ່ຽວຂ້ອງ, **ໂມດູນທີ 3** : ວິທີແກ້ບັນຫາ ແລະ ນະວັດຕະກຳທາງການສຶກສາ, **ໂມດູນທີ 4** : ການດຳເນີນການວິໄຈໃນຫ້ອງຮຽນ, **ໂມດູນທີ 5** : ການລາຍງານຜົນການວິໄຈ

**2) ຜົນການສຶກສາຕາມຈຸດປະສົງທີ 2** : **ສຶກສາພຶດຕິກຳການຮຽນຮູ້ ແລະ ການມີສ່ວນຮ່ວມຂອງນັກສຶກສາເຄມີໃນການຈັດກິດຈະກຳການຮຽນການສອນວິຊາວິໄຈໃນຫ້ອງຮຽນ**

ຜົນການສຶກສາໂດຍການສັງເກດທັງ 4 ຄັ້ງ ໂດຍການນຳໃຊ້ແບບສັງເກດຕາມ 5 ອົງປະກອບຫຼັກທີ່ລະບຸໄວ້ໃນແບບສັງເກດ ເຫັນວ່າ ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບດີ 13.5 ມີຈຳນວນ 1 ຄົນ, 13 ຄະແນນມີຈຳນວນ 1 ຄົນ, ນັກສຶກສາທີ່ໄດ້ຄະແນນຢູ່ໃນລະດັບປານກາງ 12.5 ມີຈຳນວນ 1 ຄົນ, 10.5 ມີຈຳນວນ 2 ຄົນ, 9.5 ຄະແນນ ມີຈຳນວນ 1 ຄົນ, 9 ຄະແນນ ມີຈຳນວນ 1 ຄົນ ແລະ 8.5 ຄະແນນ ມີຈຳນວນ 2 ຄົນ. **ໂດຍສະຫຼຸບວ່າ** ນັກສຶກສາມີຄວາມສົນໃຈໃນການເຮັດກິດຈະກຳ, ສະແດງຄຳຄິດຄຳເຫັນ, ຕອບຄຳຖາມ, ຮັບຟັງຄຳຄິດເຫັນຜູ້ອື່ນ ແລະ ເຮັດວຽກຕາມການມອບໝາຍຢູ່ໃນລະດັບປານກາງຫາດີຂຶ້ນໄປ.

**3) ຜົນການສຶກສາຕາມຈຸດປະສົງທີ 3** : **ຜົນການປະເມີນປະສິດທິຜົນຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ການເຂົ້າໃຈຂອງນັກສຶກສາໃນລາຍວິຊາວິໄຈໃນຫ້ອງຮຽນ.**

ຜູ້ວິໄຈໄດ້ສະຫຼຸບຜົນການສຶກສາອອກເປັນ 3 ຫົວຂໍ້ຍ່ອຍ ດັ່ງລຸ່ມນີ້:

**(1) ຜົນການປະເມີນລະຫວ່າງ ແລະ ຫຼັງຮຽນ**

ຄະແນນສະເລ່ຍລວມຂອງການທົດສອບຍ່ອຍທັງ 4 ຄັ້ງເທົ່າກັບ 16.44 ຈາກຄະແນນເຕັມ 20 ຄະແນນ ໝາຍເຖິງ ຄ່າປະສິດທິພາບລະຫວ່າງ ຂອງໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ກັບນັກສຶກສາສາຍເຄມີເທົ່າ 82.22 ເປີເຊັນ, ແຕ່ເມື່ອພິຈາລະນາຄະແນນສະເລ່ຍລວມຂອງການທົດສອບຍ່ອຍໃນແຕ່ລະຄັ້ງເຫັນວ່າ ຄະແນນຕ່ຳສຸດ 4.00 ຂຶ້ນໄປ ຈາກຄະແນນເຕັມ 5 ຄະແນນ ນີ້ສະແດງໃຫ້ຮູ້ວ່າ ພາຍຫຼັງການນຳໃຊ້ວິທີສອນແບບຮ່ວມມືໃນແຕ່ລະຄັ້ງ ນັກຮຽນມີຄວາມຮັບຮູ້, ເຂົ້າໃຈ ແລະ ເກັບກຳເນື້ອໃນບົດຮຽນໄດ້ດີ. ສ່ວນ

ການທົດສອບຫຼັງການຮຽນຄະແນນສະເລ່ຍເທົ່າກັບ 17.11 ເຊິ່ງຄ່າປະສິດທິພາບເທົ່າກັບ 85.56 ເປີເຊັນ ໝາຍຄວາມວ່າ ພັດທະນາການທາງການຮຽນຂອງນັກສຶກສາເພີ່ມຂຶ້ນ.

**(2) ຜົນການວິເຄາະປະສິດທິຜົນຂອງໂມດູນ**

ຄ່າດັດສະນີປະສິດທິຜົນມີຄ່າເທົ່າກັບ 0.1875 ເຊິ່ງໝາຍຄວາມວ່າ ນັກສຶກສາມີຄະແນນເພີ່ມຂຶ້ນເທົ່າກັບ 0.1875 ຫຼື ຄິດເປັນ 18.75 ເປີເຊັນ ແປຄວາມໝາຍໄດ້ວ່າ ໂມດູນການຝຶກມີປະສິດທິຜົນ

**(3) ຜົນການປະເມີນແຕ່ລະໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ**

ນັກສຶກສາທີ່ໄດ້ຄະແນນຕໍ່າສຸດແມ່ນ ນ. ຄ (ນາມສົມມຸດ) ໄດ້ຄະແນນລວມ 134 ຄະແນນ (ຈາກ 200 ຄະແນນເຕັມ) ຄິດເປັນ 67 ເປີເຊັນຂອງຄະເຕັມ ຊຶ່ງຖືວ່າເປັນຄະແນນທີ່ເກີນເຄິ່ງໜຶ່ງຂອງຄະແນນເຕັມ ສ່ວນນັກສຶກສາທີ່ໄດ້ຄະແນນສູງສຸດແມ່ນ ນ. ຈ (ນາມສົມມຸດ) ໄດ້ຄະແນນລວມ 170 ຄະແນນ (ຈາກຄະແນນເຕັມ 200 ຄະແນນ) ຄິດເປັນ 85 ເປີເຊັນ ໂດຍສະຫຼຸບ ເມື່ອພິຈາລະນາຄະແນນຈາກເປີເຊັນແລ້ວເຫັນວ່ານັກສຶກສາໄດ້ຄະແນນເກີນ 50 ເປີເຊັນທຸກຄົນ ຊຶ່ງແປຄວາມໝາຍໄດ້ວ່ານັກສຶກສາສາຍເຄມີໄດ້ຄະແນນຢູ່ໃນລະດັບປານກາງຫາດີ.

## 2. ອະພິປາຍຜົນການວິໄຈ

ໃນການອະປາຍຜົນການວິໄຈ, ຜູ້ວິໄຈໄດ້ອະປາຍຜົນໃນ 3 ປະເດັນຫຼັກຕາມການສະຫຼຸບຜົນຂ້າງເທິງ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

**ອະພິປາຍຜົນໄດ້ຮັບທີ 1 ຕາມຜົນຂອງການສຶກສາຈຸດປະສົງຂໍ້ທີ 1** : ຜູ້ວິໄຈສາມາດອະພິປາຍໄດ້ວ່າ ໂມດູນການຝຶກທີ່ປະກອບມີ 5 ໂມດູນຍ່ອຍ ແລະ ໃນແຕ່ລະໂມດູນຍ່ອຍປະກອບມີກິດຈະກໍາຍ່ອຍອອກໄປອີກ, ມີການກໍານົດຈຸດປະສົງ ແລະ ໄລຍະການປະຕິບັດກິດຈະກໍາທີ່ແນ່ນອ ຈຶ່ງກ່າວໄດ້ວ່າ  ເປັນໂມດູນທີ່ເໝາະສົມ, ເປັນປະໂຫຍດ ແລະ ສາມາດນໍາເອົາໄປໃຊ້ໄດ້ຈິງ ເພາະເປັນໂມດູນໄດ້ສົ່ງເສີມໃຫ້ນັກສຶກສາໄດ້ປະຕິບັດຕົວຈິງ ເພາະຜົນງານທີ່ເກີດຈາກການຝຶກປະຕິບັດໃນໂມດູນສາມາດນໍາເອົາໄປເປັນຜົນງານຕໍ່ຍອດໃນເວລາທີ່ພວກເຂົາເຮັດບົດຈົບຊັ້ນ. ຢ່າງໃດກໍ່ດີ, ໂມດູນການຝຶກ ຍັງມີບາງບັນຫາທ້າທາຍທີ່ຜູ້ຄົ້ນຄວ້າວິໄຈຈະຕ້ອງປັບປຸງໃຫ້ມີຊັດເຈນ ແລະ ໜ້າສົນໃຈໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອຕອບສະໜອງການຮຽນຮູ້ຂອງນັກສຶກສາໃຫ້ດີຍິ່ງຂຶ້ນ.

**ອະພິປາຍຜົນໄດ້ຮັບທີ 2 ຕາມຜົນຂອງການສຶກສາຈຸດປະສົງຂໍ້ທີ 2** : ຜູ້ວິໄຈສາມາດອະພິປາຍໄດ້ວ່າ ການທີ່ນັກສຶກສາມີຄວາມສົນໃຈໃນການເຮັດກິດຈະກໍາ, ສະແດງຄໍາຄິດຄໍາເຫັນ, ຕອບຄໍາຖາມ, ຮັບຟັງຄໍາຄິດເຫັນຜູ້ອື່ນ ແລະ ເຮັດວຽກຕາມການມອບໝາຍຢູ່ໃນລະດັບປານກາງຫາດີຂຶ້ນໄປ ທັງນີ້ເນື່ອງຈາກວ່າ ໂມດູນການຝຶກເປັນໂມດູນທີ່ສົ່ງເສີມໃຫ້ນັກສຶກສາໄດ້ຝຶກປະຕິບັດຕົວຈິງ ຄວບຄູ່ໄປກັບການຮຽນທິດສະດີ ເພື່ອທີ່ພວກເຂົາຈະສາມາດເຮັດກິດຈະກໍາໃນໂມດູນການຝຶກໄດ້ ສອດຄ່ອງຜົນການສຶກສາຂອງເຄຣບ (Krepps, 1986) ໄດ້ທົດສອບຊຸດຝຶກອົບຮົມຄອມພິວເຕີຕໍ່ການຕອບສະໜອງຂອງງານທີ່ມີຕໍ່ອາລົມ ແລະ ຄວາມຮູ້ສຶກຂອງພະນັກງານທີ່ປ່ຽນເປັນການປະຕິບັດໂດຍອັດຕະໂນມັດ ເພື່ອທົດສອບປະຕິກິລິຍາຄວາມຮູ້ສຶກຂອງພະນັກງານທີ່ມີຕໍ່ງານ ມີການປ່ຽນ

ທຽບລະຫວ່າງກຸ່ມທົດລອງ ແລະ ກຸ່ມຄວບຄຸມໃນສະຖານທີ່ຕ່າງກັນ ທຳການທົດລອງ 2 ຄັ້ງ ຈາກຜົນການວິໄຈ ເຫັນວ່າ ຫຼັງການທົດລອງໃຊ້ຊຸດຝຶກອົບຮົມການປະຕິບັດວຽກງານມີການວິເຄາະສຳຫຼວດວຽກງານຫຼາຍຂຶ້ນ ຊີ້ໃຫ້ເຫັນວ່າຊຸດຝຶກອົບຮົມທີ່ສ້າງຂຶ້ນມີຜົນຫຼາຍຕໍ່ການປ່ຽນແປງຂອງພະນັກງານໃນດ້ານຄວາມພໍໃຈໃນການເຮັດວຽກທົ່ວໆ ໄປແຮງກະຕຸ້ນໃນການເຮັດວຽກ ແລະ ຄວາມເພິ່ງພໍໃຈໃນຄວາມໝັ້ນຄົງຂອງວຽກງານ ແລະ ສອດຄ່ອງກັບພອນລອກ (Pollock, 1991) ໄດ້ເຮັດການວິໄຈໂດຍປະເມີນຄ່າຄວາມສຳຄັນ ແລະ ອິດທິພົນຂອງຊຸດຝຶກອົບຮົມທີ່ໃຊ້ໃນການພັດທະນາອາຊີບເຊິ່ງມີເນື້ອຫາກ່ຽວກັບຄວາມຮູ້ຄວາມເຂົ້າໃຈຄອມພິວເຕີໃນໄວເດັກນ້ອຍ ຊຸດຝຶກອົບຮົມດັ່ງກ່າວໄດ້ມີການພັດທະນາຂຶ້ນເພື່ອໄປໃຊ້ຝຶກອົບຮົມເດັກໃນປະເທດແຄນນາດາກ່ຽວກັບຄວາມຮູ້ຄວາມເຂົ້າໃຈເລື່ອງຄອມພິວເຕີທົ່ວໄປ ຜົນການສຶກສາເຫັນວ່າ ຊຸດຝຶກອົບຮົມໄດ້ຮັບຄວາມສົນໃຈຈາກກຸ່ມເປົ້າໝາຍ ມີຄວາມຮູ້ ແລະ ທັດສະນະຄະຕິທີ່ດີຕໍ່ຊຸດຝຶກອົບຮົມ ລວມທັງປະສົບຜົນສຳເລັດໃນການສົ່ງເສີມໃຫ້ເດັກນ້ອຍມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບຄອມພິວເຕີ ພ້ອມດຽວກັນຍັງສະ ເໜີໃຫ້ມີການສົ່ງເສີມສະໜັບສະໜຸນການສ້າງຊຸດຝຶກອົບຮົມພັດທະນາວິຊາຊີບ

**ອະພິປາຍຜົນໄດ້ຮັບທີ 2 ຕາມຜົນຂອງການສຶກສາຈຸດປະສົງຂໍ້ທີ 3** : ຜູ້ວິໄຈໄດ້ແບ່ງການອະພິປາຍຜົນໄດ້ໃນຂໍ້ນີ້ອອກເປັນ 3 ຫົວຂໍ້ຍ່ອຍ ດັ່ງລຸ່ມນີ້:

**(1) ການອະພິປາຍຜົນການປະເມີນລະຫວ່າງ ແລະ ຫຼັງຮຽນ**

ການທີ່ຜົນການປະເມີນຫຼັງສູງກວ່າລະຫວ່າງຮຽນນັ້ນສະແດງໃຫ້ເຮົາຮູ້ວ່າ ພັດທະນາການທາງດ້ານການຮຽນຂອງນັກສຶກສາສູງຂຶ້ນ ທັງນີ້ອາດເປັນເພາະວ່າ ເມື່ອນັກສຶກສາໄດ້ດຳເນີນການວິໄຈຕົວຈິງຕາມຫຼັກການທາງວິທະຍາສາດ ພາຍໃຕ້ການຊີ້ນຳຢ່າງໃກ້ຊິດຈາກຄູຜູ້ສອນ (ຜູ້ວິໄຈ) ເຮັດໃຫ້ພວກເຂົາເກີດຄວາມຮັບຮູ້ ແລະ ເຂົ້າໃຈການວິໄຈໃນຫ້ອງຮຽນດີຂຶ້ນຕາມລຳດັບ ສອດຄ່ອງກັບຜົນການສຶກສາຂອງ ຄຳພັນ ກົມກໂຊ (2535) ທີ່ໄດ້ພັດທະນາຊຸດຝຶກອົບຮົມດ້ວຍຕົນເອງເພື່ອພັດທະນາມະໂນທັດດ້ານການສອນຂອງຄູປະຖົມ ແລະ  ສອດຄ່ອງກັບກິດສະໜາ ປຣະຊາກຸນ (2537) ທີ່ໄດ້ສ້າງຊຸດຝຶກອົບຮົມເລື່ອງ ການເລືອກສື່ການຮຽນການສອນ ສຳລັບຄູຜູ້ສອນໃນໂຮງຮຽນມັດທະຍົມສຶກສາ ຊຶ່ງຜົນການສຶກສາຂອງທັງສອງທ່ານເຫັນວ່າ ຄະແນນທົດສອບຫຼັງສູງກວ່າຄະແນນທົດສອບກ່ອນຮຽນ ແລະ ສອດຄ່ອງກັບນາດຕະຍາ ແກ້ວໃສ (2542) ທີ່ໄດ້ພັດທະນາຫຼັກສູດແລະຊຸດຝຶກອົບຮົມຂອງຄູ ເລື່ອງ ການໃຊ້ໂປຼແກຼມ Powerpoint ຜູ້ວິໄຈໄດ້ໃຫ້ຜູ້ເຂົ້າຮັບການອົບຮົມແລະເຮັດການທົດສອບການຝຶກອົບຮົມ (Pretest) ເມື່ອຂະບວນການຝຶກອົບຮົມສຳເລັດແລ້ວ ໃຫ້ຜູ້ເຂົ້າຮັບການຝຶກອົບຮົມເຮັດແບບປະເມີນຄວາມເພິ່ງພໍໃຈໃນການຝຶກອົບຮົມແລະແບບທົດສອບວັດຜົນສຳເລັດທາງການຝຶກອົບຮົມ (Posttest) ຫຼັງຈາກນັ້ນນຳຂໍ້ມູນທີ່ໄດ້ມາຄຳນວນຫາປະສິດທິພາບຂອງຫຼັກສູດແລະຊຸດຝຶກອົບຮົມ ຜົນການວິໄຈເຫັນວ່າ ຫຼັກສູດທີ່ສ້າງຂຶ້ນໃຊ້ຝຶກອົບຮົມໄດ້ຢ່າງມີປະສິດທິພາບ ຊຸດຝຶກອົບຮົມມີປະສິດທິພາບທາງທິດສະດີເທົ່າກັບ 89.31/81.96 ແລະມີປະສິດທິພາບທາງພາກປະຕິບັດເທົ່າກັບ 87.11/90.18 ສູງກວ່າເກນ 80/80 ຕາມທີ່ກຳນົດໄວ້ ແລະຄະແນນສອບກ່ອນແລະຫຼັງຝຶກອົບຮົມມີຄວາມແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ .01 ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ ຄາເຕີ (Carter, 1998) ໄດ້ພັດທະນາຊຸດຝຶກອົບຮົມແບບສຳພາດທາງວິດີໂອເພື່ອຝຶກທັກສະການສຳພາດຂອງນັກສຶກສາສາຂາຈິດວິທະຍາ ໂດຍແບ່ງກຸ່ມຕົວຢ່າງອອກເປັນ 5 ກຸ່ມແຍກເປັນກຸ່ມທົດລອງ 3 ກຸ່ມ ແລະ ກຸ່ມຄວບຄຸມ 2 ກຸ່ມ ກຸ່ມລະປະມານ 15 – 16 ຄົນ ໃຊ້ວິທີການທົດສອບຫຼັງການອົບຮົມ (Posttest)

ຜົນການວິໄຈເຫັນວ່າ ນັກສຶກສາກຸ່ມທົດລອງທີ່ສຶກສາດ້ວຍຊຸດຝຶກອົບຮົມທີ່ສ້າງຂຶ້ນມີທັກສະດ້ານການສຳພາດຫຼັງການອົບຮົມ 86% ສູງກວ່າເກນທີ່ກຳນົດໄວ້ (80%)

**(2) ການອະພິປາຍຜົນການວິເຄາະປະສິດທິຜົນຂອງໂມດູນ**

ການທີ່ຄ່າປະສິດທິຜົນຂອງໂມດູນເພີ່ມຂຶ້ນສະແດງໃຫ້ຮູ້ວາໂມດູນການຝຶກມີປະສິດທິຜົນ ພ້ອມດຽວກັນມັນຍັງສະແດງອອກທາງດ້ານຜົນການທົດສອບກ່ອນ ແລະ ຫຼັງທີ່ຜູ້ວິໄຈໄດ້ອະພິປາຍໄວ້ໃນຂໍ້ (1) ຂ້າງເທິງ ຄື ຄະແນນການທົດສອບຫຼັງການຮຽນສູງກວ່າກ່ອນການຮຽນ

**(3) ການອະພິປາຍຜົນການປະເມີນແຕ່ລະໂມດູນການຝຶກທີ່ສົ່ງເສີມຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກສຶກສາສາຍເຄມີຕໍ່ວິຊາ ວິໄຈໃນຫ້ອງຮຽນ**

ຈາກຜົນການປະເມີນໂມດູນແຕ່ລະໂມດູນ ສະແດງໃຫ້ເຫັນພັດທະນາການຂອງນັກສຶກສາແມ່ນດີຂຶ້ນຕາມລຳດັບ ທັງນີ້ອາດເກີດຈາກຄວາມເອົາໃຈໃສ່ຂອງຜູ້ສອນ (ຜູ້ວິໄຈ) ທີ່ພາຍຫຼັງການປະເມີນໂມດູນຂອງນັກສຶກສາແຕ່ລະຄົນ ຈະມີການສະທ້ອນຄືນ ອະທິບາຍ ແລະ ຊີ້ແຈ້ງໃນປະເດັນທີ່ພົບວ່ານັກສຶກສາຍັງເຮັດບໍ່ທັນໄດ້ດີ ທັງຮູບແບບກຸ່ມໃຫຍ່ ແລະ ຕົວຕໍ່ຕົວ, ຍ້ອນຄວາມເອົາໃຈໃສ່ຂອງຄູຜູ້ສອນດັ່ງທີ່ກ່າວມານີ້ ອາດເປັນປັດໄຈຫຼັກທີ່ສົ່ງເສີມ ແລະ ຊຸກຍູ້ໃຫ້ນັກສຶກສາເອົາໃຈໃສ່ໃນການຮຽນ, ຕັ້ງໃຈປະຕິບັດກິດຈະກຳໃນໂມດູນແຕ່ລະໂມດູນຕາມການມອບໝາຍຂອງຄົນຈົນເຮັດໃຫ້ຜົນການປະເມີນອອກມາຢູ່ໃນລະດັບກາງຫາດີ

## 3. ຂໍ້ສະເໜີແນະ

### 3.1 ຂໍ້ສະເໜີແນະຜົນຂອງການວິໄຈ

(1) ຜູ້ວິໄຈຂໍສະເໜີແນະໃຫ້ຄູ-ອາຈານທີ່ສອນວິຊາວິໃນຫ້ອງຮຽນສາມາດນຳເອົາໂມດູນການຝຶກທີ່ຜູ້ວິໄຈໄດ້ສ້າງ ແລະ ພັດທະນາຂຶ້ນນີ້ໄປທົດລອງໃຊ້ກັບນັກສຶກສາຂອງຕົນ ເພາະໂມດູນການຝຶກ 5 ໂມດູນນີ້ ຜ່ານການທົດລອງໃຊ້ ແລະ ພິສູດໃຫ້ເຫັນແລ້ວວ່າ ໂມດູນນີ້ສາມາດສົ່ງເສີມໃຫ້ນັກສຶກສາເກີດຄວາມຮັບຮູ້ ແລະ ເຂົ້າໃຈບົດຮຽນໄດ້ດີຂຶ້ນ;

(2) ໃນການເອົາໂມດູນການຝຶກໄປໃຊ້, ຄູຜູ້ສອນຕ້ອງໄດ້ປະຕິບັດຕາມຈຸດປະສົງໃນແຕ່ລະໂມດູນຢ່າງເຄັ່ງຄັດຄື: ຕ້ອງໄດ້ຊຸກຍູ້ໃຫ້ນັກສຶກສາໄດ້ປະຕິບັດກິດຈະກຳໃນແຕ່ລະໂມດູນໃຫ້ສຳເລັດ ພ້ອມທັງກວດກາປະເມີນ ແລະ ແນະນຳຄືນໃນປະເດັນທີ່ນັກສຶກສາຍັງປະຕິບັດບໍ່ທັນໄດ້ດີ ນອກຈາກນີ້ຈະຕ້ອງໄດ້ແນະນຳໃຫ້ພວກເຂົາໄດ້ອ່ານໃບຄວາມຮູ້ໃນໂມດູນການຝຶກໄປພ້ອມກັນກັບການປະຕິບັດກິດຈະກຳ ເພື່ອຊຸກຍູ້ໃຫ້ພວກເຂົາເກີດຄວາມຮັບຮູ້ ແລະ ເຂົ້າໃຈທັງພາກທິດສະດີ ແລະ ປະຕິບັດໄປພ້ອມກັນ;

### 3.2 ຂໍ້ສະເໜີແນະໃນການວິໄຈຄັ້ງຕໍ່ໄປ

(1) ຖ້າຄູອາຈານ ຫຼື ນັກສຶກສາ ຫຼື ປັນຍາຊົນ ນັກຮຽນຮູ້ທົ່ວໄປ ສົນໃຈທີ່ຈະເຮັດການວິໄຈໃນການສ້າງ ແລະ ພັດທະນາໂມດູນການຝຶກ ສາມາດນຳເອົາວິໄຈເລື່ອງນີ້ໄປສຶກສາ ແລະ ພັດທະນາຕໍ່ຍອດໄດ້ ໂດຍນຳໃຊ້ 2 ກຸ່ມຕົວຢ່າງຄື ກຸ່ມຄວບຄຸມ ແລະ ກຸ່ມທົດລອງ ເພາະງານວິໄຈນີ້ໃຊ້ພຽງຕົວຢ່າງດຽວເທົ່ານັ້ນ ບົນພື້ນຖານການນຳໃຊ້ຮູບແບບການວິໄຈພາກປະຕິບັດ

(2) ຄູອາຈານ ຫຼື ນັກສຶກສາ ຫຼື ປັນຍາຊົນ ນັກຮຽນຮູ້ທົ່ວໄປທີ່ມີຄວາມປະສົງຈະເຮັດການວິໄຈໃນເລື່ອງການສ້າງ ແລະ ພັດທະນາໂມດູນ ສາມາດຕໍ່ຍອດເລື່ອງນີ້ໄດ້ແຕ່ໃນບໍລິບົດທີ່ກວ້າງຂຶ້ນຄື ໃຊ້ລະບຽບການວິໄຈ ແລະ ພັດທະນາ (Research and development) ເພື່ອໃຫ້ຜົນຂອງການສຶກສາວິໄຈສາມາດນໍາໃຊ້ໄດ້ໃນບໍລິບົດ ຫຼື ສະພາບແວດລ້ອມທີ່ກວ້າງຂຶ້ນ.

# ບັນນານຸກົມ


ກະຊວງສຶກສາທິການ, ກົມສ້າງຄູ, ໂຄງການພັດທະນາການສ້າງຄູ ແລະ ຍົກຖານະຄູ. (2010). **ຄູມືເຮັດວຽກວິທະຍາໄລຄູສາລະວັນ**,(ອັດສຳເນົາເອກະສານ). ບໍ່ປະກົດສະຖານທີ່ພິມ.

ກະຊວງສຶກສາທິການ, ກົມສ້າງຄູ, ໂຄງການພັດທະນາການສ້າງຄູ ແລະ ຍົກຖານະຄູ. (2010). **ມາດຕະຖານຂອງຄູ.** .(ອັດສຳເນົາເອກະສານ). ບໍ່ປະກົດສະຖານທີ່ພິມ.

ກະຊວງສຶກສາທິການ, ກົມສ້າງຄູ**. ປຶ້ມແບບຮຽນວິໄຈພາກປະຕິບັດ.** (2009). ນະຄອນຫຼວງວຽງຈັນ:ພິມທີ່ Dhan Nan Printing House HCMC.

ກະມົນ ສຸດປະເສີດ. (1985). **ແນວຄິດໃນການນຳຜົນການວິໄຈໄປໃຊ້ເພື່ອພັດທະນາຄຸນນະພາບໂຮງຮຽນ**. ວິໄຈສາລະສົນເທດ.

ກອງວິໄຈທາງການສຶກສາ, ກົມວິຊາການ. (2005). **ການວິໄຈເພື່ອພັດທະນາການຮຽນຮູ້**: ກຸງເທບມະຫານະຄອນ: ການສາດສະໜາ.

ຄູຣຸຣັກ ພິຣິມຣັກ. (2004). **ຮຽນຮູ້ ແລະ ເຝິກປະຕິບັດການວິໄຈໃນຫ້ອງຮຽນ.** ພິມຄັ້ງທີ 4. ຊິນບຸຣີ: ງານຊ່າງ,

ຈິລະພັນ ໄຕທິບຈະຣັດ. (2000). ‘**ການວິໄຈ ແລະ ການນຳຜົນການວິໄຈມາໃຊ້ໃນສະຖານສຶກສາກັບການປະຕິຮູບການສຶກສາ: ຖານຄິດໃນການພັດທະນາການຮຽນຮູ້ທີ່ເໝາະສົມກັບຜູ້ຮຽນ**.” ວິຊາການ. 3 (ມັງກອນ 2000): 66-68., 2000.

ສະໄຫວ ຈຸລາ. (2010). **ການສຶກສາຄວາມຄິດເຫັນກ່ຽວກັບບັນຫາ ແລະ ແນວທາງພັດທະນາງານວິໄຈໃນຫ້ອງຮຽນຂອງບຸກຄະລາກອນຄູໂຮງຮຽນສາລາຄູ້** ສຳນັກງານເຂດມິນບຸຣີ ກຸງເທບມະຫານະຄອນ.

ສຸວິມົນ ວ່ອງວານິດ. (2011). **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

______**ການວິໄຈພາກປະຕິບັດໃນຫ້ອງຮຽນ**. (2001). ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາ ໄລ.

ສຸພັກ ສີບູນ. (2001). **ການວິໄຈເພື່ອພັດທະນາການຮຽນຮູ້**: **ການວິໄຈໃນຫ້ອງຮຽນ**. ນົນທະບຸຣີ: ມະຫາວິທະຍາໄລສຸໂຂໄທທຳມາທິຣາດ.

ສຸພາພອນ ມັ່ງເກດວິດ. **ຕົວຢ່າງການວິໄຈໃນຫ້ອງຮຽນປະສົບການທາງກິງຂອງຄູຕົ້ນແບບ.** ກຸງເທບມະຫານະຄອນ: ບໍລິສັດ 21 ເຊັນຈູຣີ ຈຳກັດ, 2001.

ສຸວັດທະນາ ສຸວັນເຂດນິຄົມ. **ແນວຄິດ ແລະ ຮູບແບບກ່ຽວກັບການວິໄຈໃນຫ້ອງຮຽນ**, 1995 ອ້າງເຖິງໃນ ລັດດາ ພູ່ກຽດ. (ບັນນາທິການ). ເສັ້ນທາງສູ່ການວິໄຈໃນຫ້ອງຮຽນ. ກຸງເທບມະຫານະຄອນ: ບໍລິສັດບໍພິດການພິມ.

ໄຊພິດ ຮັກງາມ. (1996). "**ສອນແບບໃດໃຫ້ໄດ້ຜົນຕໍ່ການພັດທະນາ**". ວາລະສານການວິໄຈທາງການສຶກສາ, 26 (13)(ມັງກອນ-ກັນຍາ), 1996.

ທັດສະນາ ສະແຫວງສັກ. (2003). **ການວິໄຈໃນຫ້ອງຮຽນ.** ວາລະສານວິຊາການ, ບໍ່ປະກົດເຫຼັ້ມເລກທີ.

ນິງລັກ ວິຣັດໄຊ. (2010). **ການວິໄຈເພື່ອການຮຽນ-ການສອນ: ການວິໄຈປະຕິບັດການຂອງຄູ.** ໃນ ພິດສະໄໝ ຈາຣຸຈິຕິພັນ (ບັນນາທິການ). ຈັດພິມເນື່ອງໃນໂອກາດກະສຽນອາຍຸລາດຊະການ.

ນິບພະດົນ ເຈນອັກສອນ. (2001). **ແກ່ນວິໄຈໃນຫ້ອງຮຽນ.** ກຸງເທບມະຫານະຄອນ: ສຳນັກພິມພາບພິມ.

ນະພາພອນ ສິງຫາທັດ. (1988). **ການພັດທະນາຊຸດການສອນລາຍບຸກຄົນເພື່ອສົ່ງເສີມດ້ານຄວາມສາມາດການເຮັດວິໄຈສໍາລັບຄູ ແລະ ບຸກຄະລາກອນທາງການສຶກສາ**. ປະລິນຍານິພົນການສຶກສາດຸດສະດີບັນດິດ ມະຫາວິທະຍາໄລສີນະຄະລິນທະນະວິໂຣດ.

ບຸນຊົມ ສີສະອາດ. (2001). **ການວິໄຈສໍາລັບຄູ** (ພິມຄັ້ງທໍາອິດ). ກຸງເທບມະຫານະຄອນ: ສຸວິຣິຍະສາດ.

ປາໂມດ ວິຣະວັນ. (2008). **ການພັດທະນາຄູດ້ານການເຮັດວິໄຈໃນຫ້ອງຮຽນ: ກໍລະນີສຶກສາໂຮງຮຽນບ້ານທ່າສອງຄອນ ສໍານັກງານເຂດພື້ນທີ່ການສຶກສາມະຫາສາຣະຄາມ ເຂດ1**. ວາລະສານມະຫາວິທະຍາໄລຣາດຊະພັດມະຫາສາຣະຄາມ. 2 (1).

ຜ່ອງພັນ ໃຈມົງຄົນກຸນ. (2000). **ການວິໄຈໃນຫ້ອງຮຽນ.** ກຸງເທບມະຫານະຄອນ: ມະຫາວິທະຍາໄລກະເສດສາດ.

ມິນສິດ ສິດທິສົມບູນ. (2011). **ການວິໄຈໃນຫ້ອງຮຽນ: ຊຸດເຝິກພາກປະຕິບັດ.** ຄະສຶກສາສາດ, ມະຫາວິທະຍາໄລນະເລສວນ.

ໄພທູນ ສຸກໜາ. (2011). **ສະພາບ ແລະ ບັນຫາການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນມັດທະຍົມ ໂຮງຮຽນໜອງກີ່ພິດທະຍາຄົມ ເມືອງໜອງກີ່ ແຂວງບຸຣີຣໍາ**. ກຸງເທບມະຫານະຄອນ: ບັນດິດວິທະຍາໄລ ມະຫາວິທະ ໄລນອດກຸງເທບ.

ພູມິນ ເຫຼົ່າອໍານາດ. (2010). **ການສຶກສາສະພາບ ແລະ ບັນຫາການເຮັດວິໄຈໃນຫ້ອງຮຽນຂອງຄູໂຮງຮຽນວັດສິດທາຣາມ ສໍານັກງານເຂດບາງກອກໃຫຍ່ ຂຶ້ນກັບກຸງເທບມະຫານະຄອນ.** ວິທະຍານິພົນຄຣຸສາດມະຫາບັນດິດ ສາຂາວິຊາການບໍລິຫານການສຶກສາ ມະຫາວິທະຍາໄລຣາດຊະພັດບ້ານສົມເດັດເຈົ້າພະຍາ.

ພິດສະນຸ ຟອງສີ. (2009). **ວິໄຈໃນຫ້ອງຮຽນ: ຫຼັກການ ແລະ ເຕັກນິກປະຕິບັດ.** ພິມຄັ້ງທີ 8, ກຸງເທບມະຫານະຄອນ: ບໍລິສັດ ດ່ານສຸດທາການພິມ ຈໍາກັດ.

ເພັນສິຣິ ມຸກສົມບັດ. (2008). **ການພັດທະນາບຸກຄະລາກອນກ່ຽວກັບການເຮັດວິໄຈໃນຫ້ອງຮຽນໂຮງຮຽນບ້ານແກ່ງຈະເລີນ ເມືອງພິບູນມັງສາຫານ ແຂວງອຸບົນຣາດຊະທານີ**. ມະຫາວິທະຍາໄລມະຫາສາຣະຄາມ.

ພະນົມ ພົງໄພບູນ. (1994). **ແນວຄິດໃນການດໍາເນີນງານວິໄຈຂອງກະຊວງສຶກສາທິການ.** ວິໄຈສາລະສົນເທດ. (ບໍ່ປະກົດປີພິມ)

ພັນທະນີ ວິທະຄະໂຕ. (1993). **ສະພາບບັນຫາແນວທາງການພັດທະນາ ແລະ ການໃຊ້ນະວະຕະກຳໃນການຈັດການຮຽນ-ການສອນຂອງຄູມັດທະຍົມສົມບູນ.** ກຸງເທບມະຫານະຄອນ: ການສາດສະໜາ.

ພິຣະວັດ ວົງພິມ. (1990). **ສະພາບການເຮັດວິໄຈຂອງຄູປະຖົມສຶກສາທີ່ຂຶ້ນກັບສຳນັກງານການປະຖົມສຶກສາແຫ່ງຊາດ ເຂັດການສຶກສາທີ 10**, ວິທະຍານິພົນຄູສາດມະຫາບັນດິດຈຸລາລົງກອນມະຫາວິທະຍາໄລ.

ຣັດຕິມາ ໂສພາຄະຍັງ. (2013). **ການພັດທະນາສັກກະຍະພາບຄູດ້ານການເຮັດວິໄຈໃນຫ້ອງຮຽນໂຮງຮຽນບ້ານຫ້ວຍກອກ1 ຂຶ້ນກັບສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາມຸກດາຫານ.** ວາລະສານບັນດິດສຶກສາ, 10(49).

ຣັດຕະນາ ສິເຫຼັ້ນ. (2011). **ການວິໄຈໃນຫ້ອງຮຽນ**, 2001 ອ້າງຈາກ ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ວາໂຣ ເພັງສະຫວັດ**. (2008). ວິທີວິທະຍາການວິໄຈ.** ກຸງເທບມະຫານະຄອນ: ສຸວິຣິຍະສານ.

ວັນວິໄລ ພັນສີດາ. (2001). **12 ກ້າວປະຕິບັດການວິໄຈໃນຫ້ອງຮຽນຂັ້ນພື້ນຖານສາລັບຄູຍຸກໃໝ່**. ກຸງເທບມະຫານະຄອນ: ໂຮງພິມຈະເລີນກິດ.

ວັນຈະນາ ຣຸນສີງາມ. (2010). **ສຶກສາສະພາບການເຮັດວໄຈໃນຫ້ອງຮຽນຂອງຄູຜູ້ສອນໃນສະຖານສຶກສາ ຂຶ້ນກັບຫ້ອງການສຶກສາ ສະແກ້ວ ເຂດ 2**. ວິທະຍານິພົນການສຶກສາມະຫາບັນດິດມະຫາວິທະຍາໄລບູຣະພາ.

ວິຣັດ ວັນນະຣັດ. (1994). '**ການວິໄຈໃນໂຮງຮຽນ ແລະ ຫ້ອງຮຽນ**''. ວາລະສານວັດຜົນການສຶກສາ. 17 (ສິງຫາ-ກັນຍາ 1984).

ວິເວກ ປາງພຸດທິພົງ. (1986). **ການພັດທະນາການສຶກສາກັບການວິໄຈ.** ວິໄຈສາລະສົນເທດ, (ບໍ່ປະກົດສະຖານທີ່ພິມ).

ອັງຄະນາ ບຸດຕະຍະກຸນ ແລະ ຄະນະ. (2012). **ສະພາບ ແລະ ແນວທາງການພັດທະນາການເຮັດວິໄຈໃນຫ້ອງຮຽນຂອງອາຈານມະຫາວິທະຍາໄລຣາດຊະພັດສອນດຸສິດ.** ຄະນະວິທະຍາການຈັດການ ມະຫາວິທະຍໄລຣາດຊະພັດສ່ອນດຸສິດ. ກຸງເທບມະຫານະຄອນ.

ອຸທຸມພອນ ຈາມອນມານ. (1994). **ການວິໄຈຂອງຄູ.** ກຸງເທບມະຫານະຄອນ: ຄະນະຄຸສາດ ຈຸລາລົງກອນມະຫາວິທະຍາໄລ.

Bassey, M. (1999). **Case study research in educational settings.** Philadephia, PA: Open University Press.

Bassey, M. (1986). **Does action research require sophisticated research methods**. (pp.18-24)., In Huster, D.; Cassidy, A. & Cuff, E.C. (ed.). Action research in classroom and schools. London: Allen & Unwin (Publishers) Ltd, 1986.

Cameron-Jones, M. A researching profession of the growth of classroom action. (1983). **Teacher Education**, Cited in ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ, 2011.

Calhoun, E.F. Action Research: **Three approaches.,1993**. Educational Leadership. (October, 1993), pp. 62-65.,1993.

*Dan MacIsaac*, (*1995*) "**An Introduction to Action Research,**" Webpage: http://www.phy.nau.edu/~ danmac/actionrsch.html (22/03/2013).

Dick, B. (2011). **A beginner's guide to action research**, 2000 cited in ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາ ວິທະຍາໄລ.

Dencombe. (1999). **The good research guide for small-scale social research project**. Philadelphia, PD: Open University Press.

Elliott, J. (1991). **Action research for educational change**. Bristol, PA: Open University Press, Cited in ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ, 2011.

Foshay, A.W. (1998). **Action research in the nineties**. The Education Forum. Vol. 62 (Winter), pp. 108-112. Webpage:http://ednet2.car.chula.ac.th. (August 2, 1999).

Freeman, D. (1998). Doing teacher-research: **From inquiry to understanding**. Pacific Grove: Heinle & Heinle Publishers.

Johnson, B. **Teacher-as-research**. ERIC Clearinghouse on Teacher Education Washington DC. ED 335205 cited from ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ, 2011.

Johnson, C.S และ Kromann-Kelly, I. (2011). **Using action research to assess instruction**. Reading Horizons. Vol 35 (3) cited from ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

Kemmis, S. (1998). **Action Research**. In Keeves, J.P. **Educational research, methodology, and measurement**: An international handbook. Oxford: Pergamon Press.

McLean, J.E. (1997). Teacher empowerment through action research. **Kappa Delta Pi Record,** cited from ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ, 2011.

Miller, A. C. (2000). **Collatorative action research**. South Florida Center for Educational Leader,. Webpage:http://www.fau/edu/divdep/coe/sfecel/adhend.htm.(27/11/2000).

Newman, J.M. (2000). **Action research: A brief overview**. Forum: Qualitative Social research [On-line Journal]. Available at http://qualitative-research.net/fqs.Vol.1(1).

Sebatane, E. M. (1994). "Enhancement of Teacher Capacities and Capabilities in School Based Assessment: Lesotho Experience". **Magazine: Assessment in Education**. (Online) Available: http://www.epnet.com/bin/epwsatch. (June 7, 2013).

Sardo-Brown, D.; Welsh, L. A. & Bolton, D.L. (1995). **Practical strategies for facilitating class room teacher's involvement in action research**. Education (Chula Vista, Calif.). Vol. 115 (Summer), pp. 553-559. Webpage:http://ednet2.car.chula.ac.th.(August2,1999)

Zuber-Skerrit, O. **New directions in action research**. Bristol, PA : Falmer Press, 1996 cited from ສຸວິມົນ ວ່ອງວານິດ. **ການວິໄຈພາກປະຕິບັດໃນຫ້ອງຮຽນ**. ພິມຄັ້ງທີ 15, ກຸງເທບມະຫານະຄອນ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ, 2011.

# ເອກະສານຊ້ອນທ້າຍ

# ເຄື່ອງມືວິໄຈ

## ແບບທົດສອບຍ່ອຍ (ລະຫວ່າງຮຽນ) ຄັ້ງທີ 1

**ຄຳຊີ້ແຈ້ງ:** ແບບທົດສອບນີ້ປະກອບມີທັງໝົດ 5 ຂໍ້ ກະລຸນາຕອບໝົດທຸກຂໍ້ ເພື່ອຜົນປະໂຫຍດສູງສຸດທາງການວິໄຈໃນຫ້ອງຮຽນ

1. ການວິໄຈໃນຫ້ອງຮຽນ ໝາຍເຖິງ
   ກ. ການໃຊ້ວິທີໄສຍະສາດເພື່ອເຮັດໃຫ້ການວິໄຈດີຂຶ້ນ
   ຂ. ການໃຊ້ວິທີວິທະຍາສາດຄົ້ນຄວ້າເພື່ອສ້າງຄວາມຮູ້ໃໝ່ທາງການສຶກສາ
   ຄ. ການຄົ້ນຄວ້າວິທີການຮຽນໂດຍໃຊ້ວິທີວິທະຍາສາດຄົ້ນຄວ້າ
   ງ. ການຄົ້ນຄວ້າການພັດທະນາການສອນ
2. ເປົ້າໝາຍຂອງການວິໄຈໃນຫ້ອງຮຽນ ຄື ຂໍ້ໃດ
   ກ. ປະເມີນຕັດສິນຜູ້ຮຽນ
   ຂ. ແກ້ບັນຫາຜູ້ຮຽນ
   ຄ. ພັດທະນາຜູ້ຮຽນ
   ງ. ຖືກທັງ ຂ ແລະ ຄ
3. ຂໍ້ໃດບໍ່ແມ່ນເປົ້າໝາຍຂອງການວິໄຈໃນຫ້ອງຮຽນ
   ກ. ພັດທະນາຜູ້ຮຽນ
   ຂ. ແກ້ບັນຫາຜູ້ຮຽນ
   ຄ. ປະເມີນຕັດສິນຜູ້ຮຽນ
   ງ. ຫາສາເຫດຂອງພຶດຕິກຳ
4. ຂັ້ນຕອນທຳອິດໃນການເຮັດວິໄຈໃນຫ້ອງຮຽນຄືຂັ້ນຕອນໃດ
   ກ. ລວບລວມຂໍ້ມູນ　　　　ຂ. ກຳນົດບັນຫາ
   ຄ. ຕັ້ງສົມມຸດຕິຖານ　　　　ງ. ວິເຄາະບັນຫາ
5. "ທ້າວ ແດງ ຂາດຮຽນເປັນປະຈຳ" ຄວນຕັ້ງຄຳຖາມວິໄຈແນວໃດຈຶ່ງຈະເໝາະສົມທີ່ສຸດ
   ກ. ເປັນຫຍັງທ້າວແດງຈຶ່ງຂາດຮຽນເປັນປະຈຳ
   ຂ. ຢູ່ເຮືອນ ທ້າວ ແດງ ມີບັນຫາຫຍັງ ຈຶ່ງຕ້ອງຂາດຮຽນ
   ຄ. ໂຮງຮຽນມີບັນຫາຫຍັງ ທ້າວ ແດງ ຈຶ່ງຂາດໂຮງຮຽນ
   ງ. ຈະແກ້ບັນຫາການຂາດຮຽນຂອງທ້າວ ແດງ ແບບໃດ

## ແບບທົດສອບຍ່ອຍ (ລະຫວ່າງຮຽນ) ຄັ້ງທີ 2

**ຄຳຊີ້ແຈ້ງ:** ແບບທົດສອບນີ້ປະກອບມີທັງໝົດ 5 ຂໍ້ ກະລຸນາຕອບໝົດທຸກຂໍ້ ເພື່ອຜົນປະໂຫຍດສູງສຸດທາງການວິໄຈໃນຫ້ອງຮຽນ

6. ການວິໄຈໃນຫ້ອງຮຽນ ກົງກັບຄວາມໝາຍຂໍ້ໃດ
   ກ. ເປັນການວິໄຈການສຶກສາທີ່ຢູ່ທັງໃນ ແລະ ນອກຫ້ອງຮຽນ
   ຂ. ເປັນການວິໄຈສະເພາະການຮຽນ-ການສອນທີ່ຢູ່ໃນຫ້ອງຮຽນ
   ຄ. ເປັນການວິໄຈຂອງຄູທີ່ຈັດການຮຽນ-ການສອນທັງໃນ ແລະ ນອກຫ້ອງຮຽນ

ງ. ເປັນການວິໄຈຂອງສະຖານສຶກສາທີ່ຈັດການຮຽນ-ການສອນ

7. ວິທີດຳເນີນການວິໄຈໃນຫ້ອງຮຽນ ຄວນເລີ່ມຈາກຂໍ້ໃດກ່ອນໝູ່

ກ. ລະບຸບັນຫາທີ່ເກີດຂຶ້ນໃນຫ້ອງຮຽນທີ່ໄດ້ຈາກການສັງເກດ ແລະ ການເກັບຂໍ້ມູນດ້ວຍວິທີຕ່າງໆ

ຂ. ເລືອກບັນຫາທີ່ຕ້ອງການສຶກສາ ແລະ ແກ້ໄຂ

ຄ. ຕັ້ງສົມມຸດຕິຖານເຖິງສາເຫດຂອງບັນຫາ

ງ. ຄົ້ນຫາສາເຫດຂອງບັນຫາຕາມສົມມຸດຕິຖານທີ່ຕັ້ງໄວ້

8. Classroom Action Research ຂໍ້ໃດ

ກ. ການວິໄຈພາກປະຕິບັດທັງໃນ ແລະ ນອກຫ້ອງຮຽນ

ຂ. ການວິໄຈພາກປະຕິບັດນອກຫ້ອງຮຽນ

ຄ. ການວິໄຈພາກປະຕິບັດໃນຫ້ອງຮຽນ

ງ. ການວິໄຈພາກປະຕິບັດ

9. ການວິໄຈໃນຫ້ອງຮຽນຈັດເປັນການວິໄຈຮູບແບບໃດ?

ກ. ການວິໄຈພາກປະລິມານ ຂ. ການວິໄຈພາກປະຕິບັດ

ຄ. ການວິໄຈເພື່ອສ້າງທິດສະດີ ງ. ການວິໄຈເພື່ອພັດທະນາເຄື່ອງມື

10. ບັນຫາ 'ນັກຮຽນຂຽນຕົວໜັງສືບໍ່ງາມ'' ຂໍ້ໃດແມ່ນສາເຫດທີ່ເກີດຈາກປັດໃຈ

ກ. ຄູສອນຕາມຄູ່ມືຄູ ຂ. ກິດຈະກຳການຮຽນບໍ່ໜ້າສົນໃຈ

ຄ. ຄູສອນບໍ່ໃຊ້ແບບເຝິກ ງ. ຄູຜູ້ສອນຂຽນບໍ່ງາມ

## ແບບທົດສອບຍ່ອຍ (ລະຫວ່າງຮຽນ) ຄັ້ງທີ 3

<u>**ຄຳຊີ້ແຈ້ງ:**</u> ແບບທົດສອບນີ້ປະກອບມີທັງໝົດ 5 ຂໍ້ ກະລຸນາຕອບໝົດທຸກຂໍ້ ເພື່ອຜົນປະໂຫຍດສູງສຸດທາງການວິໄຈໃນຫ້ອງຮຽນ

11. ຂໍ້ໃດເປັນການເກັບລວບລວມຂໍ້ມູນໃນການເຮັດວິໄຈໃນຫ້ອງຮຽນ

ກ. ການບັນທຶກເຫດການ ຂ. ການສັງເກດ/ການສຳພາດ

ຄ. ການໃຊ້ແບບສອບຖາມ/ການຫຼວດ ງ. ຖືກທຸກຂໍ້

12. 'ບັນຫາຜົນສຳເລັດທາງການຮຽນຂອງນັກຮຽນຕ່ຳເນື່ອງຈາກນັກຮຽນບໍ່ເຂົ້າໃຈບົດຮຽນ'' ຄວນອອກແບບການວິໄຈເພື່ອແກ້ໄຂບັນຫາໃນລັກສະນະໃດ

ກ. ແບບທົດລອງພັດທະນາສື່ນະວັດຕະກຳ ຂ. ແບບສຳຫຼວດຫາສາເຫດບັນຫາ

ຄ. ແບບປະລິມານອ້າງອີງທິດສະດີການຮຽນຮູ້ ງ. ແບບປະຕິບັດການອົບຮົມການຮຽນຮູ້

13. ຜົນທີ່ໄດ້ຮັບຈາກການວິໄຈໃນຫ້ອງຮຽນ ຄືຂໍ້ໃດ

ກ. ປັບປຸງພຶດຕິກຳນັກຮຽນ

ຂ. ເພີ່ມຄວາມສຳພັນ ແລະ ການສື່ສານລະຫວ່າງຄູ ແລະ ນັກຮຽນ

ຄ. ປັບປຸງການປະຕິບັດວຽກຈາກຄວາມຮູ້ກ່ຽວກັບການຮຽນ-ການສອນທີ່ຄົ້ນພົບ

ງ. ຖືກທຸກຂໍ້

14. ຂໍ້ໃດບໍ່ແມ່ນເຄື່ອງມືໃນການວິໄຈ

ກ. ແບບສອບຖາມ ຂ. ແຜນການຈັດການຮຽນຮູ້

ຄ. ນະວະຕະກຳ ງ. ໂປແກມສຳເລັດຮູບ SPSS

15. "ການພັດທະນາດ້ານການຮັກສາຄວາມສະອາດຫ້ອງຂອງນັກຮຽນ ລະບົບ 12 +4 ສາຍ ພາສາອັງກິດ ປີ 2 ກ" ຄວນອອກແບບການວິໄຈແນວໃດ

ກ. ວິໄຈແບບປະເມີນ ຂ. ວິໄຈແບບທົດລອງ

ຄ. ວິໄຈແບບບັນລະຍາຍ ງ. ວິໄຈແບບປະຕິບັດ

## ແບບທົດສອບຍ່ອຍ (ລະຫວ່າງຮຽນ) ຄັ້ງທີ 4

**<u>ຄຳຊີ້ແຈ້ງ</u>:** ແບບທົດສອບນີ້ປະກອບມີທັງໝົດ 5 ຂໍ້ ກະລຸນາຕອບໝົດທຸກຂໍ້ ເພື່ອຜົນປະໂຫຍດສູງສຸດທາງການວິໄຈໃນຫ້ອງຮຽນ

16. ຈາກຂໍ້ 15 ບໍ່ຄວນໃຊ້ເຄື່ອງມືໃນຂໍ້ໃດເກັບລວບລວມຂໍ້ມູນ

ກ. ແບບສັງເກດ ຂ. ແບບສຳພາດ

ຄ. ແບບທົດສອບ ງ. ແບບສຳຫຼວດ

17. ຂໍ້ໃດບໍ່ແມ່ນວິທີການກຳນົດຂະໜາດກຸ່ມຕົວຢ່າງ?

ກ. ໃຊ້ການຄາດຄະເນ

ຂ. ໃຊ້ສູດຄຳນວນ

ຄ. ໃຊ້ຕາຕະລາງສຳເລັດຮູບ

ງ. ໃຊ້ເກນຮ້ອຍລະ

18. ຜູ້ເຮັດການວິໄຈໃນຫ້ອງຮຽນ ຄື ຂໍ້ໃດ

ກ. ນັກສຶກສາ ຂ. ຄູ

ຄ. ຜູ້ວິໄຈ ງ. ນັກວິທະຍາສາດ

19. ບັນຫາ "ນັກຮຽນແກ້ເລກໂຈດບໍ່ໄດ້" ໃຊ້ເຄື່ອງມືໃດເກັບຂໍ້ມູນ

ກ. ແບບສອບຖາມ ຂ. ແບບທົດສອບ

ຄ. ແບບສັງເກດ ງ. ແບບສຳພາດ

20. "ແບບປະເມີນຜົນງານ" ແມ່ນເຄື່ອງມືເກັບຂໍ້ມູນປະເພດໃດ

ກ. ຂໍ້ມູນດ້ານພຶດຕິກຳ ຂ. ຂໍ້ມູນດ້ານຄວາມຮູ້ສຶກ

ຄ. ຂໍ້ມູນດ້ານປະຕິສຳພັນ ງ. ຂໍ້ມູນດ້ານຄວາມຮູ້-ຄວາມສາມາດ

## ແບບທົດສອບຫຼັງຮຽນ

**<u>ຄຳຊີ້ແຈ້ງ</u>:** ແບບທົດສອບນີ້ປະກອບມີທັງໝົດ 5 ຂໍ້ ກະລຸນາຕອບໝົດທຸກຂໍ້ ເພື່ອຜົນປະໂຫຍດສູງສຸດທາງການວິໄຈໃນຫ້ອງຮຽນ

1. ການວິໄຈໃນຫ້ອງຮຽນ ໝາຍເຖິງ

ກ. ການໃຊ້ວິທີໄສຍະສາດເພື່ອເຮັດໃຫ້ການວິໄຈດີຂຶ້ນ

ຂ. ການໃຊ້ວິທີວິທະຍາສາດຄົ້ນຄວ້າເພື່ອສ້າງຄວາມຮູ້ໃໝ່ທາງການສຶກສາ

ຄ. ການຄົ້ນຄວ້າວິທີການຮຽນໂດຍໃຊ້ວິທີວິທະຍາສາດຄົ້ນຄວ້າ

ງ. ການຄົ້ນຄວ້າການພັດທະນາການສອນ

2. ເປົ້າໝາຍຂອງການວິໄຈໃນຫ້ອງຮຽນ ຄື ຂໍ້ໃດ

ກ. ປະເມີນຕັດສິນຜູ້ຮຽນ

ຂ. ແກ້ບັນຫາຜູ້ຮຽນ

ຄ. ພັດທະນາຜູ້ຮຽນ

ງ. ຖືກທັງ ຂ ແລະ ຄ

3. ຂໍ້ໃດບໍ່ແມ່ນເປົ້າໝາຍຂອງການວິໄຈໃນຫ້ອງຮຽນ

ກ. ພັດທະນາຜູ້ຮຽນ

ຂ. ແກ້ບັນຫາຜູ້ຮຽນ

ຄ. ປະເມີນຕັດສິນຜູ້ຮຽນ

ງ. ຫາສາເຫດຂອງພຶດຕິກຳ

4. ຂັ້ນຕອນທຳອິດໃນການເຮັດວິໄຈໃນຫ້ອງຮຽນຄືຂັ້ນຕອນໃດ

ກ. ລວບລວມຂໍ້ມູນ

ຂ. ກຳນົດບັນຫາ

ຄ. ຕັ້ງສົມມຸດຕິຖານ

ງ. ວິເຄາະບັນຫາ

5. ‘ທ້າວ ແດງ ຂາດຮຽນເປັນປະຈຳ’’ ຄວນຕັ້ງຄຳຖາມວິໄຈແນວໃດຈຶ່ງຈະເໝາະສົມທີ່ສຸດ

ກ. ເປັນຫຍັງທ້າວແດງຈຶ່ງຂາດຮຽນເປັນປະຈຳ

ຂ. ຢູ່ເຮືອນ ທ້າວ ແດງ ມີບັນຫາຫຍັງ ຈຶ່ງຕ້ອງຂາດຮຽນ

ຄ. ໂຮງຮຽນມີບັນຫາຫຍັງ ທ້າວ ແດງ ຈຶ່ງຂາດໂຮງຮຽນ

ງ. ຈະແກ້ບັນຫາການຂາດຮຽນຂອງທ້າວ ແດງ ແບບໃດ

6. ການວິໄຈໃນຫ້ອງຮຽນ ກົງກັບຄວາມໝາຍຂໍ້ໃດ

ກ. ເປັນການວິໄຈການສຶກສາທີ່ຢູ່ທັງໃນ ແລະ ນອກຫ້ອງຮຽນ

ຂ. ເປັນການວິໄຈສະເພາະການຮຽນ-ການສອນທີ່ຢູ່ໃນຫ້ອງຮຽນ

ຄ. ເປັນການວິໄຈຂອງຄູທີ່ຈັດການຮຽນ-ການສອນທັງໃນ ແລະ ນອກຫ້ອງຮຽນ

ງ. ເປັນການວິໄຈຂອງສະຖານສຶກສາທີ່ຈັດການຮຽນ-ການສອນ

7. ວິທີດຳເນີນການວິໄຈໃນຫ້ອງຮຽນ ຄວນເລີ່ມຈາກຂໍ້ໃດກ່ອນໝູ່

ກ. ລະບຸບັນຫາທີ່ເກີດຂຶ້ນໃນຫ້ອງຮຽນທີ່ໄດ້ຈາກການສັງເກດ ແລະ ການເກັບຂໍ້ມູນດ້ວຍວິທີຕ່າງໆ

ຂ. ເລືອກບັນຫາທີ່ຕ້ອງການສຶກສາ ແລະ ແກ້ໄຂ

ຄ. ຕັ້ງສົມມຸດຕິຖານເຖິງສາເຫດຂອງບັນຫາ

ງ. ຄົ້ນຫາສາເຫດຂອງບັນຫາຕາມສົມມຸດຕິຖານທີ່ຕັ້ງໄວ້

8. Classroom Action Research ຂໍ້ໃດ

ກ. ການວິໄຈພາກປະຕິບັດທັງໃນ ແລະ ນອກຫ້ອງຮຽນ

ຂ. ການວິໄຈພາກປະຕິບັດນອກຫ້ອງຮຽນ

ຄ. ການວິໄຈພາກປະຕິບັດໃນຫ້ອງຮຽນ

ງ. ການວິໄຈພາກປະຕິບັດ

9. ການວິໄຈໃນຫ້ອງຮຽນຈັດເປັນການວິໄຈຮູບແບບໃດ?

ກ. ການວິໄຈພາກປະລິມານ ຂ. ການວິໄຈພາກປະຕິບັດ

ຄ. ການວິໄຈເພື່ອສ້າງທິດສະດີ ງ. ການວິໄຈເພື່ອພັດທະນາເຄື່ອງມື

10. ບັນຫາ ‘ນັກຮຽນຂຽນຕົວໜັງສືບໍ່ງາມ’’ ຂໍ້ໃດແມ່ນສາເຫດທີ່ເກີດຈາກປັດໃຈ

ກ. ຄູສອນຕາມຄູ່ມືຄູ ຂ. ກິດຈະກຳການຮຽນບໍ່ໜ້າສົນໃຈ

ຄ. ຄູສອນບໍ່ໃຊ້ແບບເຝິກ ງ. ຄູຜູ້ສອນຂຽນບໍ່ງາມ

11. ຂໍ້ໃດເປັນການເກັບລວບລວມຂໍ້ມູນໃນການເຮັດວິໄຈໃນຫ້ອງຮຽນ

ກ. ການບັນທຶກເຫດການ ຂ. ການສັງເກດ/ການສຳພາດ

ຄ. ການໃຊ້ແບບສອບຖາມ/ການຫຼວດ ງ. ຖືກທຸກຂໍ້

12. ‘ບັນຫາຜົນສຳເລັດທາງການຮຽນຂອງນັກຮຽນຕ່ຳເນື່ອງຈາກນັກຮຽນບໍ່ເຂົ້າໃຈບົດຮຽນ’’ ຄວນອອກແບບການວິໄຈເພື່ອແກ້ໄຂບັນຫາໃນລັກສະນະໃດ

ກ. ແບບທົດລອງພັດທະນາສິ່ງປະດິດຕະກຳ ຂ. ແບບສຳຫຼວດຫາສາເຫດບັນຫາ

ຄ. ແບບປະລິມານອ້າງອີງທິດສະດີການຮຽນຮູ້ ງ. ແບບປະຕິບັດການອົບຮົມການຮຽນຮູ້

13. ຜົນທີ່ໄດ້ຮັບຈາກການວິໄຈໃນຫ້ອງຮຽນ ຄືຂໍ້ໃດ

ກ. ປັບປຸງພຶດຕິກຳນັກຮຽນ

ຂ. ເພີ່ມຄວາມສຳພັນ ແລະ ການສື່ສານລະຫວ່າງຄູ ແລະ ນັກຮຽນ

ຄ. ປັບປຸງການປະຕິບັດວຽກຈາກຄວາມຮູ້ກ່ຽວກັບການຮຽນ-ການສອນທີ່ຄົ້ນພົບ

ງ. ຖືກທຸກຂໍ້

14. ຂໍ້ໃດບໍ່ແມ່ນເຄື່ອງມືໃນການວິໄຈ

ກ. ແບບສອບຖາມ ຂ. ແຜນການຈັດການຮຽນຮູ້

ຄ. ນະວະຕະກຳ ງ. ໂປແກມສຳເລັດຮູບ SPSS

15. ‘ການພັດທະນາດ້ານການຮັກສາຄວາມສະອາດຫ້ອງຂອງນັກຮຽນ ລະບົບ 12 +4 ສາຍ ພາສາອັງກິດ ປີ 2 ກ’’ ຄວນອອກແບບການວິໄຈແນວໃດ

ກ. ວິໄຈແບບປະເມີນ ຂ. ວິໄຈແບບທົດລອງ

ຄ. ວິໄຈແບບບັນລະຍາຍ ງ. ວິໄຈແບບປະຕິບັດ

16. ຈາກຂໍ້ 15 ບໍ່ຄວນໃຊ້ເຄື່ອງມືໃນຂໍ້ໃດເກັບລວບລວມຂໍ້ມູນ

ກ. ແບບສັງເກດ ຂ. ແບບສຳພາດ

ຄ. ແບບທົດສອບ ງ. ແບບສຳຫຼວດ

17. ຂໍ້ໃດບໍ່ແມ່ນວິທີການກຳນົດຂະໜາດກຸ່ມຕົວຢ່າງ?

ກ. ໃຊ້ການຄາດຄະເນ

ຂ. ໃຊ້ສູດຄຳນວນ

ຄ. ໃຊ້ຕາຕະລາງສຳເລັດຮູບ

ງ. ໃຊ້ເກນຮ້ອຍລະ

18. ຜູ້ເຮັດການວິໄຈໃນຫ້ອງຮຽນ ຄື ຂໍ້ໃດ

ກ. ນັກສຶກສາ ຂ. ຄູ

ຄ. ຜູ້ວິໄຈ ງ. ນັກວິທະຍາສາດ

19. ບັນຫາ "ນັກຮຽນແກ້ເລກໂຈດບໍ່ໄດ້" ໃຊ້ເຄື່ອງມືໃດເກັບຂໍ້ມູນ

ກ. ແບບສອບຖາມ
ຂ. ແບບທົດສອບ
ຄ. ແບບສັງເກດ
ງ. ແບບສຳພາດ

20. "ແບບປະເມີນຜົນງານ" ແມ່ນເຄື່ອງມືເກັບຂໍ້ມູນປະເພດໃດ

ກ. ຂໍ້ມູນດ້ານພຶດຕິກຳ
ຂ. ຂໍ້ມູນດ້ານຄວາມຮູ້ສຶກ
ຄ. ຂໍ້ມູນດ້ານປະຕິສຳພັນ
ງ. ຂໍ້ມູນດ້ານຄວາມຮູ້-ຄວາມສາມາດ

# ໂມດູນການຝຶກ 5 ໂມດູນ

# ໂມດູນ1 (Module1): ການສຳຫຼວດບັນຫາການສອນ

## ເວລາ: 2 ຊົ່ວໂມງ




**ໂມດູນ1 (Module1): ການສຳຫຼວດບັນຫາການສອນ**

**ຈຸດປະສົງ**: ຜູ້ເຂົ້າຮ່ວມສາມາດ

1. ວິເຄາະບັນຫາທີ່ເກີດຂຶ້ນໃນຫ້ອງຮຽນຂອງຕົນໄດ້
2. ສ້າງເຄື່ອງມືເກັບຂໍ້ມູນ
3. ລະບຸສາເຫດຂອງບັນຫາໄດ້
4. ກຳນົດຄຳຖາມວິໄຈ ວັດຖຸປະສົງ ແລະ ຫົວຂໍ້ວິໄຈໄດ້

**ເນື້ອໃນ**: ການສຳຫຼວດບັນຫາການຮຽນການສອນໂດຍໃຊ້ຕາຕະລາງວິເຄາະ

**ກິດຈະກຳທີ1**: ຂຽນປະເດັນບັນຫາທີ່ເກີດຂຶ້ນໃນເວລາສອນ

**ເວລາປະຕິບັດກິດຈະກຳ**: 1 ຊົ່ວໂມງ

**ຄຳຊີ້ແຈ້ງ**: ລະດົມສະໝອງ ແລະ ຕອບຄາຖາມຕໍ່ໄປນີ້:

1. ມີບັນຫາຫຍັງແດ່ທີ່ເກີດຂຶ້ນຈາກການຈັດການຮຽນການສອນ (ຂຽນສູງສຸດບໍ່ໃຫ້ກາຍ 3 ປະເດັນ)
2. ບັນຫາທີ່ເກີດຂຶ້ນ ຮູ້ໃດແນວໃດ?
3. ຈັດຄວາມສຳຄັນຂອງບັນຫາຈາກຫຼາຍໄປຫາໜ້ອຍ

ຕາຕະລາງທີ1: ປະເດັນບັນຫາທີ່ເກີດຂຶ້ນຈາກການສອນ

| **ລໍາດັບ** | **ບັນຫາທີ່ເກີດຂຶ້ນ** | **ຮູ້ໄດ້ແນວໃດ** | **ຈັດຄວາມສໍາຄັນ** |
|---|---|---|---|
| ຕົວຢ່າງ | ນັກຮຽນປ3 ອ່ານປະໂຫຍກບໍ່ໄດ້ | ທົດສອບເວລາສອນ | |
| 1 | | | |
| 2 | | | |
| 3 | | | |

**ກິດຈະກໍາທີ 2** : ສ້າງ ແລະ ນໍາໃຊ້ເຄື່ອງມືເກັບຂໍ້ມູນກ່ຽວກັບບັນຫາທີ່ເກີດຈາກການສອນ

**ເວລາປະຕິບັດ**: 2 ຊົ່ວໂມງ

**ຄໍາຊີ້ແຈງ:** ລະດົມສະໝອງກັນຕອບຄໍາຖາມຕໍ່ໄປນີ້:

1. ທ່ານໃຊ້ວິທີໃດໃນການເກັບຂໍ້ມູນ
2. ແຕ່ລະວິທີໃຊ້ເຄື່ອງມືແບບໃດ
3. ສ້າງເອງຂຶ້ນມາໃໝ່ ຫຼື ນໍາໃຊ້ຂອງຄົນອື່ນ ຫຼື ປັບປຸງຈາກແບບທີ່ມີແລ້ວ
4. ບັນຫາທີ່ຈະເກັບຂໍ້ມູນ

| ລໍາດັບຂອງບັນຫາ | ປະເພດຂອງເຄື່ອງມື | ວິທີການເກັບລວບລວມຂໍ້ມູນ | ລັກສະນະຂອງເຄື່ອງມື | ແຫຼ່ງທີ່ມາຂອງເຄື່ອງມື |
|---|---|---|---|---|
| ຕົວຢ່າງ | ແບບສັງເກດ | ສັງເກດ | ແບບກວດສອບລາຍການ | ສ້າງເອງ |
| 1 | | | | |
| 2 | | | | |

| | | | | |
|---|---|---|---|---|
| | | | | |
| 3 | | | | |

(ແນບເຄື່ອງມືໄວ້ເປັນຫຼັກຖານດ້ວຍ)

ຫ້ອງຮຽນທີ່ດຳເນີນການວິໄຈ:...............................................................................................

**ກິດຈະກຳທີ 3**: ຄິດຄົ້ນວິທີການແກ້ໄຂບັນຫາໃນແຕ່ລະສາເຫດ

**ຄຳຊີ້ແຈ້ງ:** ໃຫ້ 2 ກຸ່ມອອກມານຳສະເໜີເປັນຕົວຢ່າງ ກຸ່ມ 1 ຊົ່ວໂມງ

1) ຈຸດປະສົງ ແລະ ເປົ້າໝາຍການປັບປຸງແມ່ນຫຍັງ?
2) ສາເຫດທີ່ຈະແກ້ມີສາເຫດໃດແດ່?
3) ຈະມີວິທີການແກ້ໄຂແບບໃດ?
4) ນະວະຕະກຳ/ວິທີການ/ເຄື່ອງມືທີ່ໃຊ້ແກ້ໄຂ-ປັບປຸງມີຫຍັງແດ່?

| | |
|---|---|
| ຈຸດປະສົງການວິໄຈ | |
| ເປົ້າໝາຍການປັບປຸງ | |
| ສາເຫດທີ່ຈະແກ້ໄຂ | |
| ວິທີແກ້ໄຂ | |

| | |
|---|---|
| | |
| ນະວະຕະກຳ/ວິທີການ/ ເຄື່ອງມືທີ່ໃຊ້ | |

# ໂມດູນ2 (Module2)

# ການທົບທວນວັນນະກຳ ແລະ

# ງານວິໄຈທີ່ກ່ຽວຂ້ອງ ແລະ ການຂຽນເຄົ້າໂຄງ

# ເວລາ 12 ຊົ່ວໂມງ





**Module 2 :** ການທົບທວນວັນນະກຳ ງານວິໄຈທີ່ກ່ຽວຂ້ອງແລະການຂຽນເຄົ້າໂຄງ

**ວັດຖຸປະສົງ :** ຜູ້ເຂົ້າຮ່ວມສາມາດ

1. ທົບທວນວັນນະກຳ ແລະ ງານວິໄຈໄດ້ສອດຄ່ອງກັບບັນຫາ
2. ສັງເຄາະງານວິໄຈໄດ້ສອດຄ່ອງ ແລະ ຖືກຕ້ອງຕາມຫຼັກການ
3. ຂຽນເຄົ້າໂຄງການວິໄຈໄດ້

**ເນື້ອໃນ:** ການທົບທວນວັນນະກຳ ງານວິໄຈທີ່ກ່ຽວຂ້ອງ ແລະ ການຂຽນເຄົ້າໂຄງ

**ກິດຈະກຳທີ1 :** ການກຳນົດ ແລະ ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

**ເວລາ :** ເວລາ 4 ຊົ່ວໂມງ.

**ຄຳຊີ້ແຈ້ງ:** ຈົ່ງລະບຸບັນຫາ ຊື່ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງລົງໃນຕາຕະລາງລຸ່ມນີ້:

| ລະບຸບັນຫາ | ຊື່ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ |
|---|---|
| | |
| | |

| | |
|---|---|
| | |
| | |
| | |

**ກິດຈະກຳທີ 2** : ການສັງເຄາະເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

**ເວລາໃນການປະຕິບັດ :** 4 ຊົ່ວໂມງ

**ຄຳຊີ້ແຈ້ງ**: ສັງເຄາະເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງລົງໃນຕາຕະລາງຕໍ່ໄປນີ້:

| **ຊື່ເລື່ອງເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ** | **ເນື້ອໃນຂອງການສັງເຄາະ** |
|---|---|
| | |
| | |
| | |

| | |
|---|---|
| | |
| | |

**ກິດຈະກຳທີ 3** : ການຂຽນເຄົ້າໂຄງການວິໄຈ

**ເວລາ :** 4 ຊົ່ວໂມງ

**ຄຳຊີ້ແຈ້ງ**: ຂຽນໂຄງການວິໄຈຕາມຮ່າງທີ່ກຳນົດໄວ້ຕໍ່ໄປນີ້:

**ຫົວຂໍ້ການວິໄຈ**

:..........................................................................................................................................

..........................................................................................................................................

..........................................................................................................

**ຜູ້ວິໄຈ/ຄະນະຜູ້ວິໄຈ**..........................................................................................................

......................................................................................................................................

**ສະຖານທີ່ດຳເນີນການວິໄຈ**...........................................................................................

**ຊື່ທີ່ປຶກສາ**.............................................................................................................

1. **ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ**

   ..............................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..............................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

.........................................................................................

ບັນຫາ...............................................................................................................

...............................................................................................................................

ສາເຫດຂອງບັນຫາ

..........................................................................................................................................

...................................................................................................................

ແນວທາງແກ້ໄຂ

..........................................................................................................................................

